# ຄູ່ມືເຫຼັ້ມທີ 4

# ການປະຕິບັດວິໄນ/ການສຶກສາອົບຮົມແບບສ້າງສັນ ໃນຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້



ກະຊວງສຶກສາທິການ

ສູນການສຶກສາຮຽນຮ່ວມ

ສະໜັບສະໜູນໂດຍ ອົງການອຸຍແນດສະໂກ

ນະຄອນຫຼວງວຽງຈັນ, ສປປ ລາວ

2011

# ຄຳນຳ

ຊຸດຄູ່ມືແນະນຳການສ້າງສະພາບແວດລ້ອມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດຕໍ່ການຮຽນຮູ້ໄດ້ສ້າງຂຶ້ນໂດຍອົງການອຸຍແນສໂກປະຈຳພາກພື້ນອາຊີ-ປາຊີຟິກພ້ອມທັງພິມແຈກຢາຍຢ່າງ ກ້ວາງຂວາງໃນທົ່ວພາກພື້ນ. ຄູ່ມືດັ່ງກ່າວມີທັງໝົດ 4 ເຫຼັ້ມຄື: ຄູ່ມືແນະນຳການສ້າງສະພາບແວດລ້ອມ, ຄູ່ມືແນະນຳການຈັດການສອນຫ້ອງຮຽນຮ່ວມ, ຄູ່ມືແນະນຳການສົ່ງເສີມສຸຂະພາບ , ຄູ່ມືແນະນຳການປະຕິບັດວິໄນ/ການສຶກສາອົບຮົມແບບສ້າງສັນ ໃນຫ້ອງຮຽນຮ່ວມທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

**ສຳລັບຄູ່ມືແນະນຳເຫຼັ້ມນີ້ເປັນຄູ່ມືແນະນຳເຫຼັ້ມທີ 4: ເນື້ອໃນເວົ້າເຖິງການປະຕິບັດວິໄນ/ການສຶກສາອົບຮົມແບບສ້າງສັນທີ່ເປັນການຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.** ຈຸດປະສົງຫຼັກ ຂອງຄູ່ມືແນະນຳເຫຼັ້ມນີ້ ແມ່ນເພື່ອເຂົ້າໃຈກ່ຽວກັບຄວາມໝາຍຂອງການລົງໂທດ ແລະ ການປະຕິບັດວິໄນແບບສ້າງສັນ/ການສຶກສາອົບຮົບແບບສ້າງສັນ, ສະນັ້ນ, ເພື່ອເສີມສ້າງຄວາມ ສາມາດໃຫ້ແກ່ຜູ້ຊົມ ໃຊ້ ກ່ຽວກັບການແກ້ໄຂບັນຫາຄວາມແຕກຕ່າງຫຼາກຫຼາຍຂອງເດັກ, ຄູ່ມືແນະນຳເຫຼັ້ມນີ້ໄດ້ແນະນຳແນວທາງ, ວິທີການແກ້ໄຂຄວາມຮຸນແຮງ, ການດຳເນີນການແກ້ໄຂນັກຮຽນຝ່າຝືນລະບຽບ, ການສ້າງສະພາບແວດລ້ອມ, ການສ້າງສາຍພົວພັນລະຫວ່າງ ຄູ-ນັກຮຽນເພື່ອສ້າງໂຮງຮຽນ ແລະ ຫ້ອງຮຽນໃຫ້ກາຍເປັນການສຶກສາຮຽນຮ່ວມ ແລະ ເປັນມິດຫຼາຍຂຶ້ນ, ຊຶ່ງເປັນປະໂຫຍດສູງ ສຳລັບຜູ້ສ້າງນະໂຍບາຍ, ຜູ້ຈັດຕັ້ງປະຕິບັດ ແລະ ຊຸມຊົນ.

ເພື່ອສຳເລັດເປົ້າໝາຍການສຶກສາເພື່ອທຸກຄົນ ແລະ ເປົ້າໝາຍສະຫະສະວັດ ເພື່ອການພັດທະນາໃນປີ2015. ອົງການອຸຍແນສໂກໄດ້ແນະນຳ ໃຫ້ແຕ່ລະປະເທດສະມາຊິກດຳເນີນ ການແປເປັນ ພາສາຂອງຕົນເອງ ແລະ ດັດປັບໃຫ້ແທດເໝາະກັບສະພາບຕົວຈິງຂອງແຕ່ລະປະເທດ. ສຳລັບ ສປປ ລາວ, ອະດີດກົມສາມັນສຶກສາໄດ້ຮັບການສະໜັບສະໜູນ ໃນການແປຈາກສະບັບຕົ້ນທີ່ເປັນພາສາອັງກິດມາເປັນສະບັບພາສາລາວ. ຈາກນັ້ນ, ໃນປີ 2010 ໂດຍການສືບຕໍ່ສະ ໜັບສະໜູນຈາກອົງການ UNESCO, ສູນການສຶກສາຮຽນຮ່ວມໄດ້ຮ່ວມກັບກົມສ້າງຄູ, ກົມປະຖົມ ແລະ ອະນຸບານ ແລະ ສະຖາບັນສ້າງຄູ 8 ແຫ່ງ ຈັດກອງປະຊຸມວິຊາການຮຽບຮຽງ, ປັບປຸງ ແລະ ຣິບໂຮມອີກຄັ້ງໜຶ່ງ. ການປັບປຸງ ແລະ ຣິບໂຮມຄັ້ງນີ້ບໍ່ໄດ້ປ່ຽນແປງເນື້ອໃນແຕ່ປະການໃດ ພຽງແຕ່ນຳໃຊ້ຄຳສັບ ແລະ ສຳນວນເປັນ ພາສາລາວ ເພື່ອໃຫ້ເຂົ້າໃຈງ່າຍຂຶ້ນ ແລະ ຕົວຢ່າງຈຳນວນໜຶ່ງຖືກຕັດອອກ ເພື່ອໃຫ້ມີລັກສະນະກະທັດລັດແກ່ຜູ້ຊົມໃຊ້.

ສູນການສຶກສາຮ່ຽນຮ່ວມ ສະແດງຄວາມຂອບໃຈເປັນຢ່າງສູງມາຍັງທີມງານ ວິຊາການ ຈາກກະຊວງສຶກສາທິການ ແລະ ສະຖາບັນສ້າງຄູທັງ 8 ແຫ່ງທີ່ໄດ້ໃຫ້ການຮ່ວມມືໃນການຮຽບຮຽງຄູ່ມືດັ່ງກ່າວ. ພິເສດຂໍຂອບໃຈມາຍັງ ອົງການອຸຍແນສໂກ ທີ່ໃຫ້ການສະໜັບສະໜູນດ້ານງົບປະມານນັບທັງການ ຮຽບຮຽງ ແລະ ຄ່າພິມແຈກຢາຍອີກດ້ວຍ. ເປັນທີ່ແນ່ນອນວ່າການປັບປຸງ, ຣິບໂຮມຄັ້ງນີ້ຈະບໍ່ປາສະຈາກໄດ້ຂໍ້ຂາດຕົກບົກຜ່ອງ. ສູນການສຶກສາຮຽນຮ່ວມມີຄວາມຍິນດີຮັບເອົາຄຳຕຳນິຕິຊົມທຸກປະການຈາກຜູ້ອ່ານ ແລະ ຜູ້ຊົມໃຊ້ ເພື່ອຈະໄດ້ປັບປຸງໃຫ້ດີຂຶ້ນໃນອະນາຄົດ
.

ຜູ້ອຳນວຍການສູນການສຶກສາຮຽນຮ່ວມ

## ສາລະບານ ໜ້າ


**ພາກສະເໜີ** ....................................................................03

**ບົດທີ 1. ຄວາມເຂົ້າໃຈກ່ຽວກັບການລົງໂທດ ແລະ ການປະຕິບັດລະບຽບວິໄນ** ..05

**1. ຄວາມໝາຍຂອງການລົງໂທດ** ....................................................07

1.1 ການລົງໂທດດ້ານວາຈາ ແລະການຮັບມືກັບຄວາມຢາກຮ້າຍ......................07

1.2 ການລົງໂທດດ້ານຮ່າງກາຍ ....................................................09

**2. ຄວາມໝາຍຂອງການປະຕິບັດລະບຽບວິໄນ/ການສຶກສາອົບຮົມແບບສ້າງສັນ**......13

2.1 ການປະຕິບັດລະບຽບວິໄນ/ການສຶກສາອົບຮົມແບບສ້າງສັນໃນຫ້ອງ............15

2.2 ບາດກ້າວການປະຕິບັດລະບຽບວິໄນ/ສຶກສາອົບຮົມແບບສ້າງສັນ................18

2.3 ການຫຼີກລ້ຽງຄວາມສັບສົນໃນການປະຕິບັດລະບຽບວິໄນ ........................20

**ບົດທີ 2. ການສ້າງສາຍພົວພັນທີ່ດີລະຫວ່າງຄູ - ນັກຮຽນ** ............................22

**1. ພື້ນຖານຂອງການພົວພັນທີ່ດີລະຫວ່າງຄູ - ນັກຮຽນ** ................................22

**2. ເປັນຫຍັງເດັກຈຶ່ງມີພຶດຕິກຳສະແດງອອກໃຫ້ເຫັນຄືແນວນັ້ນ?** ....................22

2.1 ການສ້າງທາງເລືອກ ....................................................22

2.2 ຄວາມຕ້ອງການຢາກເປັນເຈົ້າຂອງ ....................................................23

**3. ເປັນຫຍັງເດັກຈຶ່ງປະພຶດຜິດ ?** ....................................................24

3.1 ການຊອກຫາຄວາມສົນໃຈ ....................................................25

3.2 ຫຼັກການທົ່ວໄປເພື່ອຮັບມືກັບນັກຮຽນທີ່ຮຽກຮ້ອງຄວາມສົນໃຈຂອງນັກຮຽນ....26

ກ. ອຳນາດ ....................................................26

ຂ. ການແກ້ແຄ້ນ ....................................................26

ຄ. ການຫຼີກລ້ຽງຄວາມຫຼົ້ມເຫຼວ ຫຼື ຄວາມຂາດເຂີນ (ປົມດ້ອຍ) ......................27

**4. ການຮຽນຮູ້ກ່ຽວກັບນັກຮຽນຂອງທ່ານ**....................................................28

**5. ເຂົ້າໃຈສະພາບຄວາມເປັນຈິງ(ບໍລິບົດ)ການດຳລົງຊີວິດຂອງນັກຮຽນ**............30

5.1 ເດັກນັກຮຽນ ....................................................32

5.2 ຄອບຄົວ ແລະ ຊຸມຊົນ ....................................................34

**6. ການຮຽນຮູ້ກ່ຽວກັບຄອບຄົວນັກຮຽນ** ....................................................38

**7. ການສື່ສານ/ພົວພັນລະຫວ່າງພໍ່ແມ່ ຜູ້ປົກຄອງ - ຄູສອນ**............................42

**8. ຍຸດທະສາດຂອງການຊຸກຍູ້ສົ່ງເສີມ** ....................................................43

**ບົດທີ 3. ການສ້າງສະພາບແວດລ້ອມທີ່ດີ ແລະ ການສະໜັບສະໜູນການຮຽນຮູ້**.45

**1. ການຄຸ້ມຄອງຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້** ................45

**2. ການເຮັດໃຫ້ສະພາບແວດລ້ອມຂອງການຮຽນຮູ້ ມີຄວາມສະດວກສະບາຍ** ...46

3. ການສ້າງກິດຈະວັດປະຈຳວັນໃນຫ້ອງຮຽນ ...........................................49
4. ການສ້າງລະບຽບຫ້ອງຮຽນຮ່ວມກັບນັກຮຽນ ແລະ ຜູ້ປົກຄອງ .....................50
5. ມາດຕະຖານສຳລັບການປະພຶດ ແລະ ການຄຸ້ມຄອງທີ່ດີ ...........................53
6. ການໃຫ້ການສະໜັບສະໜູນແບບທາງບວກ .........................................59

ບົດທີ 4 : ການກຽມພ້ອມແກ້ບັນຫາກັບຄວາມແຕກຕ່າງຫລາກຫລາຍຂອງເດັກ ໃນຫ້ອງຮຽນ.........................................................................62
4.1 ການໃຫ້ຄ່ານິຍົມ ແລະ ການຊຸກຍູ້ສິ່ງເສີມດ້ວຍຫລາຍວິທີ.................................62
4.2 ການຮວບຮວມເອົາວິທີຄົ້ນຄິດ,ວິທີຮຽນຮູ້ ແບບແຕກຕ່າງກັນເຂົ້ານຳໃຊ້ໃນຫ້ອງຮຽນ.64
4.3 ສິ່ງທ້າທາຍຕໍ່ກັບຄວາມແຕກຕ່າງຫລາກຫລາຍ.............................................66

ບົດທີ 5: ການແກ້ໄຂບັນຫາຄວາມຮຸນແຮງ ແລະ ການຫັນນະໂຍບາຍສູ່ພາກ ປະຕິບັດ.........................................................................75
1 . ຮູບແບບຂອງຄວາມຮຸນແຮງທີ່ເປັນພື້ນຖານ.......................................... ..75
ກ. ຮູບແບບຄວາມຮຸນແຮງ ............................................................ 75
ຂ. ສາເຫດຂອງຄວາມຮຸນແຮງ........................................................ 76
ຄ. ການສ້າງແຜນທີ່ຂອງຄວາມຮຸນແຮງ................................................ 77
2 . ສັນຍານເຕືອນສຳລັບເດັກທີ່ຖືກທາລຸນ ...................................... 79
3 . ສັນຍານເຕືອນສຳລັບເດັກທີ່ມີຄວາມສ່ຽງ ...................................... 81
4. ແນວທາງເພື່ອປ້ອງກັນຄວາມຮຸນແຮງໃນໝູ່ເດັກ .................................... 82

ບົດທີ 6. ການດຳເນີນການແກ້ໄຂກັບນັກຮຽນຝ່າຝືນລະບຽບວິໄນ .................. 84
1. ການປັບປຸງຄວາມມີປະສິດທິຜົນຂອງເຕັກນິກການໃສ່ລະບຽບວິໄນແບບສ້າງ.....84
2. ຂໍ້ແນະນຳກ່ຽວກັບການປະຕິບັດລະບຽບວິໄນ/ການສຶກສອົບຮົມແບບສ້າງສັນ.....84
3. ຂໍ້ແນະນຳພິເສດກ່ຽວກັບການສິດສອນໃນຫ້ອງຮຽນແບບສ້າງສັນ....................88
4. ການນຳໃຊ້ຜົນໄດ້ຮັບທີ່ຕາມມາທີ່ເໝາະສົມ ທັງທີ່ເປັນທາງບວກ ແລະທາງລົບ..90
5. ຄວາມຮອບຄອບໃນການຢັບຢັ້ງນັກຮຽນ “Time out”.................................92
6. ການແກ້ໄຂຂໍ້ຂັດແຍ່ງ .......................................................................93
7. ເຕັກນິກການປະຕິບັດລະບຽບວິໄນ/ການສຶກສາອົບຮົມແບບສ້າງສັນຕາມໄວອາຍຸ .....95
8. ການຊ່ອຍເຫຼືອນັກຮຽນທີ່ມີຄວາມຕ້ອງການພິເສດ......................................98
ກ. ວິທີງ່າຍໆເພື່ອຊ່ອຍເຫຼືອນັກຮຽນທີ່ມີຄວາມຕ້ອງການພິເສດ ..............101
ຂ. ການຄຸ້ມຄອງຫ້ອງຮຽນ ແລະດັດແກ້ການສິດສອນ ...........................102

# ພາກສະເໜີ

ເດັກທີ່ເກີດມາໃນໂລກນີ້ ຖ້າບໍ່ໄດ້ຮັບການຊ່ອຍເຫຼືອ ຈະບໍ່ສາມາດພັດທະນາຢ່າງເຕັມສ່ວນໄດ້.ໃນຖານະເປັນຄູສອນ, ວຽກງານຂອງເຮົາແມ່ນອົບຮົມເຂົາເຈົ້າ ແລະ ສອນເຂົາເຈົ້າ ໃຫ້ຮູ້ຈັກວິທີການດຳລົງຊີວິດ. ແຕ່ສິ່ງນີ້ບໍ່ແມ່ນວຽກງານທີ່ງ່າຍດາຍ. ໃນບາງມື້, ຫ້ອງຮຽນຈະເປັນບ່ອນທີ່ມີຄວາມຕື່ນເຕັ້ນ, ສະໜຸກສະໜານ ແລະ ມ່ວນຊື່ນໃນການຮ່ຳຮຽນ ສຳລັບນັກຮຽນ. ແຕ່ອີກບາງມື້, ພວກເຮົາອາດຈະຮູ້ສຶກກົດດັນ ແລະ ບໍ່ມີຄວາມໝັ້ນ ໃຈໃນຄວາມສາມາດຂອງຕົນເພື່ອເຮັດວຽກງານ. ການເປັນຄູນັ້ນ ຍາກ ທີ່ຈະບອກວ່າບໍ່ຄ່ອຍສະໜຸກສະໜານ ຫຼື ເປັນວຽກໜ້າເບື່ອ; ແຕ່ໃນຂະນະດຽວກັນ ເປັນກໍຍັງເປັນ ວຽກທີ່ສຳຄັນທີ່ສຸດທີ່ພວກເຮົາຈະເຮັດ.

ພວກເຮົາຮູ້ວ່າການສິດສອນມັນຍາກແນວໃດ ແລະ ຍັງຕ້ອງເອົາໃຈໃສ່ ຮັບຜິດ ຊອບຕໍ່ນັກຮຽນ ແຕ່ແລ້ວນັກຮຽນ ກໍບໍ່ຟັງຄວາມ. ມັນບໍ່ເໝືອນກັບການເປັນພໍ່ແມ່, ທ່ານຕ້ອງຮັບຜິດຊອບເດັກຫຼາຍຄົນໃນເວລາດຽວກັນ, ບໍ່ແມ່ນສອງສາມຄົນ ແລະ ແຕ່ລະຄົນຈະມີນິໄສຈຸດພິເສດໄປຄົນລະຢ່າງ. ເຂົາຍັງບໍ່ຄ່ອຍຈະປະພຶດຕາມທີ່ທ່ານຕ້ອງການນຳອີກ. ເບິ່ງແລ້ວຄ້າຍກັບວ່າສິ່ງທີ່ທ່ານວາງແຜນປະຕິບັດ ກັບລຸ້ນໜຶ່ງພວມໄປໄດ້ດີ, ແຕ່ເມື່ອເຂົາຈາກໄປມີໜ້າໃໝ່ເຂົ້າມາທ່ານກໍຈະພົບກັບຄວາມສະໜຸກສະໜານ ແລະ ສິ່ງທ້າທາຍແບບໃໝ່ເຂົ້າມາແທນ. ຄູສອນທຸກຄົນຕ້ອງການສິ່ງທີ່ດີທີ່ສຸດສຳລັບນັກຮຽນແລະ ຕ້ອງສ້າງຄວາມໝັ້ນ ໃຈໃນຄວາມອາດ ສາມາດຂອງເຂົາເຈົ້າແລະຍົກສູງຄວາມພາກພູມໃຈໃນຕົນເອງຂອງເຂົາ. ແຕ່ວ່າເມື່ອເວລານັກຮຽນຂອງທ່ານບໍ່ຟັງຄວາມ, ປະຕິເສດທີ່ຈະເຮັດສິ່ງທີ່ທ່ານບອກ ຫຼື ບໍ່ສົນໃຈທ່ານ, ມັນກໍ່ ຈະກາຍມາເປັນສິ່ງລຳຄານ ແລະ ໝົດທາງແກ້ໄຂ. ຄື່ອງມືສຳລັບການປະຕິບັດວິໄນທາງສ້າງສັນທີ່ສະເໜີໃນເອກະສານນີ້ເປັນທາງເລືອກທີ່ເປັນຮູບປະທຳເພື່ອທົດແທນການລົງໂທດ ເຊັ່ນ ຕີດ້ວຍຝາມື, ຢິກດ້ວຍນີ້ວມື, ນາບຂູ່, ຮ້ອງຂໍ, ໃຫ້ລາງວັນເປັນສິນບົນ, ຮ້ອງດ່າ, ສັ່ງການ, ເອີ້ນຊື່, ບັງຄັບໃຫ້ອອກ ແຮງງານ ແລະ ວິທີການອື່ນໆ ທີ່ເປັນການະທຳແບບລົບຫູ່ຫຼາຍກວ່ານີ້.

## " ຫ້ອງຮຽນຮຽນຮ່ວມ - ເປັນເພື່ອນມິດໃນການຮຽນຮູ້ " ແມ່ນຫຍັງ ?

ເມື່ອເວລາພວກເຮົາຍ່າງເຂົ້າໄປໃນຫ້ອງຮຽນ ເຮົາຈະເຫັນໜ້າຂອງນັກຮຽນ ທີ່ຕ້ອງສິດສອນ. ແຕ່ພວກເຮົາຈຳເປັນຕ້ອງຈື່ຈຳໄວ້ວ່ານັກຮຽນ ເຫຼົ່ານີ້ອາດຍັງບໍ່ແມ່ນເດັກທັງໝົດທີ່ມາເຂົ້າຮຽນຢູ່ ໃນຫ້ອງ ຮຽນ. ອາດຍັງມີເດັກຜູ້ອື່ນໆອີກ ທີ່ບໍ່ສາມາດມາເຂົ້າໂຮງຮຽນໄດ້. ນອກຈາກນີ້, ຜູ້ທີ່ມີໜ້າຢູ່ໃນຫ້ອງ ຮຽນ, ອາດຈະບໍ່ຮູ້ສຶກວ່າ ເຂົາມີຄວາມເປັນເຈົ້າຂອງທີ່ນັ້ນ ແລະ ອາດບໍ່ໄດ້ "ມີສ່ວນຮ່ວມ" ໃນຫ້ອງຮຽນ ຫຼື ອາດຈະປະພຶດໃນທາງທີ່ຜິດໆ.

ຫ້ອງຮຽນຮຽນຮ່ວມ - ເປັນເພື່ອນມິດໃນການຮຽນຮູ້ ( ILFC ) ຍິນດີຕ້ອນຮັບດູແລ ແລະ ສຶກສາ ອົບຮົມເດັກທຸກຄົນ ໂດຍບໍ່ຄຳນຶງເຖິງຄວາມແຕກຕ່າງທາງເພດ, ຮ່າງກາຍ, ສະຕິປັນຍາ, ສັງຄົມ, ອາລົມ ຈິດ, ພາສາ ຫຼື ຄຸນລັກສະນະອື່ນໆ. ເຂົາອາດເປັນເດັກທີ່ມີພອນສະຫວັນ ຫຼື ຂາດສະມັດຖະພາບດ້ານ ຮ່າງກາຍ ຫຼື ດ້ານການຮຽນຮູ້. ພວກເຂົາອາດເປັນເດັກຂ້າງຖະໜົນ ຫຼື

ເດັກອອກແຮງງານ, ເດັກເຂດຫ່າງໄກສອກຫຼີກ ຫຼື ເດັກເລ່ລ່ອນພະເນຈອນ, ເດັກຈາກກຸ່ມພາສາ-ຊົນເຜົ່າ-ວັດທະນະທຳ ຕ່າງກັນ, ເດັກທີ່ໄດ້ຮັບຜົນສະທ້ອນຈາກເອັດໄອວີ/ເອດສ໌ (HIV/AIDS), ເດັກມາຈາກຂົງເຂດ ຫຼື ກຸ່ມຄົນດ້ອຍໂອກາດ. ດັ່ງນັ້ນILFCຈຶ່ງເປັນໜຶ່ງສິ່ງ ທີ່ຄູສອນເຂົ້າ ໃຈເຖິງຄຸນຄ່າຂອງຄວາມຫຼາກຫຼາຍຢູ່ໃນຫ້ອງຮຽນ ແລະ ປະຕິບັດບາດກ້າວຕ່າງໆເພື່ອຮັບປະກັນໃຫ້ເດັກຍິງ ແລະ ເດັກຊາຍທຸກຄົນໄດ້ເຂົ້າມາຮຽນ ໃນໂຮງຮຽນ

ການນຳເອົາເດັກທຸກຄົນເຂົ້າມາຮຽນ ຢູ່ໃນຫ້ອງຮຽນຂອງພວກເຮົາ ເປັນພຽງເຄິ່ງໜຶ່ງຂອງຄວາມທ້າທາຍເທົ່ານັ້ນ. ແຕ່ອີກເຄິ່ງໜຶ່ງ ແມ່ນການຕອບສະໜອງຄວາມຕ້ອງການດ້ານການຮຽນຮູ້ ແລະ ພຶດຕິກຳທີ່ແຕກຕ່າງກັນຂອງພວກເຂົາ ເພື່ອວ່າເຂົາຈະຢາກສືບຕໍ່ຮຽນຢູ່ໃນຫ້ອງຮຽນຂອງພວກເຮົາ. ທຸກໆຫ້ອງຮຽນຈະມີຄວາມແຕກຕ່າງ ຫຼາກຫຼາຍໃນແງ່ຂອງເດັກ ທີ່ເຮົາສອນມີຫຼາຍປະເພດ ແລະ ໃນແງ່ວິທີການໃນການຮຽນຮູ້ແບບຕ່າງໆຂອງເຂົາ. ພວກເຮົາຈຳເປັນຕ້ອງພິຈາລະນາສິ່ງທີ່ເດັກແຕ່ລະຄົນ ຕ້ອງ ການຢາກຮຽນ, ວິທີໃດທີ່ເຂົາສາມາດຮຽນໄດ້ດີທີ່ສຸດ ແລະຈະເຮັດແນວໃດເຊິ່ງພວກເຮົາໃນຖານະເປັນຄູ ຈຶ່ງຈະສາມາດ ສ້າງການພົວພັນທີ່ດີກັບເດັກແຕ່ລະຄົນ ເພື່ອໃຫ້ເຂົາຢາກຮຽນຮູ້ຢ່າງຫ້າວຫັນຈາກ ພວກເຮົາ. ອີກສິ່ງໜຶ່ງທີ່ມີຄວາມສຳຄັນພໍໆກັນກໍຄື ພວກເຮົາຈຳເປັນຕ້ອງຄົ້ນໃຫ້ເຫັນວິທີທີ່ຈະເຮັດໃຫ້ ເດັກທຸກຄົນຢາກຮ່ຳຮຽນ*ດ້ວຍກັນ.*

# ບົດທີ 1
# ຄວາມເຂົ້າໃຈກ່ຽວກັບການລົງໂທດ ແລະ ການປະຕິບັດລະບຽບວິໄນ

ຜ່ານມາເດັກຈຳນວນໜຶ່ງມັກຄວາມຟຸມເຟືອຍ, ເຂົາເຈົ້າມີມາລະຍາດອັນບໍ່ດີ, ດູໝິ່ນສິດອຳນາດ, ສະແດງອອກເຖິງຄວາມບໍ່ນັບຖືຜູ້ອາວຸດໂສ, ມັກເວົ້າລົມກັນແນວ ບໍ່ເປັນປະໂຫຍດເຂົ້າມາແທນ ເລື່ອງການເຮັດກິດຈະກຳຕ່າງໆ. ເດັກເປັນຜູ້ນາບຂູ່ ບໍ່ແມ່ນເປັນຜູ້ຊ່ອຍເຫຼືອຄອບຄົວ, ຈະບໍ່ລຸກຂຶ້ນຢືນເຄົາລົບ ໃນເວລາຜູ້ອາວຸໂສຍ່າງເຂົ້າມາໃນຫ້ອງຮຽນ, ມີຄວາມຂັດແຍ່ງກັບ ຜູ້ປົກຄອງ, ມັກລົມກັນໃນຫ້ອງ, ກິນຂອງກິນຢູ່ຕາມໂຕະ, ນັ່ງເອົາຂາຂຶ້ນຫ້າງ ແລະ ນາບຂູ່ຄູຂອງເຂົາ. ຄຳຖະແຫລງນີ້ແມ່ນຂຽນ ຂຶ້ນໂດຍໂຊແຄຣດ (Socrates), ນັກປັດຊະຍາກະເລັກ ຜູ້ທີ່ມີຊີວິດຢູ່ຊ່ວງປີ 469-399 ກ່ອນຄຣິດ ສັກກະລາດ.

**ກໍລະນີສຶກສາ: ກໍລະນີຂອງທ້າວ ເຣມອນ** (Ramon)

-"ຂ້ອຍຈະບໍ່ໄປໃກ້ຫ້ອງຮຽນຂອງຊາຍຄົນນັ້ນ! ຂ້ອຍບໍ່ຈຳເປັນຕ້ອງເຮັດສິ່ງທີ່ທ່ານເວົ້າ "

-"ຂ້ອຍບໍ່ເຄີຍນຶກເລີຍວ່າ ຂ້ອຍຈະໄດ້ຮຽນຢູ່ໃນຫ້ອງນີ້; ແມ່ຂ້ອຍເວົ້າວ່າຂ້ອຍຈະຕ້ອງຢູ່ໃນໂຮງ ຮຽນທີ່ມີການສຶກສາພິເສດ. ຄົນເວົ້າວ່າຂ້ອຍເປັນຜູ້ພິການໃນການດ້ານການຮຽນຮູ້ ແລະ ມີຄວາມ ຫ້າວຫັນຜິດປົກກະຕິ ແລະ ຂາດສະມາທິ ( ADHD - Attention Deficit Hyperactivity Disorder).

ເຣມອນແລ່ນລົງໄປຕາມທາງຂອບຫ້ອງປະຊຸມ ແລ້ວເອົາຕຳເດັກຜູ້ອື່ນໆ ແລະ ຄູສອນ, ລາວຍ່າງເຂົ້າໄປໃນຫ້ອງຮຽນໃນຕອນເຊົ້າ ພ້ອມທັງປະກາດກ້າວສິ່ງທີ່ລາວຈະບໍ່ເຮັດ, ຮ້ອງໂຮ ຫຼື ແລ່ນໄປອ້ອມຫ້ອງຮຽນໃນເວລາທີ່ລາວຮູ້ສຶກວ່າຄັກ. ລາວເອີ້ນສະມາຊິກເພື່ອນຮ່ວມຫ້ອງວ່າເປັນ "ກຸ່ມຄົນ ໄບ້" ແລະ ດ່າວ່າຕໍ່ພວກທີ່ຮຽນຫ້ອງປີທີ 6 ເປັນຜູ້ທຳຜິດກົດໝາຍ ເຊິ່ງຂ້ອຍບໍ່ເຄີຍຮູ້ບໍ່ເຄີຍເຫັນຈົນວ່າ ຂ້ອຍໄດ້ຢູ່ ປີທີສາມຂອງໂຮງຮຽນ ມັດທະຍົມ.

ນີ້ເປັນນັກຮຽນໃນຫ້ອງຮຽນຂອງຂ້ອຍ,"ເຣມອນ". ຂ້ອຍຮູ້ສຶກຢາກຮ້າຍກ່ຽວກັບພຶດຕິກຳຂອງລາວ. ມັນເຮັດໃຫ້ຂ້ອຍກຽດຊັງລາວ, ແຕ່ເໜືອສິ່ງອື່ນໃດແມ່ນຂ້ອຍໝົດຫວັງກັບລາວ, ຂ້ອຍຂາດຄວາມສາມາດ, ແລະ ລະບົບ...ຂ້ອຍໜີຈາກໂຮງຮຽນໃນມື້ນັ້ນດ້ວຍນ້ຳຕາ, ເຈັບແສບຮອດກະເພາະຍ້ອນເດັກຄົນນີ້.

**ທ່ານຈະເຮັດແນວໃດ?**

ໃນກໍລະນີຂອງທ້າວ ເຣມອນ ຄືດວ່າເປັນສິ່ງທີ່ເກີນຂອບເຂດ, ມັນບໍ່ແມ່ນສິ່ງທຳມະດາ. ຄວາມຈິງແລ້ວພວກເຮົາທຸກຄົນ ກໍເຄີຍມີປະສົບການກັບນັກຮຽນ ທີ່ທ້າທາຍອຳນາດຂອງຄູພວກ

ເຮົາ ຫຼື ນັກຮຽນ ທີ່ລົບກວນຫ້ອງຮຽນ ແລະ ສ້າງຄວາມຜິດຫວັງ ຫຍຸ້ງຍາກໃຫ້ແກ່ນັກຮຽນຄົນອື່ນ ຫຼາຍໆທາງ. ທ້າວເຣມອນຈຳເປັນຕ້ອງເຂົ້າຢູ່ໃນການປະຕິບັດວິໄນ ຢ່າງເຕັມທີ່, ແຕ່ວ່າມີວິທີທາງ ອັນໃດແດ່?.

**ກິດຈະກຳຄົ້ນຄິດຢ້ອນກັບຄືນ: ທ່ານເຄີຍຖືກປະຕິບັດວິໄນແນວໃດແດ່?**

ໃຫ້ທ່ານທວນຄິດຄືນຫຼັງໃນຕອນທີ່ທ່ານເຄີຍເປັນນັກຮຽນຢູ່ໃນໂຮງຮຽນປະຖົມ. ຖ້າຫາກ ທ່ານຫຼືເພື່ອນຮ່ວມຫ້ອງຜູ້ໃດຜູ້ໜຶ່ງໄດ້ປະພຶດແນວບໍ່ດີຄືກັບທ້າວເຣມອນ, ຄູຂອງທ່ານ ໄດ້ໃຊ້ການ ປະຕິບັດວິໄນດ້ວຍວິທີໃດແດ່?ໃຫ້ ທ່ານ ຂຽນວິທີການເຫຼົ່ານີ້ລົງໃນຕາຕະລາງຂ້າງລຸ່ມນີ້. ແລ້ວໃຫ້ ຂຽນສິ່ງທີ່ ທ່ານ ຮູ້ສຶກກ່ຽວກັບວິທີການປະຕິບັດວິໄນ ດັ່ງກ່າວ ກໍຄືຄວາມມີປະສິດທິຜົນ ຫຼື ບໍ່ມີປະສິດທິຜົນໃນໄລຍະຍາວຕາມທີ່ທ່ານຄິດ. ທ່ານຄິດວ່າເດັກໄດ້ມີຄວາມຮູ້ສຶກແນວໃດ? ທ່ານ ໄດ້ເຫັນ ຫຼື ໄດ້ມີປະສົບການການ ປ່ຽນແປງແບບຍາວນານໃນການປະພຶດ / ພຶດຕິກຳບໍ່?.

ຈາກນັ້ນ, ໃຫ້ທ່ານຖາມຕົວເອງ," ຖ້າຂ້ອຍມີນັກຮຽນ ຄື ກັບທ້າວເຣມອນ, ຂ້ອຍຈະເຮັດຄື ແນວໃດ ແລະ ຍ້ອນຫຍັງຈຶ່ງເຮັດແນວນັ້ນ? "ທ່ານ ຄິດວ່າມັນຈະມີປະສິດ ທິຜົນໃນການ ຍຸດຕິພຶດ ຕິກຳທີ່ບໍ່ຖືກຕ້ອງໃນອະນາຄົດໄດ້ບໍ່? ໃຫ້ຂຽນແນວຄວາມຄິດຂອງ ທ່ານ ລົງດ້ວຍ. ວິທີການຂອງ ທ່ານ ຄ້າຍຄືກັບວິທີການ ຂອງຄູທ່ານທີ່ໃຊ້ບໍ່?.

| | ວິທີປະຕິບັດວິໄນ | ເປັນຫຍັງຈຶ່ງໃຊ້ວິທີການນີ້ | ວິທີການທີ່ໃຊ້ໄດ້ຮັບຜົນສະເໝີບໍ່, ໂດຍສະເພາະໃນໄລຍະຍາວ? ເດັກນັກຮຽນໄດ້ມີຄວາມຮູ້ສຶກແນວໃດ? |
|---|---|---|---|
| ການກະທຳຂອງຄູສອນທ່ານ | | | |
| ການກະທຳຂອງທ່ານ | | | |

ໃນຫຼາຍໆປະເທດ ແລະ ໃນຫ້ອງຮຽນ, ເຣມອນ ອາດຈະຖືກລົງໂທດດ້ານຮ່າງກາຍ ຍ້ອນພຶດ ຕິກຳຂອງລາວ ເຊິ່ງສ່ວນໃຫຍ່ອາດຈະເປັນການຕີດ້ວຍໄມ້ແສ້ ຫຼື ດ້ວຍວັດຖຸອື່ນໆ. ຄູຂອງ ທ່ານ ເຄີຍ ໄດ້ໃຊ້ວິທີໃດ? ສຳລັບທ່ານເອງເດ ທ່ານ ຄິດວ່າຈະໃຊ້ວິທີການແບບໃດ?

ໃນການຂຽນຕື່ມໃສ່ຕາຕະລາງຂ້າງເທິງນີ້ ມັນບໍ່ເປັນເລື່ອງແປກປະຫລາດ ຖ້າຫາກມີ ຫຼາຍທ່ານຕອບວ່າ "ລົງໂທດເດັກຍ້ອນການປະພຶດແນວບໍ່ດີ" ຫຼື "ເພື່ອຢຸດຕິການປະພຶດຜິດຂອງ

ເຂົາ" ຢູ່ໃນຊ່ອງຄໍລຳ "ເປັນຫຍັງຈຶ່ງໃຊ້ວິທີການນີ້ ?" ຄືກັນກັບຢູ່ໃນຊ່ອງຄໍລຳສຸດທ້າຍ "ວິທີການທີ່ໃຊ້ໄດ້ຜົນສະເໝີບໍ່, ໂດຍສະເພາະໃນໄລຍະຍາວ?" ຫຼາຍ ທ່ານ ຖ້າຫາກຄິດວ່າ ຍາວນານ ແລະ ຍາກ ອາດຈະຕອບ "ບໍ່" ບໍ່ໄວກໍຊ້າ, ເດັກຄົນດັ່ງກ່າວຈະກັບມາປະພຶດຜິດອີກຕາມແບບທີ່ເຄີຍເຮັດ. ຍ້ອນ ຫຍັງ? ຄຳຕອບແມ່ນ ນອນຢູ່ໃນຄວາມແຕກຕ່າງ ລະຫວ່າງ **ການລົງໂທດ** ກັບ **ການປະຕິບັດລະ ບຽບວິໄນ**.

## 1. ຄວາມໝາຍຂອງການລົງໂທດ

ການລົງໂທດແມ່ນການກະທຳ(ໃສ່ໂທດ)ທີ່ບັງຄັບໃຫ້ຄົນທີ່ທຳຜິດກົດລະບຽບ ຫຼື ສະແດງໃຫ້ເຫັນການກະທຳທີ່ບໍ່ເໝາະສົມ. ການລົງໂທດມີຈຸດໝາຍເພື່ອຄວບຄຸມ ການປະພຶດໂດຍຜ່ານເຄື່ອງມືໃນ ທາງລົບ. ການລົງໂທດມີຢູ່ສອງປະເພດທີ່ໃຊ້ກັບນັກຮຽນ ຄື:

1. ການລົງໂທດທີ່ກ່ຽວພັນກັບການດ່າຮ້າຍ ແລະ ຄວາມບໍ່ພໍໃຈທາງວາຈາທີ່ເປັນທາງລົບ. ການລົງ ໂທດປະເພດນີ້ ເປັນທີ່ຮູ້ກັນດີວ່າ ເປັນ **ການປະຕິບັດວິໄນໃນທາງລົບ**.
2. ການລົງໂທດທີ່ກ່ຽວພັນກັບຄວາມເຈັບປວດທາງຮ່າງກາຍ ຫຼື ຈິດໃຈຢ່າງຮ້າຍແຮງ ເຊັ່ນ ການລົງ ໂທດທາງຮ່າງກາຍ.

ໜ້າເສຍດາຍ, ການລົງໂທດທັງສອງແບບນີ້ ແມ່ນແນໃສ່ເລື່ອງການປະພຶດບໍ່ຖືກຕ້ອງ ແລະ ອາດຈະຊ່ອຍໄດ້ໜ້ອຍໜຶ່ງ ຫຼືບໍ່ຊ່ອຍຫຍັງເລີຍ ເພື່ອໃຫ້ເດັກປະພຶດດີຂຶ້ນໃນອະນາຄົດ. ຍິ່ງໄປກວ່ານັ້ນ, ເດັກໄດ້ຮຽນຮູ້ວ່າຜູ້ໃຫຍ່ມີອຳນາດເໜືອກວ່າ, ການໃຊ້ກຳລັງບໍ່ວ່າຈະເປັນທາງດ້ານວາຈາ,ຮ່າງກາຍ ຫຼື ອາລົມຈິດກໍເປັນທີ່ຍອມຮັບໄດ້, ໂດຍສະເພາະຕໍ່ຄົນຜູ້ທີ່ຍັງໜຸ່ມນ້ອຍ ແລະ ອ່ອນ ແອກວ່າ. ບົດຮຽນນີ້ອາດສາມາດນຳໄປສູ່ເຫດການຂອງການຂົ່ມເຫັງ ແລະ ຄວາມຮຸນແຮງ ໃນໂຮງ ຮຽນ ບ່ອນທີ່ມີນັກຮຽນໃຫຍ່ກວ່າຄອບງຳນັກຮຽນທີ່ນ້ອຍກວ່າ ແລະ ບັງຄັບຂົ່ມເຫັງເພື່ອເອົາເງິນ, ອາຫານ, ວຽກບ້ານ ແລະ ຂອງທີ່ມີຄ່າອື່ນໆ.

## 1.1 ການລົງໂທດດ້ານວາຈາ ແລະ ການຮັບມືກັບຄວາມຢາກຮ້າຍ

ການປະຕິບັດວິໄນດ້ານລົບເປັນຮູບແບບຂອງການລົງໂທດ ເຊິ່ງ ມີຈຸດມຸ່ງໝາຍເພື່ອຄວບຄຸມການປະພຶດຂອງນັກຮຽນ, ແຕ່ມັກຈະກ່ຽວຂ້ອງກັບຄຳສັ່ງດ້ວຍວາຈາ ຫຼື ຄຳປະກາດແບບສັ້ນໆ ເທົ່ານັ້ນ ແລະ ບໍ່ໄດ້ເຮັດໃຫ້ເກີດຜົນທັນທີທັນໃດ. ມັກມີການໃສ່ໂທດແບບເຄັ່ງຄັດ ເຊັ່ນ ຕີ ຫຼື ລົບຫູ່ຢຽບຫຍາມໃຫ້ມີຄວາມເຈັບປວດ, ບັນດາຄູສອນ ຜູ້ບໍ່ໃຊ້ການລົງໂທດທາງດ້ານຮ່າງກາຍ ອາດນຳໃຊ້ວິທີການປະຕິບັດວິໄນດ້ານລົບແທນ. ແຕ່ວ່າກໍ ຄື ກັນກັບການລົງໂທດທາງດ້ານຮ່າງກາຍ, ສິ່ງນີ້ກໍສາມາດເຮັດໃຫ້ນັກຮຽນ ມີຄວາມໂກດຮ້າຍ ແລະ ກ້າວລ້າວຫຼືມີຄວາມພາກພູມໃຈໃນຕົນເອງຕ່ຳ.

**ຍຸດທະສາດ ການປະຕິບັດວິໄນທາງລົບປະກອບມີ:**

***ຄຳສັ່ງ***“ ນັ່ງລົງ, ມິດງຽບ”.“ໃຫ້ຂຽນຄຳສັບ100ເທື່ອ”“ຂ້ອຍບໍ່ຢາກເສຍເວລານຳເລື່ອງທີ່ບໍ່ເປັນປະໂຫຍດນີ້”

*ການໃຊ້ຖ້ອຍຄຳຫ້າມປາມ* “ຢ່າເຮັດແນວນັ້ນ!/ຢ່າເຮັດອັນນັ້ນ!”

*ການໃຊ້ຖ້ອຍຄຳໂກດເຄືອງ ແລະ ຮ້າຍ.*“ເຈົ້າຈະຕົກຢູ່ໃນຄວາມລຳບາກຫຼາຍກວ່າທີ່ເຈົ້າຮູ້ຈັກມັນ.

ເຈົ້າ/ມຶງຍັງຈະຖືກກູເຮັດໃຫ້ຍາກກວ່ານີ້ຢູ່”

*ການໃຊ້ຖ້ອຍຄຳຕຳນິ:*“ ອັນນີ້ ເປັນສິ່ງທີ່ດີທີ່ສຸດ ທີ່ເຈົ້າສາມາດເຮັດໄດ້ແລ້ວຫວ໋າ? ເຮັດໄດ້ສ່ຳນີ້ຫວ່າ?

*ການໃຊ້ຖ້ອຍຄຳຂົ່ມຂູ່:* “ຖ້າພວກເຈົ້າບໍ່ຢຸດເຊົາລົມກັນ, ຂ້ອຍຈະສົ່ງພວກເຈົ້າໄປຫ້ອງຜູ້ອຳນວຍການໂຮງຮຽນ”

*ການໃຊ້ຖ້ອຍຄຳແບບ ຖື ວ່າສະຕິປັນຍາຕ່ຳ:* “ເວລາໃດນໍ ເຈົ້າຈະຮຽນຂຽນໃຫ້ໄດ້ດີ. ປານໃດນໍ ເຈົ້າຈຶ່ງຈະຂຽນໄດ້ຄືໝູ່?”

ພວກເຮົາມັກຈະໃຊ້ຍຸດທະສາດດ້ານລົບ ເຫຼົ່າ ນີ້ກໍ ຄືການລົງໂທດທາງດ້ານຮ່າງກາຍ ໃນເມື່ອເວລາ ພວກເຮົາໃຈຮ້າຍ ຫຼື ບໍ່ມີທາງອອກ. ຍັງມີວິທີການທາງບວກທີ່ຫຼາກຫຼາຍ ເພື່ອຈັດການກັບຄວາມໂກດຫຼືຄວາມລຳຄານນີ້. ມີຄູສອນຈຳນວນໜຶ່ງບອກນັກຮຽນ ຂອງເຂົາເຈົ້າວ່າ “ຂ້ອຍຕ້ອງການໃຫ້ພວກເຈົ້າມິດງຽບ ຈັກໄລຍະໜຶ່ງ, ດຽວນີ້ຂ້ອຍຢາກຮ້າຍຫຼາຍແລ້ວ”. ມີຄູສອນອີກຈຳນວນໜຶ່ງໃຫ້ນັກຮຽນ ສະຫງົບໂດຍການນັບຮອດ 10 ຫຼື ຍ່າງອອກຈາກຫ້ອງໄປຫຼາຍໆນາທີ. ຄູສອນອີກ ຈຳນວນໜຶ່ງຈະບອກ ໃຫ້ ນັກຮຽນຮູ້ຄວາມຮູ້ສຶກຂອງຕົນ ເພື່ອຊ່ວຍໃຫ້ນັກຮຽນ ເຂົ້າໃຈວ່າອັນໃດລົບກວນພວກເພິ່ນ ແລ້ວນັກຮຽນ ກໍຮຽນຮູ້ວ່າອັນໃດ ບໍ່ຄວນເຮັດ ແລະ ຍ້ອນຫຍັງ. ນັກຮຽນອາດເຮັດມັນຄືນອີກແຕ່ວ່າເຂົາເຈົ້າຈະມີຄວາມຮັບຜິດຊອບ ຕໍ່ຜົນທີ່ຕາມມາຈາກການກະທຳ ຂອງເຂົາ. ອັນໃດດີທີ່ສຸດສຳລັບທ່ານ.

**ກິດຈະກຳ ເພື່ອປະຕິບັດ : “ ຢ່າ ” - ຮູ້ບໍ່ວ່າພວກເຮົາເປັນຄູມັກເຮັດສິ່ງທີ່ເປັນດ້ານລົບສ່ຳໃດ ?**

ພວກເຮົາມັກຈະໃຊ້ຄຳສັ່ງ“ຢ່າ” ກັບນັກຮຽນ ເປັນຮູບແບບຂອງການປະຕິບັດວິໄນດ້ານລົບ: “ ຢ່າລົມກັນຢູ່ໃນຫ້ອງຮຽນ, ຢ່າແລ່ນໄປມາຢູ່ໃນຫ້ອງຮຽນ ” ພວກເຮົາອາດບໍ່ຮູ້ຈັກຕົວເອງວ່າພວກເຮົາໃຊ້ຄຳສັ່ງດ້ານລົບນີ້ເລື້ອຍປານໃດ, ມັນຫຼຸດອອກມາແບບທຳມະຊາດ, ແຕ່ວ່ານັກຮຽນພວກເຮົາຮູ້. ຖ້າທ່ານ ຕ້ອງການຢາກຮູ້ວ່າ ທ່ານ ໃຊ້ຄຳສັ່ງ“ຢ່າ”ນີ້ເລື້ອຍປານໃດ, ໃຫ້ ທ່ານ ເລືອກເອົານັກຮຽນຜູ້ໜຶ່ງຢູ່ໃນ ຫ້ອງຮຽນ (ຫຼືຜູ້ຊ່ວຍຄູ ຖ້າມີ) ແລ້ວເອົາກ່ອງກ້ອນຫີນນ້ອຍ ຫຼື ເປືອກຫອຍແລະຖົງປະລາສຕິກໃຫ້. ໃຫ້ບອກນັກຮຽນຟັງ ຫຼື ສັງເກດທ່ານຕະຫຼອດອາທິດ. ເວລາໃດກໍ່ໄດ້ເມື່ອເວລານັກຮຽນໄດ້ຍິນ ທ່ານ ໃຊ້ ຄຳສັ່ງ “ຢ່າ” ໃຫ້ນັກຮຽນ ເອົາກ້ອນຫີນ ຫຼື ເປືອກຫອຍອອກຈາກ

ກ່ອງ ແລ້ວປ່ອນໃສ່ຖົງ ປະລາສຕິກ.  ຮອດທ້າຍອາທິດ, ໃຫ້ນັບເບິ່ງວ່າມີກ້ອນຫີນ ຫຼື ເປືອກຫອຍເທົ່າໃດຢູ່ໃນຖົງປະລາສຕິກ.

ແທນທີ່ຈະໃຊ້ຄຳສັ່ງ "ຢ່າ" ໄປຕະຫລອດ (ເຖິງແມ່ນວ່າບາງຄັ້ງມັນກໍມີຄວາມຈຳເປັນ), ໃນເວລາທີ່ເວົ້າເຖິງການປະພຶດທີ່ຕ້ອງການໃຫ້ ທ່ານ ແຕ່ງປະໂຫຍກໃນທາງບວກຄືນໃໝ່, ແທນທີ່ຈະເວົ້າວ່າ, ຕົວຢ່າງ "ຢ່າ ແລ່ນຢູ່ໃນຫ້ອງຮຽນ" ໃຫ້ພະຍາຍາມເວົ້າ "ໃຫ້ຍ່າງຢູ່ໃນຫ້ອງຮຽນ". ອັນນີ້ແມ່ນໄດ້ສະແດງອອກຢ່າງຈະແຈ້ງວ່າ ທ່ານ ຕ້ອງການຢາກໃຫ້ນັກຮຽນປະພຶດແນວໃດ. ບາງຄັ້ງທ່ານ ອາດຕ້ອງການຢາກໃຫ້ເຫດຜົນທາງດ້ານກົດລະບຽບ, ພິເສດໃນເວລາກ່າວ ມັນອອກມາເທື່ອທຳອິດ. ການອະທິບາຍກົດລະບຽບອາດເວົ້າ ຄື ແນວນີ້ໃຫ້ຍ່າງຢູ່ໃນຫ້ອງຮຽນ. ຖ້າຫາກພວກນ້ອງແລ່ນພວກນ້ອງອາດເຕະສະດຸດຕັ່ງອີ້ແລ້ວພວກນ້ອງຈະບາດເຈັບ ແລະ ອາດຈະຕ້ອງໄປຫານາຍ ແພດ ".

## 1.2 ການລົງໂທດດ້ານຮ່າງກາຍ

ໃນການຈັດການກັບນັກຮຽນ ຄືກັບທ້າວເຣມອນນັ້ນ, ຄູສອນຫຼາຍຄົນອາດ ຈະເລືອກເອົາຮູບແບບຂອງການລົງໂທດຮຸນແຮງ, ການລົງໂທດແບບຮຸນແຮງສອງຢ່າງສາມາດເກີດ ຂຶ້ນແບບ ແຍກກັນ ຫຼື ເກີດຂຶ້ນພ້ອມໆກັນ ຄື ການລົງໂທດທາງດ້ານຮ່າງກາຍ ແລະ ການລົງ ໂທດທາງ ດ້ານອາລົມຈິດການລົງໂທດ ທັງສອງຮູບແບບນີ້ລ້ວນແຕ່ແມ່ນຮູບແບບ ຂອງການກະທຳຄວາມຮຸນແຮງຕໍ່ເດັກຊຶ່ງເປັນການລະເມີດສິດທິຂອງເຂົາເຈົ້າໃນຖານະເປັນຄົນຜູ້ໜຶ່ງ ທີ່ຈະຕ້ອງໄດ້ນັບຖື, ໃຫ້ກຽດ, ໄດ້ຮັບການປົກປ້ອງດ້ວຍກົດໝາຍຢ່າງເທົ່າທຽມກັນ ແລະ ໄດ້ຮັບການປົກປ້ອງຈາກການກະທຳທີ່ຮຸນ ແຮງໃນທຸກ ຮູບແບບ.

*ການລົງໂທດດ້ານຮ່າງກາຍ* ແລະ ການນາບຂູ່, ຈະເກີດຂຶ້ນເມື່ອເວລາຄູສອນ, ຜູ້ປົກຄອງ ຫຼື ຜູ້ດູແລເດັກມີເຈດຕະນາຢາກເຮັດໃຫ້ເດັກເຈັບປວດ ທາງດ້ານຮ່າງກາຍ ຫຼື ສ້າງຄວາມສະດວກ, ເຊິ່ງຕາມປົກກະຕິ ແລ້ວແມ່ນເພື່ອຢຸດຕິການປະພຶດທີ່ບໍ່ດີຂອງເດັກ, ເພື່ອໃສ່ໂທດເຂົາທີ່ເຮັດຜິດ ແລະເພື່ອປ້ອງກັນການປະພຶດອັນເກົ່າບໍ່ໃຫ້ເຮັດຕື່ມອີກ. ຢູ່ໃນໂລກນີ້ ມີການຮັບຮູ້ເພີ່ມຂຶ້ນຫຼາຍວ່າ ການລົງໂທດທາງດ້ານຮ່າງກາຍ ເປັນສິ່ງຜິດກົດໝາຍ ແລະ ມັນບໍ່ແມ່ນ ສິ່ງທີ່ພາໃຫ້ມີການ "ຮ່ຳຮຽນ"ດີຂຶ້ນຕື່ມ. ການກະທຳ ທີ່ເປັນການລົງໂທດທາງດ້ານຮ່າງກາຍ ໄດ້ມີຄວາມແຕກຕ່າງກັນໄປຕາມວັດທະນະທຳທີ່ແຕກຕ່າງກັນ ຊຶ່ງ ປະກອບດ້ວຍຕົວຢ່າງດັ່ງນີ້:

- ຕີເດັກດ້ວຍມື ຫຼືດ້ວຍວັດຖຸ :(ເຊັ່ນ ໄມແສ້, ສາຍແອວ, ເກີບ, ປຶ້ມ, ບັນທັດ ແລະອື່ນໆ)
- ເຕະ, ຈັບສັ່ນ ຫຼື ເຕະຖີບເດັກອອກໄປ ( ຂວ້າງເດັກອອກໄປ )
- ຢິກ ຫຼື ດຶງຜົມ.
- ບັງຄັບໃຫ້ເດັກຢືນໃນທ່າທີ່ບໍ່ສະດວກ.
- ບັງຄັບເດັກໃຫ້ອອກກຳລັງກາຍເກີນກຳນົດ ຫຼື ບັງຄັບໃຊ້ແຮງງານ.

- ເອົາໄຟດາດເດັກ ຫຼື ເຮັດໃຫ້ເດັກຕື່ນຕົກໃຈ.
- ບັງຄັບໃຫ້ເດັກກິນສິ່ງເປິະເປື້ອນ ( ເຊັ່ນ: ກິນສະບູ )
- ສັ່ງໃຫ້ເອົາຫົວຕຳກະດານ
- ຄຸເຂົ່າໃສ່ໝາມໝາກມີ້

ໃນຂະນະທີ່ການລົງໂທດທາງດ້ານຮ່າງກາຍ ມີຄວາມໝາຍເພື່ອ ເຮັດໃຫ້ມີຄວາມເຈັບປວດທາງ ດ້ານຮ່າງກາຍນັ້ນ, ການລົງໂທດດ້ານອາລົມ ຈິດມີຄວາມໝາຍເພື່ອລົບຫຼູ່ ດູຖູກເດັກ ແລະ ເຮັດໃຫ້ມີຄວາມເຈັບປວດທາງດ້ານຈິດໃຈ. ເຊັ່ນ ດຽວັບການລົງໂທດທາງດ້ານວາຈາເຊິ່ງຈະຮຸນແຮງກວ່າຫຼາຍ.ສິ່ງ ດັ່ງກ່າວປະກອບມີ ເວົ້າເຢາະເຢີ້ຍຢູ່ໃນສາທາລະນະ, ເຢາະເຢີ້ຍແບບແດກດັນ ຫຼືເວົ້າສຽດສີ, ຂົ່ມຂູ່, ດ່າ ແບບຫຍາບຄາຍ, ຮ້ອງສັ່ງການ ຫຼື ການປະພຶດອື່ນໆ ທີ່ມີລັກສະນະລົບຫຼູ່ ເຊັ່ນ ບໍ່ໃຫ້ເດັກນຸ່ງເຄື່ອງ ຫຼື ບໍ່ ໃຫ້ກິນອາຫານ ຫຼື ບັງຄັບເດັກໃຫ້ຢືນຢູ່ໃນບ່ອນທີ່ບໍ່ມີກຽດ ເພື່ອໃຫ້ທຸກຄົນໄດ້ເຫັນ ແລະ ໃຫ້ເວົ້າຂວັນກຽວ ກັບຕົວເດັກ.

ການລົງໂທດ ທາງດ້ານຮ່າງກາຍ ແມ່ນເຫັນໄດ້ງ່າຍກວ່າ. ການລົງໂທດທາງດ້ານອາລົມຈິດ ແມ່ນຍາກທີ່ຈະສັງເກດເຫັນຫຼາຍກວ່າ. ເຖິງຢ່າງໃດກໍດີການລົງໂທດເດັກ ໂດຍສັ່ງໃຫ້ເຂົາອອກໄປ ຢືນ ຢູ່ກາງ ແສງແດດເປັນຫຼາຍຊົ່ວໂມງ, ເພື່ອທຳລາຍຄວາມພາກພູມໃຈໃນຕົນເອງຂອງເດັກ ໂດຍຜ່ານການ ເຢາະເຢີ້ຍ ຂອງສາທາລະນະຊົນ, ປະຕິເສດບໍ່ໃຫ້ເດັກກິນອາຫານ ຫຼື ນຸ່ງເຄື່ອງ ກໍເປັນການເຮັດໃຫ້ ເສຍຫາຍ ຈາກຮູບແບບຕ່າງໆຂອງການລົງໂທດທາງດ້ານຮ່າງກາຍ.

ຍິ່ງໄປກວ່ານັ້ນ, ມັນກໍບໍ່ມີການແບ່ງເສັ້ນອັນຈະແຈ້ງລະຫວ່າງການລົງໂທດທາງຮ່າງກາຍ ແລະ ການລົງໂທດທາງອາລົມຈິດ. ມັກມີເລື້ອຍໆທີ່ເດັກ ຮູ້ສຶກວ່າການລົງໂທດດ້ານຮ່າງກາຍ ກໍເປັນການລົບຫຼູ່ ແລະ ເຮັດໃຫ້ເຊື່ອມເສຍ. ດັ່ງນັ້ນໃນເອກະສານນີ້, ຈຶ່ງບັນຈຸທັງສອງຄຳ ຄື: "ການລົງໂທດດ້ານຮ່າງກາຍ ແລະ ການລົງໂທດດ້ານອາລົມຈິດ"

### ກິດຈະກຳເພື່ອປະຕິບັດ: ອັນນີ້ແມ່ນການລົງໂທດດ້ານຮ່າງກາຍບໍ່ ?

ໃຫ້ອ່ານກໍລະນີສຶກສາລຸ່ມນີ້. ໃຫ້ຄົ້ນຄິດ ຫຼື ອາດຈະສົນທະນາກັບເພື່ອນຂອງ ທ່ານນີ້ແມ່ນການລົງໂທດດ້ານຮ່າງກາຍຫຼືບໍ່ ແລະ ມັນເປັນການໃຫ້ສອນບົດຮຽນແກ່ເດັກຫຼືບໍ່?

### ບົດຮຽນຂອງນາງ ຊີຣິນ.

*ນາງ ຊີຣິນ ໄປໂຮງຮຽນທຸກໆມື້, ນາງມີຄວາມມ່ວນຊື່ນກັບການຮຽນບົດຮຽນສ່ວນຫຼາຍ ຍົກເວັ້ນການສະກົດຄຳບໍ່ຖືກຕ້ອງຂອງນາງ. ທຸກໆມື້ນາງຢ້ານກົວຫຼາຍ ທີ່ສຸດແມ່ນການຂຽນສະກົດຄຳຢູ່ໃນບົດສອບເສັງ.ທຸກຄຳສັບນາງ ແລະເພື່ອນຂອງນາງ ຫຼາຍຄົນຂຽນສະກົດຄຳບໍ່ຖືກຕ້ອງ, ຄູສອນຂອງນາງ ບອກໃຫ້ນາງ ແລະ ໝູ່ເພື່ອນປີນໄຕ່ຂຶ້ນໂພນທາງດ້ານຫຼັງຂອງໂຮງຮຽນ ແລະໃຫ້ຖືກ້ອນດິນຈີ່ ຫ້າກ້ອນ ລົງມາຈາກໂພນນັ້ນ. ດິນຈີ່ເຫຼົ່ານັ້ນ ແມ່ນເອົາມາໃຊ້ກໍ່ຝາອ້ອມໂຮງຮຽນ. ນາງຊີຣິນບໍ່ເຂົ້າໃຈວ່າການ ຫອບເອົາກ້ອນດິນຈີ່ມານີ້ຈະຊ່ອຍໃຫ້ນັກຮຽນຮູ້ການຂຽນ ສະກົດຄຳ*

*ແນວໃດ? ນາງບໍ່ມີທາງເລືອກແຕ່ ກໍໄດ້ອອກແຮງງານ. ບາງຄັ້ງຄາວເມື່ອເວລານາງຂົບດົບຈີ່ແລ້ວ ເຄື່ອງຂອງນາງຈະເປື້ອນຫຼາຍທີ່ສຸດ ແລະ ນາງກໍຖືກດ່າຮ້າຍຢູ່ເຮືອນອີກເຊັ່ນດຽວກັນ.*

**ການລົງໂທດທາງຮ່າງກາຍເປັນສິ່ງທີ່ແຜ່ຫຼາຍຄືແນວໃດ ແລະ ຍ້ອນຫຍັງ ?**

ໃຫ້ທ່ານຄິດຄືນຫຼັງ ໃນເວລາເຂົ້າໂຮງຮຽນ. ຄູ ຫຼື ໝູ່ເພື່ອນຂອງທ່ານຜູ້ໃດ ຜູ້ໜຶ່ງໄດ້ຖືກລົງໂທດທາງກາຍ ແລະ ທາງດ້ານອາລົມຈິດເລື້ອຍໆບໍ່? ມີໂອກາດທີ່ທ່ານຈະເວົ້າວ່າ “ເຈົ້າ/ແມ່ນແລ້ວ” ເພາະວ່າການລົງໂທດດ້ານຮ່າງກາຍເປັນການປະຕິບັດ ທີ່ທຳມະດາໄປທົ່ວໂລກ, ມີພຽງ 15 ປະເທດ ເທົ່ານັ້ນ ໃນຈຳນວນ 190 ກວ່າປະເທດໃນໂລກໄດ້ລະຖິ້ມການລົງໂທດ ດ້ານຮ່າງກາຍຂອງເດັກ. ຢູ່ໃນຫຼາຍປະເທດທີ່ຍັງເຫຼືອ, ຜູ້ປົກຄອງ ຫຼືຜູ້ດູແລເດັກອື່ນໆ, ລວມເອົາທັງຄູສອນຍັງຮັກສາ “ສິດທິ” ໃນການຕີ ແລະລົບຫຼູ່ເດັກຢູ່.

ໃນຂະນະທີ່ພວກເຮົາສ່ວນຫຼາຍ ໄດ້ປະນາມການກະທຳທີ່ຮຸນແຮງໂດຍລວມໆ ແລະຍັງໃຊ້ຄວາມຮຸນແຮງກັບຜູ້ໃຫຍ່, ໂດຍສະເພາະຍັງມີຄົນຈຳນວນໜ້ອຍໜຶ່ງຢູ່ໃນໂລກໃຫ້ຄວາມເອົາໃຈໃສ່ຢ່າງຈິງຈັງ ຕໍ່ການໃຊ້ຄວາມຮຸນແຮງຕໍ່ເດັກ. ຍ້ອນຫຍັງ? ຮີດຄອງປະເພນີທີ່ຍັງຄົງຢູ່ເປັນເວລາຍາວນານ ແລະ ຄວາມເຊື່ອດ້ານວັດທະນະທຳ ຍັງຄົງຮັກສາການນຳໃຊ້ ການລົງໂທດທາງດ້ານຮ່າງກາຍຢູ່ໃນສັງຄົມຫຼາຍແຫ່ງ. “ຮັກງົວໃຫ້ຜູກ ຮັກລູກໃຫ້ຕີ, ຖ້າບໍ່ດັ່ງນັ້ນເດັກຈະເສຍຄົນ” ເປັນປະໂຫຍກຄຳເວົ້າທີ່ຮູ້ກັນດີທີ່ສຸດອັນໜຶ່ງ. ຍັງມີສິ່ງອື່ນອີກ ທີ່ລວມຢູ່ໃນຄວາມເຊື່ອທີ່ວ່າການລົງໂທດທາງດ້ານຮ່າງກາຍ:

(1) ມີປະສິດທິຜົນ,

(2) ປ້ອງກັນ ເດັກບໍ່ໃຫ້ຕົກຢູ່ໃນອັນຕະລາຍ ຫຼືຄວາມລຳບາກ ,

(3) ສິດສອນເຂົາເຈົ້າໃນສິ່ງທີ່ຖືກຈາກສິ່ງທີ່ເຮັດຜິດ ,

(4) ປູກຝັງເຫື່ອລະກ້າວໃຫ້ຮູ້ຈັກ ຄວາມເຄົາລົບນັບຖື,

(5) ມັນເປັນສິ່ງແຕກຕ່າງຈາກການທາລຸນດ້ານຮ່າງກາຍ.

ເຖິງຢ່າງໃດກໍດີ, ການວິໄຈໄດ້ສະແດງໃຫ້ເຫັນວ່າ ການລົງໂທດທາງດ້ານຮ່າງກາຍ ບໍ່ໄດ້ມີຜົນດີຄືດັ່ງກ່າວຂ້າງເທິງ. ໃນຄວາມເປັນຈິງ ແລ້ວມັນເປັນຮູບແບບຂອງການທາລຸນຕໍ່ເດັກ .

## ການລົງໂທດທາງດ້ານຮ່າງກາຍ ໃຊ້ໄດ້ຜົນບໍ່ ? ຜົນທີ່ຕາມມາພາຍຫຼັງແມ່ນຫຍັງ?

ການລົງໂທດດ້ານຮ່າງກາຍ ຍັງປະຕິບັດກັນຢູ່ຢ່າງກວ້າງຂວາງ ຍ້ອນຄູຍັງເຊື່ອວ່າມັນໃຊ້ໄດ້ຜົນ, ມັນມີປະສິດທິຜົນ. ແຕ່ວ່າ ມັນແມ່ນແທ້ບໍ່? ການວິໄຈທີ່ໃຊ້ເວລາກວ່າສອງທົດສະວັດໄດ້ຊີ້ໃຫ້ເຫັນວ່າ ຜົນໄດ້ຮັບທາງບວກຂອງການລົງໂທດທາງດ້ານຮ່າງກາຍ ແມ່ນການຍິນຍອມ/ຟັງຄວາມໃນທັນທີ ເທົ່ານັ້ນ, ໃນຂະນະທີ່ຜົນທີ່ຕາມມາທາງດ້ານລົບແມ່ນມີນ້ຳໜັກຫລາຍກວ່າ. ການນຳໃຊ້ການລົງໂທດທາງດ້ານຮ່າງກາຍ ຍາກທີ່ຈະເຮັດໃຫ້ເກີດຜົນຕາມທີ່ປາຖະໜາ, ເຊິ່ງໝາຍເຖິງການປ່ຽນແປງພຶດຕິກຳໄປໃນທາງບວກ ແລະ ຍືນຍົງໃນຕົວຂອງນັກຮຽນ. ໃນທາງກົງ

ກັນຂ້າມມັນສາມາດມີຜົນໄປສູ່ຄວາມຫຼົ້ມຈົມ ແລະ ເປັນໄປໃນທາງລົບທີ່ສຸດສໍາລັບນັກຮຽນ ແລະ ຕົວທ່ານເອງ.

- ເມື່ອເວລາພວກເຮົານໍາໃຊ້ການລົງໂທດທາງດ້ານຮ່າງກາຍ, ຜົນທີ່ໄດ້ຮັບຈະບໍ່ສາມາດທໍານາຍໄດ້ ຊຶ່ງຈະລວມມີທັງຄວາມໂສກເສົ້າ, ມີຄວາມພາກພູມໃຈ ໃນຕົນເອງຕໍ່າ, ໂກດເຄືອງ, ດ່າວ່າ, ພຶດຕິກໍາກ້າວລ້າວ, ຢາກແກ້ແຄ້ນ, ຝັນຮ້າຍ, ຍ່ຽວໃສ່ບ່ອນນອນ, ບໍ່ເຄົາລົບການຈັດຕັ້ງ, ມີ ພາວະຈິດໃຈບໍ່ເບີກບານແຈ່ມໃສ, ມີຄວາມກັງວົນ, ໃຊ້ຢາເສບຕິດ, ມີການທາລຸນທາງເພດ, ທາລຸນເດັກ, ທາລຸນຄູ່ຜົວເມຍ, ເປັນເດັກທີ່ມີພຶດຕິກໍາເຫຼວໄຫຼ ແລະ ທີ່ແນ່ນອນແມ່ນຈະມີການລົງໂທດ ທາງດ້ານຮ່າງກາຍເພີ່ມຂຶ້ນ.
- ໃນໄລຍະຍາວ,ເດັກຜູ້ຖືກລົງໂທດດ້ານຮ່າງກາຍ ໄດ້ສະແດງໃຫ້ເຫັນການພັດທະນາພຶດຕິກໍາ ຕ້ານສັງຄົມ ແລະ ກໍມັກຈະເຂົ້າຮ່ວມໃນການກະທໍາຮຸນແຮງໄດ້ໄວ, ອັນເປັນການສ້າງການທາລຸນດ້ານຮ່າງກາຍຢ່າງຕໍ່ເນື່ອງຈາກ ເຊັ່ນ ຄົນນີ້ໄປຫາ ເຊັ່ນ ຄົນຕໍ່ໄປ. ໂດຍການ ນໍາໃຊ້ຄວາມ ຮຸນແຮງ, ພວກເຮົາກໍຈະສອນຄວາມຮຸນແຮງ.
- ໃນຖານະທີ່ເປັນຄູສອນ ພວກເຮົາມີຄວາມຮັບຜິດຊອບເພື່ອປັບປຸງການຂະຫຍາຍຕົວ ແລະ ການພັດທະນາຂອງນັກຮຽນພວກເຮົາ. ການລົງໂທດທາງດ້ານຮ່າງກາຍ ສາມາດສ້າງຄວາມເສຍຫາຍໃຫ້ແກ່ການພັດທະນາເດັກ ເປັນຜົນສະທ້ອນຕໍ່ບັນຫາຂອງການປັບຕົວ ທາງດ້ານການສຶກ ສາ ກໍຄືດ້ານສັງຄົມ, ມະນຸດສໍາພັນ ແລະຈິດຕະວິທະ ຍາ. ຕົວຢ່າງຈາກການສຶກສາວິໄຈໄດ້ສະແດງໃຫ້ເຫັນວ່າຜູ້ທີ່ຕົກ ເປັນເຫຍື່ອຂອງການລົງໂທດທາງດ້ານ ຮ່າງກາຍ ຈະຖືກກົດດັນໃຫ້ ປະລະການຮຽນ ເນື່ອງຈາກວ່າເຂົາຢ້ານຖືກຕີ ແລະຖືກລົບຫຼູ່. ເມື່ອຢູ່ນອກໂຮງຮຽນເຂົາເຈົ້າ ອາດຈະເຂົ້າຮ່ວມຂະບວນການເສບ ຫຼື ຂາຍຢາເສບຕິດ ແລະ ເຮັດກິດຈະກໍາອື່ນໆ ທີ່ສັງຄົມ ຍອມຮັບບໍ່ໄດ້,
- ເຖິງແມ່ນວ່າໃນເຮົາຈະສາມາດຢຸດຕິການປະພຶດທີ່ບໍ່ເໝາະສົມໄດ້ສໍາເລັດເປັນເວລາຊົ່ວຄາວ, ການນໍາໃຊ້ການລົງໂທດທາງດ້ານຮ່າງກາຍຂອງພວກເຮົາ ຍັງຈະບໍ່ສາມາດບົ່ມສອນພຶດຕິກໍາອັນເໝາະສົມໃຫ້ແກ່ເດັກໄດ້. ຍ້ອນຫຍັງ ? ເດັກບໍ່ໄດ້ຮູ້ ຫຼືບໍ່ໄດ້ຮຽນຮູ້ວ່າຈະເຮັດຫຍັງແດ່, ການປະພຶດອັນໃດແດ່ທີ່ເຂົາຕ້ອງນໍາມາປະຕິບັດ ນອກຈາກການຢຸດຕິສິ່ງທີ່ເຂົາເຈົ້າກໍາລັງເຮັດຜິດຢູ່ເທົ່ານັ້ນ.. ມັນກໍ່ຄ້າຍຄືກັນກັບການບອກ ໃຫ້ທ່ານບໍ່ໃຫ້ໃຊ້ການລົງໂທດທາງດ້ານຮ່າງກາຍ, ແຕ່ແລ້ວບໍ່ສອນໃຫ້ ທ່ານ ຮູ້ວິທີການປະຕິບັດວິໄນແບບອື່ນໆທີ່ເໝາະສົມ ທີ່ທ່ານຈະສາມາດນໍາໃຊ້ໄດ້.
- ການນໍາໃຊ້ການລົງໂທດທາງດ້ານຮ່າງກາຍຂອງພວກເຮົາ ບາງຄັ້ງກໍສາມາດຖືກຕີກັບຊຶ່ງມັນສາມາດເຮັດໃຫ້ມີຄວາມແຂງແກ່ນຂຶ້ນຢ່າງບໍ່ໄດ້ຕັ້ງໃຈ. ຕົວຢ່າງ. ເມື່ອເວລາມີຄວາມເອົາໃຈໃສ່ຈາກຄູສອນ ແລະ ໝູ່ເພື່ອນ, ບາງຢ່າງທີ່ເດັກທີ່ປະພຶດບໍ່ດີ, ຄືດັ່ງທ້າວເຣມອນອາດເກີດການຊອກຫາຄໍາແນະນໍາ..

- ການລົງໂທດທາງດ້ານຮ່າງກາຍ ມັກຈະສ້າງຄວາມແຄ້ນເຄືອງ ແລະ ຄວາມເປັນສັດຕູເລື້ອຍໆ, ການຈະເຮັດໃຫ້ມີການພົວພັນ ແລະຄວາມເຊື່ອຖືອັນດີ ລະຫວ່າງ ຄູ-ນັກຮຽນ ແລະນັກຮຽນ-ນັກຮຽນນັ້ນຍາກທີ່ຈະສ້າງຂຶ້ນໄດ້ໃນອະນາຄົດ. ດັ່ງນັ້ນ ມັນຈຶ່ງເຮັດໃຫ້ວຽກຂອງພວກເຮົາຍາກ ຂຶ້ນ, ຜົນຕອບແທນໜ້ອຍລົງ ແລະ ຖືກກົດກັນຢ່າງໃຫຍ່ຫລວງ. ພວກເຮົາຈະເລີ່ມມີຄວາມກັງ ວົນທີ່ສຸດທີ່ຈະເຂົ້າໄປໃນຫ້ອງຮຽນແລ້ວສິດສອນ. ນັກຮຽນຂອງພວກເຮົາອາດມີຄວາມຮູ້ສຶກ ຕໍ່ຄວາມບໍ່ພໍໃຈຂອງພວກເຮົາແລະ ປະຕິເສດ ການມາຮຽນ ເຊັ່ນກັນ.
- ເດັກນັກຮຽນ ຜູ້ທີ່ຕົກເປັນເຫຍື່ອ ຂອງການລົງໂທດທາງດ້ານຮ່າງກາຍອາດຈົບລົງດ້ວຍການບາດເຈັບ ແລະ ຈຳເປັນຕ້ອງປິ່ນປົວ, ປ່ອຍເປັນຄວາມເສຍຫາຍຖາວອນ ຫຼື ອາດເຮັດໃຫ້ເສຍຊີວິດ. ເຖິງຈະເປັນພຽງການຂົ່ມຂູ່ທີ່ຈະລົງໂທດທາງດ້ານຮ່າງກາຍ ກໍສາມາດເຮັດໃຫ້ເກີດຄວາມເສຍ ຫາຍໄດ້, ຕົວຢ່າງ ເມື່ອເວລາຄູສອນຂົ່ມຂູ່ຈະໃຊ້ໄມ້ແສ້ ແລະໃນເວລາຍົກໄມ້ແສ້ຂຶ້ນຄູເອົາໄມ້ກະແທກໃສ່ຕານັກຮຽນອອກມາໂດຍບໍ່ໄດ້ຕັ້ງໃຈ. (ໜ້າເສຍໃຈ ເຫດການນີ້ໄດ້ເກີດຂຶ້ນຈິງ).

## 2. ຄວາມໝາຍຂອງການປະຕິບັດວິໄນ/ການສຶກສາອົບຮົມແບບສ້າງສັນ

ຄຳວ່າການປະຕິບັດວິໄນແມ່ນຄຳສັບທີ່ມັກຈະໃຊ້ຜິດເລື້ອຍໆ, ພິເສດໃນເວລາມັນຖືກຕີຄວາມ ໝາຍໃຫ້ເທົ່າກັບການລົງໂທດ. ຕໍ່ກັບຄວາມເຂົ້າໃຈຂອງຄູສອນຫຼາຍຄົນ, ການປະຕິບັດວິໄນໝາຍເຖິງ ການລົງໂທດ “ເດັກຜູ້ນີ້ ຈຳເປັນຕ້ອງ ໃສ່ວິໄນ” ຈະຖືກແປເປັນ “ເດັກຜູ້ນີ້ຈຳເປັນຕ້ອງຕີ ຫຼື ຂ້ຽນດ້ວຍແສ້” ອັນນີ້ແຫຼະ ຄື ຜິດ!

***ການປະຕິບັດວິໄນ ແມ່ນການປະຕິບັດການສິດສອນ ຫຼື, ສຶກສາອົບຮົມຄົນໃຫ້ເຊື່ອຟັງລະບຽບ ຫຼືກົດຂອງການປະພຶດ ຢູ່ໃນໄລຍະສັ້ນ ແລະໄລຍະຍາວ.***

ໃນຂະນະທີ່ການລົງໂທດມີຄວາມໝາຍ ເພື່ອ<u>ຄວບຄຸມ</u>ການປະພຶດຂອງເດັກນັ້ນ, ການໃສ່ວິໄນ ຈະມີຄວາມໝາຍ ເພື່ອ<u>ພັດທະນາ</u>ການປະພຶດຂອງເດັກ, ພິເສດແມ່ນເລື່ອງການປະພຶດຕົວໃນສະຖານະ ການຕ່າງໆ. ຄວາມໝາຍວ່າ ສອນເດັກນັກຮຽນໃຫ້ມີຄວາມສາມາດ ຄວບຄຸມຕົນເອງ ແລະມີຄວາມເຊື່ອ ໝັ້ນ ໂດຍເລັງໃສ່ສິ່ງທີ່ພວກເຮົາຕ້ອງການໃຫ້ເດັກໄດ້ຮຽນຮູ້ ແລະສິ່ງທີ່ເດັກມີຄວາມອາດສາມາດ ໃນການຮຽນຮູ້. ອັນນີ້ ເປັນພື້ນຖານ ສຳລັບແນະນຳເດັກກ່ຽວກັບວິທີການຢູ່ຮ່ວມກັນດ້ວຍຄວາມ ປອງດອງກັບພວກເຂົາເອງ ແລະ ຢູ່ຮ່ວມກັບຜູ້ອື່ນໆ. ເປົ້າໝາຍສຸດຍອດຂອງການປະຕິບັດວິໄນ ແມ່ນ ເພື່ອໃຫ້ເດັກເຂົ້າໃຈການປະພຶດຂອງເຂົາເອງ, ມີແນວຄິດລິເລີ່ມ, ມີຄວາມຮັບຜິດຊອບຕໍ່ສິ່ງທີ່ເລືອກ ການປະພຶດປະຕິບັດຂອງຕົນ, ເຄົາລົບນັບຖືຕົນເອງ ແລະ ຜູ້ອື່ນໆ. ເວົ້າອີກດ້ານໜຶ່ງ, ເຂົາຍອມຮັບ ແລະ ຊຶມຊັບເອົາຂະບວນ ການຄົ້ນຄິດ

ແລະ ການປະພຶດໃນທາງບວກທີ່ສາມາດສືບຕໍ່ຄົງຢູ່ໃນຊົ່ວຊີວິດຂອງເຂົາ. ຕົວຢ່າງ, ເມື່ອເວລາທ່ານນຶກເຖິງ "ຄົນທີ່ມີວິໄນ", ທ່ານນຶກເຖິງອັນໃດ? ນັກກິລາກາຍຍະກຳ (gymnast) ກິລາໂອລິມປິກ ຜູ້ທີ່ຢຸດເຊົາຄວາມຊິນເຄີຍທີ່ບໍ່ດີ ເຊັ່ນ ເຊົາສູບຢາ, ຜູ້ທີ່ລະງັບສະຕິອາລົມຢູ່ໃນທ່າມກາງຄວາມສັບສົນ. ທັງໝົດເຫຼົ່ານີ້ ມັນຮຽກຮ້ອງໃຫ້ມີການຄວບຄຸມຕົນເອງ ຊຶ່ງແມ່ນເປົ້າໝາຍຂອງການປະຕິບັດວິໄນ.

ການປະຕິບັດວິໄນ ຈະປະກອບສ້າງຮູບແບບຂອງການປະພຶດຂອງເດັກ ແລະ ຊ່ອຍໃຫ້ເຂົາຮຽນຮູ້ການຄວບຄຸມຕົນເອງເມື່ອໃຫ້ການຊຸກຍູ້ສົ່ງເສີມ, ບໍ່ມີຄວາມເຈັບປວດ ແລະ ບໍ່ແມ່ນໃຫ້ຜົນທີ່ຕາມມາ ໂດຍບໍ່ມີຄວາມໝາຍສຳຄັນ. ຖ້າຫາກທ່ານເປັນຜູ້ປົກຄອງ ຫລື ເພື່ອນຂອງທ່ານມີເດັກ, ໃຫ້ທ່ານຄຶດຄືນ ເຖິງເດັກໃນເວລາປີທຳອິດ ຫລືປີທີສອງ. ເດັກນ້ອຍຖືກສອນແນວໃດເພື່ອໃຫ້ຮູ້ຕົບມື, ຍ່າງ ຫຼືເວົ້າ. ທ່ານ ຫຼືເພື່ອນຂອງທ່ານອາດນຳໃຊ້ເຕັກນິກການສິດສອນ ຄືສະແດງຕົວຢ່າງໃຫ້ເບິ່ງ ຄືເປັນທີ່ຮູ້ກັນ "ການເປັນ ແບບຢ່າງ" ລວມທັງການໃຫ້ຄຳຍ້ອງຍໍ ແລະໃຫ້ໂອກາດເພື່ອປະຕິບັດ, ບໍ່ແມ່ນ ຮ້ອງໃສ່, ຕີ, ດູຖູກ ຫຼື ຂົ່ມຂູ່. ການຊຸກຍູ້ສົ່ງເສີມອັນນີ້ມັນແມ່ນປະເພດການຍ້ອງຍໍທີ່ກະຕຸ້ນນັກຮຽນ ໃຫ້ເຮັດວຽກ, ໃຫ້ຮຽນ ແລະໄດ້ຮັບ ຜົນສຳເລັດ. ມັນເປັນການສ້າງຄວາມພາກພູມໃຈໃນຕົນເອງຍ້ອນວ່າເດັກ ນັກຮຽນໄດ້ຮ່ຳຮຽນສິ່ງທີ່ເຂົາເຈົ້າໄດ້ມີຄວາມຮັບຜິດຊອບໂດຍກົງ ເພື່ອໄດ້ມາເຊິ່ງການຍ້ອງຍໍ ຫຼື ການຍົກຍ້ອງໃຫ້ລາງວັນອື່ນໆ. ເດັກນັກຮຽນ ສາມາດເລືອກເພື່ອໃຫ້ໄດ້ມາ ຫຼື ບໍ່ໄດ້ມາ. ສິ່ງດັ່ງກ່າວນີ້ ຈະໃຫ້ຄວາມ ຮູ້ສຶກຂອງ ການຄວບຄຸມວິຖີຊີວິດຂອງເຂົາ ຊຶ່ງເປັນສ່ວນປະກອບຫຼັກສຳລັບຄວາມພາກພູມ ໃຈໃນຕົນເອງທີ່ແຂງແຮງ. ເຊັ່ນດຽວກັນ, ການບໍ່ຊຸກຍູ້ສົ່ງເສີມ ການປະພຶດຜິດ ເຊັ່ນ ບໍ່ເອົາໃຈໃສ່ ຮຽນເອົານິໄສສັນດານ ໂມໂຫໂທໂສ ຫຼືມາຮອດຫ້ອງຮຽນຊ້າ ຈະເປັນການສອນເດັກນັກຮຽນ ໃຫ້ມີການຄວບຄຸມຕົນເອງໄປຕາມການເວລາ, ຖ້າຫາກວ່າເຂົາເຈົ້າບໍ່ມີຄວາມ ຕັ້ງໃຈຈະທົດລອງເຮັດການປະພຶດແນວບໍ່ດີ. ເດັກຈະ ໄດ້ຮຽນຮູ້ວ່າ ເຂົາໄດ້ຄວາມສົນເມື່ອ ເຂົາປະພຶດແບບສຸຂຸມ ຫຼື ມາທັນເວລາ ພຽງເທົ່ານັ້ນ; ອັນນັ້ນແມ່ນ ທ່ານສ້າງເຂົາໃຫ້ເປັນຄົນດີ.

## ປຽບທຽບການປະຕິບັດວິໄນ ແລະ ການລົງໂທດ

| ການປະຕິບັດວິໄນແມ່ນ: | ການລົງໂທດແມ່ນ: |
|---|---|
| ການໃຫ້ທາງເລືອກທາງບວກແກ່ນັກຮຽນ | ຖືກບອກພຽງຢ່າງດຽວວ່າ **ຢ່າ** ເຮັດສິ່ງນັ້ນ. |
| ການຮັບຮູ້ ຫຼືຍ້ອງຍໍຄວາມພະຍາຍາມ ແລະ ການປະພຶດດີຂອງນັກຮຽນ. | ການມີປະຕິກິລິຍາຫຍາບຄາຍຕໍ່ການປະພຶດຜິດ. |
| ເມື່ອນັກຮຽນປະຕິບັດຕາມລະບຽບ ແມ່ນຍ້ອນວ່າ ເຂົາໄດ້ສົນທະນາ ແລະ ຕົກລົງເຫັນດີດ້ວຍກັນກ່ອນແລ້ວ | ເມື່ອນັກຮຽນປະຕິບັດຕາມລະບຽບ ແມ່ນຍ້ອນວ່າເຂົາຖືກຂົ່ມຂູ່ ຫຼືໄດ້ຮັບສິນຈ້າງ. |
| ການແນະນຳຢ່າງສະເໝີຕົ້ນສະເໝີປາຍ ແລະ ໝັ້ນຄົງ | ການຄວບຄຸມ, ການເຮັດໃຫ້ລະອາຍ, ການຫົວ |

| | |
|---|---|
| | ເຢາະເຢີ້ຍ |
| ການປະຕິບັດໃນແງ່ບວກ, ການເຄົາລົບນັບຖືຂອງເດັກ | ການປະຕິບັດໃນແງ່ລົບ, ບໍ່ມີການເຄົາລົບນັບຖືຂອງເດັກ |
| ບໍ່ໃຊ້ຄວາມຮຸນແຮງທາງດ້ານວາຈາ ແລະ ຮ່າງກາຍ | ໃຊ້ຄວາມຮຸນແຮງທາງດ້ານວາຈາ ແລະ ຮ່າງກາຍ ແລະ ກ້າວລ້າວ |
| ຜົນທີ່ໄດ້ຮັບຈາກການປະຕິບັດວິໄນມີເຫດມີຜົນ ກ່ຽວພັນ ໂດຍກົງກັບການ ປະພຶດຜິດ. | ຜົນທີ່ໄດ້ຮັບຈາກການລົງໂທດ ບໍ່ກ່ຽວພັນກັບການປະພຶດຜິດ ແລະ ປາສະຈາກເຫດຜົນຕໍ່ກັບການປະພຶດຜິດ. |
| ເມື່ອເດັກຕ້ອງແກ້ໄຂບັ່ນແປງ ເວລາພຶດຕິກຳຂອງເຂົາມີ ຜົນກະທົບດ້ານລົບຕໍ່ຜູ້ອື່ນ. | ເມື່ອເວລາເດັກຖືກລົງໂທດ ຍ້ອນເຮັດໃຫ້ຜູ້ອື່ນເຈັບ/ເສຍຫາຍ, ແທນທີ່ຈະຈະສະແດງໃຫ້ເຫັນວິທີແກ້ໄຂປັ່ນແປງນັ້ນເຮັດຄືແນວໃດ. |
| ມີຄວາມເຂົ້າໃຈເຖິງລະດັບຄວາມສາມາດຂອງນັກຮຽນລາຍບຸກຄົນ, ຄວາມຕ້ອງ ການທີ່ຈຳເປັນ, ສະພາບແວດລ້ອມ ແລະຂັ້ນຕອນຂອງການພັດທະນາ. | ບໍ່ເໝາະສົມຕໍ່ຂັ້ນຕອນ ການພັດທະນາຊີວິດຂອງເດັກ; ສະພາບແວດລ້ອມຂອງເດັກລາຍບຸກຄົນ, ລະດັບຄວາມສາມາດ ແລະ ຄວາມຕ້ອງທີ່ຈຳເປັນຂອງລາຍບຸກຄົນ ບໍ່ໄດ້ນຳມາພິ ຈາລະນາ. |
| ການສອນເດັກໃຫ້ຍອມຮັບ ຫຼືຊາບຊຶມລະບຽບວິໄນໃນຕົນເອງ | ການສອນເດັກໃຫ້ປະພຶດດີ ສະເພາະໃນເວລາເຂົາມີຄວາມສ່ຽງຕໍ່ການຖືກຈັບຜິດເມື່ອປະພຶດຢ່າງອື່ນ. |
| ການຟັງ ແລະ ການເປັນແບບຢ່າງ | ການຕຳນິວ່າກ່າວເດັກຕະຫຼອດ ໃນເວລາເຮັດຜິດລະບຽບເລັກໆນ້ອຍໆ ເປັນເຫດໃຫ້ເຂົາບໍ່ເດີນຕາມຮອຍເຮົາ (ບໍ່ສົນໃຈເຮົາ ແລະ ບໍ່ຟັງເຮົາ) . |
| ການນຳໃຊ້ຄວາມຜິດໃຫ້ເປັນບົດຮຽນ ຫຼື ໂອກາດໃນການຮຽນຮູ້ | ການບັງຄັບເດັກໃຫ້ທຳຕາມລະບຽບແບບບໍ່ມີເຫດ ບໍ່ມີຜົນ "ເພາະພຽງຍ້ອນວ່າທ່ານໄດ້ບອກໄດ້ເຕືອນໄປຢ່າງນັ້ນແລ້ວ" |
| ເລັ່ງໃສ່ທີ່ພຶດຕິກຳຂອງເດັກເທົ່ານັ້ນ-ບໍ່ແມ່ນຕົວເດັກ, ເຊັ່ນ: ບອກວ່າການປະພຶດຂອງເຈົ້າຜິດ. | ການຕຳນິວິຈານຕົວເດັກ, ແທນທີ່ຈະຕຳນິແຕ່ສະເພາະ ສິ່ງທີ່ເດັກປະພຶດຜິດ-ແຕ່ໄປເວົ້າວ່າ ເຈົ້ານີ້ໂງ່ທີ່ສຸດ, ເຈົ້າກະທຳຜິດ. |

## 2.1 ການປະຕິບັດລະບຽບວິໄນ/ການສຶກສາອົບຮົມແບບສ້າງສັນໃນຫ້ອງຮຽນ

ເດັກນັກຮຽນມີຄວາມຈຳເປັນຕ້ອງຖືກສອນເພື່ອໃຫ້ເຂົ້າໃຈ ແລະ ປະຕິບັດຕາມລະບຽບຂອງສັງ ຄົມ. ຫຼັກຖານໄດ້ຊີ້ໃຫ້ເຫັນວ່າເດັກຍິງ ແລະ ຊາຍຈະຕອບຮັບຕໍ່ວິທີການໃນທາງບວກໄດ້ດີກວ່າ ເຊິ່ງລວມທັງການເຈລະຈາ ແລະ ລະບົບການຍ້ອງຍໍ ຫຼາຍກວ່າການລົງໂທດຜ່ານການທາລຸນທາງວາຈາ, ຮ່າງກາຍ ຫຼື ອາລົມຈິດ.

ໃຫ້ທ່ານອ່ານບົດລະຄອນຫ້ອງຮຽນຕໍ່ໄປນີ້ ແລະ ໃຫ້ເບິ່ງຖ້າຫາກທ່ານສາມາດກຳນົດວິທີການ ທາງບວກ ຫຼືທາງລົບທີ່ຄູສອນຈັດການກັບການປະພຶດຜິດຂອງນັກຮຽນ.

**ລະຄອນສາກທີ 1 .**

ສາວຄູ ເລັກ ຍ່າງເຂົ້າໄປໃນຫ້ອງຊັ້ນ ປ.4 ຂອງຕົນ ຊຶ່ງກຽມພ້ອມຈະເລີ່ມຕົ້ນສອນບົດຮຽນວິຊາຄະນິດສາດ. ໃນຂະນະທີ່ນາງເລີ່ມຕົ້ນສອນບົດຮຽນນັ້ນນັກຮຽນ ຂອງນາງຍັງສືຕໍ່ເວົ້າລົມກັນຢູ່ ແລະກໍ ບໍ່ຟັງລາວ; ນາງເວົ້າຂຶ້ນຢ່າງດັງໆວ່າ "ທຸກໆຄົນ ກະລຸນາເຊົາລົມກັນ ພວກເຮົາຈະເລີ່ມຕົ້ນບົດຮຽນ ຂອງພວກເຮົາດຽວນີ້" ທຸກຄົນມິດງຽບລົງ ຍົກເວັ້ນ ທ້າວໄຈ. ໄຈຍັງຄົງລົມກັນກັບໝູ່ ກ່ຽວກັບເກມບານເຕະທີ່ລາວໄດ້ເບິ່ງຢູ່ໃນໂທລະພາບໃນຄືນຜ່ານມາ. ຄູ ເລັກ ຮ້ອງຂຶ້ນ " ທ້າວ ໄຈ ເປັນຫຍັງເຈົ້າຈຶ່ງບໍ່ ສາມາດຫຸບປາກຂອງເຈົ້າ?, ໃຫ້ເຈົ້າໄປຢືນຢູ່ແຈຫ້ອງຮຽນແລ້ວປິ່ນໜ້າເຂົ້າຫາຝາ. ເຈົ້າເຮັດໃຫ້ມີຄວາມ ລຳຄານຫຼາຍກວ່າທີ່ເຈົ້າຮູ້ສຶກ. ໃຫ້ເຈົ້າລໍຖ້າຈົນກວ່າຫ້ອງຮຽນຈະເລີກ" ຫົວໜ້າ ໂຮງຮຽນທີ່ຍ່າງຜ່ານມາ ທາງຫ້ອງຮຽນໄດ້ຖາມວ່າ "ເຈົ້າຕ້ອງການໃຫ້ຂ້ອຍບອກໃຫ້ລາວ ຮູ້ບໍ່ວ່າໃຜເປັນນາຍໃຫຍ່ແຖວນີ້?" ທ້າວໄຈ ຮ້ອງໄຫ້ຂຶ້ນ ແລະຍ່າງໄປຢືນຢູ່ແຈຫ້ອງຮຽນ, ລາວມີຄວາມຢ້ານຕໍ່ຄວາມໂຊກຮ້າຍຂອງລາວ ແລະ ປາຖະໜາ ບໍ່ຢາກ ຢູ່ໃນທີ່ນັ້ນ. ບາງທີໃນມື້ອື່ນ ທ້າວ ໄຈ ອາດຈະບໍ່ມາໂຮງຮຽນ.

**ລະຄອນສາກ ທີ 2.**

ສາວຄູ ເລັກ ຍ່າງເຂົ້າໄປໃນຫ້ອງຊັ້ນ ປ4 ຂອງລາວ ຊຶ່ງກຽມພ້ອມຈະເລີ່ມຕົ້ນ ສອນ ວິຊາຄະ ນິດສາດ. ໃນຂະນະທີ່ນາງຍ່າງເຂົ້າໄປໃນຫ້ອງ ນາງເວົ້າວ່າ "ກະລຸນາໃຫ້ທຸກໆຄົນມິດ ງຽບລົງ. ພວກເຮົາຈະເລີ່ມຕົ້ນຮຽນວິຊາຄະນິດສາດ ແລະ ທຸກຄົນຈຳເປັນຕ້ອງຟັງຢ່າງຈິດຈໍ່" ພາຍຫລັງ ນັກ ຮຽນ ໃນຫ້ອງ ມິດງຽບລົງ, ຄູ ເລັກ ຍັງໄດ້ຍິນທ້າວ ໄຈ ເວົ້າກັບໝູ່ຂອງລາວຢູ່. ຄູ ເລັກຖາມຂຶ້ນວ່າ "ແມ່ນໃຜຍັງເວົ້າ ລົມກັນຢູ່? ຄູເດົາໄດ້ວ່າ ຍັງມີຜູ້ໃດຜູ້ໜຶ່ງບໍ່ສາມາດຈື່ຈຳກົດລະບຽບຢູ່ໃນຫ້ອງຮຽນນີ້ໄດ້. ຫົວໜ້າ ໂຮງຮຽນທີ່ຍ່າງຜ່ານມາໄດ້ຍິນຄຳເວົ້າຂອງຄູເລັກ ແລະ ເພິ່ນໄດ້ຖາມ ຂຶ້ນ ດ້ວຍຄວາມຮ້າຍວ່າ ຖ້າຫາກມີ ບັນຫາຢູ່ໃນທີ່ນີ້ ເພິ່ນຮູ້ວ່າຈະເຮັດ ແນວໃດເພື່ອເຮັດໃຫ້ງຽບລົງທັນທີ. ນາງຄູ ເລັກ ຂອບໃຈນຳເພິ່ນ ແລະ ໄດ້ບອກເພິ່ນວ່າ ນາງສາມາດຈັດການກັບສະຖານະການ ນີ້ໄດ້ໃນດຽວນີ້. ຫຼັງຈາກຫົວໜ້າ ໂຮງຮຽນເດີນ ຈາກໄປ, ຄູ ເລັກຫຼຽວມາທາງ ທ້າວ ໄຈ ແລະ ຖາມວ່າ "ເອື້ອຍເປັນຫ່ວງວ່າ ເປັນຫຍັງຫົວໜ້າໂຮງຮຽນຈຶ່ງເວົ້າແນວນັ້ນ" ພວກນ້ອງ ມີຄວາມເຫັນຫຍັງບໍ່? "ມີຄວາມຜິດ, ທ້າວ ໄຈ ຕອບຄຳຖາມຂອງຄູເລັກ "ນ້ອງຍັງເວົ້າລົມກັນຢູ່ ພາຍຫຼັງທີ່ເອື້ອຍຄູ ບອກໃຫ້ທຸກຄົນໃນຫ້ອງມິດງຽບລົງ " ນາງຄູ ເລັກຖາມວ່າ "ເວລາໃດທີ່ພວກເຮົາທຸກຄົນສາມາດເວົ້າລົມກັນ ໄດ້ໂດຍບໍ່ລົບກວນຜູ້ອື່ນ ແລະ ບໍ່ລົບກວນ ໂອກາດການ ຮຽນໜັງສື ຂອງເຂົາເຈົ້າ" ທ້າວ ໄຈ ເວົ້າວ່າ ໃນເວລາເລີກໂມງສອນແລ້ວ. "ນາງຄູ ເລັກ ງຶກຫົວ ແລະ ບອກທ້າວ ໄຈ ໃຫ້ຕອບຄຳຖາມນາງວ່າ 100 ຫານໃຫ້ 2 ມີຄ່າເທົ່າກັບເທົ່າໃດ. ທ້າວ ໄຈ ຕອບວ່າ ເທົ່າກັບ 50. ນາງຄູ ເລັກ ຍິ້ມ ແລະເວົ້າວ່າ "ດີຫຼາຍ" ທ້າວໄຈເອົາໃຈໃສ່ພິເສດຕະຫລອດໄລຍະເວລາຮຽນໃນຫ້ອງ ແລະ ບໍ່ເວົ້າລົມກັບໝູ່ຈົນກວ່າໝົດຊົ່ວ ໂມງສອນໃນຫ້ອງຮຽນ.

**ລະຄອນສາກທີ 3 .**

ສາວຄູເລັກຍ່າງເຂົ້າໄປໃນຫ້ອງຊັ້ນ ປ4 ຂອງລາວ ຊຶ່ງກຽມພ້ອມຈະເລີ່ມຕົ້ນສອນວິຊາຄະນິດສາດ. ໃນຂະນະທີ່ນາງຍ່າງເຂົ້າໄປໃນຫ້ອງ ນາງເວົ້າວ່າ "ກະລຸນາໃຫ້ທຸກໆຄົນມິດງຽບລົງ. ພວກເຮົາຈະເລີ່ມຕົ້ນຮຽນວິຊາຄະນິດສາດ ແລະ ທຸກຄົນຈຳເປັນຕ້ອງຟັງຢ່າງຈົດຈໍ່" ພາຍຫລັງນັກຮຽນ ໃນຫ້ອງ ມິດງຽບລົງ, ຄູ ເລັກ ຍັງໄດ້ຍິນທ້າວ ໄຈ ເວົ້າກັບໝູ່ຂອງລາວຢູ່. ຄູ ເລັກ ຖາມຂຶ້ນວ່າ "ແມ່ນໃຜຍັງເວົ້າລົມ ກັນຢູ່. ຄູ ເລັກ ໄດ້ຈັບເອົາແຜ່ນເຈ້ຍລະເມີດລະບຽບອອກມາ ແລ້ວຂຽນລົງວ່າ " ຫຼິ້ມເຫຼວໃນການປະ ຕິບັດຕາມກົດລະບຽບຂອງຫ້ອງຮຽນ " ແລະ ແລ້ວຄູກໍບອກ ໃຫ້ທ້າວ ໄຈຂຽນຊື່ຊັ້ນຮຽນ, ຄູ, ເວລາ ແລະ ວັນທີໃສ່ຂ້າງເທິງ. ຄູ ເລັກເວົ້າວ່າ " ໄຈ ຄູຈະເອົາເຈ້ຍແຜ່ນນີ້ປະໄວ້ແຈໂຕະຂອງນ້ອງນີ້. ຖ້າເຈ້ຍ ຍັງຢູ່ນີ້ ໃນເວລາໝົດຊົ່ວໂມງຮຽນແລ້ວ ນ້ອງອາດເອົາ ມັນຖິ້ມອອກໄປໄດ້. ຖ້າຫາກນ້ອງສືບຕໍ່ເວົ້າລົມ ໂດຍບໍ່ໄດ້ຮັບອານຸຍາດ ຄູຈະຈັບເອົາເຈ້ຍນີ້ໄປໃຫ້ຫ້ອງການຫົວໜ້າໂຮງຮຽນ ເພື່ອໃຫ້ເພິ່ນເຫັນ " ໃນຕອນທ້າຍຊົ່ວໂມງ ທ້າວໄຈ ເອົາເຈ້ຍແຜ່ນນັ້ນ ຖິ້ມອອກໄປ.

ຖ້າຫາກເຕັກນິກການໃສ່ວິໄນເປັນດ້ານລົບ ມັນອາດເຮັດໃຫ້ນັກຮຽນ ມີຄວາມທໍ້ຖອຍ ແລະ ທຳລາຍນັກຮຽນ. ເຖິງຢ່າງໃດກໍດີ, ຖ້າຫາກເຕັກນິກການໃສ່ວິໄນເປັນດ້ານບວກ, ມັນຈະຊ່ວຍ ນັກ ຮຽນໄດ້ຮັບ ແລະ ຮັກສາການປະພຶດອັນດີ. ຢູ່ໃນລະຄອນສາກທີ 1 ແລະທີ 2 ຂ້າງເທິງ, ເຮົາສາມາດເຫັນສະພາບການດ້ານລົບລະຫວ່າງຄູເລັກ ແລະ ທ້າວໄຈ.ພວກທ່ານສາມາດລະບຸ/ກຳນົດ ໄດ້ບໍ່ ?

**ຄຳຕອບ: ຢູ່ໃນສາກທີ1**: ຄູເລັກ ແລະ ຫົວໜ້າໂຮງຮຽນ ທັງສອງຄົນໄດ້ສະແດງຄວາມ ຮ້າຍອອກມາ. ພວກເພິ່ນຂົ່ມຂູ່ ທ້າວ ໄຈ "ເຈົ້າຈົ່ງລໍຖ້າຈົນກວ່າຫ້ອງຮຽນຈະເລີກ" ແລະ ເຈົ້າຕ້ອງການໃຫ້ຂ້ອຍ ບອກມັນ ບໍ່ວ່າໃຜເປັນນາຍ? "ຄູ ເລັກ ກໍ່ໃຊ້ ການລົງໂທດແບບບໍ່ມີເຫດຜົນ ແລະ ບໍ່ມີຄວາມ ໝາຍເພື່ອສັ່ງ ໃຫ້ທ້າວ ໄຈ ໄປຢືນຢູ່ແຈຫ້ອງ ແລ້ວປິ່ນໜ້າເຂົ້າຝາ. ຢູ່ໃນສາກທີ 2 , ຄູເລັກ ດູຖູກດູແຄນ ທ້າວ ໄຈ ດ້ວຍການເຢາະເຢີ້ຍ "ຄູເດົາໄດ້ວ່າມີຜູ້ໃດ ຜູ້ໜຶ່ງບໍ່ສາ ມາດຈື່ ຈຳກົດລະບຽບຢູ່ໃນທີ່ນີ້". ທ່ານ ຄິດວ່າທ້າວໄຈ ມີຄວາມຮູ້ສຶກແນວໃດ ພາຍຫຼັງນາງ ຄູ ເລັກແລະຫົວໜ້າໂຮງຮຽນເວົ້າຮ້າຍອອກໄປ?

ເຖິງຢ່າງໃດກໍດີ, **ສາກທີ 2 ແລະ ທີ 3** , ມີຕົວຢ່າງຂອງສະພາບການໃນທາງບວກລະຫວ່າງ ຄູ ເລັກ ແລະ ທ້າວ ໄຈ . ຢູ່ໃນສາກທີ 2 , ນາງ ຄູ ເລັກ ຍ່າງເຂົ້າຫ້ອງຮຽນ ແລະໃຫ້ນັກຮຽນ ມິດງຽບລົງ ແລະ ກໍບອກເຫດຜົນວ່າເປັນຫຍັງ (ຍ້ອນວ່າເລີ່ມຕົ້ນບົດຮຽນ ວິຊາຄະນິດສາດ ແລະ ທຸກໆຄົນ ມີຄວາມ ຈຳເປັນຈະຕ້ອງຟັງຢ່າງຈົດຈໍ່). ຄຳຕອບຕໍ່ກັບຄຳເຫັນຂອງຫົວໜ້າໂຮງຮຽນ, ຄູເລັກຕັ້ງຄຳຖາມຄູມີຄວາມກັງວົນວ່າເປັນ ຫຍັງຫົວໜ້າໂຮງຮຽນ ຈຶ່ງເວົ້າແນວນັ້ນ? " ຄຳຖາມ ຂໍ້ນີ້ຊ່ອຍໃຫ້ ທ້າວ ໄຈ ຄົ້ນຄິດ ກ່ຽວກັບເຫດຜົນສຳລັບການກະ ທຳຂອງ

ຫ້ອງໜ້າໂຮງຮຽນ ແລະຄົ້ນຄິດວ່າ ການປະພຶດຂອງລາວອາດ ເຮັດໃຫ້ຫ້ອງໜ້າໂຮງຮຽນ, ຄູ ເລັກ ແລະເພື່ອນຂອງລາວ ມີອາລົມເສຍແນວໃດ. ຄູ ເລັກ ກໍ່ງຶກຫົວ ສະແດງໃຫ້ທ້າວ ໄຈ ເຫັນວ່າ ລາວຕອບຖືກຕ້ອງກ່ຽວກັບ ເວລາເໝາະສົມ ທີ່ຈະເວົ້າລົມກັບໝູ່ເພື່ອນ. ນາງຄູ ເລັກ ກໍ່ໄດ້ ໃຫ້ກຳລັງໃຈການ ປະພຶດຂອງທ້າວໄຈ ໂດຍໃຫ້ໂອກາດແກ່ລາວໄດ້ຕອບຄຳຕອບ ວິຊາຄະນິດ ສາດ ທີ່ຖືກຕ້ອງ ແບບງ່າຍໆ ແລະ ຄູ ເລັກ ກໍ່ຍ້ອງຍໍທ້າວ ໄຈ ແລະ ກໍຍິ້ມ. ການກະທຳອັນນີ້ ບອກທ້າວໄຈ ໃຫ້ຮູ້ວ່າ ຄູ ເລັກ ກໍຍັງພໍໃຈທ້າວ ໄຈ ຢູ່. ມັນແມ່ນການປະພຶດຂອງທ້າວໄຈ ທີ່ເປັນ ບັນຫາ ບໍ່ແມ່ນຕົວ ທ້າວໄຈ ເອງ.

**ຢູ່ໃນສາກທີ 3,** ຄູ ເລັກ ໃຊ້ວິທີການແບບອ່ອນໂຍນໃນການຈັດການກັບການປະພຶດ ຂອງທ້າວ ໄຈ. ຄູໄດ້ໃຫ້ທາງເລືອກແກ່ ທ້າວ ໄຈ ໃນການບັນຊາການປະພຶດຂອງລາວ. ອັນນີ້ ໄດ້ໃຫ້ໂອກາດແກ່ທ້າວໄຈໃຫ້ມີຄວາມຮັບຜິດຊອບ ຕໍ່ການປະພຶດຂອງລາວເອງ ແລະ ຈະມີຫຍັງ ເກີດ ຂຶ້ນໃນຂັ້ນຕໍ່ໄປ.

**ຫລັກການ 7 ຢ່າງສຳລັບປະຕິບັດວິໄນແບບສ້າງສັນຕໍ່ເດັກນັກຮຽນ.**

1. ເຄົາລົບນັບຖືກຽດສັກສີຂອງເດັກນັກຮຽນ.
2. ສ້າງພຶດຕິກຳຮັກແພງສັງຄົມ, ມີວິໄນໃນຕົວເອງ ແລະ ນິໄສດີ.
3. ໃຫ້ເດັກມີສ່ວນຮ່ວມຢ່າງຕັ້ງໜ້າສູງສຸດ.
4. ເຄົາລົບນັບຖືຄວາມຕ້ອງການທີ່ຈຳເປັນດ້ານການພັດທະນາຂອງເດັກ ແລະ ຄຸນນະ ພາບ ຊີວິດ .
5. ເຄົາລົບນັບຖືຄວາມກະຕືລືລົ້ນ ແລະ ຄວາມຄິດເຫັນກ່ຽວກັບຊີວິດຂອງເດັກ.
6. ຮັບປະກັນຄວາມຍຸຕິທຳ (ໄດ້ຮັບຄວາມສະເໝີພາບ ແລະ ເປັນທຳ ແລະ ບໍ່ມີການຈຳ ແນກ) ແລະ ຄວາມຖືກຕ້ອງ.
7. ສົ່ງເສີມຄວາມສາມັກຄີເປັນປຶກແຜ່ນ.
8.

## 2.2 ບາດກ້າວຂອງການປະຕິບັດລະບຽບວິໄນ/ສຶກສາອົບຮົມແບບສ້າງສັນ.

ໃນຂະນະທີ່ການລົງໂທດ ເປັນການກະທຳຢ່າງດຽວ, ການປະຕິບັດວິໄນແບບສ້າງສັນ ແມ່ນຂະ ບວນການທີ່ມີ 4 ບາດກ້າວທີ່ມີການຈັດຕັ້ງ ແລະ ຊົມເຊີຍພຶດຕິກຳທີ່ເໝາະສົມ ຊຶ່ງຈະສະ ເໜີຕໍ່ໄປນີ້:

1. **ພຶດຕິກຳ/ການປະພຶດທີ່ເໝາະສົມຖືກພັນລະນາດ້ວຍຄຳວ່າ:**
   "ກະລຸນາໃຫ້ທຸກໆຄົນມິດງຽບລົງແດ່".
2. **ໃຫ້ເຫດຜົນອັນຈະແຈ້ງ** "ພວກເຮົາຈະເລີ່ມຕົ້ນຮຽນບົດຮຽນ ວິຊາຄະນິດສາດ ແລະທຸກຄົນ ຈຳເປັນຕ້ອງຟັງຢ່າງຈິດຈໍ່" ອັນນີ້ມີຄວາມໝາຍວ່າ ການມິດງຽບລົງຢ່າງໄວ ຈະສະແດງ

ໃຫ້ເຫັນ ເຖິງການເຄົາລົບນັບຖືຜູ້ອື່ນ. *ມັນເປັນຕົວຢ່າງອັນດີຂອງການປະຕິບັດຕໍ່ຜູ້ອື່ນຄືກັນກັບ ທ່ານ ຢາກ ໃຫ້ຜູ້ອື່ນປະຕິບັດຕໍ່ຕົນເອງ.*

3. **ຮຽກຮ້ອງໃຫ້ມີການຍອມຮັບຮູ້**
   "ພວກນ້ອງຮູ້ບໍ່ວ່າເປັນຫຍັງການມິດງຽບຈຶ່ງມີຄວາມສຳຄັນ?" ຫຼື ຢູ່ໃນກໍລະນີຂອງ ທ້າວໄຈ"ພວກເຮົາທັງໝົດສາມາດເວົ້າລົມກັນເວລາ ໃດຈຶ່ງຈະບໍ່ລົບກວນຜູ້ອື່ນ ແລະ ບໍ່ລົບກວນ ໂອກາດການຮຽນເອົາບົດຮຽນ".
4. **ເສີມຂະຫຍາຍພຶດຕິກຳທີ່ຖືກຕ້ອງ**. ການປະສົບຕາກັນ, ງຶກຫົວ, ຍິ້ມ, ໃຫ້ເວລາຫຼິ້ນເພີ່ມ 5 ນາທີ ໃນຕອນທ້າຍຂອງມື້ຮຽນ, ໃຫ້ຄະແນນເພີ່ມພິເສດ, ສະເໜີຜົນສຳເລັດ ຂອງການຮຽນ ຢູ່ຕໍ່ໜ້າ ໝູ່ໃນຫ້ອງ ຫຼື ໂຮງຮຽນ (ການຍອມຮັບຮູ້ຂອງສັງຄົມເປັນ ການຍ້ອງຍໍທີ່ສຳຄັນທີ່ສຸດ). ເມື່ອເວລາ ມີການນຳໃຊ້ ການຍ້ອງຍໍຊົມເຊີຍ ຄວນເຮັດທັນທີທັນໃດ ແລະ ເຮັດນ້ອຍໆ, ເຮັດໃຫ້ມີຄວາມ ອີ່ມເອີບໃຈ.

ຂະບວນການນີ້ແມ່ນມີປະສິດທິຜົນສຳລັບເດັກນັກຮຽນເປັນລາຍບຸກຄົນ. ຍິ່ງໄປກວ່ານັ້ນ, ສຳລັບ ທ່ານ ທີ່ສິດສອນຢູ່ໃນຫ້ອງຮຽນ ທີ່ມີນັກຮຽນຈຳນວນຫຼາຍ, ມັນຍັງສາມາດມີປະສິດີຜົນສຳລັບຫຼາຍໆກຸ່ມ ນັກຮຽນ. "ກົນລະຍຸດ" ດັ່ງກ່າວ ແມ່ນເຮັດໃຫ້ນັກຮຽນ ມີຄວາມຮູ້ສຶກ ວ່າເຂົາເຈົ້າເປັນ "ທີມຜູ້ຊະນະ( ກໍຄືໝົດທັງຫ້ອງ ) ແລະ ສົນລະເສີນຄວາມພະຍາຍາມ ຂອງແຕ່ ລະ ຄົນໃນການເປັນສະມາຊິກທີມງານທີ່ດີ.

*ສິ່ງທີ່ຄວນຈື່ຈຳໄວ້: ໃຫ້ນັກຮຽນ ເຮັດສິ່ງທີ່ຖືກ ຕ້ອງແລ້ວຍ້ອງຍໍຊົມເຊີຍເຂົາເຈົ້າໃນທັນທີທັນ ໃດ. ອັນນີ້ຄືໃຈກາງ ຫຼື ແກ່ນສານຂອງການປະຕິບັດລະບຽບວິໄນແບບສ້າງສັນ.*

*ຂໍ້ສັງເກດ. ການປະຕິບັດວິໄນແບບສ້າງສັນສາມາດຫຼິ້ນເຫຼວໄດ້ຖ້າຫາກວ່າ:*

1. ນັກຮຽນ ຫຼືໝົດທັງຫ້ອງຮຽນບໍ່ໄດ້ຖືກຍ້ອງຍໍຊົມເຊີຍໂດຍທັນທີ ທັນເວລາ.
2. ຄວນເນັ້ນໃສ່ວຽກກິດຈະກຳຫຼາຍກວ່າເນັ້ນໃສ່ການປະພຶດ, ດັ່ງຕົວຢ່າງ "ຈະເປັນການດີຖ້າພວກ ເຈົ້າງັບປາກໄວ້ ແລະ ເຊົາລົມກັນ". ເຊິ່ງມັນກົງກັນຂ້າມກັບການໃຊ້ ປະໂຫຍກທີ່ວ່າ "ຈະເປັນການດີທີ່ສຸດ ຖ້າພວກນ້ອງຄິດເຫັນໃຈຄົນອື່ນ ແລະ ມິດງຽບລົງ ໂດຍທັນທີ"
3. ການເນັ້ນໜັກຍັງສືບຕໍ່ເນັ້ນໃສ່ໃນສິ່ງທີ່ນັກຮຽນ ກຳລັງເຮັດຜິດ ຫຼາຍກວ່າສິ່ງທີ່ເຮັດຖືກ.

ໃນການນຳໃຊ້ການ ປະຕິບັດວິໄນແບບສ້າງສັນນັ້ນ, ໃຫ້ພະຍາຍາມຄິດໄວ້ຢູ່ໃນໃຈໃນອັດຕາສ່ວນ 4 ຕໍ່ 1 . ໃຫ້ນັກຮຽນ ຜູ້ໜຶ່ງ ຫຼື ໝົດຫ້ອງເຮັດສິ່ງໃດໜຶ່ງຖືກ 4 ເທື່ອ ຕໍ່ໜຶ່ງເທື່ອທີ່ເຮັດຜິດ. ໃຫ້ເຮັດຢ່າງເປັນປົກກະຕິ.ໂດຍການນຳໃຊ້ສັດສ່ວນສີ່ຕໍ່ໜຶ່ງໄປຕະຫຼອດ, ທ່ານ ຈະສະ ແດງໃຫ້ນັກຮຽນຂອງ ທ່ານ ເຫັນວ່າ ທ່ານ ໄດ້ເອົາຈິງເອົາຈັງກ່ຽວກັບການໃຫ້ນັກຮຽນ ເຮັດສິ່ງ ໜຶ່ງ ທີ່ຖືກຕ້ອງ ແລະ ຊົມເຊີຍທັນທີທັນໃດ. ຖ້າຢາກເຫັນວ່າ ທ່ານ ບັນລຸເຖິງສັດສ່ວນນີ້ ໃຫ້ເຮັດການບັນທຶກ

ໃນຕອນທ້າຍຂອງການສອນແຕ່ລະໄລຍະ ຫຼື ແຕ່ລະມື້. ໃຫ້ຄິດຄືນວ່າມີຈຳນວນເທົ່າໃດ ທີ່ນັກຮຽນເຮັດໄດ້ດີໂດຍປຽບທຽບໃສ່ຈຳນວນ ຄັ້ງທີ່ນັກຮຽນ ເຮັດສິ່ງໃດສິ່ງໜຶ່ງຜິດ. ທ່ານ ສາມາດບອກນັກຮຽນ ຫຼື ຜູ້ຊ່ວຍຄູຕິດຕາມ ທ່ານ ຈົນວ່າການຍ້ອງຍໍສັນລະເສີນຈະກາຍເປັນ ກິດຈະວັດປະຈຳວັນ ແລະ ການຕຳນິວິຈານກາຍເປັນສິ່ງທີ່ມີໜ້ອຍທີ່ສຸດ.

ຄູທີ່ນຳໃຊ້ການປະຕິບັດລະບຽບວິໄນແບບສ້າງສັນຈະມີຄວາມເຊື່ອໝັ້ນໃນຄວາມສາມາດຂອງ ນັກຮຽນຂອງຕົນ ແລະ ສື່ສານກັນດ້ວຍຄວາມຮັກແພງ ແລະ ເຄົາລົບນັບຖືນັກຮຽນ. ເມື່ອເວລາຄູມີຄວາມຕັ້ງໃຈ ທີ່ຈະສັງເກດນັກຮຽນ ແລະ ຕອບສະໜອງ ໃນແນວທາງ ທີ່ເປັນການຊຸກຍູ້ການປະພຶດທີ່ດີ, ຄູຈະເປັນຜູ້ຊ່ວຍນັກຮຽນ ໃຫ້ກາຍເປັນຜູ້ມີຄວາມຮັບຜິດຊອບຕໍ່ການປະພຶດຂອງຕົນເອງ ແລະ ເຂົາກໍຈະ ຫຼຸດຜ່ອນການປະພຶດຜິດລົງ.

**ກິດຈະກຳການຄົ້ນຄິດຍ້ອນກັບ: ການຮຽນຮູ້ ແລະການນຳໃຊ້ບົດຮຽນທີ່ມີລັກສະນະສ້າງສັນ.**

ມີໂອກາດຫຼາຍໆຢ່າງທີ່ເກີດຂື້ນຢູ່ໂຮງຮຽນໃນແຕ່ລະວັນທີ່ເຮັດໃຫ້ຄູ ແລະ ນັກຮຽນມີການພົວພັນຊຶ່ງກັນ ແລະ ກັນໃນທາງບວກ. ໃຫ້ຄຳນຶງເບິ່ງສະພາບການທີ່ຜ່ານມາໃນໄລຍະມໍ່ໆນີ້ ໃນເປັນບ່ອນທີ່ທ່ານ ແລະ ນັກຮຽນຜູ້ໜຶ່ງຂອງ ທ່ານ ທີ່ໄດ້ມີການພົວພັນທີ່ດີຕໍ່ກັນ ແລະ ກັນ, ອາດແມ່ນໃນຊ່ວງໄລຍະເວລາທີ່ມີການສອນກັນເປັນລາຍບຸກຄົນກໍໄດ້.ໃຫ້ທ່ານພັນລະນາປະ ສົບການຂອງທ່ານໃສ່ຊ່ອງຫວ່າງຂອງຕາຕະລາງຂ້າງລຸ່ມນີ້. ທ່ານສາມາດນຳໃຊ້ຂໍ້ມູນຂ່າວສານເຫຼົ່ານີ້ເພື່ອເຮັດວຽກຮ່ວມກັບນັກຮຽນ ຜູ້ອື່ນໆ ໃຫ້ດີຂື້ນ ແລະ ຫລີກລ້ຽງການນຳໃຊ້ການໃສ່ວິໄນດ້ານລົບໄດ້ບໍ່?

## 2.3 ການຫຼີກລ້ຽງຄວາມສັບສົນໃນການປະຕິບັດລະບຽບວິໄນ.

ຢູ່ໃນພາກນີ້ໄດ້ເວົ້າເຖິງຄວາມຫຍຸ້ງຍາກສັບສົນ ໃນການປະຕິບັດວິໄນຊຶ່ງຕ້ອງໄດ້ຕັດສິນໃຈວ່າຈະຄວບຄຸມການປະພຶດຂອງນັກຮຽນ ເພື່ອປະໂຫຍດຂອງ ທ່ານ ຫຼື ເພື່ອການພັດທະນາການປະພຶດຂອງ ນັກຮຽນ ເພື່ອຜົນປະໂຫຍດຂອງເຂົາເຈົ້າ. ສະພາບຄວາມສັບສົນນີ້ ເກີດຂື້ນບົນແນວຄວາມຄິດທີ່ຜິດໂດຍຄິດວ່າການລົງໂທດ ແລະ ການໃສ່ວິໄນມີຄວາມໝາຍຄືກັນ, ຊຶ່ງການກະທຳທີ່ດຳເນີນການສຳລັບ ແຕ່ລະກໍລະນີ ຈຶ່ງເປັນແບບດຽວກັນ ແລະ ຜົນໄດ້ຮັບກໍເປັນແບບດຽວກັນ. ເພື່ອຫລີກລ້ຽງຄວາມ ຫຍຸ້ງຍາກສັບສົນດັ່ງກ່າວນີ້ ແລະ ລົບລ້າງຄວາມບໍ່ເຂົ້າໃຈ, ພວກເຮົາໄດ້ຮຽນຮູ້ແລ້ວກ່ຽວກັບຄວາມແຕກຕ່າງລະຫວ່າງການລົງໂທດ ແລະ ການປະຕິບັດວິໄນ, ຄວາມເປັນທຳມະຊາດ ແລະ ຜົນໄດ້ຮັບທີ່ຕາມມາຂອງການລົງໂທດ ແລະ ການປະຕິບັດວິໄນແບບສ້າງສັນ ແລະ ຂະບວນການປະຕິບັດວິໄນແບບສ້າງສັນ. ຢູ່ຂ້າງລຸ່ມນີ້ເປັນກິດຈະກຳອັນສຸດທ້າຍ ເພື່ອທົດສອບຄວາມຮູ້ຂອງທ່ານກ່ຽວກັບຄວາມແຕກຕ່າງ ລະຫວ່າງການປະຕິບັດວິໄນດ້ານບວກ ແລະ ດ້ານລົບ.

**ກິດຈະກຳປະຕິບັດ: ນີ້ເປັນການປະຕິບັດວິໄນໃນທາງບວກ ຫຼື ທາງລົບ.**

ຢູ່ໃນຕາຕະລາງຂ້າງລຸ່ມນີ້ ອັນໃດເປັນການປະຕິບັດວິໄນດ້ານບວກ ແລະ ອັນໃດເປັນການປະຕິບັດວິໄນດ້ານລົບ?. ໃຫ້ທ່ານໝາຍ (√) ໃສ່ຖັນໃດທີ່ມີຄວາມເໝາະສົມ. ໃນຂັ້ນຕໍ່ໄປ, ໃຫ້ກວດເບິ່ງ ຄະແນນຢູ່ໃນຖັນສຸດທ້າຍສຳລັບການກະທຳທີ່ ທ່ານໄດ້ນຳໃຊ້ ຫລື ທ່ານ ອາດຈະໃຊ້ ເພື່ອກວດແກ້ການ ປະພຶດຜິດຂອງນັກຮຽນ. ທ່ານ ຕ້ອງໝາຍດ້ວຍຄວາມຊື່ສັດ!

| | ດ້ານ ບວກ (√) | ດ້ານ ລົບ (√) | ທ່ານເຄີຍໄດ້ໃຊ້ ການກະທຳນີ້ບໍ່? ໄດ້ໃຊ້/ບໍ່ໄດ້ໃຊ້ |
|---|---|---|---|
| 1. ເຮັດໃຫ້ນັກຮຽນຕັ້ງໃຈ ກ່ອນທີ່ທ່ານຈະເລີ້ມສອນ | | | |
| 2. ນຳໃຊ້ການສອນແບບໂດຍກົງ ( ບອກນັກຮຽນຢ່າງຄັກແນ່ວ່າ ຈະມີຫຍັງເກີດຂື້ນ) | | | |
| 3. ສ້າງສົມມຸດຕິຖານ | | | |
| 4. ເຮັດການກ່າວຫາໂດຍບໍ່ມີຂໍ້ພິສູດ | | | |
| 5. ລຸກຂຶ້ນແລ້ວຍ່າງອ້ອມໄປໃນຫ້ອງຮຽນ | | | |
| 6. ໃຊ້ກຳລັງທາງດ້ານຮ່າງກາຍ | | | |
| 7. ໃຊ້ຄຳສັ່ງບັນຊາ | | | |
| 8. ເຮັດໃນສິ່ງທີ່ທ່ານຢາກໃຫ້ນັກຮຽນເຮັດຕາມ(ເປັນແບບຢ່າງ) | | | |
| 9. ສະຫຼຸບສັງລວມກ່ຽວກັບການປະພຶດຂອງນັກຮຽນ | | | |
| 10.ເຮັດການສົມທຽບເດັກຜູ້ໜຶ່ງກັບເດັກຜູ້ອື່ນໃຫ້ທຸກຄົນຮູ້ຈັກ | | | |
| 11. ສ້າງຄວາມອຸດົມສົມບູນດ້ານສະພາບແວດລ້ອມຫ້ອງຮຽນ | | | |
| 12. ຄາດຄະເນບັນຫາລ່ວງໜ້າ | | | |
| 13. ຢືນຢັນວ່າທ່ານຖືກຕ້ອງ ແລະ ປະພຶດຕົນຢູ່ເໜືອກວ່າ | | | |
| 14. ສ້າງຕັ້ງກົດລະບຽບທີ່ຈະແຈ້ງ ແລະສະເມີສະເໝີ | | | |

**ຄຳຕອບ:** ການປະພຶດຂໍ້ 1, 2, 5, 8, 11, 12 ແລະ 14 ເປັນແນວທາງບວກ ການປະພຶດຂໍ້ 3, 4, 6, 7, 9, 10, ແລະ 13 ເປັນແນວທາງລົບ. ທ່ານຈະໃຫ້ຄະແນນແນວໃດ? ມີວິທີການທາງບວກ ແລະ ທາງລົບ ຈັກອັນ ທີ່ທ່ານເຄີຍໄດ້ໃຊ້ ?

# ບົດທີ 2

# ການສ້າງສາຍພົວພັນທີ່ດີລະຫວ່າງຄູ - ນັກຮຽນ

## 1. ພື້ນຖານຂອງການພົວພັນທີ່ດີລະຫວ່າງຄູ - ນັກຮຽນ

ບັນດາຄູສອນຜູ້ທີ່ນຳໃຊ້ການປະຕິບັດວິໄນ ແບບສ້າງສັນນັ້ນຈະໃຫ້ຄວາມນັບຖື, ຖະນຸຖະໜອມແລະຊ່ອຍເຫຼືອນັກຮຽນ ຂອງເຂົາເຈົ້າ. ພວກເພິ່ນ *ຈະເຂົ້າໃຈວ່າ* ເປັນຫຍັງນັກຮຽນຈຶ່ງປະພຶດ ດີ ຫຼື ບໍ່ປະພຶດດີ ຄື ດັ່ງທີ່ເຂົາສະແດງອອກ ກໍຄືເດັກນັກຮຽນ *ເຫັນ/ເບິ່ງ* ຕົວຄູເອງຢ່າງໃດ ຊຶ່ງອາດເປັນສາເຫດຕໍ່ການປະພຶດຜິດ. ພວກເພິ່ນຍັງໄດ້ເນັ້ນໜັກໃສ່ ຄວາມອາດສາມາດຂອງນັກຮຽນ ແລະ ສະພາບຊີວິດ ການເປັນຢູ່ຂອງເຂົາອີກ. ຄວາມຄາດຫວັງ ຂອງຄູຕໍ່ກັບເດັກແມ່ນມີລັກສະນະຕົວຈິງ, ຖືເອົາໃຈນັກຮຽນ ມາໃສ່ໃຈຕົນເອງ ແລະ ບໍ່ແມ່ນເນັ້ນໃສ່ວ່າ ເດັກ ຄວນຈະເປັນແນວໃດ.ຄູສອນເຂົ້າໃຈວ່າການປະພຶດຜິດ ແມ່ນເຫດການ ສຳລັບການ ຮຽນຮູ້ ແບບ ສ້າງສັນສຳລັບທັງຕົວຂອງນັກຮຽນ ແລະ ຄູສອນ ແລະ ມັນແມ່ນພາກສ່ວນທີ່ສຳຄັນ ແລະ ມີລັກສະນະເປັນທຳມະຊາດຂອງພັດທະນາການຂອງເດັກ, ບໍ່ຄວນ ຖື ວ່າມັນເປັນການຂົ່ມຂູ່ ອຳນາດຂອງຄູສອນ.

ໂດຍການສ້າງສາຍພົວພັນອັນດີບົນພື້ນຖານຄວາມເຂົ້າໃຈ ແລະຄວາມເຫັນໃຈ, ນັກຮຽນຈະກັບ ກາຍ ມາເຊື່ອໝັ້ນຄູສອນຂອງເຂົາ ແລະ ໃຫ້ຄຸນຄ່າສູງການອະນຸມັດເຫັນດີຂອງຄູ. ເມື່ອນັກຮຽນຕອບ ສະໜອງຕໍ່ຄວາມເປັນທຳມະຊາດທີ່ເປັນບວກຂອງການພົວພັນ ແລະ ການປະ ຕິບັດວິໄນທີ່ສະເໝີຕົ້ນ ສະເໝີປາຍແລ້ວ, ເຫດການຂອງການປະພຶດແນວບໍ່ດີກໍຫລຸດລົງ ແລະ ຄຸນນະພາບຂອງການພົວພັນ ກໍຈະປັບປຸງດີຂຶ້ນຕໍ່ໄປເລື້ອຍໆ. ຮອດຕອນທ້າຍນີ້, ຄູສອນທີ່ດີທີ່ສຸດ ແມ່ນຜູ້ທີ່ມີບົດບາດເປັນແບບຢ່າງ ທີ່ດີ ແລະ ການເປັນແບບຢ່າງຂອງຄູດັ່ງກ່າວນັ້ນ ເດັກກໍເພິ່ງພໍໃຈຢາກກ່າຍເອົາແບບຢ່າງນັ້ນດ້ວຍ.

## 2. ເປັນຫຍັງເດັກຈຶ່ງມີພຶດຕິກຳສະແດງອອກໃຫ້ເຫັນຄືແນວນັ້ນ?

### 2.1 ການສ້າງທາງເລືອກ

ສາວຄູ ສາມີນາ ເປັນຄູສອນວິຊາວິທະຍາສາດຫ້ອງ ປ.4 ມີບັນຫາປະຈຳກັບທ້າວ ຣາລີ. ເຂົາເຈົ້າ ຈະບໍ່ລົງຮອຍກັນມາຕະຫລອດ. ອັນໃດກໍຕາມທີ່ສາວຄູ ສາມີນາ ຕ້ອງການໃຫ້ທ້າວ ຣາລີ ປະຕິບັດ ເຊັ່ນ: ໃຫ້ມາໂຮງຮຽນທັນເວລາ, ໃຫ້ເຮັດວຽກບ້ານທຸກໆມື້. ທ້າວ ຣາລີ ກໍບໍ່ຄ່ອຍຈະປະຕິບັດຕາມ. ສິ່ງທີ່ຄູ ສາມີນາ ບໍ່ສາມາດມອງເຫັນ ຫຼືສຳນຶກໄດ້ນັ້ນ, ໃນທ້າຍສຸດຄູຜູ້ອື່ນໄດ້ພົບເຫັນວ່າຄູ ສາມີນາ ມີແຕ່ບອກສິ່ງທີ່ນາງຕ້ອງການໃຫ້ ທ້າວ ຣາລີ ເຮັດແບບເປັນຄຳຖາມ. ຕົວຢ່າງ “ຣາລີ ກະລຸນາ ໃຫ້ນ້ອງ ມາໂຮງຮຽນໃຫ້ທັນເວລາໄດ້ບໍ່? ” ແລະ ທ້າວ ຣາລີ ກໍມັກຈະບອກສະເໝີວ່າ “ ບໍ່ ”

ບໍ່ມີຜູ້ໃດແລະບໍ່ມີສະພາບການໃດສາມາດເຮັດໃຫ້ການປະພຶດ ຂອງເດັກເປັນໄປຕາມທິດທາງອັນແນ່ນອນໄດ້. ສຳລັບສາວຄູສາມີນາ ນາງໄດ້ຂໍຮ້ອງໃຫ້ ທ້າວ ຣາລີ ຮັບເອົາການປະພຶດທີ່ດີແຕ່ວ່າຖືກທ້າວຣາລີປະຕິເສດ ການຂໍຮ້ອງນັ້ນເລື້ອຍໆ. ຍ້ອນຫຍັງ? ການປະພຶດແມ່ນອີງຕາມທາງເລືອກ ແລະ ນັກຮຽນຂອງ ທ່ານ ກໍເລືອກເອົາການປະພຶດອັນໃດທີ່ເຂົາເຈົ້າຕ້ອງການເລືອກ. ທ່ານ ບໍ່ສາມາດບັງຄັບ ເຂົາ ຊຶ່ງເປັນເຫດໃຫ້ຮູ້ວ່າວ່າ ເປັນຫຍັງການ ລົງໂທດ ຈຶ່ງໃຊ້ການບໍ່ໄດ້ ໃນທີ່ສຸດ. ເຖິງຢ່າງໃດກໍດີ, ຄືດັ່ງຄູ ຂອງທ້າວ ເຣມອນ ໄດ້ຮຽນຮູ້ຢູ່ພາກທີ່ຜ່ານມານັ້ນ, ທ່ານ ມີອຳນາດ ຫຼື ອິດທິພົນຕໍ່ການຕັດສິນໃຈ ຂອງນັກຮຽນກ່ຽວກັບສິ່ງທີ່ຈະປະພຶດຄືແນວໃດ, ແຕ່ວ່າການປ່ຽນແປງຕ້ອງເລີ່ມຕົ້ນຈາກທ່ານຊຶ່ງເປັນຄູສອນ. ສຳລັບຄູສອນຂອງ ເຣມອນ ນາງຈຳເປັນຕ້ອງຮຽນຮູ້ສິ່ງທີ່ຈະປະຕິບັດກັບທ້າວ ເຣມອນ ແລະ ກັບນັກຮຽນຂອງນາງຜູ້ອື່ນໆ ເຊັ່ນດຽວກັນເພື່ອໃຫ້ລາວຢາກເລືອກການປະພຶດທີ່ເໝາະສົມ ແລະ ຍອມປະຕິບັດຕາມລະບຽບຂອງຫ້ອງຮຽນ. ທ່ານ ກໍປະເຊີນໜ້າກັບສິ່ງທ້າທ້າຍແບບດຽວກັນ. ພາລະບົດບາດຂອງ ທ່ານ ແມ່ນຕ້ອງລະບຸ/ກຳນົດເຫດຜົນທີ່ເດັກ ການເລືອກປະພຶດອັນເລວຮ້າຍໃຫ້ໄດ້ ແລະ ສ້າງຍຸດທະສາດ ເພື່ອຊ່ອຍເຫຼືອນັກຮຽນໃຫ້ເລືອກການປະພຶດທີ່ດີກວ່າ.

### ກິດຈະກຳເພື່ອປະຕິບັດ: ນັກຮຽນຜູ້ດຽວກັນ, ການປະພຶດແຕກຕ່າງກັນ.

ໃຫ້ທ່ານເລືອກເອົານັກຮຽນຜູ້ໜຶ່ງຢູ່ໃນຫ້ອງຂອງ ທ່ານທີ່ມີພຶດຕິກຳລົບກວນ ແລະ ສ້າງຄວາມລຳຄານຕໍ່ທ່ານ.ໃຫ້ສັງເກດເບິ່ງນັກຮຽນ ຜູ້ນີ້ຢ່າງປົກກະຕິໃນອາທິດໜຶ່ງ, ພິເສດເວລາຢູ່ນອກ ຫ້ອງຮຽນຂອງ ທ່ານ. ນັກຮຽນ ຜູ້ນັ້ນປະພຶດຢູ່ໃນຫ້ອງຮຽນອື່ນ, ກັບຄູສອນຜູ້ອື່ນ ຫຼື ກັບນັກຮຽນຜູ້ອື່ນແບບດຽວກັນກັບທີ່ລາວເຮັດຢູ່ໃນຫ້ອງຂອງ ທ່ານບໍ່? ຖ້າຫາກລາວປະພຶດແຕກຕ່າງໃນເວລາຢູ່ໃນສະຖານທີ່ຫຼືສະຖານະການອື່ນໆ ໃນໂຮງຮຽນ, ທ່ານ ຄິດວ່າມັນເປັນຍ້ອນຫຍັງ ລາວຈຶ່ງເລືອກປະພຶດທາງລົບຄືແນວນັ້ນ ຢູ່ໃນຫ້ອງຮຽນຂອງທ່ານ? ໃຫ້ທ່ານເປີກສານຳຄູສອນ ຜູ້ທີ່ບໍ່ມີບັນຫາກັບການປະພຶດຂອງນັກຮຽນຜູ້ນັ້ນ . ພວກເພິ່ນເຮັດອັນໃດທີ່ ແຕກຕ່າງຈາກທ່ານ? ທ່ານໄດ້ໃຊ້ປະ ໂຫຍກເພື່ອຂໍໃຫ້ປະຕິບັດເປັນຄຳຖາມ (ຄືດັ່ງສາວຄູ ສາມີນາຂ້າງເທິງບໍ່?). ທ່ານເຄີຍ ໄດ້ໃສ່ໂທດນັກຮຽນ ຜູ້ທີ່ບໍ່ຕ້ອງ ການມາໂຮງຮຽນບໍ່? ຄູສອນຜູ້ອື່ນໆ ໄດ້ໃຫ້ໂອກາດແກ່ນັກຮຽນຜູ້ນັ້ນ ແລະ ໄດ້ໃຫ້ລາວຈັດການແກ້ໄຂ ກັບຜົນທີ່ຕາມມາພາຍຫຼັງບໍ່? ທ່ານ ສາມາດທີ່ຈະເຮັດວຽກເພື່ອຊ່ອຍລາວໃຫ້ກາຍເປັນຜູ້ມີຄວາມຮັບຜິດຊອບໃນການປະພຶດຂອງຕົນ ໃນທາງບວກໄດ້ຢ່າງໃດ?.

## 2.2 ຄວາມຕ້ອງການຢາກເປັນເຈົ້າຂອງ

ຄວາມຢາກເປັນເຈົ້າຂອງແມ່ນຄວາມຕ້ອງການພື້ນຖານ ບໍ່ວ່າຈະເປັນເດັກ ຫຼື ຜູ້ໃຫຍ່. ນັກຮຽນມີຄວາມຕ້ອງການຄວາມເພິ່ງພໍໃຈ 3 ຢ່າງ ເພື່ອໃຫ້ປະສົບກັບຄວາມຮູ້ສຶກຂອງຄວາມເປັນເຈົ້າຂອງ:

❖ ນັກຮຽນຈຳເປັນຕ້ອງຮູ້ສຶກວ່າມີຄວາມສາມາດ(Capable) ເພື່ອສຳເລັດວຽກງານ/ກິດຈະກຳ ທີ່ຖືກມອບໝາຍຕາມຄວາມຕ້ອງການຂອງຫ້ອງຮຽນ ແລະ ໂຮງຮຽນ;
❖ ນັກຮຽນຈຳເປັນຕ້ອງຮູ້ສຶກວ່າເຂົາມີຄວາມສາມາດຕິດຕໍ່ພົວພັນ (Connect) ໄດ້ຢ່າງສຳເລັດຜົນກັບຄູສອນ ແລະ ເພື່ອນຮ່ວມຫ້ອງຮຽນ;
❖ ນັກຮຽນຈຳເປັນຕ້ອງຮູ້ວ່າເຂົາໄດ້ປະກອບສ່ວນ (Contribute) ໃຫ້ແກ່ກຸ່ມຢູ່ໃນແນວທາງໃດໜຶ່ງທີ່ສຳຄັນ.

ປັດໃຈ 3 ຢ່າງທີ່ກະທົບໃສ່ຄວາມອາດສາມາດຂອງນັກຮຽນ ເພື່ອສ້າງຄວາມເພິ່ງພໍໃຈສາມຢ່າງຂ້າງເທິງນັ້ນ, ມັນຮຽກຮ້ອງຕ້ອງການ ໃຫ້ມີການກະທຳຈາກພາກສ່ວນຂອງທ່ານດັ່ງຕໍ່ໄປນີ້:

1. ຄຸນນະພາບຂອງການພົວພັນລະຫວ່າງ ຄູສອນ-ນັກຮຽນ, ໂດຍອີງໃສ່ຄວາມໄວ້ວາງໃຈ, ເຄົາລົບ ນັບຖືຊຶ່ງກັນ ແລະ ກັນ ແລະ ຄວາມເຂົ້າໃຈ ( ບໍ່ມີຄວາມຢ້ານກົວ );
2. ກຳລັງແຮງຂອງບັນຍາກາດໃນຫ້ອງຮຽນເພື່ອຄວາມສຳເລັດ (ຕົວຢ່າງ: ນັກຮຽນທຸກຄົນມີຄວາມຮູ້ສຶກວ່າເຂົາໄດ້ຖືກບັນຈຸຢູ່ໃນນັ້ນ, ເຂົາຮູ້ສຶກສາວ່າເປັນຜູ້ມີຄຸນຄ່າ ແລະ ເຂົາເຈົ້າ ສາມາດເຮັດວຽກຮ່ວມກັນຢ່າງສະໜານສາມັກຄີ ແລະ ມີປະສິດທິຜົນ.
3. ຄວາມເໝາະສົມຂອງໂຄງສ້າງຫ້ອງຮຽນ (ຈະຄຸ້ມຄອງ-ບໍລິຫານແນວໃດ).

## 3. ເປັນຫຍັງເດັກຈຶ່ງປະພຶດຕົນໃນທາງທີ່ບໍ່ເໝາະສົມ

ທ່ານບໍ່ຕ້ອງເປັນຫ່ວງ, ນັກຮຽນຂອງທ່ານບໍ່ໄດ້ສ້າງຊຸດພຶດຕິກຳ ທີ່ບໍ່ເໝາະສົມໄວ້ດ້ວຍຄວາມຕັ້ງໃຈ. ທີ່ຈິງແລ້ວ, ເດັກທີ່ປະພຶດບໍ່ເໝະສົມມັກຈະມີເຫດຜົນໃດໜຶ່ງ. ບັນດາເຫດຜົນທົ່ວ ໄປທີ່ສຳຄັນທີ່ສຸດທີ່ ເຊື່ອວ່າເປັນຊະນວນໃຫ້ ເກີດການປະພຶດທີ່ບໍ່ເໝາະສົມມີດັ່ງນີ້:

❖ ວຽກ/ບົດຮຽນອາດງ່າຍໂພດ ຫຼືຍາກໂພດສຳລັບນັກຮຽນ.
❖ ວຽກ/ບົດຮຽນບໍ່ເປັນໜ້າສົນໃຈ ແລະນັກຮຽນມີຄວາມເບື່ອໜ່າຍ.
❖ ວິທີການສິດສອນອາດບໍ່ສອດຄ່ອງ ຫຼືບໍ່ຖືກກັບວິທີການຮຽນຮູ້ຂອງນັກຮຽນ.
❖ ນັກຮຽນອາດບໍ່ທັນໄດ້ຮັບຄວາມກຽມ ພ້ອມ.
❖ ຄາດໝາຍບໍ່ຈະແຈ້ງ ຫຼື ບໍ່ມີເຫດຜົນ.
❖ ນັກຮຽນມີທັກສະດ້ານສັງຄົມໜ້ອຍ, ບໍ່ສາມາດສື່ສານໄດ້ດີກັບທ່ານ ຫຼື ກັບຜູ້ອື່ນ ຫຼື ມີຄວາມພາກພູມໃຈໃນຕົນເອງຕ່ຳ.

ນອກຈາກເຫດຜົນຂ້າງເທິງນີ້ແລ້ວ, ຍັງເຊື່ອອີກວ່ານັກຮຽນປະພຶດໃນທາງທີ່ບໍ່ເໝາະສົມແມ່ນ ເພື່ອບັນລຸ 4 ເປົ້າໝາຍທີ່ຕ້ອງການ ຄື:

1. ຄວາມສົນໃຈ.
2. ອຳນາດ.

3. ການແກ້ແຄ້ນ.
4. ການຫລີກລ້ຽງຄວາມຫຼົ້ມເຫລວ ຫຼື ຄວາມບໍ່ມີພຽງພໍ.

## 3.1 ການຊອກຫາຄວາມສົນໃຈ (ຄວາມເອົາໃຈໃສ່)

ສຳລັບນັກຮຽນທີ່ຮຽກຮ້ອງຄວາມສົນໃຈແບບເລື້ອຍເປື່ອຍຢູ່ປະຈຳ, ທ່ານຄູອາດຈະຢາກຮ້າຍ, ຕຳນິ, ໃຫ້ສິນບົນ(ຈ້າງເຂົ້າໜົມ ຫຼື ອື່ນໆ), ຫຼື ໃຊ້ເຕັກນິກການປະຕິບັດວິໄນທາງລົບ. ແຕ່ຖ້າທ່ານຫາກຍັງຈື່ໄດ້ວ່າເປົ້າໝາຍຂອງນັກຮຽນ ແມ່ນເຮັດໃຫ້ຄູສົນໃຈ/ເອົາໃຈໃສ່, ທ່ານຈະເຫັນໄດ້ໂດຍງ່າຍເລີຍວ່າການດ່າວ່າຕິຕຽນ ຫຼື ໃຫ້ສິນບົນນັ້ນຈະສົ່ງເສີມ ການປະພຶດຜິດເທົ່ານັ້ນໃຫ້ເພີ່ມຂຶ້ນ. ຢູ່ໃນຈິດໃຈຂອງເດັກ, ຄວາມສົນໃຈຈາກຄູທີ່ມັກຮ້າຍດ່າ ແມ່ນດີກວ່າການບໍ່ສົນໃຈ/ບໍ່ເອົາໃຈໃສ່ຫຍັງເລີຍ. ຖ້າທ່ານຈ້ອງສັງເກດເບິ່ງພຽງແຕ່ການປະພຶດ ໃນທາງທີ່ບໍ່ເໝາະສົມຂອງນັກຮຽນ, ນັກຮຽນກໍຈະປະພຶດໃນທາງຜິດ ເພື່ອໃຫ້ໄດ້ຄວາມສົນໃຈ.

ຕໍ່ໄປນີ້ ແມ່ນບັນດາການປະຕິບັດວິໄນແບບສ້າງສັນ ທີ່ທ່ານສາມາດນຳໃຊ້ເພື່ອເປັນ ທິດທາງປະຕິບັດ ຕໍ່ນັກຮຽນຜູ້ທີ່ມີການປະພຶດໃນທາງທີ່ບໍ່ເໝາະສົມເພື່ອຮຽກຮ້ອງຄວາມສົນໃຈ.

- ❖ ເຮັດໃຫ້ເຂົາເປັນຄົນດີ,ຊົມເຊີຍເຂົາ ເມື່ອເຂົາບໍ່ໄດ້ຊອກຫາຄວາມສົນໃຈ ແລະປະພຶດຜິດ.
- ❖ ໃຫ້ວາງເສີຍຕໍ່ພຶດຕິກຳເມື່ອໃດຫາກພໍເປັນໄປໄດ້ ໂດຍການໃຫ້ຄວາມສົນໃຈແນວບວກແກ່ເດັກໃນຊ່ວງເວລາສະໜຸກສະໜານ.
- ❖ ສິດສອນເຂົາເຈົ້າໃຫ້ຮູ້ວິທີຂໍຄວາມສົນໃຈ (ຕົວຢ່າງ: "ເອື້ອຍຄູ/ອາຈານກະລຸນາມາເບິ່ງທາງນ້ອງ/ຫຼານແດ່" ຊຶ່ງເຂົາເຈົ້າຈະຍົກມື/ເຈ້ຍບັດຄຳຂຶ້ນ ເມື່ອເວລາມີຄຳຖາມ ).
- ❖ ຈົ້ງຕາເບິ່ງດ້ວຍຄວາມບໍ່ພໍໃຈ ແຕ່ບໍ່ປາກ.
- ❖ ໃຫ້ໄປຢືນຢູ່ໃກ້ເຂົາແທນທີ່ຈະຢູ່ໄກ (ຖ້າຫາກທ່ານຢູ່ຂ້າງໆເຂົາ, ເຂົາຈະບໍ່ມີຄວາມຈຳເປັນສະແດງພຶດຕິກຳຮຽກຮ້ອງຄວາມສົນໃຈ ) .
- ❖ ມີເປົ້າໝາຍ-ຍຸດຕິ-ປະຕິບັດ; ໝາຍຄວາມວ່າ ວາງເປົ້າໝາຍນັກຮຽນ ໂດຍຂຽນລາຍຊື່ໄວ້, ແລ້ວລະບຸ/ກຳນົດພຶດຕິກຳທີ່ຈະໃຫ້ຢຸດຕິ, ບອກໃຫ້ນັກຮຽນຮູ້ວ່າອັນໃດ ທີ່ຕ້ອງເຮັດໃນຂະນະນັ້ນ, ປ່ອຍໃຫ້ລາວຕັດສິນໃຈກ່ຽວກັບສິ່ງທີ່ລາວຈະເຮັດໃນຊ່ວງຕໍ່ໄປ ແລະ ຜົນທີ່ ຕາມມາຈາກການເຮັດສິ່ງດັ່ງກ່າວ.
- ❖ ໃຫ້ເຮັດສິ່ງທີ່ບໍ່ໄດ້ຄາດໝາຍໄວ້ເຊັ່ນ: ມອດໄຟ,ຫຼິ້ນສຽງດົນຕີ, ຜ່ອນສຽງຂອງ ທ່ານ ໃຫ້ຄ່ອຍລົງ, ປ່ຽນສຽງຂອງທ່ານ, ເວົ້າໃສ່ຝາ.
- ❖ ເຂົ້າຂັດຈັງຫວະນັກຮຽນເຊັ່ນ ຕັ້ງຄຳຖາມໂດຍກົງ,ຮ້ອງຂໍໃຫ້ເຮັດສິ່ງໃດໜຶ່ງ, ໃຫ້ໂອກາດເລືອກ, ປ່ຽນກິດຈະກຳ.

## 3.2 ຫຼັກການທົ່ວໄປ ເພື່ອຮັບມືກັບນັກຮຽນທີ່ຮຽກຮ້ອງຄວາມສົນໃຈແມ່ນ:

*ບໍ່ໃຫ້ຄວາມສົນໃຈຕາມການຮຽກຮ້ອງ, ເຖິງວ່າຈະເປັນພຶດຕິກຳທີ່ມີປະໂຫຍດ. ຊ່ວຍເຫຼືອນັກຮຽນໃຫ້ກາຍເປັນຜູ້ມີສະຕິກະຕຸ້ນດ້ວຍຕົນເອງ. ໃຫ້ຄວາມສົນໃຈໃນແນວທາງທີ່ເຂົາບໍ່ໄດ້ຄາດຄິດ. ເຮັດໃຫ້ເຂົາເປັນ "ຄົນດີ"*

### ກ. ອຳນາດ

ເດັກຈະພະຍາຍາມຢູ່ສະເໝີເພື່ອຢາກສະແດງອຳນາດ. ທ້າວເຣມອນເປັນ ຕົວຢ່າງໜຶ່ງກ່ຽວກັບດ້ານນີ້. ມີນັກຮຽນຈຳນວນໜຶ່ງ ມີຄວາມຮູ້ສຶກວ່າ ເຂົາຈະເປັນພາກສ່ວນໜຶ່ງທີ່ສຳຄັນຂອງຫ້ອງຮຽນໄດ້ ກໍຕໍ່ເມື່ອເຂົາໄດ້ສະແດງ. ນັກຮຽນທີ່ຊອກຫາອຳນາດຈະມີຄວາມຮູ້ສຶກວ່າເຂົາຈະເປັນຜູ້ສຳຄັນ ໄດ້ກໍຕໍ່ເມື່ອເຂົາໄດ້ທ້າທາຍອຳນາດຂອງທ່ານ, ຕ້ານກົດລະບຽບ ແລະ ບໍ່ປະຕິບັດຕາມຄຳສັ່ງສອນ. ເຂົາເຈົ້າມີຄວາມເຊື່ອຢ່າງຜິດພາດທີ່ວ່າເຂົາມີຄວາມເປັນເຈົ້າຂອງໃນຫ້ອງຮຽນກໍຕໍ່ເມື່ອເຂົາຢູ່ໃນການຄວບຄຸມເທົ່ານັ້ນ.ເຂົາເຈົ້າຈະທ້າທາຍບໍ່ເກງກົວ ທ່ານ ເພື່ອເບິ່ງວ່າທ່ານຈະຖືກກົດດັນຂະໜາດໃດ, ຫຼື ເຂົາຈະເອົາໃຈທ່ານພໍສົມຄວນເມື່ອເຂົາຮູ້ສຶກວ່າ ທ່ານ ບໍ່ຕ້ອງການທີ່ຈະສືບຕໍ່ສູ້ກັບເຂົາ.

ການຕອບໂຕ້ໂດຍທຳມະຊາດຂອງພວກເຮົາ ເຊັ່ນ ຢູ່ໃນໄລຍະການຕໍ່ສູ້ອຳນາດຈະມີຄວາມຮູ້ສຶກຖືກກໍ່ກວນ ແລະ ໃຈຮ້າຍ. ຄວາມພະຍາຍາມແກ້ໄຂ ແມ່ນຢຸດເຊົາການຕໍ່ສູ້ນີ້ທັງໝົດໂດຍຜ່ານການນຳໃຊ້ບາງຮູບແບບການລົງໂທດທາງດ້ານຮ່າງກາຍຈຳນວນໜຶ່ງ, ແຕ່ວ່າມັນຈະໃຊ້ໄດ້ພຽງແຕ່ຜ່ອນຜັນເທົ່ານັ້ນ. ໃນຊ່ວງເວລາມີການຕໍ່ສູ້ ເພື່ອເອົາອຳນາດນັ້ນທ່ານມີຄວາມຈຳເປັນຕ້ອງປະຕິບັດການແບບໃຈເຢັນ ຫຼື ມີຄວາມກະລຸນາ ແຕ່ຕ້ອງໝັ້ນຄົງແນ່ນອນ. ການໂອ້ລົມອາດຈະດີພຽງເລັກນ້ອຍ ແລະ ມັນຈະຊຸບລັ້ງການຕໍ່ສູ້ເອົາອຳນາດເທົ່ານັ້ນ. ທ່ານ ຈຳເປັນຕ້ອງໄດ້ຕັດສິນໃຈວ່າ*ທ່ານຈະເຮັດອັນໃດ*, ແຕ່ບໍ່ແມ່ນສິ່ງທີ່ຈະເອົາໃຫ້ນັກຮຽນເຮັດ. ແນວທາງທົ່ວໄປເພື່ອແກ້ໄຂຈັດການກັບນັກຮຽນທີ່ຊອກຫາອຳນາດ ແມ່ນການຖອນຕົວອອກຈາກຄວາມຂັດແຍ່ງ. ໃຫ້ຈື່ຈຳໄວ້ວ່າ: ຈະມີສອງຝ່າຍເພື່ອຕໍ່ສູ້ກັນ. ໃຫ້ຽບຕັ້ງສະຕິ, ໃຫ້ທາງເລືອກ, ປ່ອຍໃຫ້ຜົນທີ່ຕາມມາຂອງການປະພຶດຂອງນັກຮຽນເກີດຂຶ້ນ. ທ່ານ ຍັງອາດເອົາຊະນະການຮ່ວມມືຂອງເຂົາເຈົ້າດ້ວຍການຂຽນລາຍການຊ່ວຍເຫຼືອຂອງເຂົາເຈົ້າ. ຕົວຢ່າງ" ບໍ່ເປັນຫຍັງທີ່ນ້ອງມາຮອດຫ້ອງຮຽນບໍ່ທັນເວລາ. ຄູເຂົ້າໃຈ, ແຕ່ວ່ານ້ອງສາມາດຊ່ວຍຈົດບັນທຶກການມາໂຮງຮຽນຂອງນັກຮຽນໃນຫ້ອງໄດ້ບໍ່?" ແທນທີ່ຈະຊອກເອົາອຳນາດມາໃຫ້ທ່ານ, ທ່ານ ເຮັດໃຫ້ນັກຮຽນຢູ່ ໃນຖານະມີຄວາມຮັບຜິດຊອບ ແລະ ມອບອຳນາດທາງການໃຫ້ເຂົາເຈົ້າ.

### ຂ. ການແກ້ແຄ້ນ.

ການຈັດການແກ້ໄຂເປົ້າໝາຍອັນຜິດພາດຂອງການແກ້ແຄ້ນຕ້ອງໃຊ້ຄວາມອົດທົນ. ນັກຮຽນຜູ້ທີ່ເຮັດໃຫ້ຜູ້ອື່ນ ແລະ ທ່ານເຈັບຈະມີຄວາມຮູ້ສຶກວ່າເຂົາຖືກເຮັດໃຫ້ເຈັບ (ຈະເປັນການ

ເຈັບທີ່ແທ້ຈິງ ຫຼື ຈິນຕະນາການເອົາກໍຕາມ) ແລະ ເຂົາຈະຕ້ອງແກ້ແຄ້ນຄືນ. ເຂົາຈະຮູ້ສຶກຖືກປະຕິບັດ ຢ່າງບໍ່ຍຸຕິທຳ, ຖືກ ຜ່າຍແພ້ ແລະ ບໍ່ມີຄວາມສຸກ. ສະນັ້ນ, ເຂົາເຈົ້າຈຶ່ງຊອກຫາວິທີແກ້ແຄ້ນດ້ວຍຄວາມຕັ້ງໃຈ ຫຼື ໂດຍບໍ່ຮູ້ເທົ່າເຖິງການ. ການແກ້ແຄ້ນສາມາດເກີດຂຶ້ນທາງດ້ານຮ່າງກາຍ, ວາຈາ ຫຼື ແບບຢູ່ເສີຍໆບໍ່ໄດ້ເຮັດອັນໃດ. ມັນອາດສາມາດເຮັດແບບງຽບໆ ເຊັ່ນ ໂດຍຜ່ານການເບິ່ງ ແລະ ສະແດງທ່າທາງແບບກຽດຊັງ. ນັກຮຽນຍັງອາດສາມາດທີ່ຈະຊອກຫາວິທີແກ້ແຄ້ນ ທ່ານ ໂດຍທາງອ້ອມ ຄື ກັນ ເຊັ່ນ ສັບໝາກກອກ ນັກຮຽນຜູ້ອື່ນ ຫຼື ຂຽນອັນໃດອັນໜຶ່ງໃສ່ໂຕະ.

**ເມື່ອເວລານັກຮຽນຖືກປ່ອຍໃຫ້ແກ້ແຄ້ນ, ເຂົາຈະສ້າງວົງຈອນຂອງຄວາມເຈັບປວດທີ່ພົວພັນ**ກັບຫຼາຍຄົນດ້ວຍການເຮັດໃຫ້ບາດເຈັບ ແລະ ຖືກບາດເຈັບ.ໃຫ້ຈື່ຈຳໄວ້ວ່ານັກຮຽນຜູ້ຊອກຫາການແກ້ແຄ້ນຈະສ້າງຄວາມຫຍຸ້ງຍາກໜັກໃຈ ແລະ ມີຄວາມທໍ້ຖອຍຢ່າງເລິກເຊິ່ງ. ເພື່ອຢຸດຕິວິຖີແຫ່ງການແກ້ແຄ້ນ ທ່ານ ຄວນຫຼີກລ້ຽງຄວາມຮູ້ສຶກເຈັບປວດ ແລະ ທ່ານ ກໍ່ບໍ່ຄວນແກ້ໝັດຕໍ່ລໍ້ຕໍ່ຖຽງ. ຢ່າໄດ້ຊອກຫາການແກ້ແຄ້ນໃຫ້ຕົນເອງ. ໃນທາງກັບກັນ, ໃຫ້ພະຍາຍາມສ້າງການພົວພັນແບບເອົາໃຈໃສ່ດູແລກັນ, ສ້າງການພົວພັນທີ່ໄດ້ວາງໃຈກັນກັບນັກຮຽນ ໄປຄຽງຄູ່ກັບການປັບປຸງຄວາມພາກພູມໃຈໃນຕົນເອງ. ສິ່ງນີ້ສາມາດເຮັດໄດ້ງ່າຍໆ ໂດຍຈັດວາງນັກຮຽນໃຫ້ຢູ່ໃນສະພາວະທີ່ເຂົາເຈົ້າບໍ່ສາມາດຫຼົ້ມເຫລວໄດ້. ເມື່ອເວລານັກຮຽນມີແນວຄິດຂອງຕົນດີຂຶ້ນ, ໜ້ອຍທີ່ສຸດທີ່ເຂົາຈະປະພຶດແນວຜິດ ແລະ ຫາທາງແກ້ແຄ້ນ. ພ້ອມກັນນີ້ ກໍໃຫ້ສອນນັກຮຽນທຸກຄົນໃຫ້ຮູ້ຈັກວິທີສະແດງຄວາມຮູ້ສຶກຂອງຕົນຢ່າງເໝາະສົມ, ແທນທີ່ຈະເຮັດການແກ້ແຄ້ນ ຍ້ອນໄດ້ຮັບຄວາມບາດເຈັບທາງຮ່າງກາຍ ຫຼື ຈິດໃຈ, ສອນນັກຮຽນໃຫ້ "ເວົ້າ ອອກມາ" ເພື່ອໃຫ້ໄດ້ບອກເຊິ່ງກັນ ແລະ ກັນວ່າ ເຂົາເຈົ້າເຈັບແສບພຽງໃດ ແລະ ພະຍາຍາມກຳນົດສາຍເຫດ ແລະວິທີຫລີກລ້ຽງມັນໃນອະນາຄົດ.

## ຄ. ການຫລີກລ້ຽງຄວາມຫຼົ້ມເຫຼວ ຫຼື ຄວາມຂາດເຂີນ(ປົມດ້ອຍ)

ມີນັກຮຽນຈຳນວນໜຶ່ງມີຄວາມຢ້ານກົວຕໍ່ຄວາມຫຼົ້ມເຫລວ ຫຼື ມີຄວາມຮູ້ສຶກວ່າຕົນເອງມີປົມດ້ອຍ ແລະ ບໍ່ສາມາດເຮັດໄດ້ຕາມຄາດໝາຍຂອງຕົນເອງຂອງພໍ່ແມ່ ແລະ ຂອງຄູສອນ. ຄວາມຮູ້ສຶກມີປົມດ້ອຍນີ້ ຈະເປັນການຫຼົບຫຼີກຂອງເດັກຜູ້ທີ່ມີຄວາມທໍ້ຖອຍ. ເວົ້າອີກທາງໜຶ່ງ, ເມື່ອເຂົາຮູ້ສຶກບໍ່ດີ ເຂົາກໍຈະກະທຳແນວບໍ່ດີ. ເຂົາເຈົ້າຈະບໍ່ພະຍາຍາມເຮັດດີ ຢູ່ໃນຫ້ອງຮຽນຂອງ ທ່ານຖ້າຫາກເຂົາຄິດວ່າຕົນເອງເປັນຄົນໂງ່. ເພື່ອທົດແທນຄວາມຮູ້ສຶກຂອງຄວາມມີປົມດ້ອຍ, ພວກເຂົາອາດເລືອກພຶດຕິກຳແບບຖອນຕົວ ເຊິ່ງຈະເຮັດໃຫ້ເຂົາເກີດມີປົມດ້ອຍ: "ຂ້ອຍບໍ່ສາມາດແກ້ໂຈດຄະນິດສາດນີ້ໄດ້", "ຂ້ອຍຮຽນວິຊາວິທະຍາສາດບໍ່ໄດ້ດີ", "ປຶ້ມຫົວນີ້ຍາກຫຼາຍສຳລັບຂ້ອຍ" ຍຸດທະວິທີຂອງການໃສ່ວິໄນດ້ານລົບ ເຊັ່ນ ການເຢາະເຢີ້ຍ ແລະ ເວົ້າແດກດັນ ("ເຈົ້າເຮັດໃຫ້ດີກວ່ານີ້ ບໍ່ໄດ້ຫວາ?"), ຈະເຮັດໃຫ້ເດັກເຫຼົ່ານີ້ຮູ້ສຶກດ້ອຍຄ່າລົງ. ອາດມີຫຼາຍທາງທີ່ເປັນໄປໄດ້ ສຳລັບນັກຮຽນຜູ້ທີ່ມີຄວາມຮູ້ສຶກວ່າມີປົມດ້ອຍ, ບໍ່ເດັ່ນບໍ່ດັງ, ທຍາບຄາຍອາດຈະເວົ້າອວດດີ,

ຄຸຍໂມ້ ຫຼື ຕີກັນ. ເຂົາອາດຈະກັບມາຂົ່ມເຫັງກໍ່ກວນ ໂດຍເຮັດໃຫ້ນັກຮຽນຜູ້ອື່ນໆ ມີຄວາມຮູ້ສຶກຢ້ານກົວ ແລະ ນັບຖືໜ້ອຍ.

ເມື່ອເວລານັກຮຽນຂອງທ່ານຮູ້ສຶກນັບຖືໜ້ອຍ ທ່ານ ຈະມີພາລະທີ່ຫຍຸ້ງຍາກ. ໃຫ້ເລີ່ມຕົ້ນຈາກບ່ອນທີ່ເຂົາເປັນຢູ່ (ບໍ່ແມ່ນເລີ້ມຈາກສິ່ງທີ່ເຮົາຄິດວ່າເຂົາຈະເປັນ), ໃຫ້ສ້າງຄາດໝາຍທີ່ມີລັກສະນະຕົວຈິງ, ລຶບລ້າງການຕຳນິຕິຕຽນວຽກງານ/ການຮຽນຂອງເຂົາທັງໝົດ, ໃຫ້ຊຸກຍູ້ສົ່ງເສີມຄວາມພະຍາຍາມອັນເລັກໆນ້ອຍໆຂອງເຂົາ ແລະ ທັງໝົດນີ້ຢ່າໄດ້ສົງສານເຂົາ. ທ່ານຕ້ອງບູລະນະປັບປຸງຄວາມເຊື່ອສັດທາຢູ່ໃນຕົວຂອງເຂົາເອງ ແລະ ຊຸກຍູ້ສົ່ງເສີມເຂົາ ດ້ວຍການສັນລະເສີນຊົມເຊີຍຄວາມສຳເລັດທີ່ເຂົາບັນລຸ ບໍ່ວ່າມັນຈະເລື່ອງເລັກໆນ້ອຍໆກໍຕາມ. ໂດຍເຈດຕະນາໃຫ້ມີການຈັດກິດຈະກຳງ່າຍໆ ເພື່ອໃຫ້ເຂົາບັນລຸຜົນສຳເລັດ ແລະ ຊອກຫາໂອກາດໃຫ້ໄດ້ຍົກຍ້ອງ ກ່ຽວກັບການປະພຶດ ແລະ ຄວາມພະຍາຍາມເຮັດສິ່ງທີ່ດີຂອງເຂົາ. ໃຫ້ຈື່ຈຳໄວ້ວ່າເດັກບໍ່ແມ່ນຜູ້ໃຫຍ່ຈຳລອງເປັນຮູບຮ່າງນ້ອຍໆທີ່ມີດຸນພິນິດອ່ອນ; ພວກເຂົາເຮັດຜິດ ຍ້ອນວ່າເຂົາກຳລັງຮຽນຮູ້ຢູ່ປະຈຳ.

## 4. ການຮຽນຮູ້ກ່ຽວກັບນັກຮຽນຂອງທ່ານ

ການສ້າງຄວາມໄວ້ວາງໃຈ ແລະ ການພົວພັນແບບດູແລເບິ່ງແຍງລະຫວ່າງ ທ່ານ ແລະ ນັກຮຽນຂອງທ່ານນັ້ນ, ອັນໜຶ່ງຈະເປັນການສົ່ງເສີມພຶດຕິກຳທີ່ດີ ແລະ ປ້ອງກັນການປະພຶດທີ່ບໍ່ເໝາະສົມເຊິ່ງສາມາດເປັນເລື່ອງທ້າທາຍຫຍຸ້ງຍາກ, ແຕ່ວ່າມັນກໍສາມາດໃຫ້ລາງວັນຕອບແທນ ເຊັ່ນດຽວກັນ ເຊັ່ນ ມັນເຮັດໃຫ້ການສິດສອນຂອງ ທ່ານ ມີຄວາມສະໜຸກສະໜານ ແລະ ປັບປຸງການຮໍ່າຮຽນຂອງນັກຮຽນໃຫ້ດີຂຶ້ນ. ຜົນສຳເລັດໃນທາງບວກຂອງນັກຮຽນ ຈະສະທ້ອນໃຫ້ເຫັນວ່າທ່ານເຮັດວຽກໄດ້ດີຊໍ່າໃດ ແລະ ນັກຮຽນຂອງທ່ານ ເຫັນທ່ານເປັນ "ແບບຢ່າງ" ທີ່ດີຊໍ່າໃດ.

ບໍ່ວ່າທ່ານຈະມີນັກຮຽນຈຳນວນຫຼາຍຢູ່ໃນຫ້ອງຮຽນຂອງທ່ານ ຫຼື ຫຼາຍກວ່າຈຳນວນ ທີ່ຈະຄຸ້ມຄອງໄດ້ກໍຕາມ, ຄວາມທ້າທາຍຂອງ ທ່ານ ແມ່ນຈະຕ້ອງຮຽນຮູ້ກ່ຽວກັບນັກຮຽນແຕ່ລະຄົນໃຫ້ຫຼາຍເທົ່າທີ່ ທ່ານຈະສາມາດເຮັດໄດ້. ສຳລັບຄູທີ່ສິດສອນຢູ່ໃນຫ້ອງຮຽນທີ່ມີນັກຮຽນຫຼາຍ, ໃນຂັ້ນທຳອິດໃຫ້ໃຊ້ຄວາມພະຍາຍາມສຸມໃສ່ນັກຮຽນຈຳນວນໜ້ອຍ ທີ່ຕ້ອງການຄວາມເອົາໃຈໃສ່ພິເສດກ່ອນ, ບໍ່ວ່າຈະເປັນຍ້ອນວ່າເຂົາກຳລັງປະພຶດຜິດໆໃນປັດຈຸບັນ ຫຼື ຍ້ອນທ່ານ ສົງໄສວ່າສະພາບສ່ວນຕົວ ແລະ ຄອບ ຄົວອາດເຮັດໃຫ້ເຂົາເຈົ້າມີຄວາມສ່ຽງຕໍ່ການປະພຶດຜິດໆ. ໃຫ້ສຸມຄວາມພະຍາຍາມຂອງທ່ານ ໃສ່ຄວາມເຂົ້າໃຈວ່າເຂົາເຫັນຕົນເອງຄືແນວໃດ ກໍຄື ປັດໄຈພາຍນອກອາດຢູ່ໃນຄອບຄົວກໍເປັນໄດ້ ທີ່ອາດມີຜົນກະທົບຕໍ່ການປະພຶດຂອງເຂົາເຈົ້າ.

*ໃຫ້ຈື່ຈຳໄວ້ວ່າ: ນັກຮຽນແຕ່ລະຄົນຈະມີຄວາມເປັນສ່ວນບຸກຄົນ ຫຼື ມີຈຸດພິເສດສ່ວນຕົວໃຜມັນ. ນັກຮຽນແຕ່ລະຄົນທີ່ເຂົ້າມາຈະມີປະຫວັດເລື່ອງລາວ ທີ່ ແຕກຕ່າງກັນ, ມີວິທີການຕອບສະໜອງ ແລະ ຕອບຮັບການຮຽນຮູ້ໂລກແບບແຕກຕ່າງກັນ ແລະ ມີຄວາມໃຝ່ຝັນສຳລັບອະນາຄົດແຕກ*

*ຕ່າງກັນ. ໂດຍໃຊ້ເວລາເພື່ອຮຽນຮູ້ກ່ຽວກັບນັກຮຽນຂອງ ທ່ານ ໃນຖານະເປັນລາຍບຸກຄົນ ແລະ ໂດຍໃຫ້ຮູ້ຈັກຄອບຄົວຂອງເຂົາເຈົ້າ ຈະສະແດງໃຫ້ເຫັນວ່າ ທ່ານ ເອົາໃຈໃສ່ດູແລເຂົາ ແລະ ນັບຖືຄວາມເປັນເອກະລັກຂອງ ເຂົາ.*

ຢູ່ໃນສະພາບແວດລ້ອມທີ່ນັບຖືເຊິ່ງກັນ ແລະ ກັນ, ນັກຮຽນທຸກຄົນຈະມີຄວາມຮູ້ສຶກປອດໄພ ແລະ ມີຄຸນຄ່າ. ຄູສອນມີຄວາມເປັນມິດໄມຕີ ແລະ ເປີດໃຈກັບນັກຮຽນ ແຕ່ວ່າຄູສອນຈະເປັນຜູ້ໃຫຍ່ສະເໝີ. ການໃຫ້ຄວາມເອົາໃຈໃສ່ຕໍ່ການຮຽນຂອງນັກຮຽນຢ່າງມີການຄົ້ນຄິດ ແມ່ນສະແດງອອກໃນການເບິ່ງແຍງດູແລ ແລະ ການນັບຖື. ແທນທີ່ຈະພຽງແຕ່ຍ້ອງວ່າ "ເຮັດໄດ້ດີ " ໃຫ້ບອກນັກຮຽນຕື່ມໄປວ່າ ເປັນຫຍັງຈຶ່ງດີ.

## ກິດຈະກຳເພື່ອປະຕິບັດ: ຂ້ອຍແມ່ນໃຜ ?

ໃນຕອນເລີ່ມຕົ້ນຂອງສົກຮຽນໃໝ່, ໃຫ້ນັກຮຽນຂຽນຕື່ມໃສ່ບັດທີ່ຄ້າຍຄືບັດທີ່ຢູ່ດ້ານລຸ່ມນີ້. ໃຫ້ນຳໃຊ້ຂໍ້ມູນຂ່າວສານ ນີ້ເພື່ອໂອ້ລົມກັບນັກຮຽນ, ພັດທະນາແຜນການສອນ ແລະ ອອກແບບກິດຈະກຳການຮຳຮຽນ. ໃນຕອນທ້າຍຂອງພາກຮຽນທີໜຶ່ງ ບອກໃຫ້ນັກຮຽນຂຽນຕື່ມໃສ່ບັດອີກ, ແລ້ວເບິ່ງວ່າມີອັນໃດປ່ຽນແປງ, ໂດຍສະເພາະ ໃນເລື່ອງທີ່ນັກຮຽນເຊື່ອວ່າເຂົາເຮັດໄດ້ດີ ຫຼື ບໍ່ໄດ້ດີກໍ່ຄືເມື່ອເວລາເຂົາເຈົ້າດີໃຈ ຫຼື ບໍ່ມີຄວາມສະບາຍໃຈຢູ່ໃນຫ້ອງ. ໂດຍການນຳໃຊ້ຂໍ້ມູນຂ່າວສານນີ້ ມີກິດຈະກຳການຮຽນອັນໃໝ່ອັນໃດ ທີ່ນັກຮຽນຂອງທ່ານສາມາດເຮັດໄດ້ ເພື່ອຈະປັບປຸງຄວາມໝັ້ນໃຈຂອງນັກຮຽນ ແລະ ເຮັດໃຫ້ຫ້ອງຮຽນຂອງ ທ່ານ ເປັນບ່ອນທີ່ມ່ວນຊື່ນ ໃນການຮຳຮຽນ.

ຖ້າຫາກທ່ານແມ່ນຄູສອນທີ່ສາມາດຕິດຕາມນັກຮຽນຂອງທ່ານເປັນເວລາຫຼາຍປີ, ໃຫ້ຮັກສາບັດນີ້ໄວ້ໃນແຟ້ມສະສົມ ແລະ ທົບທວນເບິ່ງເພື່ອການປ່ຽນແປງ. ໃຫ້ທົບທວນແຜນການ ແລະ ກິດຈະກຳຂອງທ່ານຢ່າງສອດຄ່ອງ. ຖ້າຫາກທ່ານສອນຢູ່ໂຮງຮຽນທີ່ມີຄູສອນວິຊາແຕກຕ່າງກັນ, ກໍໃຫ້ທ່ານແລກປ່ຽນຂໍ້ມູນຂ່າວສານກັບພວກເພິ່ນ ແລະ ຊຸກຍູ້ໃຫ້ພວກເພິ່ນນຳໃຊ້ບັດນີ້ເຂົ້າໃນການກະກຽມບົດສອນ.

ຊື່ນັກຮຽນ:______________________________

ຂ້ອຍຕ້ອງການຢາກໃຫ້ເອີ້ນຂ້ອຍວ່າ: ______________________________

ສິ່ງໜຶ່ງທີ່ທ່ານຈຳເປັນຕ້ອງຮູ້ກ່ຽວກັບຂ້ອຍແມ່ນ:______________________________

ຂ້ອຍຕ້ອງການຮຽນ/ເຮັດວຽກຮ່ວມກັບ:______________________________

ສິ່ງທີ່ຂ້ອຍຮຽນ/ເຮັດໄດ້ດີ: ______________________________

ສິ່ງທີ່ຂ້ອຍຮຽນ/ເຮັດບໍ່ໄດ້ດີ: ______________________________

ຂ້ອຍມີຄວາມສຸກທີ່ສຸດໃນຫ້ອງຮຽນໃນເວລາ______________________________

ຂ້ອຍບໍ່ມີຄວາມສະບາຍໃຈຢູ່ໃນຫ້ອງຮຽນໃນເວລາ :______________________________

### ກິດຈະກຳເພື່ອປະຕິບັດ: ເວລາເພື່ອແລກປ່ຽນຄວາມຄິດເຫັນ.

ໃຫ້ຈັດເວລາຕ່າງຫາກຈັກ 10 ຫາ 15 ນາທີໃນມື້ໜຶ່ງ ຫຼື ຢ່າງໜ້ອຍໜຶ່ງຄັ້ງຕໍ່ອາທິດ ເພື່ອໃຫ້ນັກຮຽນຂອງທ່ານ ໄດ້ລວມຈຸລວມໜ່ວຍແລກປ່ຽນຄວາມຮູ້ສຶກ, ມີອັນໃດອ່ອນ ແລະ ມີອັນໃດດີທີ່ເກີດຂຶ້ນໃນຊີວິດຂອງເຂົາ. ກຸ່ມໃດໜຶ່ງສາມາດເລືອກ ເພື່ອປ່ຽນຂໍ້ມູນຂ່າວສານທີ່ເຂົາຮູ້ສຶກວ່າມີຄວາມສຳຄັນຮ່ວມກັບຄູສອນ ຫຼື ກັບຫ້ອງຮຽນ.

ກິດຈະກຳແລກປ່ຽນທີ່ຄ້າຍຄືກັນອີກຢ່າງໜຶ່ງ ສາມາດບັນຈຸເອົາການບອກນັກຮຽນໃຫ້ເຮັດການບັນທຶກປະຈຳວັນສ່ວນຕົວ ແລະ ເອົາພາກສ່ວນໃດພາກສ່ວນໜຶ່ງມາແລກປ່ຽນກັບທ່ານ ແລະ ກັບນັກຮຽນຜູ້ອື່ນໆ. ໃນການສິດສອນການຂຽນບົດຄວາມ, ທັດແຕ່ງບອກໃຫ້ນັກຮຽນຂຽນສິ່ງທີ່ເກີດຂຶ້ນໃນຊີວິດຂອງເຂົາເຈົ້າ ນັບທັງສິ່ງທີ່ດີ ແລະ ສິ່ງບໍ່ດີ.

### ກິດຈະກຳເພື່ອປະຕິບັດ: ໃຫ້ຂຽນຕື່ມໃສ່ບ່ອນເປົ່າຫວ່າງ.

ໃຫ້ສ້າງແບບຟອມ ຫຼືແຜ່ນເຈ້ຍທີ່ໃຫ້ມີບ່ອນຂຽນຕື່ມໃສ່ບ່ອນເປົ່າຫວ່າງຄືດັ່ງນີ້:

" ພາຍຫຼັງເລີກໂຮງຮຽນສ່ວນຫຼາຍຂ້ອຍ______________________________

ອາຫານທີ່ຂ້ອຍມັກທີ່ສຸດແມ່ນ____________________________________

ກິດຈະກຳທີ່ຂ້ອຍມັກທີ່ສຸດແມ່ນ___________________________________

ວິຊາທີ່ຂ້ອຍມັກຮຽນທີ່ສຸດຢູ່ໃນໂຮງຮຽນແມ່ນ_________________________

ຂ້ອຍຕ້ອງການຢາກເປັນຄືກັບ_____________________________________

ຂ້ອຍຢາກເປັນ______________________ເມື່ອເວລາຂ້ອຍຮຽນຈົບຈາກໂຮງຮຽນແລ້ວ ".

ຢູ່ໃນຫ້ອງຮຽນບ່ອນທີ່ມີນັກຮຽນໃໝ່ຈຳນວນຫຼາຍ, ທ່ານສາມາດໃຊ້ກິດຈະກຳນີ້ໃນຕອນເລີ່ມຕົ້ນສົກຮຽນ ຊຶ່ງເປັນໂອກາດເຮັດໃຫ້ນັກຮຽນໄດ້ຮູ້ຊຶ່ງກັນ ແລະ ກັນ,ໂດຍສະເພາະຢູ່ໃນຫ້ອງຮຽນທີ່ມີນັກຮຽນມາຈາກພື້ນເພ/ພື້ນຖານ ແລະ ຄວາມສາມາດແຕກຕ່າງກັນ. ໃຫ້ທ່ານຂີດຖັນເພີ່ມເຕີມໃສ່ທາງກ້ຳຂວາຂອງໃບເຈ້ຍທີ່ມີຂໍ້ມູນນີ້ ແຕ່ປະໃຫ້ມັນເປົ່າວ່າງໄວ້. ພາຍຫຼັງນັກຮຽນຂຽນຕື່ມໃສ່ບ່ອນເປົ່າຫວ່າງແລ້ວ ໃຫ້ເຂົາເຈົ້າຊອກຫານັກຮຽນຜູ້ອື່ນໆ ທີ່ມີຄຳຕອບແບບດຽວກັນແລ້ວຂຽນຊື່ນັກຮຽນແຕ່ລະຄົນໃສ່ຖັນທີ່ຂີດໄວ້.

## 5. ເຂົ້າໃຈສະພາບຄວາມເປັນຈິງ(ບໍລິບົດ) ການດຳລົງຊີວິດຂອງນັກຮຽນ

ບໍ່ແມ່ນແຕ່ພວກເຮົາເທົ່ານັ້ນທີ່ເປັນຜູ້ມີອິດທິພົນຕໍ່ການປະພຶດຂອງເດັກ. ເດັກນັກຮຽນແຕ່ລະຄົນ ແມ່ນຜົນຜະລິດຂອງສະພາບແວດລ້ອມຂອງການຮຽນຮູ້ທັງໝົດຂອງເຂົາ. ສະພາບແວດລ້ອມນີ້ ບໍ່ແມ່ນຈະລວມເອົາແຕ່ສະເພາະຫ້ອງຮຽນ ແລະ ໂຮງຮຽນຂອງທ່ານເທົ່ານັ້ນ, ແຕ່ຍັງກວມລວມເອົາຕົວເດັກນັກຮຽນ, ຄອບຄົວຂອງເດັກນັກຮຽນ ແລະ ຊຸມຊົນຂອງເຂົາອີກ. ຕົວຢ່າງ: ທ່ານເຄີຍໄດ້ຍິນປະໂຫຍກເຫຼົ່ານີ້ເລື້ອຍໆບໍ່ "ລາວເຮັດຄືກັນກັບພໍ່ຂອງລາວ" ຫຼື "ລາວເຮັດຄືກັນກັບ

ອ້າຍຂອງລາວ"?. ຄວາມເຂົ້າໃຈສະພາບແວດລ້ອມອັນກວ້າງຂວາງນີ້ ອາດເປັນສິ່ງທ້າທາຍໃໝ່ສຳລັບພວກທ່ານຫຼາຍໆຄົນ, ພິເສດສຳລັບຜູ້ທີ່ເຄີຍເຮັດວຽກແຕ່ຢູ່ພາຍໃນຂອບເຂດຈຳກັດຂອງຫ້ອງຮຽນ ແລະໂຮງຮຽນເທົ່ານັ້ນ.

ວິທີປະພຶດ ຫຼື ພຶດຕິກຳຂອງນັກຮຽນຢູ່ໃນຫ້ອງຮຽນຂອງທ່ານອາດຈະສະທ້ອນໃຫ້ເຫັນຂໍ້ຈຳກັດຢູ່ໃນຕົວເຂົາເອງ, ຢູ່ໃນຊີວິດຄອບຄົວ ຫຼື ການຮັບມືກັບສະພາວະທີ່ມີຄວາມຫຍຸ້ງຍາກທີ່ຢູ່ໃນ ຫຼື ນອກໂຮງຮຽນ. ພວກເຮົາມີຄວາມຈຳເປັນທີ່ຕ້ອງມີຄວາມລະອຽດຖີ່ຖ້ວນ ໃນການຕີຄວາມໝາຍພຶດຕິກຳຂອງເດັກນັກຮຽນ. ສິ່ງທີ່ພວກເຮົາຄິດວ່າມັນແມ່ນການປະພຶດທີ່ບໍ່ເໝາະສົມ ອາດຈະບໍ່ແມ່ນບັນຫາກ່ຽວກັບລະບຽບວິໄນຈັກໜ້ອຍເລີຍ; ຕົວຢ່າງ, ເດັກອາດຊອກຫາຄວາມສົນໃຈພິເສດຈາກທ່ານ ຍ້ອນວ່າເຂົາບໍ່ມີສິ່ງນັ້ນຢູ່ໃນເຮືອນຂອງເຂົາ. ມັນອາດເປັນປະຕິກິລິຍາ ຫຼື ຂໍ້ຈຳກັດຂອງເດັກຕໍ່ກັບບັນຫາທີ່ມີຢູ່ເຮືອນ ຫຼື ຢູ່ບ່ອນອື່ນທີ່ນຳມາສູ່ຫ້ອງຮຽນກໍໄດ້. ດັ່ງນັ້ນ ມັນບໍ່ແມ່ນການປະພຶດຂອງເດັກທີ່ເປັນບັນຫາ, ມັນແມ່ນສະພາບການທີ່ເດັກໄດ້ຕົກຢູ່ໃນທີ່ນັ້ນ. ຂໍ້ຈຳກັດ/ຄວາມສິ້ນຫວັງ ທີ່ເຕີມເຊື້ອເພີງດ້ວຍຕົ້ນເຫດຂອງມັນ, ອາດຈະຊ່ອຍອະທິບາຍການປ່ຽນແປງການປະພຶດທີ່ເກີດຂຶ້ນຢ່າງກະທັນຫັນ ຢູ່ໃນນັກຮຽນຜູ້ທີ່ບໍ່ເຄີຍປະພຶດຜິດ. ໃນກໍລະນີໃດກໍຕາມ ຖ້າພວກເຮົາໃສ່ວິໄນເດັກຍ້ອນການປະພຶດທີ່ບໍ່ເໝາະສົມຂອງເຂົາເຈົ້າ, ພວກເຮົາເຮັດ "ວຽກຜິດພາດ" ພວກເຮົາອາດໂທດເດັກຍ້ອນສິ່ງໃດສິ່ງໜຶ່ງ ທີ່ບໍ່ແມ່ນຄວາມຜິດຂອງເຂົາ, ແລະ ພວກເຮົາອາດຈະຫຼິ້ງຜິດເຮັດໃຫ້ເດັກສັບສົນຫຼາຍຂຶ້ນ. ໃນກໍລະນີນີ້ ການລົງໂທດຈະບໍ່ໄດ້ຜົນ ແລະ ມັນອາດມີຜົນເສຍຫາຍໃຫ້ແກ່ການພັດທະນາດ້ານການປະພຶດຂອງເດັກ.

ເພື່ອຊີ້ແນະການປະພຶດຂອງເດັກໄປໃນທາງບວກ ພວກເຮົາມີຄວາມຈຳເປັນທີ່ຈະຕ້ອງເຂົ້າໃຈສະພາບແວດລ້ອມຂອງການຮຽນຮູ້ຂອງເຂົາເຈົ້າທັງໝົດ ແລະ ປັດໄຈທີ່ອາດມີອິດທິພົນຕໍ່ພຶດຕິກຳຂອງ ເຂົາໃນລະດັບບຸກຄົນ, ລະດັບຄອບຄົວ ແລະລະດັບຊຸມຊົນ. ເມື່ອເວລາເດັກມີການປະພຶດຜິດ ພວກເຮົາຈຳເປັນຕ້ອງຄຳນຶງເຖິງປັດໄຈເຫຼົ່ານີ້ ກໍ່ຄືເອົາໃຈໃສ່ເປົ້າໝາຍ 4 ຢ່າງທີ່ໄດ້ກ່າວມາກ່ອນໜ້ານີ້.

ພວກເຮົາຈຳເປັນຕ້ອງຖາມຕົວເອງວ່າ ເຂົາເຈົ້າມີຄວາມຫຍຸ້ງຍາກກັບສະພາບຫ້ອງຮຽນ ຫຼື ມີສິ່ງໃດສິ່ງໜຶ່ງຢູ່ນອກຫ້ອງຮຽນ ແລະ ນອກໂຮງຮຽນ ທີ່ອາດເປັນສາເຫດໃຫ້ເກີດບັນຫາ. ສຸດທ້າຍການແກ້ໄຂບັນຫາເຫຼົ່ານີ້ ບໍ່ແມ່ນຂຶ້ນກັບພວກເຮົາພຽງຜູ້ດຽວເທົ່ານັ້ນ. ພວກເຮົາຈຳເປັນຕ້ອງມີການຮ່ວມມືອັນສະໜິດແໜ້ນກັບພໍ່ແມ່ເດັກ, ຜູ້ນຳຊຸມຊົນ ແລະອຳນາດການປົກຄອງທ້ອງຖິ່ນເພື່ອກຳນົດ ແລະແກ້ໄຂສະພາບການທີ່ຫຍຸ້ງຍາກທີ່ສຸດອັນໃດໜຶ່ງທີ່ເດັກກຳລັງປະເຊີນຢູ່ ແລະການປະພຶດທີ່ບໍ່ເໝາະສົມຂອງເຂົາກຳລັງ ມີຜົນສະທ້ອນ.

ຕໍ່ໄປນີ້ແມ່ນບັນດາປັດໄຈຕ່າງໆ ທີ່ອາດກະທົບຕໍ່ການຢາກມາໂຮງຮຽນ ຫຼື ຜົນສຳເລັດຂອງນັກຮຽນ ຫຼື ການປະພຶດຂອງນັກຮຽນ ພ້ອມທັງບາງມາດຕະການ ເພື່ອແກ້ບັນຫາ ໂດຍສະເພາະການມີສ່ວນຮ່ວມຂອງຄອບຄົວ ແລະ ຊຸມຊົນ. ທ່ານຍັງສາມາດສົນທະນາກັບເພື່ອນກ່ຽວກັບປັດໄຈອື່ນໆອີກໃນໂຮງຮຽນທ້ອງຖິ່ນຂອງທ່ານ ພ້ອມດ້ວຍມາດຕະການແກ້ໄຂ.

## 5.1 ເດັກນັກຮຽນ

***ຈຳເປັນຕ້ອງເຮັດວຽກ.*** ບັນດາເດັກທີ່ມີຄວາມຮູ້ສຶກວ່າເຂົາຄວນຢູ່ບ້ານ ຫຼື ຢູ່ບ່ອນອື່ນ ເພື່ອຊ່ອຍເຫຼືອຄອບຄົວຫາລ້ຽງຊີບ ອາດບໍ່ມີຄວາມຕ້ອງການຢູ່ໃນຫ້ອງຮຽນ ແລະ ອາດໃຊ້ການປະພຶດທີ່ບໍ່ເໝາະສົມເປັນເຄື່ອງມືໃນການຫາທາງໜີໂຮງຮຽນ. ສິ່ງທີ່ເຂົາສົນໃຈແມ່ນການໃຫ້ການຊ່ອຍເຫຼືອດ່ວນແກ່ຄອບຄົວ ຂອງເຂົາຫຼາຍກວ່າຈະດູແລການສຶກສາຂອງເຂົາ ເພື່ອແກ້ໄຂບັນຫາເສຖະກິດຄອບຄົວໄລຍະຍາວໃນອະນາຄົດ. ສຳລັບຕໍ່ເດັກກຸ່ມນີ້, ມີຄວາມຈຳເປັນຈະຕ້ອງສະແດງອອກໃຫ້ເຫັນວ່າການຮຽນ ແລະ ການປະພຶດທີ່ດີຂອງເຂົາ ອາດສາມາດປັບປຸງວຽກງານໃນອະນາຄົດຂອງເຂົາເຈົ້າໄດ້ຢ່າງແທ້ຈິງ.ເຂົາເຈົ້າຍັງຕ້ອງໄດ້ຮັບໂອກາດເພື່ອມີລາຍໄດ້ ແລະ ໄດ້ຮໍ່າຮຽນໄປດ້ວຍ, ເຊັ່ນ ມີແຜນງານການເຝິກອົບຮົມທັກສະດ້ານການດຳລົງຊີບຢູ່ພາຍໃນໂຮງຮຽນ ເຊິ່ງຜະລິດພັນທີ່ເຂົາເຈົ້າຜະລິດອອກມານັ້ນ ສາມາດນຳໄປຂາຍໄດ້ ໂດຍສ່ວນກຳໄລເອົາໄປໃຫ້ເດັກ.ຍຸດທະສາດທີ່ດີ ອີກອັນໜຶ່ງ ກໍຄື ເຊີນພໍ່ແມ່ເດັກ ຫຼື ສະມາຊິກຊຸມຊົນຜູ້ທີ່ຄົນເຄົາລົບນັບຖືມີຄວາມຮ ແລະ ທັກສະສະເພາະ ໃດໜຶ່ງໃຫ້ມາເປັນວິທະຍາກອນຢູ່ໃນຫ້ອງຮຽນ. ພວກເພິ່ນສາມາດສອນເດັກກ່ຽວກັບວິຊາສະເພາະຂອງເພິ່ນ ເຊິ່ງຄວາມຮູ້ນັ້ນມັນພົວພັນກັບສິ່ງທີ່ນັກຮຽນກຳລັງຮຽນຢູ່ໃນຫ້ອງຮຽນ ແລະ ມີຄຸນຄ່າ ທາງການສຶກສາຢູ່ໃນໄລຍະຍາວ.

ນອກຈາກນີ້, ເດັກບາງຄົນ ແລະ ເດັກຍິງ ອາດຈະມີວຽກເຮືອນຫຼາຍຢ່າງທີ່ຕ້ອງເຮັດກ່ອນໄປໂຮງຮຽນ ເຊັ່ນ ເອົານ້ອງ, ອະນາໄມເຮືອນຊານ, ເກັບຟືນ, ແຕ່ງກິນ ແລະ ລ້ຽງເກືອສັດ. ສະນັ້ນເຂົາອາດ ຈະມີເວລາໜ້ອຍເພື່ອເຮັດວຽກບ້ານທີ່ຄູໃຫ້, ອາດຈະມາໂຮງຮຽນຊ້າ ແລະ ອາດສະເຫງົານອນໃນຫ້ອງ. ນີ້ບໍ່ແມ່ນບັນຫາການປະພຶດທີ່ບໍ່ເໝາະສົມ, ແຕ່ມັນແມ່ນການ ສະແດງອາການທີ່ບອກເຖິງສະຖານະພາບຂອງຄອບຄົວເຂົາ. ຍ້ອນແນວນັ້ນ, ການປະຕິບັດວິໄນ ຈຶ່ງບໍ່ແກ້ໄຂພຶດຕິກຳຂອງເດັກໄດ້. ການໃຊ້ຍຸດທະສາດອື່ນແທນແມ່ນຈຳເປັນ ເພື່ອພະຍາຍາມທົດລອງໃຫ້ການຊ່ອຍເຫຼືອການເຮັດວຽກຂອງເດັກຢູ່ເຮືອນ ກໍຄືການຮໍ່າຮຽນ ເຊັ່ນ ໃຫ້ຄວາມເອົາໃຈໃສ່ເພີ້ມໃນຊົ່ວໂມງຮຽນ, ໃຫ້ວຽກບ້ານໜ້ອຍໆ ຫຼື ບໍ່ຕ້ອງໃຫ້ ແລະ ຖ້າເປັນໄປໄດ້ໃຫ້ເວລາ ເພື່ອສຳເລັດການຮຽນຮູ້ຢູ່ໂຮງຮຽນເລີຍ, ຊຸກຍູ້ໃຫ້ເດັກຊ່ອຍກັນເພື່ອ ສຳເລັດວຽກທີ່ຄູມອບໝາຍ (ການຮຽນຮູ້ແບບເພື່ອນຊ່ອຍເພື່ອນ) ແລະ ສອນເພີ້ມອາດຈະເຮັດຢູ່ເຮືອນກໍໄດ້.

***ຄວາມເຈັບປ່ວຍແລະຄວາມຫິວ.*** ເດັກຈະຮໍ່າຮຽນບໍ່ໄດ້ດີ ຖ້າຫາກເຂົາປ່ວຍໄຂ້, ໂຫຍຫິວ ຫຼື ເປັນໂລກຂາດສານອາຫານ. ໂດຍປົກກະຕິເດັກຈຳນວນນີ້ຈະມາຈາກຄອບຄົວທີ່ທຸກຍາກແສນເຂັນ ເປັນຄອບຄົວທີ່ຕໍ່ສູ້ກັບຊີວິດປະຈຳວັນພໍພຽງແຕ່ໃຫ້ມີຊີວິດຢູ່ລອດ. ຄວາມເຈັບປ່ວຍ ແລະ ຄວາມຫິວຈະບັ່ນທອນຄວາມຕັ້ງໃຈຂອງນັກຮຽນໃຫ້ຫຼຸດລົງ ແລະ ມີຜົນກະທົບຢ່າງແຮງຕໍ່ລະດັບຜົນສຳເລັດຂອງການຮຽນຮູ້. ຜົນສຳເລັດລະດັບຕໍ່າ ສາມາດພາໃຫ້ມີຄວາມຮູ້ສຶກນັບຖືມດ້ອຍ ແລະ ຄວາມຫຼົ້ມເຫຼວ ເຊິ່ງສາມາດນຳໄປສູ່ການປະພຶດທີ່ບໍ່ເໝາະສົມ. ການກະທຳທີ່ຈຳເປັນ ເພື່ອຊ່ອຍເຫຼືອເດັກນ້ອຍເຫຼົ່ານີ້ ຈະຢູ່ນອກເໜືອຂອບເຂດໂຮງຮຽນຂອງທ່ານ, ກ້າວຈາກໂຮງຮຽນຂອງທ່ານ

ໄປຫາຊຸມຊົນ. ການກະທຳອັນທຳອິດ ແມ່ນສ້າງຕັ້ງໂຄງການອາຫານຢູ່ໃນໂຮງຮຽນ ໂດຍສະໜອງເຂົ້າສວາຍ ຫຼື ອາຫານເບົາທີ່ມີຄຸນຄ່າທາງໂພຊະນາການ ໃຫ້ແກ່ນັກຮຽນເປັນປົກກະຕິ. ອັນນີ້ອາດໃຫ້ຜົນປະໂຫຍດ ໂດຍສະເພາະແກ່ນັກຮຽນຍິງ. ກຸ່ມແມ່ຍິງໃນຊຸມຊົນ ຫຼື ອົງການຈັດຕັ້ງອື່ນໆ ຂອງທ້ອງຖິ່ນສາມາດກະກຽມອາຫານສວາຍ ຫຼື ອາຫານເບົາເຫຼົ່ານີ້. ພ້ອມກັນນີ້ພວກເຮົາຈຳເປັນຕ້ອງເຮັດວຽກຮ່ວມກັບພະນັກງານສາທາລະນະສຸກປະຈຳທ້ອງຖິ່ນ ເພື່ອສ້າງແຜນງານກວດສຸຂະພາບ , ກວດແຂ້ວ ແລະ ໂພຊະນາການ ແລະ ໂຄງການປິ່ນປົວ.

***ການຢ້ານກົວຄວາມຮຸນແຮງ:*** ການຢ້ານກົວຄວາມຮຸນແຮງໃນເວລາໄປໂຮງຮຽນ ແລະ ກັບມາບ້ານ ກໍ່ຄືຢູ່ໃນໂຮງຮຽນ ແລະ ໃນຫ້ອງຮຽນ (ໃນຮູບແບບຂອງການລົງໂທດທາງດ້ານຮ່າງກາຍ ຫຼື ການຂົ່ມເຫັງ ລັງແກ) ອາດເປັນສາເຫດໃຫ້ນັກຮຽນຈຳນວນໜຶ່ງຖອນຕົວ ແລະ ບໍ່ເຂົ້າຫ້ອງຮຽນ. ມັນຍັງພາໃຫ້ເກີດຄວາມເສຍຫາຍຢ່າງໜັກ ຕໍ່ຄວາມພາກພູມໃຈໃນຕົນເອງຂອງເຂົາ ແລະ ຍົກລະດັບຄວາມຮູ້ສຶກນັບຖືຕົນເອງໃຫ້ນ້ອຍລົງ. ທ່ານຈະກະທຳສິ່ງໃດແດ່ ເພື່ອໃຫ້ເຂົ້າໃຈສະພາບໂຮງຮຽນຂອງທ່ານ ໃຫ້ດີຂຶ້ນຕື່ມ? ໃຫ້ຊ່ອຍເດັກ ແລະ ສະມາຊິກຊຸມຊົນສ້າງແຜນທີ່ ເພື່ອໃຫ້ເຫັນວ່າບ່ອນໃດ ຫຼື ພື້ນທີ່ໃດໃນບໍລິເວນໂຮງຮຽນມັກເກີດຄວາມຮຸນແຮງລວມທັງການໄປມາໂຮງຮຽນ. ທ່ານຍັງສາມາດເຮັດວຽກຮ່ວມກັບຜູ້ນຳຊຸມຊົນ ແລະ ພໍ່ແມ່ຜູ້ປົກຄອງເພື່ອຈັດຕັ້ງກິດຈະກຳ "ການເຝົ້າລະວັງເດັກ" ເຊິ່ງເປັນບ່ອນທີ່ຄູ, ພໍ່ແມ່ຜູ້ປົກຄອງ ຫຼື ສະມາຊິກຊຸມຊົນທີ່ຮັບຜິດຊອບເຝົ້າລະວັງເບິ່ງພື້ນທີ່ ທີ່ມັກເກີດມີຄວາມຮຸນແຮງສູງທັງຢູ່ພາຍໃນ ແລະ ນອກໂຮງຮຽນ. ໃນນີ້ອາດລວມມີການຄຸ້ມກັນນັກຮຽນ ໃຫ້ໄປເຖິງເຂດປອດໄພໃນເມື່ອມີຄວາມຈຳເປັນ. ພ້ອມກັນນັ້ນໂຮງຮຽນຍັງມີຄວາມຈຳເປັນຕ້ອງມີນະໂຍບາຍທີ່ໝັ້ນຄົງ ແລະ ປະຕິບັດໄດ້ເພື່ອຕໍ່ຕ້ານຄວາມຮຸນແຮງຕໍ່ເດັກລວມທັງການລົງໂທດທາງດ້ານຮ່າງກາຍ ແລະ ມີຫຼັກເກນຂອງການປະຕິບັດທີ່ເໝາະສົມ ສຳລັບຄູສອນ ແລະ ພະນັກງານຂອງໂຮງຮຽນ.

***ຄວາມພິການ ແລະ ຄວາມຕ້ອງການພິເສດ.*** ເດັກທີ່ພິການ ຫຼື ເດັກທີ່ມີຄວາມຕ້ອງການພິເສດສ່ວນຫຼາຍຈະບໍ່ໄດ້ເຂົ້າໂຮງຮຽນ, ໂດຍສະເພາະເມື່ອໂຮງຮຽນ ແລະ ລະບົບການສຶກສາຂອງພວກເຮົາບໍ່ມີນະໂຍບາຍ ຫຼື ໂຄງການເພື່ອຮັບເອົາເດັກພິການທາງດ້ານຮ່າງກາຍ, ອາລົມ ຫຼືມີບັນຫາດ້ານການຮຽນຮູ້. ເຖິງຢ່າງໃດກໍດີ, ກໍມີນັກຮຽນເຫຼົ່ານີ້ຈຳນວນໜຶ່ງຢູ່ໃນໂຮງຮຽນ ແລະ ອາດຈະຮຽນຢູ່ໃນຫ້ອງຮຽນຂອງທ່ານກໍໄດ້. ພວກເຂົາເຫຼົ່ານີ້ ອາດເປັນຜູ້ທີ່ມີຄວາມພິການ "ລີ້ຊ່ອນຢູ່" ເຊິ່ງບໍ່ສັງເກດເຫັນໄດ້ ເຊັ່ນ ພວກທີ່ມີບັນຫາທາງດ້ານການເຫັນ , ການໄດ້ຍິນ ແລະ ຜູ້ທີ່ມີຄວາມຜິດປົກກະຕິທາງສະໝອງ ເຊັ່ນ ADHD ດັ່ງທີ່ກ່າວ ເຣມອນ. ຖ້າຫາກຄວາມບົກຜ່ອງນີ້ບໍ່ສາມາດສັງເກດເຫັນ ຫຼື ຄົ້ນພົບພຶດຕິກຳຂອງເດັກ ເຊັ່ນ ການບໍ່ເອົາໃຈໃສ່ຮ່ຳຮຽນ, ຜົນການຮ່ຳຮຽນຕ່ຳ ຫຼື ມີການເຄື່ອນໄຫວເກີນປົກກະຕິຢູ່ໃນຫ້ອງ, ບາງທີອາດຈະກຳນົດຜິດພາດວ່າເປັນການປະພຶດທີ່ບໍ່ເໝາະສົມ. ສະນັ້ນທາງໂຮງຮຽນມີຄວາມຈຳເປັນ ຕ້ອງມີແຜນງານກວດເຊັກ

ເພື່ອບົ່ງມະຕິ/ກຳນົດສະພາວະເຫຼົ່ານີ້ແຕ່ຫົວທີ ແລະ ກ່າວເຖິງການຊ່ອຍເຫຼືອນັກຮຽນ ເພື່ອຈະເຮັດໃຫ້ເຂົາສາມາດຮຽນໄດ້ຢ່າງເຕັມເມັດເຕັມໜ່ວຍ ແລະ ມີສ່ວນຮ່ວມຢູ່ໃນຫ້ອງຮຽນ. ນັກຮຽນຂອງທ່ານ ເອງກໍສາມາດເຮັດການທົດສອບການໄດ້ເຫັນ ແລະ ໄດ້ຍິນແບບງ່າຍໆ ໂດຍເຂົາເອງ.

## 5.2 ຄອບຄົວ ແລະ ຊຸມຊົນ

ຄອບຄົວ ແລະ ຊຸມຊົນຄວນເປັນຜູ້ທຳອິດເພື່ອປົກປ້ອງ ແລະ ເບິ່ງແຍງດູແລເດັກ. ເພື່ອຈະເຂົ້າໃຈບັນຫາທີ່ເດັກອາດພວມປະເຊີນຢູ່ ແລະ ເຮັດສິ່ງໃດສິ່ງໜຶ່ງ ເພື່ອແກ້ໄຂບັນຫາເຫຼົ່ານີ້ແບບຍືນຍົງ. ພາຫະນະເພື່ອປ້ອງກັນການປະພຶດທີ່ບໍ່ເໝາະສົມຂອງເດັກ ທີ່ມີປະສິດທິຜົນທີ່ສຸດ ແມ່ນຕ້ອງຜ່ານຄອບຄົວ ແລະ ຊຸມຊົນທີ່ມີຄວາມເຂັ້ມແຂງ, ໃຫ້ການເບິ່ງແຍງລ້ຽງດູ ແລະ ຜະລິດຜົນດີ. ຢູ່ຂ້າງລຸ່ມນີ້ ມີຂໍ້ພິຈາລະນາສຳຄັນຈຳນວນໜຶ່ງ ທີ່ຕິດພັນກັບຄອບຄົວ ແລະ ຊຸມຊົນທີ່ອາດສາມາດກຳນົດໃຫ້ນັກຮຽນຂອງ ທ່ານ ໄປເຂົ້າໂຮງຮຽນ ຫຼື ມີວິທີປະພຶດຢູ່ພາຍໃນໂຮງຮຽນ. ***ຍັງມີປັດໄຈທາງດ້ານຄອບຄົວ ຫຼື ຊຸມຊົນແນວອື່ນອີກບໍ່ຢູ່ໃນຊຸມຊົນ,ສະຖາບັນ,ປະເທດຫຼືໃນວັດທະນະທຳຂອງທ່ານທີ່ອາດສາມາດມີອິດທິພົນກະທົບຕໍ່ການເຂົ້າຮຽນ ແລະ ຕໍ່ການປະພຶດຂອງເດັກຢູ່ໃນໂຮງຮຽນ.***

***ຄວາມທຸກຍາກ ແລະ ຄຸນຄ່າຂອງການສຶກສາໃນພາກປະຕິບັດຕົວຈິງ.*** ປັດໄຈທີ່ພົວພັນໂດຍກົງກັບ“ຄວາມຈຳເປັນຕ້ອງເຮັດວຽກ ”ດັ່ງທີ່ກ່າວມາຂ້າງເທິງນັ້ນ, ຄວາມທຸກຍາກມັກຈະມີອິດທິພົນກະທົບຕໍ່ການຮຳຮຽນ ແລະ ການປະພຶດຂອງນັກຮຽນຢູ່ໃນໂຮງຮຽນສະເໝີ. ຍ້ອນວ່າພາລະແບກຫາບທາງດ້ານການເງິນຂອງເຂົາເຈົ້າ, ພໍ່ແມ່ທີ່ທຸກຍາກມັກຈະຖືກກົດດັນ ໃຫ້ສະໜອງຄວາມຈຳເປັນທີ່ພື້ນຖານຂອງຊີວິດ. ດັ່ງນັ້ນ, ເດັກຈຳຕ້ອງຊ່ອຍເຫຼືອພໍ່ແມ່ ເພື່ອຊອກຫາລາຍໄດ້ໃຫ້ແກ່ຄອບຄົວ ເພື່ອໃຊ້ຈ່າຍໃນການສຶກສາແລະຊີວິດໃນອະນາຄົດຂອງເຂົາ. ສິ່ງດັ່ງກ່າວຈະເກີດຂຶ້ນ, ໂດຍສະເພາະ ເມື່ອເວລາຄອບຄົວບໍ່ຮູ້ສຶກວ່າການສຶກສາມີຄວາມສຳຄັນສຳລັບຊີວິດປະຈຳວັນຂອງເຂົາເຈົ້າ. ດັ່ງນັ້ນ, ເຂົາຈຶ່ງບໍ່ເຂົ້າໃຈວ່າ ເປັນຫຍັງເດັກຈຶ່ງຄວນໄປໂຮງຮຽນ ແລະກໍ່ບໍ່ສົນໃຈວ່າລູກຫຼານຂອງຕົນຈະປະພຶດແນວໃດຢູ່ໃນໂຮງຮຽນ (ຫຼືບາງຄັ້ງກໍປະພຶດຢູ່ໃນຄອບຄົວເໝືອນກັນ). ພໍ່ແມ່ຜູ້ປົກຄອງອາດມີຄວາມຮູ້ສຶກວ່າໂຮງຮຽນໃນທ້ອງຖິ່ນ ບໍ່ສາມາດສະໜອງການສຶກສາທີ່ມີຄຸນນະພາບດີ ແລະ ທັກສະທີ່ລູກຫຼານຂອງເຂົາຈະຮຽນ ເພື່ອໃຫ້ເປັນອາຊີບທີ່ແນ່ນອນໃດໜຶ່ງ ແມ່ນມີຄຸນຄ່າກວ່າທັກສະທີ່ເຂົາຈະຮຽນຢູ່ໃນຫ້ອງຮຽນ.

ເມື່ອຕົ້ນກຳເນີດຂອງຄວາມທຸກຍາກແມ່ນເລື່ອງເສດຖະກິດ, ຍຸດທະສາດທີ່ມີປະສິດທິຜົນເພື່ອເຂົ້າເຖິງເດັກຜູ້ທຸກຍາກ, ນຳເອົາເຂົາເຈົ້າມາເຂົ້າໂຮງຮຽນແລ້ວ ຊ່ອຍເຂົາເຈົ້າໃຫ້ໄດ້ຮຽນຢ່າງທັນການ ນັ້ນສ່ວນໃຫຍ່ຈະຕ້ອງອີງໃສ່ສິ່ງກະຕຸ້ນທາງດ້ານເສດຖະກິດໃນໄລຍະສັ້ນ ແລະ ໄລຍະຍາວສຳລັບເດັກ ແລະ ຄອບຄົວຂອງເຂົາ.

***ການເບິ່ງແຍງດູແລບໍ່ພຽງພໍ.*** ຍ້ອນວ່າຄວາມຕ້ອງການຊອກຫາເງິນ, ພໍ່ແມ່ຈຳນວນໜຶ່ງອາດມີເວລາໜ້ອຍເພື່ອດູແລລູກຫຼານຂອງຕົນ. ບາງຄັ້ງເຂົາເຈົ້າອາດຈຳເປັນປະເຮືອນຊານໄປຊົ່ວຄາວ ຫຼື ໃນໄລຍະຍາວ. ຜົນສຸດທ້າຍ ເຂົາເຈົ້າອາດເອົາເດັກຝາກໄວ້ຢູ່ໃນຄວາມດູແລຂອງພໍ່ເຖົ້າແມ່ເຖົ້າ ຫຼື ຜູ້ອື່ນໆ. ບັນດາພໍ່ແມ່ ຫຼື ຜູ້ເບິ່ງແຍງເຫຼົ່ານີ້ ອາດບໍ່ມີຄວາມຮູ້ປະສົບການ ຫຼື ຊັບພະຍາກອນທີ່ພຽງພໍ ເພື່ອສະໜອງແກ່ການລ້ຽງດູເດັກຢ່າງເໝາະສົມ ເຊິ່ງອາດພາໃຫ້ເຂົາເຈັບໄຂ້ໄດ້ປ່ວຍ ແລະ ອຶດຫິວ. ພວກເພິ່ນອາດບໍ່ເຫັນຄຸນຄ່າຂອງການສຶກສາ ເມື່ອຂາດເຂີນເງິນຄຳຢ່າງໜັກໜ່ວງ ແລະ ພວກເພິ່ນອາດບໍ່ສົນວ່າເດັກຈະປະພຶດແນວໃດ ຢູ່ໃນຫ້ອງຮຽນອີກດ້ວຍ. ມີວິທີການອັນໃດແດ່ທີ່ສາມາດນຳມາປະຕິບັດ ເພື່ອຊ່ວຍເຫຼືອເດັກເຫຼົ່ານີ້ໄດ້?.

- ໃນໂອກາດວັນສຳຄັນ ໃຫ້ເຊີນເອົາພໍ່ແມ່ເດັກ ແລະ ຜູ້ດູແລເດັກຄົນອື່ນໆ ມາຢ້ຽມຢາມໂຮງຮຽນ. ສະແດງຜົນງານຂອງນັກຮຽນໃຫ້ເຂົາເຈົ້າໄດ້ເຫັນ, ໃຫ້ການໂອ້ລົມແບບເປັນກັນເອງບໍ່ເປັນທາງການ ຫຼື ນຳສະເໜີການຮຽນຮູ້ແບບມີສ່ວນຮ່ວມກ່ຽວກັບການປັບປຸງສຸຂະພາບ ແລະ ການປະ ພຶດ ໂດຍຜ່ານການລ້ຽງດູທີ່ດີ.
- ໃຫ້ເຊີນເອົາພໍ່ແມ່ເດັກ ແລະ ຜູ້ດູແລເດັກທີ່ມີຄວາມຮູ້ພິເສດມາ ເວົ້າກ່ຽວກັບທັກສະຂອງເຂົາ ກັບນັກຮຽນຢູ່ໃນຫ້ອງຂອງທ່ານ ເພື່ອໃຫ້ເຂົາເຈົ້າສາມາດຮຽນຮູ້ໄດ້ວ່າ ຄວາມຮູ້ຂອງເຂົາເຈົ້າມີຄຸນຄ່າສຳລັບເດັກເຊັ່ນດຽວກັນ.
- ຊຸກຍູ້ໃຫ້ມີກອງປະຊຸມ "ຄູສອນ-ພໍ່ແມ່ເດັກ/ຜູ້ດູແລເດັກ" ເປັນປະຈຳ ເພື່ອສົນທະນາເລື່ອງຄວາມກ້າວໜ້າໃນການຮຽນຂອງນັກຮຽນ ແລະ ການເບິ່ງແຍງດູແລເດັກທີ່ດີນັ້ນ ສາມາດປັບປຸງການຮຽນຮູ້, ຄວາມພາກພູມໃຈໃນຕົນເອງ ແລະ ພຶດຕິກຳຂອງເດັກ.
- ຊອກຫາອຸປະກອນລ້ຽງເດັກຈາກອົງການຈັດຕັ້ງລັດຖະບານ ແລະ ຈາກອົງການທີ່ບໍ່ສັງກັດລັດ, ພິເສດແມ່ນຈາກອົງການທີ່ເຮັດວຽກໃນເລື່ອງສຸຂະພາບ ແລະ ໂພຊະນາການ. ນຳໃຊ້ອຸປະກອນ ເຫຼົ່ານັ້ນ ຢູ່ໃນໂຄງການສຸຂະພາບໃນໂຮງຮຽນ ຫຼື ໂຄງການສຶກສາຊີວິດໃນຄອບຄົວຮ່ວມກັບເດັກ. ໃຫ້ເດັກເອົາອຸປະກອນເຫຼົ່ານັ້ນເມືອເຮືອນ ເພື່ອອ່ານໃຫ້ສະມາຊິກໃນຄອບຄົວຂອງເຂົາຟັງ.
- ສ້າງແຜນງານການເຝິກອົບຮົມທັກສະການລ້ຽງດູເດັກ ເຊິ່ງ ໂຮງຮຽນ ແລະ ອົງກອນໃນທ້ອງຖິ່ນສາມາດຊ່ວຍເຫຼືອພໍ່ແມ່ ແລະ ຜູ້ດູແລເດັກຄົນອື່ນໆ ເພື່ອປັບປຸງພາກປະຕິບັດການລ້ຽງດູ ແລະ ການດູແລເດັກ.
- ສ້າງສາຍພົວພັນຮ່ວມມືກັບອົງການສະຫວັດດີການສັງຄົມໃນທ້ອງຖິ່ນ ແລະ ເດັກຜູ້ທີ່ຢູ່ໃນຄອບຄົວທີ່ມີຄວາມຫຍຸ້ງຍາກພິເສດ.

***ຄອບຄົວ ແລະ ຊຸມຊົນ: ຍຸດທະສາດຈາກປະເທດໄທ.***

ຢູ່ໃນປະເທດໄທ, ໂຮງຮຽນເພື່ອນເດັກກຳລັງນຳໃຊ້ຂໍ້ມູນຂ່າວສານກ່ຽວກັບຜົນສຳເລັດທາງດ້ານການຮຽນຮູ້ຂອງນັກຮຽນ ແລະ ຄວາມເປັນມາຂອງຄອບຄົວນັກຮຽນ ເພື່ອກຳນົດເດັກຜູ້ທີ່ຮຽນ

ບໍ່ໄດ້ດີ, ຂາດຮຽນເລື້ອຍໆ, ບໍ່ມີຄວາມສົນໃຈໃນການຮຽນ, ແລະ ມີແນວໂນ້ມທີ່ຈະປະລະການຮຽນ. ສ່ວນຫຼາຍ ແມ່ນຍ້ອນຄອບຄົວມີເງິນໜ້ອຍ ແລະ ເຫັນການໃຊ້ແຮງງານລູກຫລານມີຄຸນຄ່າຫລາຍກວ່າຄຸນຄ່າຂອງການສຶກສາ. ເດັກນັກຮຽນເຫຼົ່ານີ້ໄດ້ຮັບບູລິມະສິດ ໃນການເຝິກອົບຮົມທັກສະເພື່ອການດໍາລົງຊີວິດ ເຊັ່ນ ຕໍ່າຜ້າໄໝ ແລະ ຜ້າຝ້າຍ, ຖັກແສ່ວ, ຊ່າງໄມ້, ເຮັດການຜະລິດດ້ານກະສິກໍາ, ພິມດີດ, ເຝິກອົບຮົມຄອມພິວເຕີ. ການເຝິກອົບຮົມນີ້ ໄດ້ເພີ່ມລາຍໄດ້ຂອງຄອບຄົວ ໃນເວລາທີ່ນັກຮຽນຮຽນຢູ່ໃນໂຮງຮຽນ ແລະ ໄດ້ໃຫ້ທັດສະນະແກ່ນັກຮຽນ ເຊິ່ງເຂົາເຈົ້າສາມາດນໍາໃຊ້ ຈົນຕະຫລອດຊີວິດຂອງເຂົາເຈົ້າ. ມັນຍັງໄດ້ຍົກລະດັບຄວາມພາກພູມໃຈໃນຕົນເອງ, ຄວາມເຊື່ອໝັ້ນ ແລະ ຄວາມສໍານຶກຂອງຄວາມສໍາເລັດຜົນ. ມີນັກຮຽນເຫຼົ່ານີ້ຈໍານວນໜຶ່ງໄດ້ຮັບລາງວັນລະດັບຊາດ ແລະ ລະດັບພາກພື້ນ ສໍາລັບຜົນງານຂອງເຂົາເຈົ້າ. ຢູ່ໃນໂຮງຮຽນຈໍານວນໜຶ່ງ, ສະມາຊິກຄອບຄົວຂອງນັກຮຽນເຫຼົ່ານີ້ ໄດ້ຮັບໃຊ້ເປັນ "ຄູ" ເພື່ອສິດສອນທັກສະທີ່ມີມາແຕ່ດັ້ງເດີມໃຫ້ແກ່ເດັກ ເຊັ່ນ ການຍ້ອມໄໝ ແລະ ຕໍ່າແບບລາຍພື້ນເມືອງ. ການມີສ່ວນຮ່ວມຄືແນວນີ້ ມັນໄດ້ເພີ່ມຄຸນຄ່າຂອງໂຮງຮຽນຢູ່ໃນສາຍຕາຂອງຜູ້ປົກຄອງນັກຮຽນ ແລະ ສະມາຊິກຊຸມຊົນ ໂດຍຜ່ານການປັບປຸງວິຊາຊີບ ແລະ ເນັ້ນໜັກຄຸນຄ່າຂອງການຮັກສາຮີດຄອງວັດທະນະທໍາທີ່ສໍາຄັນ. ນອກນີ້ມັນຍັງເພີ່ມທະວີການຕິດຕໍ່ສື່ສານ ລະຫວ່າງ ຜູ້ປົກຄອງ ແລະ ເດັກນັກຮຽນ ກ່ຽວກັບວຽກງານ/ການຮຽນ ແລະ ການປະພຶດຂອງນັກຮຽນຢູ່ໃນໂຮງຮຽນ ລວມທັງການສຶກສາຂອງນັກຮຽນຈະນໍາມາໃຫ້ຄອບຄົວໃນອະນາຄົດ. ***ຍຸດທະສາດທີ່ຄ້າຍຄືກັນນີ້ຈະກາຍມາເປັນ ພາກສ່ວນໜຶ່ງ ຂອງຫລັກສູດການຮຽນໃນໂຮງຮຽນຂອງທ່ານ ບໍ່?***

***ຂໍ້ຂັດແຍ່ງ:*** ພໍ່ແມ່ເດັກຈໍານວນໜຶ່ງໄດ້ມີການຜິດຖຽງກັນໃນດ້ານເງິນຄໍາ ຫຼື ບັນຫາອື່ນໆ (ເຊັ່ນ ເປັນຄົນຂີ້ເມົາ ຫຼື ເສບຢາເສບຕິດ ) ອາດຮ້າຍດ່າລູກ ເຊິ່ງພາໃຫ້ເກີດມີການກະທໍາທີ່ຮຸນແຮງ ແລະ ທາລຸນເດັກ ກໍຄືເຮັດໃຫ້ມີຄວາມຮູ້ສຶກມີປົມດ້ອຍຢູ່ໃນຕົວເດັກ. ອັນນີ້ ອາດເຮັດໃຫ້ເດັກບໍ່ໄປໂຮງຮຽນປົກກະຕິ ແລະ ປະພຶດບໍ່ເໝາະສົມ ຫຼື ອາດຊຸກຍູ້ໃຫ້ເດັກໜີອອກຈາກເຮືອນ ແລະ ໂຮງຮຽນໄປ. ໃນໄລຍະທີ່ປະເທດອາຊີ ມີວິກິດການທາງດ້ານເສດຖະກິດ ໃນປີ 1997 ມີເດັກຊາຍຄົນໄທ ຜູ້ໜຶ່ງທີ່ຕົກຢູ່ໃນສະພາບການຜິດຖຽງກັນ ຂອງພໍ່ແມ່ ໃນເລື່ອງຂອງເງິນຄໍາ ແລະຖືກພໍ່ແມ່ຕີ. ການດໍາລົງຊີວິດຢູ່ໃນຄອບຄົວແມ່ນທຸກຍາກຂາດເຂີນ. ອີກບໍ່ດົນລາວກໍເລີ່ມຖອນຕົວອອກຈາກຫ້ອງຮຽນ ແລະ ບໍ່ເຂົ້າມີສ່ວນຮ່ວມໃນຫ້ອງຮຽນອີກ. ລາວບໍ່ຄ່ອຍເຮັດວຽກບ້ານໃຫ້ສໍາເລັດຕາມກໍານົດເວລາ ຫຼື ບໍ່ໄດ້ເຮັດເລີຍ. ແທນທີ່ຈະລົງໂທດເດັກຊາຍຄົນນັ້ນ, ຄູສອນໄດ້ບອກໃຫ້ລາວເລົ່າເຖິງບັນຫາຊີວິດໃນຄອບຄົວ ແລະ ຄວາມຈິງກ່ຽວກັບສະພາບຂອງລາວກໍໄດ້ເຜີຍອອກມາ. ລາວເປີດເຜີຍອອກມາວ່າລາວບໍ່ເຂົ້າໃຈວ່າ ເປັນຫຍັງລາວຈຶ່ງຖືກຕີ, ລາວບໍ່ໄດ້ກ່ຽວຂ້ອງຫຍັງທັງໝົດກັບບັນຫາເງິນຄໍາຂອງຄອບຄົວ. ຫຼັງຈາກນັ້ນ ຄູສອນກໍໄດ້ຍ່າງອອກໄປສັນລະເສີນເດັກຜູ້ນັ້ນ ພ້ອມທັງໃຫ້ໂອກາດແກ່ລາວໄດ້ທໍາຄວາມດີຫລາຍຂຶ້ນ ແລະ ໃຫ້ຄວາມເອົາໃຈໃສ່ລາວ. ບໍ່ວ່າເວລາໃດກໍຕາມ ຖ້າເປັນໄປໄດ້ ຄູສອນໄດ້ຂໍໃຫ້ລາວຊ່ອຍເຫຼືອວຽກໃດໜຶ່ງ ໃນ

ເວລາກ່ອນ ຫຼື ຫຼັງເລີກຮຽນ ເພື່ອຫາວິທີເຮັດໃຫ້ລາວໄດ້ຢູ່ໃນຫ້ອງຮຽນຫຼາຍກວ່າຈະຢູ່ໃນສະພາບແວດລ້ອມຂອງເຮືອນທີ່ວຸ້ນວາຍ. ການປ່ຽນແປງຂອງເດັກໄດ້ເລີ່ມຕົ້ນຂຶ້ນຂ້ອນຂ້າງໄວ ແລະ ເລີ່ມຕົ້ນຮຽນໄດ້ດີຂຶ້ນພາຍຫຼັງທີ່ພໍ່ແມ່ຂອງລາວ ໄດ້ແກ້ໄຂຄວາມແຕກຕ່າງທາງດ້ານແນວຄິດ ແລະ ເຂົາເຈົ້າກໍໄດ້ເຫັນວ່າ ເດັກນັ້ນຮຽນໄດ້ດີໃນໂຮງຮຽນ ແລະ ໃນເວລາຈັດຕັ້ງກອງປະຊຸມລະຫວ່າງພໍ່ແມ່-ຄູ ເຂົາເຈົ້າກໍໄດ້ຍ້ອງຍໍເດັກດັ່ງກ່າວ.

***ການຈຳແນກ:*** ເດັກຜູ້ທີ່ມາຈາກຄອບຄົວທີ່ມີຄວາມແຕກຕ່າງຈາກຊຸມຊົນທາງດ້ານພາສາ, ສາສະໜາ, ຊົນຊັ້ນວັນນະ ແລະ ວັດທະນະທຳ ແລະ ອື່ນໆ ຈະມີຄວາມສ່ຽງໃນການເປັນເປົ້າໝາຍຂອງການຖືກຂົ່ມເຫັງ, ຫົວເລາະເຍາະເຍີ້ຍ, ຫລອກລໍ້ ແລະ ອື່ນໆ. ຄວາມສ່ຽງດັ່ງກ່າວຍັງເກີດຂຶ້ນກັບເດັກທີ່ໄດ້ຮັບຜົນກະທົບຈາກ HIV/AIDS. ທັດສະນະຄະຕິທີ່ເປັນແງ່ລົບ, ມີການຈຳແນກຕໍ່ເດັກເຫຼົ່ານີ້ ອາດຈະເປັນອຸປະສັກທີ່ໃຫຍ່ຫຼວງອັນໜຶ່ງ ໃນການບັນຈຸເດັກກຸ່ມນີ້ ເຂົ້າຮຽນຢູ່ໃນໂຮງຮຽນລວມທັງການທີ່ຈະໃຫ້ໂອກາດເຂົາເຈົ້າໄດ້ມີສ່ວນຮ່ວມຢ່າງສະເໝີພາບ, ຫ້າວຫັນ ແລະມ່ວນຊື່ນຢູ່ໃນຂະບວນການຮໍ່າຮຽນ. ທັດສະນະຄະຕິອັນຫຍໍ້ທໍ້ ສາມາດພົບເຫັນໄດ້ໃນທຸກລະດັບ: ພໍ່ແມ່, ສະມາຊິກຊຸມຊົນ, ໂຮງຮຽນ ແລະ ຄູສອນ, ພະນັກງານລັດ ແລະ ແມ້ແຕ່ຢູ່ໃນໝູ່ນັກຮຽນດ້ອຍໂອກາດດ້ວຍກັນ. ຄວາມຢ້ານກົວ, ຂໍ້ຫ້າມຕ່າງໆ, ຄວາມອາຍ, ການປ່ອຍປະລະເລີຍ ແລະ ຂໍ້ມູນຂ່າວສານທີ່ຜິດພ້ຽນ ແລະ ອື່ນໆ ຈະຊຸກຍູ້ໃຫ້ມີທັດສະນະຄະຕິດ້ານລົບຕໍ່ເດັກກຸ່ມດັ່ງກ່າວ ແລະ ສະພາບຂອງເຂົາ. ເດັກເຫຼົ່ານີ້ອາດຈະພັດທະນາຄວາມພາກພູມໃຈ ໃນຕົນເອງຕໍ່າ, ລີ້ຊ່ອນ ແລະ ຫຼີບຫຼີກສັງຄົມ, ປະພຶດແນວບໍ່ດີຢູ່ໃນຫ້ອງຮຽນ ແລະ ກາຍເປັນສະມາຊິກທີ່ຖືກມອງຂ້າມຈາກຊຸມຊົນ. ສຳລັບເດັກດັ່ງກ່າວ ພວກເຮົາຈຳເປັນຕ້ອງເນັ້ນໜັກພິເສດໃນເລື່ອງຫລຸດຜ່ອນການຈຳແນກ ແລະ ຍອມຮັບເອົາຄຸນຄ່າຂອງຄວາມຫຼາກຫຼາຍ.

- ❖ ໃຫ້ເຮັດວຽກຮ່ວມກັບພໍ່ແມ່ຂອງເດັກ ແລະ ສະມາຊິກຊຸມຊົນ ເພື່ອດັດແກ້ບົດຮຽນ ແລະ ອຸປະກອນການສິດສອນຢູ່ໃນຫ້ອງ ເພື່ອເປັນຕົວແທນໃຫ້ແກ່ວັດທະນະທຳ ແລະ ພາສາຂອງຊຸມຊົນ. ເຮັດຄືແນວນີ້ຈະຊ່ອຍໃຫ້ຮັບປະກັນໄດ້ວ່າຊຸມຊົນຈະຊອກຫາສື່-ອຸປະກອນອັນແທ້ຈິງ ແລະ ເປັນປະໂຫຍດ ແລະ ຈະຊຸກຍູ້ໃຫ້ເດັກທຸກຄົນມາໂຮງຮຽນ ແລະ ຮຽນຮ່ວມແບບຊ່ອຍເຫຼືອກັນ.
- ❖ ໃຫ້ນຳໃຊ້ນິທານທ້ອງຖິ່ນ, ນິທານພື້ນເມືອງ,ເພງແລະ ກາບກອນທີ່ຂຽນຂຶ້ນຢູ່ໃນຫ້ອງຮຽນ
- ❖ ສຳລັບເດັກຊົນເຜົ່າທີ່ທ່ານສອນຢູ່ໃນຫ້ອງຮຽນ, ໃຫ້ເຮັດວຽກຮ່ວມກັບຄູສອນທີ່ຮູ້ພາສາເຜົ່າ ຫຼື ຄູຜູ້ອື່ນທີ່ເວົ້າພາສາເຜົ່າຂອງເດັກໄດ້ (ພາສາຂອງຄອບຄົວເດັກ ຫຼື ພາສາຂອງຊຸມຊົນ) ເພື່ອສ້າງຫຼັກສູດການເຝິກອົບຮົມພາສາລາວເພີ້ມຢ່າງເໝາະສົມ ສຳລັບຫ້ອງຮຽນຂອງທ່ານ.

**ເພື່ອຫລຸດຜ່ອນການຂົ່ມເຫັງກັນພວກທ່ານຈຳເປັນຈະຕ້ອງປະຕິບັດດັ່ງນີ້ ເຊັ່ນ:**

- ດຳເນີນກິດຈະກຳຕ່າງໆເພື່ອຊ່ອຍນັກຮຽນໃຫ້ມີຄວາມຜ່ອນຄາຍ ແລະ ຫຼຸດຜ່ອນຄວາມຕຶງຄຽດ .
- ເພີ່ມທະວີການຮ່ຳຮຽນແບບຊ່ອຍເຫຼືອກັນຢູ່ພາຍໃນຫ້ອງຮຽນ(ເດັກນັກຮຽນຊ່ອຍເຫຼືອເຊິ່ງກັນ ແລະ ກັນໃນການຮຽນ ).
- ປັບປຸງວິທີການສື່ສານທີ່ດີໃຫ້ແກ່ເດັກ ໂດຍໃຫ້ນັກຮຽນທຸກຄົນມີອຳນາດຫຼາຍຂຶ້ນເຊັ່ນ ໃຫ້ເຂົາເຈົ້າສ້າງກົດລະບຽບຂອງຫ້ອງຮຽນ ແລະມີຄວາມຮັບຜິດຊອບຢູ່ໃນຄະນະກຳມະການັກຮຽນ.
- ເພີ່ມຄວາມຮັບຜິດຊອບຢູ່ພາຍໃນຫ້ອງຮຽນ ໂດຍສ້າງຕັ້ງຄະນະກຳມະການ ແລະ ເຮັດວຽກຢ່າງໃກ້ຊິດກັບພໍ່ແມ່ນັກຮຽນ ແລະ ຊຸມຊົນໃນທ້ອງຖິ່ນ.
- ສ້າງຍຸດທະສາດເດັກ ເພື່ອເດັກເພື່ອແກ້ໄຂຄວາມຂັດແຍ່ງ ເຊັ່ນ ການສອນທັກສະການແກ້ໄຂຄວາມຂັດແຍ່ງ ກໍຄື ເລື່ອງການເຈລະຈາ ແລະ ການນັ່ງສະມາທິ .
- ໃຫ້ນັກຮຽນຂອງທ່ານເປັນຜູ້ກຳນົດວ່າ ຈະໃຊ້ມາດຕະການດ້ານວິໄນອັນໃດ ເພື່ອປະຕິບັດຕໍ່ຜູ້ທີ່ຂົ່ມເຫັງຜູ້ອື່ນ.

ຢູ່ພາຍໃນຫຼັກສູດ, ຄູສາມາດນຳໃຊ້ລະຄອນ ຫຼື ລະຄອນຫຸ່ນ ເພື່ອສະແດງໃຫ້ເຫັນການຂົ່ມເຫັງ ແລະ ສາເຫດຂອງມັນ, ລວມທັງການຊອກຫາວິທີການແກ້ໄຂ ເມື່ອມັນເກີດຂຶ້ນຢູ່ພາຍໃນແລະ ນອກໂຮງຮຽນ.ຕົວຢ່າງຄູສອນຢູ່ບ້ານແຫ່ງໜຶ່ງໄດ້ຜະລິດຫຸ່ນ ແລະ ສ້າງເປັນລະຄອນກ້ອມເພື່ອສະແດງໃຫ້ເຫັນຮູບການຕ່າງໆຂອງການຂົ່ມເຫັງດ້ານຜິວພັນ. ຈາກນັ້ນເຂົາເຈົ້າກໍໄດ້ພັດທະນາບາດກ້າຂອງການສະແດງ ເພື່ອຊ່ອຍໃຫ້ເດັກກຳໄດ້ສະຖານະການເຫຼົ່ານີ້.

ການສົນທະນາກ່ຽວກັບປະເດັນບັນຫາທີ່ລະອຽດອ່ອນ ສາມາດນຳໃຊ້ຄຽງຄູ່ກັນໄປກັບນິທານ ຫຼື ສະແດງບົດບາດສົມມຸດ ເພື່ອໃຫ້ເດັກໄດ້ທົດລອງວິທີທີ່ຈະບອກວ່າ “ບໍ່/ຢ່າ” ດ້ວຍຄວາມໝັ້ນໃຈ ກໍ່ຄືຊອກຫາຄຳສັບ/ພາສາທີ່ຖືກຕ້ອງ ເພື່ອໃຊ້ກັບພວກມັກຂົ່ມເຫັງ ແລະ ທາລຸນຜູ້ອື່ນ.

## 6. ການຮຽນຮູ້ກ່ຽວກັບຄອບຄົວຂອງນັກຮຽນ

ຢູ່ໃນຫຼາຍໂຮງຮຽນ ໃນຂົງເຂດອາຊີ ແລະ ປາຊີຟິກ, ຄູສອນໄດ້ສ້າງ**ແຟ້ມຂໍ້ມູນນັກຮຽນ**ໄວ້ ເພື່ອເປັນເຄື່ອງມືສຳລັບຮຽນຮູ້ກ່ຽວກັບຄອບຄົວ ຫຼື ທີ່ມາຂອງນັກຮຽນ. ຄຸນປະໂຫຍດຂອງແຟ້ມຂໍ້ມູນນັກຮຽນແມ່ນ:

- ຊ່ອຍໃຫ້ຄູສອນຮູ້ຈັກເຫດຜົນວ່າເປັນຫຍັງ ນັກຮຽນຈຶ່ງບໍ່ມາໂຮງຮຽນ, ປະພຶດບໍ່ເໝາະສົມຢູ່ໃນຫ້ອງຮຽນ ຫຼື ມີຄວາມສ່ຽງຕໍ່ການປະລະການຮຽນ.
- ສະແດງໃຫ້ເຫັນຄວາມແຕກຕ່າງຫຼາກຫຼາຍຂອງນັກຮຽນຢູ່ໃນຊຸມຊົນ ໃນດ້ານບຸກຄະລິກລັກສະນະສ່ວນບຸກຄົນ ແລະ ບຸກຄະລິກລັກສະນະຂອງຄອບຄົວຂອງເດັກ.
- ຊ່ອຍໃນການວາງແຜນ ເພື່ອແກ້ໄຂ ຫຼື ເອົາຊະນະປັດໄຈຕ່າງໆທີ່ເຮັດໃຫ້ເດັກບໍ່ໄດ້ເຂົ້າໂຮງຮຽນ ແລະ ຊຸກຍູ້ໃຫ້ເດັກປະພຶດບໍ່ເໝາະສົມ.

**ແຟ້ມຂໍ້ມູນ/ປະຫວັດຫຍໍ້ຂອງນັກຮຽນສາມາດປະດິດສ້າງຂຶ້ນໄດ້ໂດຍນໍາໃຊ້ບາດກ້າວຂ້າງລຸ່ມນີ້:**

***ບາດກ້າວ1:*** ໃຫ້ລະດົມຄວາມຄິດກັບເພື່ອນຮ່ວມງານຂອງ ທ່ານ ກ່ຽວກັບພຶດຕິກໍາຜິດໆທີ່ສໍາຄັນ ຕົ້ນຕໍ ທີ່ເຫັນຢູ່ໃນນັກຮຽນ ຂອງທ່ານ ແລະ ບັນດາປັດໄຈທີ່ມີຢູ່ພາຍໃນຄອບຄົວ ຫຼື ຊຸມຊົນ ທີ່ອາດ ເປັນສາເຫດແກ່ນັກຮຽນ (ດັ່ງໄດ້ສົນທະນາມາຂ້າງເທິງ). ໃຫ້ແນ່ໃຈວ່າໄດ້ກວມລວມເອົາປັດໄຈ ໃດໜຶ່ງ ທີ່ທ່ານຄິດວ່າ ມັນອາດເປັນສາເຫດເຮັດໃຫ້ນັກຮຽນຂາດໂຮງຮຽນ ຫຼືມາຮອດໂຮງຮຽນຊ້າ.

***ບາດກ້າວ 2 :*** ນໍາໃຊ້ປັດໄຈເຫຼົ່ານີ້, ສ້າງຄໍາຖາມຕ່າງໆ ເຊິ່ງເມື່ອໄດ້ຄໍາຕອບແລ້ວ ອາດໃຫ້ຄວາມ ເຂົ້າໃຈກະຈ່າງແຈ້ງແກ່ທ່ານວ່າ ເປັນຫຍັງເດັກຈຶ່ງປະພຶດບໍ່ເໝາະສົມຢູ່ໃນຫ້ອງຮຽນ. ຢູ່ໃນຂ້າງ ລຸ່ມນີ້ ແມ່ນຕົວຢ່າງຂອງບັນຊີຄໍາຖາມ ທີ່ໄດ້ນໍາໃຊ້ຢູ່ໃນໂຮງຮຽນເພື່ອນເດັກຢູ່ໃນປະເທດຟີລິບປິນ ແລະ ປະເທດ ໄທ ເພື່ອເຂົ້າໃຈສະພາບຂອງນັກຮຽນ ທີ່ມີປະຫວັດຄວາມເປັນມາ ແລະ ຄວາມ ອາດສາມາດແຕກຕ່າງກັນ ເຊິ່ງເປັນຜູ້ທີ່ຮຽນບໍ່ໄດ້ດີ ແລະ ອາດມີຄວາມຮູ້ສຶກວ່າ ຕົນເອງມີປົມ ດ້ອຍ. ***ທ່ານສາມາດສ້າງບັນຊີຄໍາຖາມຂອງທ່ານເອງໄດ້ ໂດຍອີງຕາມອຸປະສັກທີ່ທ່ານຮູ້ສຶກວ່າ ມັນມີທົ່ວໄປຢູ່ໃນຊຸມຊົນຂອງທ່ານ.***

***ການຈໍາແນກ.***

- ເດັກເປັນເພດໃດ ?
- ອາຍຸຂອງເດັກເທົ່າໃດ ?
- ສັນຊາດຂອງເດັກແມ່ນສັນຊາດໃດ ຫຼືຢູ່ໃນກຸ່ມຊົນເຜົ່າໃດ ?
- ເດັກນັບຖືສາສະໜາໃດ ?
- ພາສາແມ່ຂອງເດັກແມ່ນພາສາຫຍັງ ?
- ບ້ານເຮືອນຂອງນັກຮຽນຕັ້ງຢູ່ຫ່າງຈາກໂຮງຮຽນຫຼາຍປານໃດ ( ໄລຍະທາງ, ໄລຍະເວລາ ເດີນທາງ ) ?
- ພາຫະນະທີ່ເດັກໃຊ້ໃນການເດີນທາງແມ່ນຫຍັງ ແລະມີຄວາມປອດໄພບໍ່ ?

***ປັດໄຈລະດັບນັກຮຽນ***

- ນັກຮຽນໄດ້ເຮັດວຽກຢູ່ໃນ ຫຼື ນອກບ້ານເພື່ອຊອກຫາລາຍໄດ້ ຫຼື ຊ່ອຍເຫຼືອວຽກງານຄອບ ຄົວບໍ່ ?
- ສະຖານະພາບທາງດ້ານສຸຂະພາບ ແລະໂພຊະນາການຂອງເດັກ ເປັນແນວໃດ ?
- ເດັກມີຄວາມພິການອັນໃດອັນໜຶ່ງບໍ່ທີ່ມີຜົນກະທົບຕໍ່ການເຂົ້າເຖິງອາຄານສະຖານທີ່ຂອງ ໂຮງຮຽນ ຫຼື ມີຜົນກະທົບຕໍ່ການຮໍ່າຮຽນຢູ່ໃນຫ້ອງຮຽນ .

***ການເບິ່ງແຍງດູແລ; ຂໍ້ຂັດແຍ່ງ***

- ຜູ້ປົກຄອງຂອງເດັກມີອາຍຸເທົ່າໃດ ?

- ຜູ້ປົກຄອງຍັງມີຊີວິດຢູ່ທັງສອງຄົນບໍ່, ຖ້າບໍ່, ຜູ້ໃດເສຍຊີວິດແລ້ວ ?
- ຜູ້ປົກຄອງແຕ່ລະຄົນມີການສຶກສາໃນລະດັບໃດ ?
- ມີສະມາຊິກຄອບຄົວຜູ້ໃດຜູ້ໜຶ່ງປະລະການຮຽນບໍ່ ? ຍ້ອນຫຍັງ ?
- ຜູ້ປົກຄອງເດັກຍັງຢູ່ດ້ວຍກັນບໍ່?
- ເດັກຢູ່ນຳຜູ້ໃດ ?
- ມີຈັກຄົນທີ່ອາໄສຢູ່ໃນເຮືອນ ?
- ມີເດັກອີກຈັກຄົນທີ່ອາໄສຢູ່ເຮືອນດຽວກັບເດັກ (ໂດຍສະເພາະ ເດັກອ່ອນ)
- ຜູ້ໃດເປັນຜູ້ດູແລເດັກອ່ອນເຫຼົ່ານີ້ເປັນຕົ້ນຕໍ ?
- ຜູ້ປົກຄອງເຄີຍໄປເຮັດວຽກເຂດອື່ນບໍ່ ?

***ຄວາມທຸກຍາກ ແລະ ຄຸນຄ່າໃນພາກປະຕິບັດຕົວຈິງຂອງການສຶກສາ.***

- ຜູ້ປົກຄອງເດັກແຕ່ລະຄົນມີອາຊີບຕົ້ນຕໍຫຍັງ ?
- ຄອບຄົວມີດິນສ່ວນຕົວເພື່ອສ້າງລາຍໄດ້ບໍ່? ຖ້າມີ, ດິນກວ້າງເທົ່າໃດ ?
- ຄອບຄົວໄດ້ເຊົ່າດິນເພື່ອສ້າງລາຍໄດ້ບໍ່? ຖ້າໄດ້ເຊົ່າ, ດິນກວ້າງເທົ່າໃດ ?
- ລາຍໄດ້ສະເລ່ຍຂອງຄອບຄົວໃນເດືອນໜຶ່ງມີຫຼາຍປານໃດ ?
- ຄອບຄົວໄດ້ກູ້ຢືມເງິນເພື່ອສ້າງລາຍໄດ້ບໍ່? ຖ້າໄດ້ຢືມ, ຢືມເທົ່າໃດ?ໄດ້ຢືມເລື້ອຍປານໃດ ແລະ ໄດ້ຢືມຢູ່ໃນໄລຍະເວລາໃດຂອງປີໜຶ່ງໆ?
- ຄອບຄົວຂອງເດັກນັກຮຽນໄດ້ເປັນສະມາຊິກຂອງກຸ່ມພັດທະນາຊຸມຊົນໃດໜຶ່ງບໍ່?

***ບາດກ້າວທີ 3.*** ສ້າງແບບສອບຖາມເພື່ອເກັບກຳຄຳຕອບຕໍ່ຄຳຖາມເຫຼົ່ານີ້. ແບບສອບຖາມນີ້ສາມາດເປັນບັນຊີຄຳຖາມຂ້າງເທິງນີ້ກໍໄດ້ ເຊິ່ງຄຳຕອບຕ້ອງໄດ້ຂຽນໃສ່ ຫຼື ມັນສາມາດເຮັດເປັນແບບແຟ້ມຂໍ້ມູນ ນັກຮຽນທີ່ເປັນທາງການ. ເມື່ອສ້າງແບບສອບຖາມສຳເລັດແລ້ວ ເຮົາສາມາດ (ກ) ສົ່ງໄປຫາເຮືອນຂອງນັກຮຽນ ເພື່ອໃຫ້ຂຽນຕື່ມໃສ່ແລ້ວສົ່ງຄືນໃຫ້ໂຮງຮຽນ ຫຼື ສົ່ງໃຫ້ຜູ້ນຳຊຸມຊົນ. (ຂ) ຂຽນຕື່ມໃສ່ໂດຍຄູເອງເມື່ອເວລາໄປຢ້ຽມຢາມເຮືອນນັກຮຽນ. (ຄ)ຂຽນຕື່ມໃສ່ຕາມການສຳພາດນັກຮຽນເອງ ຫຼື ສຳພາດຜູ້ປົກຄອງຂອງນັກຮຽນ ເມື່ອເວລາເຂົາເຈົ້າມາຮັບເດັກ, ເມື່ອເວລາມີກອງປະຊຸມຜູ້ປົກຄອງເດັກ ແລະ ຄູສອນ ຫຼື ເມື່ອເວລາມີກອງສະມາຄົມພໍ່ແມ່ນັກຮຽນ.

***ບາດກ້າວທີ 4.*** ພາຍຫຼັງແບບສອບຖາມໄດ້ຖືກຂຽນສຳເລັດ ແລະ ສົ່ງຄືນມາໝົດແລ້ວ, ໃຫ້ສ້າງກໍລະນີສຶກສາແບບພັນລະນາສຳລັບເດັກນັກຮຽນແຕ່ລະຄົນ ທີ່ລວມເອົາຄຳຕອບຂອງຄຳຖາມຂ້າງເທິງ. ກໍລະນີສຶກສາອັນນີ້ ຈະຊ່ອຍທ່ານໃນການກຳນົດ, ເຊື່ອມໂຍງ ແລະ ວິເຄາະປັດໄຈທີ່ອາດມີຜົນກະທົບຕໍ່ການປະພຶດ ແລະ ການຮຳຮຽນຂອງນັກຮຽນ.

*ບາດກ້າວທີ 5.* ພາຍຫຼັງສຳເລັດກໍລະນີສຶກສາແລ້ວ, ໃຫ້ເບິ່ງກໍລະນີສຶກສາຢ່າງຈິດຈໍ່ ເພື່ອໃຫ້ເຫັນວ່າມີປັດໄຈອັນໃດ ທີ່ອາດຈະກະທົບໃສ່ຄວາມອາດສາມາດຂອງເດັກແຕ່ລະຄົນ ທີ່ຈະຮຽນໄດ້ເຕັມເມັດເຕັມໜ່ວຍຢູ່ໃນຫ້ອງຮຽນ ກໍຄືຕໍ່ການປະພຶດຂອງເຂົາເຈົ້າ. ໃຫ້ຂີດກ້ອງປັດໄຈເຫຼົ່ານັ້ນ ເພື່ອເຮັດໃຫ້ເຫັນພົ້ນເດັ່ນຂຶ້ນ ແລະ ເພື່ອຊ່ວຍທ່ານໃນການເຊື່ອມໂຍງ. ສຳລັບກໍລະນີຂອງ ນາງ ອາເຢ ຂ້າງລຸ່ມນີ້ ອັນນີ້ມັນອາດແມ່ນຄວາມແຕກຕ່າງທາງດ້ານວັດທະນະທຳ ທີ່ເປັນສາເຫດໃຫ້ ນາງ ມີຄວາມຮູ້ສຶກຖືກຈຳແນກ ແລະ ມີປົມດ້ອຍ, ຄວາມຍາກຈົນ, ການເບິ່ງແຍງດູແລບໍ່ພຽງພໍ, ບໍ່ສາມາດເຂົ້າເຖິງຊັບພະຍາກອນຕ່າງໆ ຈາກພາຍນອກຂອງຄອບຄົວ, ມີສະຖານະພາບທາງດ້ານສຸຂະພາບ ແລະ ໂພຊະນາການຕ່ຳ. ໃຫ້ນຳໃຊ້ປັດໄຈເຫຼົ່ານີ້ ເປັນຈຸດເລີ່ມຕົ້ນ ເພື່ອສ້າງການກະທຳອັນດີ ເພື່ອແກ້ໄຂສາເຫດຂອງນັກຮຽນທີ່ບໍ່ມາໂຮງຮຽນ ຫຼື ປະພຶດບໍ່ເໝາະສົມຢູ່ໃນຫ້ອງຮຽນ. ໃຫ້ເຮັດວຽກຢ່າງຕັ້ງໜ້າຮ່ວມກັບເພື່ອນຮ່ວມງານຂອງທ່ານ, ຄະນະກຳມະການຄຸ້ມຄອງໂຮງຮຽນ, ຜູ້ປົກຄອງເດັກ, ຜູ້ນຳຊຸມຊົນ ແລະ ອົງການຈັດຕັ້ງຕ່າງໆໃນທ້ອງຖິ່ນ ເພື່ອວາງແຜນ, ດຳເນີນການ, ຕິດຕາມກຳກັບ ແລະ ປະເມີນຜົນການປະຕິບັດການແຕ່ລະອັນ.

**ອາເຢ** ເປັນຄົນເຜົ່າມົ້ງ ອາໄສຢູ່ພາກເໜືອຂອງປະເທດໄທ. ລາວຄິດວ່າດຽວນີ້ລາວອາຍຸ 9 ປີ ແຕ່ ບໍ່ມີໜັງສືຢັ້ງຢືນການເກີດ. ພໍ່ຂອງລາວເສຍຊີວິດແລ້ວ. ແມ່ຂອງລາວມີອາຍຸ 30 ປີ ແລະ ຍັງບໍ່ໄດ້ແຕ່ງງານໃໝ່. ແມ່ຂອງລາວກືກໜັງສື. ອາຊີບຕົ້ນຕໍຂອງລາວແມ່ນເຮັດໄຮ່ບົນທີ່ດິນຜືນນ້ອຍໆແຫ່ງໜຶ່ງ. ແມ່ຕູ້ຂອງລາວເປັນຜູ້ດູແລລາວ ແລະ ນ້ອງຊາຍ ອາຍຸ 5 ປີ ທີ່ບໍ່ໄດ້ເຂົ້າໂຮງຮຽນອະນຸບານ. ຄອບຄົວຂອງ ອາເຢ ທຸກຍາກ ແລະ ມີລາຍໄດ້ ຕ່ຳກວ່າ 135,000 ກີບ ຕໍ່ເດືອນ. ໃນຊ່ວງໝົດລະດູເຮັດໄຮ່ ແມ່ຂອງ ອາເຢ ຈະອົບພະຍົບໄປເຮັດວຽກເປັນກຳມະກອນທີ່ກຸງເທບ. ຄອບຄົວຂອງອາເຢບໍ່ໄດ້ເປັນສະມາຊິກຂອງກຸ່ມພັດທະນາໃດໆຂອງບ້ານເລີຍ ແລະ ບໍ່ສາມາດເຂົ້າເຖິງຊັບພະຍາກອນຂອງຊຸມຊົນ. ອາເຢ ເຂົ້າຮຽນ ປ.1 ແລະ ປ.2, ແຕ່ລາວຕ້ອງອອກໂຮງຮຽນ ເມື່ອຂຶ້ນຮຽນຫ້ອງ ປ. 3 ໄດ້ບໍ່ດົນ. ແມ່ຂອງ ອາເຢ ບໍ່ມີເງິນພໍທີ່ຈະຊື້ຊຸດເຄື່ອງແບບນັກຮຽນ ແລະ ບໍ່ສາມາດຈ່າຍຄ່າເດີນທາງໄປໂຮງຮຽນ ເຊິ່ງຕັ້ງຢູ່ຫ່າງຈາກເຮືອນຂອງ ອາເຢ ປະມານ 25 ກິໂລແມັດ. ຕອນທີ່ ອາເຢ ໄປເຂົ້າໂຮງຮຽນ, ເຄິ່ງໜຶ່ງຂອງການຂາດຮຽນ ແມ່ນໄດ້ຮັບອະນຸຍາດໃນຂະນະທີ່ອີກເຄິ່ງໜຶ່ງ ແມ່ນເປັນເພາະຄວາມເຈັບປ່ວຍ. ລາວເປັນພະຍາດທາງເດີນຫາຍໃຈກະທັນຫັນ (Acute respiratory infections - ARI) ແລະ ຂາດສານໄອໂອດີນຂັ້ນເບົາ (Mild iodine defidiency). ອາເຢ ມັກຈະຫຼັບເວລາຢູ່ຫ້ອງຮຽນ ແລະ ມັກສົ່ງວຽກບ້ານບໍ່ທັນຕາມເວລາກຳນົດ. ມີຫຼາຍຄັ້ງ, ລາວຄືກັບວ່າຖືກຄອບງຳຈາກອັນໃດອັນໜຶ່ງ ແລະ ກໍບໍ່ສົນໃຈ ບົດຮຽນ ຫຼື ໝູ່ຄູ່ດ້ວຍກັນ.

*ໝາຍເຫດ. ສຳລັບທ່ານທີ່ສິດສອນຢູ່ໃນຫ້ອງຮຽນທີ່ມີນັກຮຽນຫຼາຍ, ໃຫ້ເລີ່ມຕົ້ນໂດຍການສ້າງແຟ້ມຊີວະປະຫວັດນັກຮຽນ ທີ່ຈຳເປັນຕ້ອງເອົາໃຈໃສ່ພິເສດກ່ອນ, ອາດຈະຍ້ອນວ່າໃນປັດຈຸບັນເຂົາຮຽນບໍ່ໄດ້ດີ ຫຼື ມີພຶດຕິກຳຜິດໆ ຫຼື ຍ້ອນທ່ານສົງໄສວ່າສະພາບສ່ວນຕົວ ຫຼື ຄອບຄົວຂອງເດັກເຮັດໃຫ້ເຂົາມີຄວາມສ່ຽງຕໍ່ການປະພຶດທີ່ບໍ່ເໝາະສົມ. ຫຼັງຈາກນັ້ນຈຶ່ງຂະຫຍາຍໄປຫານັກຮຽນຜູ້ອື່ນໆ.*

## 7. ການສື່ສານ/ພົວພັນລະຫວ່າງພໍ່ແມ່ ຜູ້ປົກຄອງ - ຄູສອນ

ການສ້າງສາຍພົວພັນທີ່ດີລະຫວ່າງຄູສອນ ແລະ ນັກຮຽນ ເປັນສິ່ງໜຶ່ງທີ່ສົ່ງເສີມການປະພຶດທີ່ດີ ແລະ ປ້ອງກັນການປະພຶດທີ່ບໍ່ເໝາະສົມ, ນອກນີ້ມັນຍັງຮຽກຮ້ອງໃຫ້ດຶງເອົາພໍ່ແມ່ຜູ້ປົກຄອງນັກຮຽນເຂົ້າມີສ່ວນຮ່ວມ ຢູ່ໃນການສຶກສາຂອງລູກຫຼານຂອງຕົນອີກ. ມີປັດໃຈ 2 ຢ່າງທີ່ເຮັດໃຫ້ເດັກນັກຮຽນມີຄວາມສ່ຽງຕໍ່ການປະພຶດທີ່ບໍ່ເໝາະສົມ ແລະ ປະລະການຮຽນ ສິ່ງນັ້ນກໍຄື ການບໍ່ມີສ່ວນຮ່ວມຂອງຜູ້ປົກຄອງເດັກ ແລະ ຄວາມຄາດຫວັງຂອງພໍ່ແມ່ຜູ້ປົກຄອງເດັກຕໍ່າ. ການເຂົ້າມີສ່ວນຮ່ວມຂອງຜູ້ປົກຄອງເດັກ ຈະມີຜົນກະທົບອັນດີຕໍ່ຜົນສໍາເລັດ ໃນການຮຽນຂອງເດັກນັກຮຽນ ແລະ ມັນເປັນຕົວຄາດຄະເນທີ່ແມ່ນຍໍາທີ່ສຸດ ຂອງຄວາມສໍາເລັດຂອງການຮຽນຂອງເດັກໃນໂຮງຮຽນ. **ຜົນປະໂຫຍດຈໍານວນໜຶ່ງທີ່ຈະໄດ້ຮັບຈາກການເຂົ້າມີສ່ວນຮ່ວມຂອງຄອບຄົວນັກຮຽນມີດັ່ງນີ້:**

- ❖ ນັກຮຽນຈະບັນລຸຜົນສໍາເລັດໃນການຮຽນສູງຂຶ້ນ ໂດຍບໍ່ກ່ຽວຂ້ອງກັບສະຖານະທາງດ້ານເສດຖະກິດ-ສັງຄົມ,ຊົນເຜົ່າ,ປະຫວັດຄວາມເປັນມາ ຫຼືລະດັບການສຶກສາຂອງຜູ້ປົກຄອງ.
- ❖ ນັກຮຽນຈະບໍ່ມັກຂາດໂຮງຮຽນ.
- ❖ ນັກຮຽນຈະເຮັດວຽກບ້ານສໍາເລັດຢ່າງສະໝໍ່າສະເໝີຫຼາຍຂຶ້ນ.
- ❖ ນັກຮຽນຈະສະແດງອອກທາງດ້ານພຶດຕິກໍາ ແລະ ທັດສະນະຄະຕິທາງບວກຫຼາຍຂຶ້ນກວ່າເກົ່າ.

ເຖິງຢ່າງໃດກໍດີ, ສໍາລັບທ່ານ, ເພື່ອຈະດຶງເອົາຜູ້ປົກຄອງເດັກ ເຂົ້າມີສ່ວນຮ່ວມຢູ່ໃນການສຶກສາຂອງລູກຫຼານຂອງເຂົາເຈົ້ານັ້ນ, ທ່ານຕ້ອງສະແດງໃຫ້ເຫັນຜົນປະໂຫຍດ ໃນຕົວຂອງເດັກ. ການວິໄຈໄດ້ ສະເໜີແນະວ່າຜູ້ປົກຄອງເດັກຈະນໍາ ໃຊ້ຄວາມຮູ້ຂອງຄູກ່ຽວກັບບຸກຄະລິກ/ຈຸດພິເສດ ຫຼືຄວາມສົນໃຈຂອງເດັກນັກຮຽນເປັນເຄື່ອງມືກັ່ນກອງ. ຜູ້ປົກຄອງນັກຮຽນຈະຍິ່ງຢາກໄດ້ຍິນໄດ້ຟັງຄວາມຄິດເຫັນກ່ຽວກັບລູກຫຼານ ຖ້າເຂົາຮູ້ສຶກວ່າ ຄູຮູ້ສິ່ງໃດໜຶ່ງພິເສດກ່ຽວກັບເດັກ. ນີ້ເປັນເຫດຜົນອັນໜຶ່ງໃນຈໍານວນ ເຫດຜົນທີ່ສໍາຄັນຫຼາຍໆອັນ ທີ່ວ່າເປັນຫຍັງການຮູ້ຈັກເດັກນັກຮຽນ ແລະ ຄອບຄົວຂອງເຂົາ ຈຶ່ງມີຄວາມສໍາຄັນຢູ່ໃນການສ້າງສາຍພົວພັນຮ່ວມມືລະຫວ່າງຜູ້ປົກຄອງ ແລະຄູສອນ.ຍິ່ງໄປກວ່ານັ້ນ, ພິເສດແມ່ນສໍາລັບໃນໝູ່ນັກຮຽນທີ່ປະພຶດບໍ່ເໝາະສົມຢູ່ໃນຫ້ອງຮຽນມາຕະຫຼອດ, ກອງປະຊຸມລະຫວ່າງຜູ້ປົກຄອງ-ຄູ-ນັກຮຽນ ຈະເຮັດໃຫ້ນັກຮຽນຢຸດເຊົາການປະພຶດຢູ່ໂຮງຮຽນ ຕ້ານກັບການປະພຶດຢູ່ເຮືອນ ແລະ ການປະພຶດກັບພໍ່ແມ່ຕ້ານກັບການປະພຶດຕໍ່ຄູ.

ໂດຍປົກກະຕິແລ້ວ, ກອງປະຊຸມຜູ້ປົກຄອງ-ຄູສອນ ຫຼື ກອງປະຊຸມຜູ້ປົກຄອງ-ຄູສອນ-ນັກຮຽນຈະຈັດຂຶ້ນ ກໍຍ້ອນເຫດຜົນໃດໜຶ່ງໃນ 4 ເຫດຜົນດັ່ງລຸ່ມນີ້:

(ກ). ເພື່ອເປີກສາຫາລືປະເດັນທາງດ້ານວິຊາການພິເສດໃດໜຶ່ງທີ່ໂຮງຮຽນຮ້ອງຂໍເຊັ່ນ: ການຮໍ່າຮຽນຂອງເດັກນັກຮຽນ (ຮຽນດີຫຼືຮຽນອ່ອນ) ຫຼື ເພື່ອຂໍຮ້ອງຜູ້ປົກຄອງເດັກ ໃຫ້ຊ່ວຍເຫຼືອຫ້ອງຮຽນ ຫຼື ໂຮງຮຽນ.

(ຂ). ເປີກສາຫາລືປະເດັນການມາໂຮງຮຽນຂອງນັກຮຽນ ຫຼືເລື່ອງການປະຕິບັດລະບຽບວິໄນ.
(ຄ). ເປີກສາຫາລືປະເດັນທີ່ຍົບຍົກຂຶ້ນມາໂດຍຜູ້ປົກຄອງເອງ.
(ງ). ເພື່ອຈັດກອງປະຊຸມປົກກະຕິ ຕາມທີ່ໄດ້ຈັດວາງໄວ້ຢູ່ໃນຕາຕະລາງການເຄື່ອນໄຫວໂຮງຮຽນ.

*ຂໍ້ສັງເກດ:ກອງປະຊຸມຜູ້ປົກຄອງ-ຄູສາມາດທີ່ຈະຈັດແບບທາງການຫຼື ແບບບໍ່ທາງການກໍໄດ້. ສໍາລັບຄູທີ່ສອນຫ້ອງຮຽນທີ່ມີນັກຮຽນຈໍານວນຫຼາຍອາດບໍ່ມີເວລາ ເພື່ອຈະພົບປະກັບພໍ່ແມ່ຂອງເດັກທຸກຄົນໄດ້ໃນວັນໜຶ່ງວັນດຽວ, ກໍຄວນຈະຈັດກອງປະຊຸມທາງການກັບພໍ່ແມ່ຜູ້ປົກຄອງເດັກທີ່ມີບັນຫາຫຍຸ້ງຍາກ. ສໍາລັບນັກຮຽນຜູ້ອື່ນໆ ໃຫ້ຫາໂອກາດພົບປະເປັນໄລຍະແບບບໍ່ເປັນທາງການຕາມເວລາທີ່ສະດວກ(ສໍາລັບທ່ານແລະຜູ້ປົກຄອງ). ອາດສາມາດຈັດການພົບປະຢູ່ໃນຫ້ອງຮຽນ ຫຼື ເດີ່ນໂຮງຮຽນ ເຊັ່ນ ຕອນທີ່ຜູ້ປົກຄອງເດັກມາຮັບເດັກ; ໄປພົບທີ່ເຮືອນ ຖ້າທ່ານລົງຢ້ຽມຢາມຄອບຄົວເດັກ; ຫຼື ພົບປະ ໃນມື້ທີ່ມີງານພິເສດຂອງໂຮງຮຽນ ຫຼື ຂອງບ້ານ.* **ສິ່ງສໍາຄັນກ່ອນການຈັດປະຊຸມທ່ານຕ້ອງກະກຽມ ແລະ ວາງແຜນ.**

## 8. ຍຸດທະສາດຂອງການຊຸກຍູ້ສົ່ງເສີມ

ບາງເງື່ອນໄຂທີ່ມີຄວາມສໍາຄັນພິເສດໃນການກະຕຸກຊຸກຍູ້ພຶດຕິກໍາທາງບວກຂອງນັກຮຽນເຊິ່ງເປັນພາກສ່ວນໜຶ່ງຂອງຂະບວນການສ້າງຄວາມສໍາພັນມີດັ່ງນີ້:

- ❖ ***ຮັກສາຄວາມຮູ້ສຶກທາງອາລົມຈິດທີ່ດີຢູ່ໃນຫ້ອງຮຽນ.*** ທ່ານປະຕິບັດ ແລະ ມີປະຕິກິລິຍາຕອບໂຕ້ຢ່າງໃດ ຕໍ່ນັກຮຽນມັນກໍຈະສະທ້ອນໃຫ້ເຫັນຢູ່ໃນການປະພຶດຂອງເຂົາເຈົ້າ.
- ❖ ***ໃຫ້ຄວາມເອົາໃຈໃສ່ແກ່ນັກຮຽນ*** ເພື່ອເພີ່ມທະວີການປະພຶດແນວທາງບວກ. ສໍາລັບນັກຮຽນຜູ້ທີ່ໃຫຍ່ກວ່ານັ້ນ, ຄວາມເອົາໃຈໃສ່ຈະປະກອບດ້ວຍການຮູ້ຈັກ ແລະ ສົນໃຈໃນຊີວິດຄອບຄົວ, ໃນກິດຈະກໍາຢູ່ໂຮງຮຽນ ແລະ ກິດຈະກໍາອື່ນໆ ທີ່ເຮັດໃຫ້ເຂົາເຈົ້າມີຄວາມສະໜຸກສະໜານ.
- ❖ ***ໃຫ້ຄວາມຄົງທີ່ສະເໝີຕົ້ນສະເໝີປາຍ*** ໃນຮູບແບບຂອງການປະຕິບັດກິດຈະວັດປະຈໍາວັນປົກກະຕິສໍາລັບກິດຈະກໍາ ແລະ ການປະຕິສໍາພັນລາຍວັນ ເພື່ອເຮັດໃຫ້ປະສົບການ ຫຼື ສິ່ງທີ່ບໍ່ຄາດຝັນ, ສິ່ງທີ່ເປັນເລື່ອງໃນແງ່ລົບຫາກເກີດຂຶ້ນໄດ້ມີຄວາມກົດດັນໜ້ອຍລົງ.
- ❖ ***ຕອບໂຕ້ແບບສະເໝີຕົ້ນສະເໝີປາຍ*** ຕໍ່ສະພາບການປະພຶດທີ່ຄ້າຍຄືກັນບໍ່ວ່າຈະເປັນບວກ ແລະ ເປັນລົບ ເພື່ອສົ່ງເສີມການພົວພັນລະຫວ່າງຄູສອນ-ນັກຮຽນ ໃຫ້ມີຄວາມກົມກຽວກັນຫຼາຍຂຶ້ນ ແລະ ມີຜົນໄດ້ຮັບຂອງນັກຮຽນໃນທາງບວກຫຼາຍຂຶ້ນ.
- ❖ ***ມີການປັບປ່ຽນຕາມສະຖານະການຕົວຈິງໄດ້,*** ໂດຍສະເພາະແມ່ນເຮັດກັບນັກຮຽນໃຫຍ່ ແລະພວກທີ່ເປັນໄວລຸ້ນ. ໃຫ້ຟັງເຫດຜົນຟັງຜົນຂອງເຂົາ ສໍາລັບການປະຕິບັດຕາມ ຫຼື ບໍ່ປະຕິບັດຕາມສິ່ງທີ່ທ່ານບອກ, ຫຼື ຕາມກົດລະບຽບຂອງຫ້ອງຮຽນແລ້ວກໍເຈລະຈາ ເພື່ອການແກ້ໄຂ. ອັນນີ້ສະແດງໃຫ້ເຫັນວ່າ ທ່ານເຫັນຄຸນຄ່າຄວາມຄິດເຫັນຂອງນັກຮຽນຂອງ

ທ່ານ ເຊິ່ງຈະສາມາດຫຼຸດຜ່ອນກໍລະນີການປະພຶດທີ່ບໍ່ເໝາະສົມອະນາຄົດ. ຍິ່ງໄປກວ່ານັ້ນການເອົານັກຮຽນ ເຂົ້າມາຮ່ວມໃນການຕັດສິນໃຈຈະຕິດພັນກັບການເສີມຂະຫຍາຍຄຸນພົນິດສິລະທຳໃນໄລຍະຍາວ.

- ❖ ***ເຮັດໃຫ້ຄວາມຜິດເປັນສິ່ງຖືກຕ້ອງ.*** ໃຫ້ບອກນັກຮຽນຂອງທ່ານວ່າ "ພວກເຮົາຮຽນຮູ້ຈາກການເຮັດຜິດເທົ່ານັ້ນ. ຄູເອງກໍເຮັດຜິດທຸກໆມື້. ສະນັ້ນ, ພວກເຮົາຈຶ່ງມາເຮັດຜິດບາງຢ່າງດ້ວຍກັນດຽວນີ້". ອັນນີ້ມັນຈະເປັນການສ້າງຄູ່ຮ່ວມມືສຳລັບການຮຳຮຽນ ເຊິ່ງອີງໃສ່ການນັບຖືເຊິ່ງກັນ ແລະ ກັນ.
- ❖ ***ສ້າງຄວາມເຊື່ອໝັ້ນ.*** ສິ່ງເສີມການເວົ້າດ້ວຍຕົນເອງໃນດ້ານບວກ. ບອກນັກຮຽນຂອງທ່ານ ແຕ່ລະຄົນເວົ້າກ່ຽວກັບສິ່ງທີ່ເຂົາຄິດວ່າ ເຂົາເຮັດດີໃນອັນໃດອັນໜຶ່ງ ຈະແມ່ນອັນໃດກໍໄດ້. ແລ້ວໃຫ້ ທ່ານ ນຳໃຊ້ຄຳຕອບນັ້ນໃສ່ບົດສອນຂອງທ່ານ, ໃຫ້ເຂົາເຈົ້າໄດ້ເຂົ້າຮ່ວມໃນການຊ່ວຍເຫຼືອ ທ່ານເພື່ອສິດສອນ.
- ❖ ***ສຸມໃສ່ຜົນສຳເລັດທີ່ຜ່ານມາແລ້ວ.*** ສຳລັບນັກຮຽນຜູ້ທີ່ມີທ່າອ່ຽງມີປົມດ້ອຍ ຫຼື ຢ້ານເສັງຕົກ, ໃຫ້ຍ້ອງຍໍສັນລະເສີນເຂົາເຈົ້າໃນເລື່ອງຄະແນນຂອງການສອບເສັງຜ່ານມາ(ຈະເປັນຄະແນນດີ ຫຼື ບໍ່ກໍຕາມ) ແລະ ກໍໃຫ້ຊຸກຍູ້ສົ່ງເສີມເຂົາເຈົ້າໃຫ້ເຮັດດີຂຶ້ນຕື່ມອີກ. ໃຫ້ເອົາໃຈໃສ່ສອນບຳລຸງພິເສດ ຫຼື ເອົາວຽກເພີ່ມເຕີມໃຫ້ ແລະ ເຮັດການຕິດຕາມ.
- ❖ ***ເຮັດໃຫ້ການຮຳຮຽນມີຄວາມໝາຍສຳຄັນ.*** ໃຫ້ທ່ານດັດແກ້ວິທີການສິດສອນຂອງທ່ານ. ແທນທີ່ຈະເຮັດການບັນລະຍາຍກ່ຽວກັບຮູບເລຂາຄະນິດ, ໃຫ້ທ່ານແບ່ງນັກຮຽນອອກເປັນກຸ່ມແລ້ວບອກໃຫ້ເຂົາເຈົ້າໄປຊອກຫາຮູບເລຂາຄະນິດຮູບແບບຕ່າງໆ ເທົ່າທີ່ຈະຊອກຫາໄດ້ພາຍໃນ 15 ນາທີ ຢູ່ບໍລິເວນໂຮງຮຽນ ຫຼື ໃນຊຸມຊົນ ຖ້າກຸ່ມໃດຊະນະກໍໃຫ້ໄດ້ລາງວັນເລັກໆນ້ອຍໆ!

# ບົດທີ 3

# ການສ້າງສະພາບແວດລ້ອມຂອງການຮຽນຮູ້ທີ່ເປັນທາງບວກ ແລະ ມີລັກ ນະນະສະໜັບສະໜູນ

## 1. ການຄຸ້ມຄອງຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້

ເພື່ອຢາກໃຫ້ນັກຮຽນຂອງທ່ານໄດ້ພັດທະນາການປະພຶດດີ, ເຂົາເຈົ້າຈະຕ້ອງໄດ້ຢູ່ໃນສະພາບແວດລ້ອມທີ່ມີການຄຸ້ມຄອງດີ ແລະມີການຈັດຕັ້ງທີ່ດີ. ເມື່ອເວລາພວກເຮົາຄຳນຶງເຖິງການຄຸ້ມຄອງຫ້ອງຮຽນພວກເຮົາຫຼາຍຄົນ ອາດຄຳນຶງເຖິງການຄວບຄຸມການປະພຶດຂອງນັກຮຽນ ຫຼື ມີຄວາມເປັນຫ່ວງວ່າ ພວກເຮົາຈະເຮັດແນວໃດ ເພື່ອຄວບຄຸມຫ້ອງຮຽນ. ຄວາມຈິງແລ້ວປະຕິກິລິຍາຂອງພວກເຮົາ ຕໍ່ກັບການປະພຶດຂອງັກຮຽນ ຫຼື ຕໍ່ການປະພຶດທີ່ບໍ່ເໝາະສົມຂອງນັກຮຽນ ຄວນເປັນປະຕິກິລິຍາສຸດທ້າຍ ຢູ່ໃນແຜນສຳລັບການຄຸ້ມຄອງຫ້ອງຮຽນ. ຢູ່ໃນຫ້ອງຮຽນທີ່ມີການຄຸ້ມຄອງທີ່ດີ, ການກະທຳອັນນີ້ຈະຢູ່ໃນຮູບແບບເຕັກນິກຂອງການປະຕິບັດວິໄນແນວທາງບວກ, ຈະໃຊ້ເວລາພຽງໜ້ອຍດຽວ ແລະ ຈະຂັດຈັງຫວະການສອນບົດຮຽນພຽງໜ້ອຍດຽວ. ເພື່ອຢາກໄດ້ສິ່ງນີ້ ທ່ານມີຄວາມຈຳເປັນຕ້ອງວາງແຜນການຄຸ້ມຄອງຂອງຫ້ອງຮຽນ ທີ່ມີຫຼາຍຕົວປະກອບ.

ບາດກ້າວທຳອິດຢູ່ໃນຂະບວນການຂອງການວາງແຜນ ແມ່ນໃຫ້ຕັດສິນໃຈວ່າແມ່ນອັນໃດທີ່ພວກເຮົາຕີຄວາມໝາຍຂອງຄຳວ່າ "ການຄຸ້ມຄອງຫ້ອງຮຽນ". ເມື່ອເວລາພວກເຮົານຳໃຊ້ຄຳເວົ້າ "ການຄຸ້ມຄອງຫ້ອງຮຽນ" ພວກເຮົາໝາຍເຖິງຂະບວນການ, ຍຸດທະສາດ ແລະ ວິທີການສິດສອນທີ່ຄູສອນນຳໃຊ້ເພື່ອສ້າງສະພາບແວດລ້ອມ ຫ້ອງຮຽນທີ່ສົ່ງເສີມການຮ່ຳຮຽນ ຄືການສ້າງ ແລະ ຄຸ້ມຄອງການປະພຶດ ແລະ ກິດຈະກຳຂອງການຮ່ຳຮຽນຂອງນັກຮຽນເປັນລາຍບຸກຄົນ ແລະເປັນກຸ່ມຢູ່ໃນສະພາບແວດລ້ອມນີ້. ດັ່ງນັ້ນ, ການຄຸ້ມຄອງຫ້ອງຮຽນທີ່ມີປະສິດທິຜົນຈຶ່ງໄດ້ສ້າງສະພາບແວດລ້ອມທີ່ນຳໄປສູ່ການພັດທະນາການສິດສອນສຳລັບພວກເຮົາ ແລະ ພັດທະນາການຮ່ຳຮຽນ ແລະ ດ້ານການປະພຶດຂອງນັກຮຽນທຸກຄົນ. ການຄຸ້ມຄອງຫ້ອງຮຽນທີ່ບໍ່ມີປະສິດທິຜົນມັກຈະສ້າງຄວາມຫຍຸ້ງຍາກສັບສົນເລື້ອຍໆ.ນັກຮຽນຂອງພວກເຮົາບໍ່ຮູ້ວ່າພວກເຮົາ ມີຄວາມຄາດຫວັງໃນຕົວຂອງເຂົາເຈົ້າແນວໃດ,ເຂົາເຈົ້າບໍ່ເຂົ້າໃຈວ່າຈະປະພຶດຕົນແນວໃດ ຫຼືຈະຕອບສະໜອງແນວໃດ, ເຂົາເຈົ້າບໍ່ຮູ້ຈັກຂອບເຂດຈຳກັດ ແລະ ເຂົາເຈົ້າບໍ່ຮູ້ຜົນໄດ້ຮັບອັນສຸດທ້າຍ ທີ່ອາດຈະເກີດຂຶ້ນສຳລັບກາປະພຶດທີ່ບໍ່ດີ. ການຄຸ້ມຄອງຫ້ອງຮຽນທີ່ມີປະສິດທິຜົນ ເປັນທັກສະທີ່ມີຄວາມສຳຄັນ ແລະ ຍາກທີ່ສຸດທີ່ຄູສອນໃໝ່ຈະຕ້ອງຮ່ຳຮຽນເອົາທັກສະນີ້. ແມ່ນແຕ່ຄູຜູ້ມີປະສົບການກໍຍັງປະເຊີນໜ້າກັບນັກຮຽນ ຫຼື ທັງໝົດຫ້ອງຮຽນທີ່ທ້າທາຍທັກສະການຄຸ້ມຄອງທີ່ມີມາແຕ່ດົນ ແລະ ຊຸກດັນໃຫ້ພວກເພິ່ນເພື່ອຊອກຫາວິທີທາງອັນໃໝ່ ເພື່ອຈັດການກັບສະພາບການຂອງຫ້ອງຮຽນ. ຫ້ອງຮຽນແມ່ນບ່ອນທີ່ນັກຮຽນມາເຕົ້າໂຮມກັນ ເພື່ອຮ່ຳຮຽນ. ການສ້າງສະພາບແວດລ້ອມ

ໃຫ້ມີຄວາມປອດໄພ ແລະ ເປັນລະບຽບຢູ່ໃນຫ້ອງຮຽນ ຈຶ່ງເປັນທັກສະທີ່ຈະຕ້ອງສືບຕໍ່ຄົ້ນຄິດຕໍ່ໄປ ສຳລັບຄູເພື່ອຈະໃຫ້ສະພາບແວດລ້ອມຂອງການຮ່ຳຮຽນດີທີ່ສຸດສຳລັບນັກຮຽນທຸກຄົນ.

## 2. ການເຮັດໃຫ້ສະພາບແວດລ້ອມຂອງການຮຽນຮູ້ ມີຄວາມສະດວກສະບາຍ

ທ່ານເຄີຍໄດ້ຮ່ຳຮຽນຢູ່ໃນຫ້ອງຮຽນທີ່ແອອັດບໍ່? ອາດຈະແອອັດໂດຍມີຄົນຫຼາຍ ຫຼື ມີວັດຖຸສິ່ງຂອງຫຼາຍຢ່າງໃນຫ້ອງ ເຊັ່ນ ເຄື່ອງເຟີນີເຈີ. ຕອນທຳອິດ ທ່ານມີຄວາມຮູ້ສຶກແນວໃດ? ຫຼັງຈາກນັ້ນໄປໄດ້ໄລຍະໜຶ່ງ, ຄວາມຮູ້ສຶກທ່ານມີການປ່ຽນແປງບໍ່?. ເມື່ອເຂົ້າໄປໃນຫ້ອງ, ພວກເຮົາຫຼາຍຄົນອາດມີຄວາມຕົກຕະລຶງໃນຂັ້ນຕົ້ນ, ແຕ່ເມື່ອພວກເຮົາ ຈຳເປັນຕ້ອງໄດ້ເລີ່ມຕົ້ນເຮັດວຽກຕົວຈິງຢູ່ໃນຫ້ອງ ແລະ ປະຕິສົນທິກັບຜູ້ອື່ນໆ, ພວກເຮົາອາດຈະເລີ່ມມີຄວາມຮູ້ສຶກທາງລົບ. ພວກເຮົາອາດຈະກາຍເປັນຄົນໝົດຫວັງ ຫຼືໃຈຮ້າຍ ຫຼືພວກເຮົາອາດຈະຖອຍອອກໄປຫາແຈຫ້ອງ ແລະ ພະຍາຍາມຫຼີກລ້ຽງສິ່ງອື່ນໆ ຫຼື ຫລີກລ້ຽງການລົ້ມ ຫຼື ກະທົບກະແທກກັບວັດຖຸຕ່າງໆຢູ່ໃນຫ້ອງ.

ໃນຫ້ອງຮຽນທີ່ບໍ່ໄດ້ຮັບການຈັດສັນທີ່ດີ, ນັກຮຽນກໍອາດຈະມີຄວາມຮູ້ສຶກສາເຊັ່ນດຽວກັນ. ຢູ່ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍຄົນ, ທ່ານຕ້ອງຈັດຫ້ອງທີ່ທ່ານສາມາດເຫັນທຸກຄົນ ແລະ ໃຫ້ພະຍາຍາມພິຈາລະນາໃຊ້ຍຸດທະສາດ ສຳຄັນ 3 ຢ່າງດັ່ງນີ້. ທຳອິດໃຫ້ຍົກຍ້າຍເຄື່ອງເຟີນີເຈີທີ່ບໍ່ຈຳເປັນອອກ. ໃຫ້ໃຊ້ສາດແທນໂຕະ, ໃຫ້ນຳໃຊ້ຖ້ານຕູ້ໃສ່ເຄື່ອງທີ່ຕິດກັບຝາຫ້ອງ ແລະ ເອົາອຸປະກອນທີ່ນັກຮຽນບໍ່ຕ້ອງການໃຊ້ເປັນປົກກະຕິນັ້ນອອກຈາກພື້ນທີ່ຫ້ອງຮຽນ. ຖ້າຫ້ອງຮຽນຂອງທ່ານມີຕູ້ສຳລັບໃສ່ເຄື່ອງຂອງສ່ວນຕົວນັກຮຽນ ໃຫ້ເອົາໄປໄວ້ຢູ່ທາງນອກຫ້ອງຮຽນ. ຖ້າເປັນໄປໄດ້ໃຫ້ເອົາສິ່ງຂອງສ່ວນຕົວ, ອຸປະກອນການສອນ ແລະ ສິ່ງຂອງອື່ນໆ ທີ່ທ່ານບໍ່ໄດ້ນຳໃຊ້ໃນເວລາສິດສອນນັ້ນໄປໄວ້ ຢູ່ໃນຫ້ອງພັກ ຜ່ອນຂອງຄູສອນ ຫຼື ເອົາໄວ້ຢູ່ໃນສະຖານທີ່ອື່ນໆ ທີ່ປອດໄພຢູ່ນອກຫ້ອງຮຽນ.

**ຍຸດທະສາດອັນທີສອງ** ແມ່ນຕ້ອງມີຫົວຄິດປະດິດສ້າງຢູ່ໃນວິທີການສິດສອນຂອງທ່ານ ແລະ ເຮັດໃຫ້ຫ້ອງຮຽນມີການພົວພັນກັນ ເພື່ອຫຼຸດຜ່ອນຄວາມຮູ້ສຶກແອອັດ. ໃຫ້ພະຍາຍາມເຮັດການບັນລະຍາຍບົດຮຽນໃນພາກສ່ວນໃດໜຶ່ງເທົ່ານັ້ນ ເຊັ່ນ ໃຊ້ເວລາເຮັດການບັນລະຍາຍ 20 ນາທີສຳລັບບົດຮຽນໜຶ່ງຊົ່ວໂມງ ແລະ ໃຫ້ສຸມໃສ່ໜຶ່ງຫາສອງຫົວຂໍ້ ຫຼື ແນວຄວາມຄິດ ທີ່ສຳຄັນ (ຕົວຢ່າງເວົ້າເລື່ອງຮູບເລຂາຄະນິດ) ແທນທີ່ຈະໃຫ້ຂໍ້ມູນຂ່າວສານເປັນຈຳນວນຫຼາຍໃນຄັ້ງດຽວ. ອັນນີ້ມັນເປັນເວລາສູງສຸດ ທີ່ທ່ານຈະຮັກສາຄວາມຕັ້ງໃຈຂອງນັກຮຽນໄວ້ໄດ້, ຫຼັງຈາກນັ້ນໃຫ້ຈັດແບ່ງນັກຮຽນເປັນກຸ່ມນ້ອຍ ແທນທີ່ຈະມີຫຼາຍຄົນ. ໃຫ້ສັບປົນນັກຮຽນຍິງ-ຊາຍ ຢູ່ໃນກຸ່ມດຽວກັນແທນທີ່ຈະແຍກຍິງ-ຊາຍຕ່າງຫາກ. ເອົາກິດຈະກຳເພີ່ມໃຫ້ນັກຮຽນ ເຊັ່ນ ໃຫ້ກຸ່ມໜຶ່ງພະຍາຍາມຄົ້ນຄິດຮູບທີ່ເປັນວົງກົມເທົ່າທີ່ເຂົາສາມາດຄິດໄດ້ໃຫ້ກຸ່ມອື່ນໆ ຄິດເລື່ອງວັດຖຸທີ່ເປັນຮູບຈະຕຸລັດເທົ່າທີ່ເຂົາຈະຄິດໄດ້. ໃນເວລາໃກ້ຈະໝົດຊົ່ວໂມງສອນ ໃຫ້ນັກຮຽນກັບມາບ່ອນເກົ່າ ແລະ ໃຫ້ແຕ່ລະກຸ່ມນຳສະເໜີສິ່ງທີ່ເຂົາໄດ້ຮຽນຮູ້.

**ຍຸດທະສາດທີ່ສາມ** ແມ່ນນຳໃຊ້ເນື້ອທີ່ຢູ່ນອກຫ້ອງຮຽນເລື້ອຍໆ ເທົ່າທີ່ເປັນໄປໄດ້. ເດີ່ນໂຮງຮຽນສາມາດເປັນຊັບພະຍາກອນອັນອຸດົມຮັ່ງມີ ເພື່ອນຳໃຊ້ເຂົ້າໃນການຮຳຮຽນໃນລະບົບ. ນອກຫ້ອງຮຽນນັກຮຽນສາມາດຄົ້ນຄວ້າຮຽນຮູ້ໄດ້ ເຊິ່ງເປັນສ່ວນໜຶ່ງ ຂອງການຮຳຮຽນຂອງເຂົາເຈົ້າ ແລະ ເຂົາເຈົ້າສາມາດຮຳຮຽນດ້ວຍຄວາມມ່ວນຊື່ນ ຫຼາຍກວ່າຢູ່ໃນຫ້ອງຮຽນທີ່ແອອັດ. ເດີ່ນໂຮງຮຽນເປັນບ່ອນທີ່ສຳຄັນສຳລັບນັກຮຽນ ເພື່ອພັດທະນາທັກສະທາງດ້ານສັງຄົມ ແລະ ຄວາມຮູ້. ເດີ່ນໂຮງຮຽນໃຫ້ໂອກາດແກ່ທ່ານ ເພື່ອເຮັດໃຫ້ສະພາບແວດລ້ອມຂອງການຮຳຮຽນຂອງນັກຮຽນມີຄວາມຫຼາກຫຼາຍ ແລະ ພັດທະນາບົດຮຽນໃຫ້ມີຄວາມສຳຄັນ ກ່ຽວກັບການຮ່ວມມືຊຶ່ງກັນ ແລະ ກັນ, ຄວາມເປັນເຈົ້າຕົນເອງ, ຄວາມເປັນສ່ວນຕົວ, ຄວາມນັບຖືແລະຄວາມຮັບຜິດຊອບ. ພື້ນທີ່ຂອງເດີ່ນໂຮງຮຽນ ສາມາດນຳໃຊ້ເປັນສູນກາງຂອງກິດຈະກຳທີ່ສະໜັບສະໜູນສິ່ງທີ່ໄດ້ຮຽນກ່ຽວກັບວິຊາຮຽນທີ່ຮຽນຢູ່ໃນຫ້ອງຮຽນ, ຕົວຢ່າງ, ຢູ່ໃນຕົວຢ່າງກັບຮູບເລຂາຄະນິດ ຄູສາມາດບອກໃຫ້ນັກຮຽນຄົ້ນຄິດນຳໃຊ້ເດີ່ນໂຮງຮຽນ ແລະ ກຳນົດຮູບເລຂາຄະນິດໃຫ້ໄດ້ຫຼາຍເທົ່າທີ່ຈະເຮັດໄດ້. ແລ້ວນັ່ງຢູ່ໃນກ້ອງຮົ່ມຕົ້ນໄມ້ ແລະ ຂຽນຈຳນວນຮູບເລຂາຕາມຈຳນວນທີ່ເຂົາເຈົ້າໄດ້ຄົ້ນພົບ. ໃຫ້ຕິດຕາມຄວາມຄືບໜ້າຂອງເຂົາເຈົ້າກ່ອນຈະໝົດເວລາສອນ 10 ນາທີ ໃຫ້ເຕົ້າໂຮມນັກຮຽນ. ອາດຈະຢູ່ໃນຫ້ອງ ຫລື ຢູ່ນອກຫ້ອງຮຽນກໍໄດ້, ແລ້ວໃຫ້ເຂົາເຈົ້ານຳສະເໜີສິ່ງຄົ້ນພົບຂອງເຂົາເຈົ້າ.

**ເຄື່ອງເຟີນີເຈີ.** ຖ້າຫາກຫ້ອງຮຽນມີເນື້ອທີ່ພຽງພໍ, ໃຫ້ພິຈາລະນາຈັດສັນໂຕະນັກຮຽນ ໃຫ້ເປັນຮູບແບບແຕກຕ່າງກັນ ເຊັ່ນ ເປັນຮູບວົງມົນ ຫຼື ຮູບຕົວ “U” ສຳລັບກິດຈະກຳສົນທະນາກັນ, ຈັດໂຕະ ເຂົ້າກັນເປັນຮູບຈະຕຸລັດສຳລັບເຮັດວຽກເປັນກຸ່ມ, ຈັດເປັນແຖວສຳລັບເຮັດການກວດກາ ຫຼືວຽກເປັນລາຍບຸກຄົນ. ໃຫ້ຄຳນຶງເຖິງຄວາມສະດວກໃນການເຄື່ອນໄຫວໄປມາ ຢູ່ລະຫວ່າງການຈັດສັນນີ້. ສ່ວນເນື້ອທີ່ທີ່ຖືກນຳໃຊ້ເລື້ອຍໆ ແລະ ແຖວທາງຍ່າງ (ເຂດຍ່າງໄປມາ ເຊັ່ນ ທາງຍ່າງລະຫວ່າງແຖວໂຕະ) ບໍ່ຄວນໃຫ້ມີອັນໃດກີດຂວາງ ເພື່ອໃຫ້ງ່າຍແກ່ການໄປມາຫາຜູ້ໃດຜູ້ໜຶ່ງ. ໃຫ້ພິຈາລະນານຳໃຊ້ຖ້ານໃສ່ປື້ມ, ໂຕະ ຫຼື ແຜ່ນພົມເພື່ອເຮັດເປັນບ່ອນນຳໃຊ້ພິເສດ ຖ້າຫາກມີຄວາມຈຳເປັນຈະຕ້ອງແບ່ງຫ້ອງຂອງທ່ານ ຫຼື ຕ້ອງການມີເນື້ອທີ່ຝາຫຼາຍຕື່ມ ເພື່ອວາງສະແດງຜົນການຮຽນຂອງນັກຮຽນ ກໍໃຫ້ພິຈາລະນາທາງເລືອກທີ່ມີລາຄາຖືກເຊັ່ນນຳໃຊ້ທາງດ້ານຫຼັງຕູ້ໃສ່ປື້ມ, ຜືນສາດທີ່ເຮັດດ້ວຍຜ້າ ຫຼື ໄມ້ປ່ອງທີ່ນັກຮຽນ ຫລື ຜູ້ປົກຄອງນັກຮຽນເຮັດເອງ. ຜືນສາດເຫຼົ່ານີ້ຍັງສາມາດນຳໃຊ້ເພື່ອແບ່ງຂັ້ນຫ້ອງຮຽນຢູ່ໃນໂຮງຮຽນ ບ່ອນທີ່ບໍ່ມີຝາຂັ້ນຫ້ອງໄດ້ອີກດ້ວຍ.

**ສູນຕ່າງໆ:** ສູນກິດຈະກຳຈະໃຫ້ໂອກາດແກ່ນັກຮຽນ ຫຼື ກຸ່ມນັກຮຽນໄດ້ເຮັດວຽກໂຄງການ ຫຼື ກິດຈະກຳດ້ວຍບາດກ້າວເດີນຂອງເຂົາເຈົ້າເອງ. ຢູ່ພາຍໃນຫ້ອງຮຽນມີຄວາມຈຳເປັນຕ້ອງສ້າງ

ສູນຂຶ້ນເພື່ອໃຫ້ມີບ່ອນວ່າງຮຽນ/ເຮັດວຽກ, ເປັນບ່ອນເກັບມ້ຽນເຄື່ອງມື ແລະ ອຸປະກອນຕ່າງໆ, ແລະ ເປັນບ່ອນເພື່ອຕິດຂໍ້ແນະນຳຕ່າງໆ. ຢູ່ໃນຫ້ອງຮຽນທີ່ແອອັດ, ສູນກິດຈຳກຳສາມາດຈັດໃສ່ໃນສະຖານທີ່ຕ່າງໆຂອງເດີ່ນໂຮງຮຽນ, ນັກຮຽນສາມາດນຳເອົາສິ່ງຂອງຈຳເປັນ ເພື່ອໄປດຳເນີນກິດ ຈະກຳຢູ່ສູນ.

**ອຸປະກອນການສຶກສາ ແລະ ຊັບພະຍາກອນສຳລັບການສິດສອນ:** ຈຳເປັນຕ້ອງເກັບມ້ຽນປຶ້ມແບບຮຽນ ແລະ ອຸປະກອນການສຶກສາອື່ນໆ ໄວ້ເພື່ອເຂົາເຈົ້າສາມາດໄປເອົາ ແລະ ເກັບມ້ຽນໄວ້ໄດ້ ງ່າຍ. ເຄື່ອງມື ເຊັ່ນ: ສໍຂາວ, ບັນທັດ, ເຈ້ຍ, ສີ ແລະ ມີດຕັດ ຈຳເປັນຕ້ອງຈັດວາງໄວ້ບ່ອນທີ່ນັກຮຽນໄປເອົາໄດ້ງ່າຍ ໂດຍບໍ່ລົບກວນຜູ້ອື່ນໆ. ອຸປະກອນການສຶກສາ, ອຸປະກອນການສິດສອນເຊັ່ນແຜ່ນກະດານດຳນ້ອຍ,ຂາຄ້ຳກະດານດຳ, ແຜນພູມ, ໂຕະນ້ອຍເຮັດວຽກຈຳເປັນຕ້ອງເກັບມ້ຽນໄວ້ ແລະ ສາມາດເອົາມານຳໃຊ້ໄດ້ແຕ່ບໍ່ໃຫ້ຄັບຫ້ອງ.

**ຜົນງານຂອງນັກຮຽນ:** ການເກັບຮັກສາຜົນງານຂອງນັກຮຽນ ສາມາດຖ້ວມລົ້ນໄດ້ໄວທີ່ສຸດ ຖ້າຫາກ ບໍ່ໄດ້ມີການວາງແຜນໄວ້. ມີຄູສອນຈຳນວນໜຶ່ງນຳໃຊ້ແຟ້ມແຕ່ລະຄົນ ເພື່ອເກັບຮັກສາຜົນງານຂອງນັກຮຽນ. ແຟ້ມນັ້ນອາດເຮັດຂຶ້ນສຳລັບນັກຮຽນແຕ່ລະຄົນ ແລະ ເຮັດ *ໂດຍນັກຮຽນແຕ່ລະຄົນ* ສຳລັບແຕ່ລະວິຊາ ຫຼື ສຳລັບກຸ່ມນັກຮຽນແຕ່ລະກຸ່ມ. ພື້ນທີ່ກໍມີຄວາມຈຳເປັນເພື່ອວາງສະແດງຜົນງານຂອງນັກຮຽນເຊັ່ນດຽວກັນ. ພື້ນທີ່ເຫຼົ່ານີ້ ສາມາດນຳໃຊ້ຝາຫ້ອງຮຽນ ຫຼື ມັດຫ້ອຍຜົນງານຂອງນັກຮຽນດ້ວຍສາຍເຊືອກ, ຈັບຕິດດ້ວຍເຫຼັກຂັດ, ສາຍເທັບ ຫຼື ເຂັມມຸດ. ການປະດັບປະດາຫ້ອງດ້ວຍຜົນງານຂອງນັກຮຽນ ຈະຊ່ວຍເພີ່ມຄວາມດຶງດູດໃຈຂອງຫ້ອງຮຽນ ແລະ ເຮັດໃຫ້ຫ້ອງເປັນຕາໜ້າຢາກມາຮຽນຫຼາຍຂຶ້ນ, ເຖິງແມ່ນວ່າຈະມີນັກຮຽນຈຳນວນຫຼາຍກໍຕາມ.

**ການມີສ່ວນຮ່ວມຂອງນັກຮຽນ:** ນັກຮຽນສາມາດຊ່ວຍເຫຼືອຫຼາຍທີ່ສຸດ ໃນການຄຸ້ມຄອງພື້ນທີ່ຫ້ອງຮຽນ ແລະ ຊ່ວຍເຫຼືອເຂົາເຈົ້າເພື່ອສ້າງຈິດສຳນຶກໃນຄວາມຮັບຜິດຊອບ. ນັກຮຽນສາມາດແຂວນຜົນງານຂອງເຂົາເຈົ້າ, ປະດິດສ້າງກະດານຂ່າວ ແລະ ເກັບມ້ຽນອຸປະກອນການສຶກສາໃນຕອນທ້າຍຊົ່ວໂມງຮຽນແຕ່ລະບົດ. ນັກຮຽນຍັງສາມາດຊ່ວຍໃນການແກ້ ໄຂບັນຫາຂອງພື້ນທີ່. ເມື່ອເວລາມີບັນຫາເກີດຂຶ້ນ ເຊັ່ນ ນັກຮຽນຕຳຊູນກັນ ຫຼື ບໍ່ມີບ່ອນນັ່ງພຽງພໍ ກໍບອກໃຫ້ ນັກຮຽນສະເໜີແນະວິທີແກ້ໄຂ.

*ໃຫ້ຈື່ຈຳໄວ້ວ່າ:ລະບຽບວິໄນທີ່ດີ ແລະ ການສ້າງການປະພຶດຂອງນັກຮຽນໃນທາງບວກ ຈະບັງເກີດຂຶ້ນຖ້າຫາກວ່າຫ້ອງຮຽນຂອງທ່ານ ແລະ ກິດຈະກຳຂອງຫ້ອງຮຽນໄດ້ຈັດເປັນໂຄງຮ່າງ ແລະ ມີການ ຈັດສັນ ເພື່ອຊຸກຍູ້ ສົ່ງເສີມພຶດຕິກຳແບບຮ່ວມມືກັນ ລະຫວ່າງ ນັກຮຽນ ແລະຕົວທ່ານເອງ.*

## 3. ການສ້າງກິດຈະວັດປະຈຳຫ້ອງໃນຫ້ອງຮຽນ

ເມື່ອໃດທາກທ່ານ ໄດ້ສ້າງແຜນປະຕິບັດ/ກິດຈະວັດປະຈຳວັນຂອງຫ້ອງຮຽນ, ໂອກາດທີ່ນັກຮຽນຈະປະພຶດແນວບໍ່ດີກໍຫລຸດລົງ ເພາະວ່ານັກຮຽນຂອງພວກເຮົາຮູ້ຈັກວ່າອັນໃດ ທີ່ເຂົາຖືກຄາດຫວັງຈາກຕົວເຂົາ ແລະ ອັນໃດທີ່ເຂົາຄາດຫວັງວ່າຈະເຮັດ. ນັກຮຽນຍັງຊ່ອຍເຫຼືອພວກເຮົາ ເພື່ອຫຼີກລ້ຽງ "ການເອີ້ນຜິດ" ເຊິ່ງເປັນການຕີຄວາມໝາຍຜິດຕໍ່ພຶດຕິກຳຂອງນັກຮຽນວ່າເປັນການປະພຶດທີ່ບໍ່ເໝາະສົມ, ຕົວຢ່າງ: ນັກຮຽນບໍ່ຮູ້ວ່າຕ້ອງແຫລມສໍດຳ ຫຼັງຈາກຮຽນແລ້ວບໍ່ແມ່ນໃນເວລາກຳລັງຮຽນ ຫຼື ວ່າ ຢ່າງໜ້ອຍ ກໍຕ້ອງຍົກມືຂຶ້ນເພື່ອຂໍອະນຸຍາດ. ຍິ່ງໄປກວ່ານັ້ນ ຖ້າຫາກນັກຮຽນຮູ້ຈັກບາດກ້າວອັນຈຳເປັນ ເພື່ອສຳເລັດວຽກສະເພາະໃດໜຶ່ງ ເຂົາກໍອາດສາມາດເຮັດສຳເລັດສົມບູນໄດ້ຕາມລຳດັບ. ໃຫ້ທ່ານສ້າງແຜນ ສຳລັບກິດຈະກຳເຫຼົ່ານີ້ ໃຫ້ສອດຄ່ອງສຳລັບພື້ນທີ່ວ່າງຂອງທ່ານ ແລະ ຮູບແບບຄຸ້ມຄອງຂອງທ່ານ (ພວກເຮົາຈະສົນທະນາໃນຂ້າງລຸ່ມນີ້). ຖ້າຫາກກິດຈະວັດປະຈຳບໍ່ມີປະສິດທິຜົນ, ໃຫ້ເອົານັກຮຽນຂອງທ່ານເຂົ້າມາຮ່ວມ ໃນການອອກແບບຄືນໃໝ່. ນີ້ຄືບາງກິດຈະວັດປະຈຳວັນທີ່ທ່ານ ແລະ ນັກຮຽນຂອງ ທ່ານ ສາມາດວາງແຜນດ້ວຍກັນ.

**ການເຄື່ອນໄຫວ.** ໃຫ້ສ້າງແຜນສຳລັບການເຂົ້າ ແລະ ການອອກຫ້ອງຮຽນ ກໍຄືການປ່ຽນແປງການຈັດສັນຫ້ອງຮຽນ ໂດຍອີງຕາມວິຊາທີ່ຈະສອນ ເຊັ່ນ ການເຄື່ອນຍ້າຍການຈັດສັນຫ້ອງທັງໝົດໃຫ້ເປັນກຸ່ມນ້ອຍ ສຳລັບເຮັດການກວດກາວິຊາສິລະປະ ຫຼື ວິຊາວິທະຍາສາດ. ນອກນີ້ ທ່ານຍັງຕ້ອງວາງແຜນ ເພື່ອສາມາດຕອບສະໜອງຄວາມຕ້ອງການທີ່ຈຳເປັນ/ພິເສດຂອງນັກຮຽນສ່ວນບຸກຄົນ ເຊັ່ນ ເມື່ອຕ້ອງການແຫຼມສໍ ຫຼື ຕ້ອງການເອົາເຄື່ອງ ໃຊ້ສ່ວນຕົວສຳລັບຮ່ຳຮຽນ ເຊັ່ນ ອຸປະກອນການແຕ້ມ.

**ກິດຈະກຳນອກຫຼັກສູດການສອນ.** ວຽກງານເຫຼົ່ານີ້ປະກອບມີກິດຈະກຳຕ່າງໆ ເຊັ່ນ ບັນທຶກຈຳນວນຄົນທີ່ມາຮຽນ, ເກັບກຳໃບອະນຸຍາດ ຫຼື ບັນຊີຄົນຂາດ ແລະ ຮັກສາຄວາມເປັນລະບຽບຮຽບຮ້ອຍຂອງຫ້ອງຮຽນ. ເມື່ອໄດ້ຮັບອະນຸຍາດ, ນັກຮຽນຈະສາມາດຊ່ອຍເຮັດວຽກ ຫຼື ກິດຈະກຳເຫຼົ່ານີ້ ແລະ ພິເສດແມ່ນນັກຮຽນຜູ້ທີ່ມີຄວາມຮູ້ສຶກວ່າ ເຂົາເຈົ້າຕ້ອງການຄວາມເອົາໃຈໃສ່. ກິດຈະກຳເຫຼົ່ານີ້ຈຳນວນ ໜຶ່ງສາມາດນຳໃຊ້ເປັນກິດຈະກຳການຮ່ຳຮຽນໄດ້ເຊັ່ນກັນ ເຊັ່ນ ຄິດໄລ່ເປີເຊັນຂອງນັກຮຽນຜູ້ທີ່ມາຫ້ອງຮຽນ ໃນມື້ທີ່ກຳລັງສອນວິຊາຄະນິດສາດ.

**ການຄຸ້ມຄອງ ແລະ ການເຄື່ອນຍ້າຍວັດຖຸອຸປະກອນ.** ຖ້າຫາກກິດຈະວັດປະຈຳວັນໄດ້ຖືກສ້າງຂຶ້ນ ສຳລັບການແຈກຢາຍ, ການເກັບທ້ອນ ແລະ ການເກັບມ້ຽນອຸປະກອນການສິດສອນ ແລະຮ່ຳຮຽນ, ນັກຮຽນຈະສາມາດຊ່ອຍເຮັດວຽກດັ່ງກ່າວສຳເລັດຢ່າງວ່ອງໄວ. ຖ້າຫາກອຸປະກອນໄດ້ຖືກກະກຽມ ແລະ ຈັດສັນໄວ້ລ່ວງໜ້າ, ການເຄື່ອນຍ້າຍໃນລະຫວ່າງເຮັດກິດຈະກຳຈະຄ່ອງ

ແລ້ວ ແລະ ໃຊ້ເວລາໜ້ອຍ. ອຸປະກອນທີ່ຈຳເປັນອາດຈະຖືກຂຽນໄວ້ຢູ່ໃນຕາຕະລາງປະຈຳວັນ ເພື່ອໃຫ້ນັກຮຽນໄດ້ຮູ້ວ່າອັນໃດມີຄວາມຈຳເປັນ ແລະ ສາມາດກະກຽມສຳລັບກິດຈະກຳໜຶ່ງໆ. ໃນຂະນະທີ່ອຸປະກອນສຳລັບກິດຈະກຳ ທີ່ແລ້ວໄປນັ້ນ ກໍຈະຖືກເກັບມ້ຽນໄວ້ ຫຼື ເຕົ້າໂຮມໄວ້.

**ການເຮັດວຽກເປັນກຸ່ມ**. ການເຮັດວຽກເປັນກຸ່ມຈະສົ່ງເສີມການຮ່ຳຮຽນແບບຮ່ວມມືກັນ. ການເຮັດວຽກເປັນກຸ່ມຈະສອນໃຫ້ນັກຮຽນຮູ້ເຮັດວຽກຮ່ວມກັນ ແລະ ໄດ້ຮຽນຮູ້ຄຸນຄ່າຂອງການເຮັດວຽກເປັນທີມ. ສະມາຊິກທີມງານພາຍໃນກຸ່ມຄວນມີວຽກເຮັດ, ແລະ ນັກຮຽນແຕ່ລະຄົນຄວນມີໂອກາດ ເພື່ອເຮັດວຽກແຕ່ລະອັນຕະຫຼອດເວລາ. ໂດຍສົມທົບກັບນັກຮຽນຂອງທ່ານ, ໃຫ້ທ່ານສ້າງຂໍ້ກຳນົດໜ້າວຽກ ແລະ ກິດຈະວັດປະຈຳວັນເພື່ອມອບວຽກໃຫ້ນັກຮຽນເຮັດ. ວຽກທີ່ມອບໃຫ້ນັ້ນ ອາດຈະເປັນຜູ້ອຳນວຍຄວາມສະດວກ(facilitaotr), ເປັນຜູ້ຈັບເວລາ, ເປັນຜູ້ລາຍງານ ເປັນຜູ້ບັນທຶກ, ເປັນຜູ້ຊຸກຍູ້, ເປັນຜູ້ຕັ້ງ ຄຳຖາມ, ເປັນຜູ້ຄຸ້ມຄອງອຸປະກອນ ຫຼື ຜູ້ຄຸມງານ.

## 4. ການສ້າງລະບຽບຫ້ອງຮຽນ ຮ່ວມກັບນັກຮຽນ ແລະ ຜູ້ປົກຄອງ

ຫ້ອງຮຽນທຸກໆຫ້ອງຈຳເປັນຕ້ອງມີກົດລະບຽບ ເພື່ອໃຫ້ເຮັດໜ້າທີ່ໄດ້ຢ່າງມີປະສິດທິຜົນ. ບາງຄັ້ງ "ກົດລະບຽບ" ນີ້ເອີ້ນວ່າ "ຄວາມຄາດຫວັງ" ຫຼື "ມາດຖານການປະພຶດ".

ລັກສະນະທຳມະຊາດຂອງກົດລະບຽບຫ້ອງຮຽນ, ກິດຈະກຳປະຈຳວັນ ແລະ ວິທີການສ້າງແມ່ນປ່ຽນແປງໄປຕາມລະບົບຄວາມເຊື່ອຂອງຄູສອນ. ພວກເຮົາຈະເຮັດວຽກຮ່ວມກັບນັກຮຽນຢູ່ໃນຫ້ອງຮຽນແນວໃດ, ລວມທັງການສ້າງກົດລະບຽບ ແລະ ກິດຈະວັດປະຈຳວັນນັ້ນ ແມ່ນຂຶ້ນກັບຄວາມເຊື່ອຂອງພວກເຮົາ ກ່ຽວກັບເລື່ອງທີ່ວ່ານັກຮຽນຮູ້ວິທີປະພຶດຄືແນວໃດ. ໃນຂົ້ວໜຶ່ງພວກເຮົາບາງຄົນອາດເຊື່ອວ່າ ນັກຮຽນ ເປັນຜູ້ຮັບເອົາຄວາມຮູ້ແບບບໍ່ຈູບຈ້າວຫ້າວຫັນ ແລະ ເຂົາເຈົ້າຈຳເປັນຕ້ອງເຮັດຕາມລະບົບ ແລະ ໃຫ້ ເຫັນສິ່ງທີ່ຈະໄດ້ຮັບ ຫຼື ຜົນປະໂຫຍດຂອງການຮ່ຳຮຽນຂອງເຂົາເຈົ້າຢ່າງຈະແຈ້ງ. ຈາກຜົນດັ່ງກ່າວ ພວກເຮົາອາດເນັ້ນໜັກໃສ່ກົດລະບຽບ ແລະ ກິດຈະວັດປະຈຳວັນທີ່ໝັ້ນຄົງມີມາດຕະຖານ. ໃນອີກຂົ້ວໜຶ່ງ, ພວກເຮົາຈຳນວນໜຶ່ງອາດ ເຊື່ອວ່ານັກຮຽນມີຄວາມຫ້າວຫັນ, ສ້າງສັນ, ກະຕືລືລົ້ນ ແລະ ເປັນຜູ້ແກ້ ບັນຫາທີ່ເປັນເອກະລັກ. ດັ່ງນັ້ນໃນກໍລະນີດັ່ງກ່າວ ພວກເຮົາອາດເນັ້ນໜັກໃສ່ການໃຫ້ທາງເລືອກແກ່ນັກຮຽນພວກເຮົາ. ເມື່ອພວກເຮົາສ້າງລະບຽບ ແລະ ກິດຈະວັດປະຈຳວັນຂອງຫ້ອງຮຽນ *ດ້ວຍການເຂົ້າ ຮ່ວມຂອງນັກຮຽນ,* ພວກເຮົາຈະສາມາດນຳໃຊ້ວິທີການ "ເດີນຕາມທາງສາຍກາງ"ຫຼາຍຂຶ້ນ ເຊິ່ງສາມາດດັດສົມ ຫຼື ປັບປ່ຽນໃຫ້ສອດຄ່ອງ ເພື່ອຕອບສະໜອງໄດ້ກັບສະພາບການທີ່ມີຄວາມແຕກຕ່າງຫຼາກຫຼາຍ ແລະ ມີການປ່ຽນແປງເລື້ອຍໆ ຢູ່ໃນຫ້ອງຮຽນຂອງພວກເຮົາ.

ແນວທາງທົ່ວໄປ ສຳລັບການພັດ ທະນາກົດລະບຽບປະກອບມີ ດັ່ງລຸ່ມນີ້:

- ໃຫ້ສ້າງລະບຽບສັ້ນໆຈັກສາມສີ່ຂໍ້ທີ່ເນັ້ນໃສ່ການປະພຶດທີ່ເໝາະສົມ; ບໍ່ມີຜູ້ໃດນັບທັງຕົວທ່ານ ແລະ ນັກຮຽນຂອງທ່ານຈະຈົດຈຳລະບຽບທີ່ຍາວຍືດ. ໃຫ້ຕິດລະບຽບນັ້ນໄວ້ຢູ່ໃນຫ້ອງຮຽນ ເພື່ອໃຫ້ທຸກຄົນໄດ້ເຫັນ.
- ໃຫ້ພິຈາລະນາການສ້າງກົດລະບຽບ ຫຼື ການວາງຄາດໝາຍສຳລັບປະເດັນຕໍ່ໄປນີ້ເພື່ອເຮັດ ໃຫ້ ຫ້ອງຮຽນດຳເນີນໜ້າທີ່ໄປຢ່າງລາບລື້ນ. (ກ) ໃນຕອນເລີ່ມຕົ້ນ ແລະ ຕອນທ້າຍຂອງຊ່ວງເວລາໃດໜຶ່ງ ຫຼື ຂອງມື້ຮຽນລວມທັງເລື່ອງການເຂົ້າມາຮຽນຕ້ອງເຮັດແນວໃດ ແລະ ສິ່ງທີ່ນັກຮຽນຄວນເຮັດ ຫຼື ບໍ່ຄວນເຮັດໃນຊ່ວງເວລານີ້, (ຂ) ໃຫ້ນຳໃຊ້ວັດຖຸ ແລະ ອຸປະກອນ, (ຄ) ວິທີຂໍອະນຸຍາດ ສຳລັບ ຄວາມຕ້ອງການທີ່ບໍ່ໄດ້ຄາດຫວັງໄວ້ (ເຊັ່ນໄປຫ້ອງນ້ຳ ຫຼື ແຫຼມສໍ),(ງ)ຂະບວນການດຳເນີນການຮຽນຢູ່ກັບບ່ອນນັ່ງ ແລະ ຢູ່ໃນກຸ່ມເປັນເອກະລາດ (ຈ) ວິທີຕັ້ງຄຳຖາມ ແລະ ຕອບຄຳຖາມ.
- ໃຫ້ເລືອກເອົາກົດລະບຽບທີ່ເຮັດໃຫ້ສະພາບແວດລ້ອມຫ້ອງຮຽນເປັນລະບຽບ ແລະ ສົ່ງເສີມການຮ່ຳຮຽນໃຫ້ໄດ້ຮັບຜົນສຳເລັດ. ການປະພຶດຈຳນວນໜຶ່ງເຊັ່ນ ການທຍຳຊິງງຸ້ມ ຫຼືການເຄື່ອນໄຫວເລັກໆນ້ອຍ ທີ່ມີລັກສະນະລົບກວນຜູ້ອື່ນ ນັ້ນບາງທີກໍອາດຈະບໍ່ອຸປະສັກທີ່ສຳຄັນຕໍ່ການຮ່ຳຮຽນ ເວັ້ນເສຍແຕ່ວ່າເຂົາເຈົ້າບິນແຊວ ຫຼື ລົບກວນ.
- ຢ່າໄດ້ສ້າງກົດລະບຽບຂອງຫ້ອງຮຽນທີ່ ທ່ານ ບໍ່ມີຄວາມສະໝັກໃຈ ຫຼື ບໍ່ສາມາດປະຕິບັດໄດ້ ເພື່ອ ບັງຄັບຕະຫຼອດໄປ.
- ໃຫ້ສ້າງກົດລະບຽບທີ່ຈະແຈ້ງ ແລະ ສາມາດເຂົ້າໃຈໄດ້ເທົ່າທີ່ເປັນໄປໄດ້. ກົດລະບຽບຄວນຂຽນໃນຮູບແບບພຶດຕິກຳ: “ໃຫ້ນັ່ງກອດແຂນ ແລະ ນັ່ງຢູ່ຊື່ໆ”ຈະເປັນປະໂຫຍກທີ່ຈະແຈ້ງ ແລະ ຄວນຂຽນຂໍ້ຄວາມທີ່ມີລັກສະນະທາງບວກກວ່າການໃຊ້ຄຳວ່າ “ຢ່າຕີກັນ ຫຼື ບໍ່ໃຫ້ຕີກັນ”
- ໃຫ້ຄັດເລືອກເອົາກົດລະບຽບທີ່ທຸກຄົນຕົກລົງເຫັນດີເປັນເອກະພາບນຳກັນ ຫຼື ຖືຕາມຄຳເຫັນດີ ຂອງທຸກໆຄົນຢູ່ໃນໂຮງຮຽນ. ຖ້າຫາກນັກຮຽນໄດ້ຮຽນຮູ້ວ່າ ເຂົາເຈົ້າບໍ່ສາມາດປະພຶດຕາມແນວ ທາງທີ່ລະບຽບວາງໄວ້ຢູ່ໃນຫ້ອງຮຽນຂອງທ່ານ, ແຕ່ວ່າຢູ່ຫ້ອງອື່ນຊ້ຳພັດສາມາດເຮັດໄດ້, ເຂົາຈະທົດລອງເຮັດໜ້ອຍໜຶ່ງ ເພື່ອເບິ່ງວ່າເຂົາຈະສາມາດປະພຶດແນວບໍ່ດີນັ້ນໄປໄດ້ຫຼາຍເທົ່າໃດ “ໂດຍບໍ່ໃຫ້ໄດ້ຖືກຈັບ”.
- ໃຫ້ທົບທວນກວດເບິ່ງກົດລະບຽບຫ້ອງຮຽນໃຫ້ເປັນປົກກະຕິ ເພື່ອເບິ່ງວ່າມີອັນໃດບໍ່ຈຳເປັນອີກ ແລ້ວ. ຖ້າມີອັນໃດບໍ່ຈຳເປັນອີກແລ້ວ, ກໍໃຫ້ຍ້ອງຍໍຊົມເຊີຍນັກຮຽນ ແລະ ບອກເຂົາເຈົ້າ ຖ້າວ່າມີກົດລະບຽບອັນອື່ນອີກທີ່ຈຳເປັນຕ້ອງປະຈິບັດ.

**ການເຂົ້າຮ່ວມຂອງຜູ້ປົກຄອງ.**

ກົດລະບຽບຈະມີປະສິດທິຜົນຫຼາຍທີ່ສຸດເມື່ອຄູສອນ, ຜູ້ປົກຄອງນັກຮຽນ ແລະ ນັກຮຽນມີພັນທະສະເໝີພາບໃນການສົ່ງເສີມການປະຕິບັດ ແລະ ຮັກສາກົດລະບຽບນັ້ນ. ຢູ່ໃນບາງໂຮງ

ຮຽນ "ຄວາມເປັນປຶກແຜ່ນ" ໄດ້ຖືກສ້າງຂຶ້ນຈາກທຸກພາກສ່ວນເຫຼົ່ານີ້. "ຄວາມເປັນປຶກແຜ່ນ" ແມ່ນຂໍ້ຕົກລົງ ຫຼື ສັນຍາທີ່ເປັນທາງການແບບງ່າຍດາຍ ທີ່ໄດ້ເວົ້າຢ່າງຈະແຈ້ງເຖິງຄວາມຮັບຜິດຊອບສະເພາະຂອງແຕ່ລະພາກສ່ວນ ແລະ ເຊັນຮັບຮອງໂດຍເຂົາເຈົ້າເອງ. ຂໍ້ຄວາມຂອງຄວາມເປັນປຶກແຜ່ນອາດເຮັດເປັນແບບຟອມ ດັ່ງຕໍ່ໄປນີ້. ພວກເຮົາອາດສາມາດສົນທະນາອະພິປາຍໃນກອງປະຊຸມຄັ້ງທຳອິດຂອງສະມາຄົມພໍ່ແມ່ນັກຮຽນ ແລະ ຄູ, ຫຼື ກອງປະຊຸມລະຫວ່າງຜູ້ປົກຄອງ-ນັກຮຽນ-ຄູ. ທ່ານສາມາດປັບ ແລະ ນຳໃຊ້ມັນໃຫ້ເປັນວິທີນຳເອົານັກຮຽນ ແລະ ຜູ້ປົກຄອງເຂົ້າ ຮ່ວມ ຢູ່ໃນການສົ່ງເສີມການປະພຶດທີ່ດີຢູ່ໃນຫ້ອງຮຽນໄດ້ບໍ່?

**ໃນຖານະເປັນພໍ່ແມ່/ ຜູ້ປົກຄອງນັກຮຽນ, ຂ້ອຍຈະ:**

- ສະແດງຄວາມນັບຖື ແລະສະໜັບສະໜູນຊ່ອຍເຫຼືອເດັກຂອງຂ້ອຍ, ຄູສອນ ແລະ ໂຮງຮຽນ.
- ສະໜັບສະໜູນນະໂຍບາຍດ້ານລະບຽບວິໄນ ແລະ ກົດລະບຽບຫ້ອງຮຽນຂອງເດັກຂ້ອຍ.
- ສະໜອງສະຖານທີ່ງຽບສະຫງົບ ແລະ ມີໄຟແຈ້ງດີ ເພື່ອໃຫ້ເດັກໄດ້ຮຽນ ແລະ ຂ້ອຍຈະຊຸຍູ້ຊ່ອຍເຫຼືອການເຮັດວຽກບ້ານໃຫ້ສຳເລັດ.
- ເຂົ້າຮ່ວມກອງປະຊຸມຜູ້ປົກຄອງນັກຮຽນ-ຄູສອນ ຫຼື ກອງປະຊຸມຜູ້ປົກຄອງນັກຮຽນ-ຄູສອນ -ນັກ ຮຽນ ທີ່ຈັດຂຶ້ນຢ່າງເປັນທາງການ ແລະ ບໍ່ເປັນທາງການ.
- ໃນແຕ່ລະມື້, ໂອ້ລົມນຳເດັກຂອງຂ້ອຍ ກ່ຽວກັບກິດຈະກຳຂອງໂຮງຮຽນຂອງລາວ.
- ຕິດຕາມກຳກັບການເບິ່ງລາຍການໂທລະທັດຂອງເດັກ ຫຼື ກິດຈະກຳອື່ນໆທີ່ອາດມີຜົນເສຍຕໍ່ເວລາຮຽນຂອງເດັກ.
- ໃນແຕ່ລະພາກຮຽນ,ໃຫ້ການສະໜັບສະໜູນກິດຈະກຳຂອງໂຮງຮຽນ ຫຼື ກິດຈະກຳຫ້ອງຮຽນຢ່າງໜ້ອຍ ໜຶ່ງກິດຈະກຳ.
- ແຕ່ລະມື້, ອ່ານປຶ້ມນຳເດັກ 10 ນາທີຫຼືໃຫ້ເດັກອ່ານໃຫ້ຂ້ອຍຟັງ.

**ໃນຖານະຂ້ອຍເປັນນັກຮຽນ, ຂ້ອຍຈະ:**

- ພະຍາຍາມເຮັດວຽກ/ຮຽນຈົນສຸດຄວາມສາມາດສະເໝີ.
- ຈະເປັນຄົນທີ່ໃຈດີ ມີຄວາມກະລຸນາ ແລະຊ່ອຍເຫຼືອເພື່ອນຮ່ວມຫ້ອງຮຽນ.
- ສະແດງຄວາມນັບຖືຕົນເອງ, ນັບຖືຄູຂອງຕົນ, ນັບຖືໂຮງຮຽນ ແລະຜູ້ອື່ນໆ.
- ປະຕິບັດຕາມກົດລະບຽບຂອງຫ້ອງຮຽນ ແລະໂຮງຮຽນ.
- ສະແດງຄວາມນັບຖືຊັບສົມບັດຂອງຫ້ອງຮຽນ ແລະໂຮງຮຽນ ດ້ວຍການບໍ່ລັກ ຫຼື ບໍ່ທຳລາຍ.
- ມາໂຮງຮຽນໂດຍມີການກະກຽມວຽກບ້ານ ແລະອຸປະກອນການຮຽນ.
- ມີຄວາມເຊື່ອໝັ້ນວ່າຂ້ອຍສາມາດຮຽນ ແລະຈະຮໍ່າຮຽນ.
- ໃນແຕ່ລະມື້ໃຊ້ເວລາຢ່າງໜ້ອຍ 15 ນາທີ ເພື່ອຮຽນ ຫຼື ອ່ານຢູ່ເຮືອນ.

o ເວົ້າລົມນຳຜູ້ປົກຄອງຂອງຂ້ອຍໃນແຕ່ລະມື້ກ່ຽວກັບກິດຈະກຳຂອງໂຮງຮຽນຂອງ ຂ້ອຍ.

**ໃນຖານະເປັນຄູສອນ, ຂ້ອຍຈະ:**

- ❖ ສະແດງຄວາມນັບຖືນັກຮຽນແຕ່ລະຄົນ ແລະຄອບຄົວຂອງເຂົາເຈົ້າ.
- ❖ ນຳໃຊ້ເວລາຂອງການຮຳຮຽນໃຫ້ມີປະສິດທິຜົນ.
- ❖ ເຮັດໃຫ້ສະພາບແວດລ້ອມມີຄວາມປອດໄພ ແລະສະດວກສະບາຍເພື່ອການຮຳຮຽນ.
- ❖ ຊ່ວຍເຫຼືອໃຫ້ນັກຮຽນເຕີບໃຫຍ່ຂະຫຍາຍຕົວ ໄປຕາມຂີດຄວາມສາມາດສູງສຸດຂອງເຂົາ ເຈົ້າ.
- ❖ ເອົາກິດຈະກຳວຽກບ້ານທີ່ມີຄວາມໝາຍສຳຄັນ ແລະເໝາະສົມໃຫ້ນັກຮຽນ.
- ❖ ສະໜອງການຊ່ວຍເຫຼືອອັນຈຳເປັນແກ່ຜູ້ປົກຄອງນັກຮຽນ ເພື່ອໃຫ້ສາມາດຊ່ວຍເຫຼືອວຽກ ທີ່ມອບໝາຍໃຫ້ເດັກເຮັດ.
- ❖ ບັງຄັບໃຊ້ກົດລະບຽບຂອງໂຮງຮຽນ ແລະ ຫ້ອງຮຽນຢ່າງຍຸຕິທຳ ແລະ ສະເໝີຕົ້ນສະ ເໝີປາຍ.
- ❖ ລາຍງານການປະເມີນຜົນຂອງຄວາມກ້າວໜ້າ ແລະ ຜົນສຳເລັດຂອງການຮຽນທີ່ຊັດເຈນ ໃຫ້ແກ່ນັກຮຽນ ແລະຜູ້ປົກຄອງນັກຮຽນ.
- ❖ ນຳໃຊ້ກິດຈະກຳພິເສດຢູ່ໃນຫ້ອງຮຽນ ເພື່ອເຮັດໃຫ້ການຮຳຮຽນມີຄວາມມ່ວນຊື່ນ.
- ❖ ສະແດງໃຫ້ເຫັນພຶດຕິກຳທີ່ເປັນມືອາຊີບ ແລະ ທັດສະນະຄະຕິອັນຖືກຕ້ອງ.

ນັບແຕ່ບັດນີ້ເປັນຕົ້ນໄປ, ພວກເຮົາຈະເຮັດວຽກຮ່ວມກັນ ເພື່ອປະຕິບັດຂໍ້ສັນຍານີ້.

ເຊັນໂດຍ:

---------------------------------------------

ລາຍເຊັນຜູ້ປົກຄອງ / ວັນທີ

---------------------------------------------

ລາຍເຊັນນັກຮຽນ / ວັນທີ

---------------------------------------------

ລາຍເຊັນຄູສອນ / ວັນທີ

---------------------------------------------

## 5. ມາດຖານສຳລັບການປະພຶດ ແລະ ການຄຸ້ມຄອງທີ່ດີ

ກົດລະບຽບຂອງຫ້ອງຮຽນໄດ້ຈັດມາດຖານຂອງການປະພຶດ ສຳລັບນັກຮຽນຂອງພວກເຮົາໄວ້, ແຕ່ວ່າພວກເຮົາໃນຖານະເປັນຄູສອນຕ້ອງມີມາດຖານເໝືອນກັນ. ຫຼັງຈາກນັ້ນ ພວກເຮົາທັງໝົດ ກໍເປັນຕົວຢ່າງ ຫຼື ຕົວແບບອັນສຳຄັນ ໃຫ້ແກ່ນັກຮຽນຂອງພວກເຮົາ.

- ❖ ພວກເຮົາຄວນບອກນັກຮຽນວ່າ ພວກເຮົາຄາດຫວັງໃຫ້ແຕ່ລະຄົນປະພຶດຢູ່ໃນຫ້ອງຮຽນແນວໃດ ( ນັກຮຽນຂອງພວກເຮົາ ແລະ ພວກເຮົາເອງ ) ແລະ ສົນທະນາຄວາມຄາດຫວັງນີ້ເປັນປະຈຳ.
- ❖ ພວກເຮົາຕ້ອງແຈ້ງກົດລະບຽບຂອງຫ້ອງຮຽນຂອງພວກເຮົາ ໃຫ້ຜູ້ບໍລິຫານໂຮງຮຽນ, ຄູສອນຜູ້ອື່ນໆ ແລະ ຜູ້ປົກຄອງນັກຮຽນໄດ້ຮັບຊາບນຳ ເພື່ອພວກເພິ່ນຈະສາມາດຕິດຕາມກຳກັບ ແລະ ຫຼີກລ້ຽງຄວາມຂັດແຍ່ງກັບພວກເຂົາ.
- ❖ ກົດລະບຽບທີ່ສ້າງຂຶ້ນຮ່ວມກັບນັກຮຽນຂອງພວກເຮົາຕ້ອງຖືກນຳໃຊ້ຢ່າງສະເໝີຕົ້ນສະເໝີປາຍໂດຍບໍ່ມີການເຂົ້າຂ້າງອອກຊາ.
- ❖ ພວກເຮົາຕ້ອງຮັບຊາບສິ່ງທີ່ເກີດຂຶ້ນຢູ່ໃນ ແລະ ນອກຫ້ອງຮຽນຢ່າງສະໝ່ຳສະເໝີ. ການຕິດ ຕາມກຳກັບຂອງພວກເຮົາຕ້ອງປິດລັບ ແລະ ມີລັກສະນະປ້ອງກັນ.
- ❖ ພວກເຮົາບໍ່ສາມາດທີ່ຈະຮ້າຍ/ໂກດເຄືອງ ຫຼື ເສຍສະມາທິການຄວບຄຸມ, ແຕ່ຕ້ອງເປັນແບບຢ່າງໃນການປະພຶດທີ່ດີ ແລະ ປະຕິບັດຕາມກົດລະບຽບເພື່ອນັກຮຽນຂອງພວກເຮົາ.
- ❖ ເມື່ອມີຄວາມຈຳເປັນຕ້ອງປະຕິບັດວິໄນ, ໃຫ້ເນັ້ນໃສ່ສະເພາະ ແຕ່ຕົວພຶດຕິກຳຂອງນັກຮຽນ ບໍ່ແມ່ນຕົວນັກຮຽນ, ກຽດສັກສີຂອງນັກຮຽນຍັງຕ້ອງຮັກສາຢູ່.
- ❖ ພວກເຮົາຈຳເປັນຕ້ອງຊຸກຍູ້ສົ່ງເສີມ ໃຫ້ນັກຮຽນຕິດຕາມກຳກັບການປະພຶດຂອງເຂົາເຈົ້າເອງໂດຍເຮັດບັນທຶກປະຈຳວັນ ກ່ຽວກັບກິດຈະກຳທີ່ມີຮ່ວມກັບຜູ້ອື່ນໆ. ນັກຮຽນຍັງມີຄວາມຈຳເປັນຕ້ອງຕິດຕາມການປະພຶດຂອງກັນ ແລະ ກັນດ້ວຍຄວາມເຄົາລົບນັບຖື.
- ❖ ໃນການສິດສອນ, ພວກເຮົາບໍ່ຄວນໃຊ້ຄຳສັບທີ່ຄຸມເຄືອ ຫຼື ແບບກ້ວາງໆ. ກິດຈະກຳຕ່າງໆຄວນມີຂັ້ນຕອນຕໍ່ເນື່ອງທີ່ຈະແຈ້ງ ແລະ ມີການແຊກແຊງເລັກນ້ອຍເທົ່າທີ່ຈະເຮັດໄດ້.

ຄຸນລັກສະນະຈຳນວນໜຶ່ງທີ່ນັກຮຽນມີຄວາມພໍໃຈໃນຕົວຄູສອນ ແລະ ຄວນປະກອບສ້າງໃຫ້ເປັນ ພາກສ່ວນ ທີ່ສຳຄັນຂອງການຕິດຕາມການປະພຶດຂອງພວກເຮົາເອງມີດັ່ງນີ້:

**ຄວາມເປັນທຳ:** ນັກຮຽນເຫັນສິ່ງນີ້ເປັນຄຸນລັກສະນະສຳຄັນທີ່ສຸດຂອງຄູສອນ. ໝາຍຄວາມວ່າຕ້ອງມີຄວາມຍຸດຕິທຳໃນກິດຈະກຳຕ່າງໆ ເຊັ່ນ ການມອບວຽກງານໃຫ້, ການລະງັບການຜິດຖຽງກັນ, ການໃຫ້ການຊ່ອຍເຫຼືອ ແລະ ການຄັດເລືອກນັກຮຽນເພື່ອໃຫ້ເປັນຜູ້ຊ່ອຍ ຫຼື ເຂົ້າຮ່ວມກິດຈະກຳພິເສດ.

**ອາລົມຂັນ.** ມີຄວາມສາມາດຕອບສະໜອງ ຄວາມຜ່ອນຄາຍໃຫ້ແກ່ນັກຮຽນ.

**ຄວາມເຄົາລົບນັບຖື.** ອັນນີ້ມີຄວາມໝາຍວ່າ ສະແດງໃຫ້ເຫັນຄວາມເອົາໃຈໃສ່ຕໍ່ສິດທິ ແລະ ຄວາມຮູ້ສຶກຂອງນັກຮຽນ.

**ຄວາມສຸພາບ**: ອັນນີ້ແມ່ນເຄື່ອງໝາຍອັນໜຶ່ງຂອງຄວາມເຄົາລົບນັບຖື.

**ເປັນຄົນເປີດເຜີຍ/ຈິງໃຈ.** ນັກຮຽນມີຄວາມຕ້ອງການຢາກເຫັນຄູສອນເປັນຄົນມີນໍ້າໃສໃຈຈິງ. ຄູສອນຈໍາເປັນຕ້ອງອະທິບາຍຢ່າງຈະແຈ້ງເຖິງຄວາມຮູ້ສຶກຂອງຕົນ ແລະສະພາບການທີ່ເປັນຕົ້ນເຫດຂອງຄວາມຮູ້ສຶກນັ້ນ.

**ຮັບຟັງຢ່າງຕັ້ງໃຈ.** ອັນນີ້ມີຄວາມໝາຍເຖິງການໃຫ້ການຕອບຮັບ ເມື່ອເວລານັກຮຽນເວົ້າອອກມາ. ທ່ານ ຈໍາເປັນຕ້ອງສະແດງໃຫ້ເຫັນວ່າ ທ່ານ ໄດ້ຍິນນັກຮຽນເວົ້າ ແລະ ໃຫ້ໂອກາດແກ່ເຂົາເຈົ້າໄດ້ແກ້ໄຂຄວາມເຂົ້າໃຈຜິດ ຫຼື ການຕີຄວາມໝາຍຜິດ. ທ່ານອາດພະຍາຍາມເວົ້າຄືນໃໝ່ກ່ຽວກັບສິ່ງທີ່ໄດ້ເວົ້າໄປແລ້ວ ຫຼື ນໍາໃຊ້ທ່າທາງ ເພື່ອສະແດງເຖິງຄວາມເມດຕາຄວາມເຫັນອົກເຫັນໃຈ.

ພວກເຮົາຈະສາມາດຍຶດຖືມາດຖານຂອງການປະພຶດຂອງພວກເຮົາໃຫ້ໄດ້ດີແນວໃດນັ້ນ ມັກຈະຂຶ້ນກັບຮູບແບບຂອງການຄຸ້ມຄອງຢູ່ໃນຫ້ອງຮຽນ.

## ກິດຈະກໍາເພື່ອປະຕິບັດ: ຮູບຮ່າງລັກສະນະຂອງການຄຸ້ມຄອງຫ້ອງຮຽນ.

ຮູບແບບການຄຸ້ມຄ້ອງຫ້ອງຮຽນຂອງທ່ານ ຈະເປັນຕົວກໍານົດວ່າ ທ່ານສາມາດປະຕິສໍາພັນກັບນັກຮຽນຂອງທ່ານໄດ້ດີສໍ່າໃດ, ທ່ານສາມາດສ້າງສາຍພົວພັນອັນດີກັບເຂົາເຈົ້າໄດ້ດີສໍ່າໃດ ແລະ ເຂົາຈະຮຽນຮູ້ຈາກທ່ານໄດ້ດີສໍ່າໃດ. ມັນຍັງສາມາດມີຜົນກະທົບຕໍ່ວິທີປະພຶດທີ່ເໝາະສົມ ຫຼື ບໍ່ເໝາະສົມຂອງນັກຮຽນຂອງທ່ານ ແລະ ວິທີການຂອງການປະຕິບັດວິໄນນັກຮຽນຂອງທ່ານແນວໃດ, ທ່ານມັກໃຊ້ການປະຕິບັດວິໄນແນວທາງລົບຫລາຍກວ່າທາງບວກບໍ່ ເພື່ອທີ່ຈະຊ່ອຍເຫຼືອນັກຮຽນຂອງທ່ານ ຮຽນຮູ້ການປະພຶດທີ່ຖືກຕ້ອງເໝາະສົມ. ເພື່ອເລີ່ມຕົ້ນການກໍານົດຮູບແບບການຄຸ້ມຄອງຂອງທ່ານ, ໃຫ້ທ່ານອ່ານຂໍ້ຄວາມແຕ່ລະອັນຢູ່ໃນຕາຕະລາງລຸ່ມນີ້ຢ່າງລະອຽດຖີ່ຖ້ວນ. ແລ້ວໃຫ້ຕອບວ່າເຫັນດີ ຫຼື ບໍ່ເຫັນດີກັບຂໍ້ຄວາມນັ້ນ, ຈະຖືວ່າເປັນການດີ ຖ້າຫາກວ່າຂໍ້ຄວາມນັ້ນເປັນສິ່ງທີ່ທ່ານເຮັດໃນຕົວຈິງ.

| | **ຄຸນລັກສະນະ** | ເຫັນດີ | ບໍ່ເຫັນດີ |
|---|---|---|---|
| 1 | ຂ້ອຍເຊື່ອວ່າ ຫ້ອງຮຽນຕ້ອງມິດງຽບສໍາລັບນັກຮຽນ ເພື່ອຈະໄດ້ຮໍ່າຮຽນ. | | |
| 2 | ຂ້ອຍເຊື່ອວ່າ ການນັ່ງຕາມຕັ່ງທີ່ຈັດໃຫ້ (ເຊັ່ນ ຈັດເປັນແຖວ) ຈະຫລຸດຜ່ອນການ ປະພຶດທີ່ບໍ່ເໝາະສົມ ແລະ ສົ່ງເສີມການຮໍ່າຮຽນ. | | |
| 3 | ຂ້ອຍບໍ່ມັກການຖືກລົບກວນໃນເວລາຂ້ອຍກໍາລັງສິດສອນ. | | |
| 4 | ນັກຮຽນຄວນຮຽນຮູ້ເພື່ອເຮັດຕາມການແນະນໍາ ແລະບໍ່ຄວນຖາມ | | |

| | ຄຸນລັກສະນະ | ເຫັນດີ | ບໍ່ເຫັນດີ |
|---|---|---|---|
| | ເຫດຜົນວ່າ ເປັນຫຍັງ. | | |
| 5 | ນັກຮຽນຂອງຂ້ອຍບໍ່ຄ່ອຍມີຂໍ້ຄິດລິເລີ່ມການເຮັດກິດຈະກຳຕ່າງໆ. ເຂົາຄວນສຸມໃສ່ສິ່ງທີ່ຂ້ອຍກຳລັງສອນເຂົາຢູ່. | | |
| 6 | ເມື່ອເວລານັກຮຽນປະພຶດບໍ່ເໝາະສົມ, ຂ້ອຍລົງໂທດ ຫຼື ໃສ່ວິໄນເຂົາທັນທີທັນໃດ ໂດຍບໍ່ມີການໂຕ້ຖຽງອັນໃດອີກຕໍ່ໄປ. | | |
| 7 | ຂ້ອຍບໍ່ຍອມຮັບຄຳຂໍໂທດສຳລັບການປະພຶດທີ່ບໍ່ເໝາະສົມ ເຊັ່ນ ເຮັດວຽກບ້ານຊ້າ ຫຼືບໍ່ເຮັດວຽກບ້ານ. | | |
| 8 | ຂຶ້ນກັບສິ່ງທີ່ພວມຮໍ່າຮຽນຢູ່, ຫ້ອງຮຽນຂອງຂ້ອຍອາດມີການຈັດສັນຫຼາຍຮູບແບບ. | | |
| 9 | ຂ້ອຍມີຄວາມເປັນຫ່ວງກ່ຽວກັບສອງສິ່ງ ຄື ນັກຮຽນຂອງຂ້ອຍໄດ້ຮຽນຮູ້ຫຍັງ  ແລະ ເຂົາເຈົ້າຮຽນຮູ້ແນວໃດ. | | |
| 10 | ນັກຮຽນຂອງຂ້ອຍຮູ້ວ່າ ເຂົາສາມາດແຊກແຊງຂັດຂວາງການບັນລະຍາຍຂອງຂ້ອຍໄດ້ ຖ້າຫາກວ່າເຂົາມີຄຳຖາມທີ່ສອດຄ່ອງ ເໝາະສົມ. | | |
| 11 | ຂ້ອຍໃຫ້ຄຳຊົມເຊີຍເມື່ອຮັບປະກັນວ່າມັນມີເຫດຜົນ ແລະຂ້ອຍກໍຊຸກຍູ້ສິ່ງເສີມ ນັກຮຽນໃຫ້ເຮັດດີຂຶ້ນກວ່າເກົ່າ. | | |
| 12 | ຂ້ອຍເອົາງານໂຄງການໃຫ້ນັກຮຽນເຮັດເພື່ອເປັນການເຝິກຫັດຮຽນຮູ້ ຫຼືບອກໃຫ້ເຂົາເຈົ້າສ້າງໂຄງການດ້ວຍເຂົາເຈົ້າເອງ. ຫຼັງຈາກນັ້ນ ພວກເຮົາສົນທະນາອະທິບາຍສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້ ແລະ ສິ່ງທີ່ເຂົາເຈົ້າຈຳເປັນຕ້ອງຍັງຕ້ອງຮຽນຕື່ມອີກ. | | |
| 13 | ຂ້ອຍອະທິບາຍເລື້ອຍໆເຖິງເຫດຜົນຢູ່ເບື້ອງຫຼັງຂອງກົດລະບຽບ ແລະການຕັດສິນໃຈຂອງຂ້ອຍ. | | |
| 14 | ເມື່ອເວລານັກຮຽນປະພຶດບໍ່ເໝາະສົມ, ຂ້ອຍວ່າກ່າວດ້ວຍຄວາມສຸພາບນິ້ມນວນ ແຕ່ແນ່ນອນໝັ້ນຄົງ. ຖ້າຈຳເປັນຕ້ອງປະຕິບັດວິໄນ, ຂ້ອຍກໍຈະພິຈາລະນາສະພາບການຢ່າງລະອຽດຖີ່ຖ້ວນ. | | |
| 15 | ຂ້ອຍເຊື່ອວ່ານັກຮຽນ ຮຽນໄດ້ດີທີ່ສຸດ ເມື່ອເວລາ “ເຂົາເຈົ້າສາມາດເຮັດໂດຍຕົນເອງ“,  ໝາຍຄວາມວ່າ ເຂົາເຮັດສິ່ງທີ່ເຂົາເຈົ້າ ຮູ້ສຶກວ່າສາມາດເຮັດໄດ້ດີ. | | |
| 16 | ການມີອາລົມຈິດດີຂອງນັກຮຽນຂອງຂ້ອຍແມ່ນ ມີຄວາມສຳຄັນກ່ວາການຄວບຄຸມຫ້ອງ. ສິ່ງສຳຄັນ ຢູ່ທີ່ນັກຮຽນຂອງຂ້ອຍເຫັນຂ້ອຍ | | |

| | ຄຸນລັກສະນະ | ເຫັນດີ | ບໍ່ເຫັນດີ |
|---|---|---|---|
| | ໃນຖານະເພື່ອນຂອງເຂົາ. | | |
| 17 | ນັກຮຽນຂອງຂ້ອຍຈຳນວນໜຶ່ງມີຄວາມກະຕືລືລົ້ນຮ່ຳຮຽນ ໃນຂະນະອີກຈຳນວນໜຶ່ງບໍ່ມີຄວາມສົນໃຈ. | | |
| 18 | ຂ້ອຍບໍ່ມີການວາງແຜນລ່ວງໜ້າວ່າ ຂ້ອຍຈະໃສ່ວິໄນນັກຮຽນອັນໃດ. ຂ້ອຍພຽງປ່ອຍໃຫ້ມັນເກີດຂຶ້ນ. | | |
| 19 | ຂ້ອຍບໍ່ຕ້ອງການຕິດຕາມກວດກາຫຼື ວ່າກ່າວໃດໆນັກຮຽນ ຍ້ອນວ່າມັນອາດແຕະຕ້ອງຄວາມຮູ້ສຶກຂອງເຂົາເຈົ້າ. | | |
| 20 | ຖ້າຫາກນັກຮຽນລົບກວນຫ້ອງຮຽນ, ຂ້ອຍຈະໃຫ້ຄວາມເອົາໃຈໃສ່ ພິເສດຕໍ່ເຂົາ ຍ້ອນວ່າເຂົາເຈົ້າຕ້ອງມີອັນໃດອັນໜຶ່ງທີ່ມີຄຸນຄ່າ ເພື່ອເພີ່ມເຕີມ. | | |
| 21 | ຖ້າຫາກນັກຮຽນຂໍອອກຈາກຫ້ອງໄປ, ຂ້ອຍອະນຸຍາດໃຫ້ກຽດເຂົາໄປ. | | |
| 22 | ຂ້ອຍບໍ່ຕ້ອງການໃຊ້ລະບຽບໃດໆບັງຄັບນັກຮຽນຂອງຂ້ອຍ. | | |
| 23 | ຂ້ອຍນຳໃຊ້ແຜນບົດສອນ ແລະກິດຈະກຳຕ່າງໆທີ່ຂ້ອຍເຄີຍໃຊ້ປີຕໍ່ປີມາ, ດັ່ງນັ້ນ, ຂ້ອຍບໍ່ຕ້ອງກະກຽມການສິດສອນບົດຮຽນຂອງຂ້ອຍໄວ້ລ່ວງໜ້າ. | | |
| 24 | ການລົງໄປພາກສະໜາມ ແລະມີໂຄງການພິເສດ ບໍ່ສາມາດເປັນໄປໄດ້, ຂ້ອຍບໍ່ມີເວລາເພື່ອກະກຽມວຽກດັ່ງກ່າວ. | | |
| 25 | ຂ້ອຍອາດເອົາຮູບເງົາ ຫຼືຮູບເລື່ອນ ( Slidershow ) ມາສາຍໃຫ້ ນັກຮຽນເບິ່ງ ແທນທີ່ຈະເຮັດການບັນລະຍາຍ. | | |
| 26 | ນັກຮຽນຂອງຂ້ອຍມີທ່າອຽງຈະເບິ່ງອ້ອມຮອບຫ້ອງຮຽນ ແລະ ຫຼຽວອອກນອກປ່ອງຢ້ຽມຫຼາຍໆເທື່ອ. | | |
| 27 | ຖ້າຫາກສອນບົດຮຽນແລ້ວກ່ອນໂມງ, ນັກຮຽນຂອງຂ້ອຍສາມາດຮຽນແບບງຽບໆ ຫຼືລົມກັນຄ່ອຍໆໄດ້. | | |
| 28 | ຂ້ອຍບໍ່ຄ່ອຍປະຕິບັດວິໄນນັກຮຽນຂອງຂ້ອຍ. ຖ້າຫາກນັກຮຽນສົ່ງວຽກບ້ານຊ້າ, ມັນບໍ່ແມ່ນບັນຫາຂອງຂ້ອຍ. | | |

ໃນຂັ້ນຕໍ່ໄປ, ໃຫ້ທ່ານເພີ່ມຈຳນວນ “ເຫັນດີ” ສຳລັບຄຳເຫັນແຕ່ຂໍ້ 1-7 , ຕໍ່ດ້ວຍຂໍ້ 8-14, 15-21 ແລະ ຂໍ້ 22-28. ສຳລັບຄຳເຫັນແຕ່ລະຊຸດ ທ່ານ ມີຈຳນວນຄຳຕອບຂອງຄຳວ່າ “ເຫັນດີ” ສູງສຸດບໍ່? ອັນນີ້ແມ່ນຮູບແບບຂອງການບໍລິຫານຂອງທ່ານ ທີ່ທ່ານມັກ, ເຖິງວ່າທ່ານມີຄຸນລັກສະນະຂອງ ການບໍລິຫານແບບອື່ນອີກ ທ່ານກໍຢ່າໄດ້ປະຫຼາດໃຈ.

**ຢູ່ໃນຕາຕະລາງ ຂ້າງເທິງນີ້,** ຄຳເຫັນແຕ່ 1-7 ສ່ອງແສງໃຫ້ເຫັນການບໍລິຫານໃນຮູບແບບຜູ້ໃຊ້ອຳນາດ "ຂ້ອຍເປັນນາຍຄູ ແລະ ພວກເຮົາຈະເຮັດສິ່ງຕ່າງໆຕາມທາງຂອງຕົນ" ຮູບແບບນີ້ແມ່ນດີສຳລັບເຮັດໃຫ້ຫ້ອງຮຽນມີການຈັດໂຄງສ້າງທີ່ດີ, ແຕ່ວ່າມັນເຮັດໄດ້ພຽງໜ້ອຍດຽວ ເພື່ອເພີ່ມການກະຕຸ້ນຄວາມສຳເລັດ ຫຼື ຊຸກຍູ້ການຕັ້ງເປົ້າໝາຍສ່ວນບຸຄົນ. ນັກຮຽນຢູ່ໃນຫ້ອງຮຽນນີ້ຄ້າຍຄືວ່າມີຄວາມລັ່ງເລໃນການລິເລີ່ມກິດຈະກຳ ເນື່ອງຈາກວ່າເຂົາເຈົ້າມີຄວາມຮູ້ສຶກບໍ່ມີອຳນາດໃດໆທັງສິ້ນ. ເຂົາເຈົ້າຕ້ອງເຊື່ອຟັງຄູສອນດ້ວຍການເສຍຄວາມມີອິດສະຫລະສ່ວນຕົວຂອງເຂົາເຈົ້າ.

**ຢູ່ໃນຄຳເຫັນແຕ່ຂໍ້ 8-14** ສ່ອງແສງໃຫ້ເຫັນຮູບແບບໃຫ້ສິດອຳນາດ"ພວກເຮົາມາເຮັດວຽກຮ່ວມກັນ". ເຖິງແມ່ນວ່າຂໍ້ຈຳກັດຈະວາງໃສ່ການປະພຶດຂອງນັກຮຽນກໍຕາມ, ແຕ່ລະບຽບການຕ່າງໆຈະໄດ້ຮັບການອະທິບາຍ ແລະ ນັກຮຽນກໍໄດ້ຮັບອະນຸຍາດໃຫ້ມີເອກະລາດຢູ່ພາຍໃນຂໍ້ຈຳກັດນັ້ນ. ຄູສອນທີ່ໃຫ້ສິດອຳນາດແກ່ນັກຮຽນນັ້ນ ໄດ້ຊຸກຍູ້ສົ່ງເສີມພຶດຕິກຳແບບເພິ່ງຕົນເອງ ແລະແບບມີຄວາມສາມາດດ້ານສັງຄົມ. ຍິ່ງໄປກວ່ານັ້ນ, ຄູສອນຍັງຊຸກຍູ້ນັກຮຽນໃຫ້ມີຄວາມກະຕືລືລົ້ນ ແລະ ໄດ້ຮັບຜົນສຳເລັດ ຫຼາຍກວ່າເກົ່າ. ສ່ວນຫຼາຍ ຄູສອນແບບນີ້ຈະແນະນຳນັກຮຽນໂດຍຜ່ານການເຮັດໂຄງການ ຫຼາຍກວ່າຈະນຳພາເຂົາເຈົ້າເຮັດ.

**ຢູ່ໃນຄຳເຫັນແຕ່ຂໍ້ 15-21** ເຜີຍໃຫ້ເຫັນຮູບແບບປ່ອຍໃຫ້ເຮັດຕາມໃຈ, "ອັນໃດກໍໄດ້ຕາມເຈົ້າເວົ້າ". ຄູສອນໃນຮູບແບບປ່ອຍໃຫ້ນັກຮຽນເຮັດຕາມໃຈຈະວາງຂໍ້ຮຽກຮ້ອງ ຫຼື ການຄວບຄຸມນັກຮຽນໜ້ອຍ. ຄູສອນຮູບແບບນີ້ ຈະຍອມຮັບຄວາມກະຕຸ້ນ ແລະ ການກະທຳຂອງນັກຮຽນ ແລະ ມີການຕິດຕາມພຶດຕິກຳຂອງນັກຮຽນໜ້ອຍ. ຄູສອນແບບນີ້ອາດຈະພະຍາຍາມບໍ່ແຕະຕ້ອງຄວາມຮູ້ສຶກຂອງນັກຮຽນ ແລະ ຍາກທີ່ຈະເວົ້າຄຳວ່າ "ບໍ່" ກັບນັກຮຽນ ຫຼື ບັງຄັບດ້ວຍກົດລະບຽບ. ເຖິງວ່າຄູສອນຮູບແບບນີ້ອາດຈະໄດ້ຮັບຄວາມນິຍົມຊົມຊອບຈາກນັກຮຽນກໍຕາມ, ຮູບແບບຕາມໃຈເກີນໄປຂອງຄູນີ້ ຈະໄປກ່ຽວເນື່ອງກັນກັບການຂາດຄວາມສາມາດດ້ານສັງຄົມ ແລະ ການຄວບຄຸມຕົນເອງຂອງນັກຮຽນ. ມັນເປັນການຍາກສຳລັບນັກຮຽນທີ່ຈະຮຽນຮູ້ການປະພຶດທີ່ສັງຄົມຍອມຮັບໄດ້ ເມື່ອຄູສອນປ່ອຍຕາມໃຈເກີນໄປ. ການກຳນົດຂໍ້ຮຽກຮ້ອງຈຳນວນໜ້ອຍເກີນໄປຕໍ່ນັກຮຽນນັ້ນຈະເຮັດໃຫ້ນັກຮຽນເຫຼົ່ານີ້ມີຄວາມກະຕືລືລົ້ນຕ່ຳເພື່ອບັນລຸຜົນສຳເລັດ.

**ສຸດທ້າຍ** ຄຳເຫັນແຕ່ຂໍ້ 22-28 ສະແດງໃຫ້ເຫັນຮູບແບບ***ບໍ່ສົນໃຈ***, "ເຮັດອັນໃດກໍໄດ້ ຕາມເຈົ້າຕ້ອງການ". ຄູສອນໃນຮູບແບບບໍ່ສົນໃຈຈະບໍ່ມັກໄປຫຍຸ້ງຫຍັງຢູ່ໃນຫ້ອງຮຽນ. ຄູສອນປະເພດນີ້ມີຄວາມຮຽກຮ້ອງໃນຕົວນັກຮຽນໜ້ອຍ ແລະ ບໍ່ສົນໃຈນັກຮຽນ. ຄູສອນແບບດັ່ງກ່າວມັກຈະຮູ້ສຶກວ່າການກະກຽມບົດຮຽນ ເພື່ອສອນເປັນຄວາມພະຍາຍາມທີ່ບໍ່ມີຄຸນຄ່າ. ນອກນີ້ຍັງຂາດກົດລະບຽບຫ້ອງຮຽນອີກ. ຢູ່ໃນສະພາບແວດລ້ອມທີ່ບໍ່ເປັນເພື່ອນມິດ ແລະ ບໍ່ສົນບໍ່ກ່ຽວ ຄືແນວນີ້,

ນັກຮຽນຈະມີໂອກາດໜ້ອຍທີ່ສຸດເພື່ອສັງເກດ ຫຼື ປະຕິບັດທັກສະການສື່ສານ. ການກຳນົດຂໍ້ຮຽກຮ້ອງຈຳນວນໜ້ອຍ ແລະ ການມີລະບຽບວິໄນໜ້ອຍເກີນໄປນັ້ນ. ນັກຮຽນຈະມີການກະຕຸ້ນເພື່ອບັນລຸຜົນສຳເລັດຕ່ຳ ແລະ ຂາດການຄວບຄຸມຕົນເອງ.

ທ່ານສາມາດກວດສອບເບິ່ງຮູບແບບການຄຸ້ມຄອງຫ້ອງຮຽນຂອງທ່ານວ່າ ໃກ້ຄຽງກັບແບບໃດໄດ້ດ້ວຍການຖາມເພື່ອນຄູດ້ວຍກັນ, ຄູຜູ້ຊ່ວຍ ຫຼື ນັກຮຽນທີ່ໃຫຍ່ກວ່າໝູ່.

## 6. ການໃຫ້ການສະໜັບສະໜູນແບບທາງບວກ

ການປະຕິບັດວິໄນແບບສ້າງສັນ ເປັນວິທີທາງຫຼຸດຜ່ອນການປະພຶດທີ່ບໍ່ເໝາະສົມລົງ ດ້ວຍການຍ້ອງຍໍຊົມເຊີຍການປະພຶດທີ່ດີ. ມັນເປັນການອີງໃສ່ແນວຄິດທີ່ວ່າການປະພຶດທີ່ໄດ້ຮັບການຊົມເຊີຍນັ້ນ ເປັນການປະພຶດທີ່ຄວນເຮັດຄືນອີກ. ພາກສ່ວນທີ່ສຳຄັນກວ່າໝູ່ ຂອງການປະຕິບັດວິໄນແບບສ້າງສັນ ຈະກ່ຽວພັນກັບການຊ່ອຍນັກຮຽນຮຽນຮູ້ເອົາພຶດຕິກຳທີ່ຖືກຕ້ອງ ເພື່ອຕອບຮັບກັບຄວາມຄາດຫວັງຂອງ (ຜູ້ໃຫຍ່)ພວກເຮົາ, ເຊິ່ງຈະບັງເກີດຜົນໄດ້ຢູ່ໃນການສົ່ງເສີມການພົວພັນສັງຄົມໃນທາງບວກ, ແລະ ໃຫ້ຊ່ອຍນັກຮຽນພັດທະນາຈິດສຳນຶກຂອງການປະຕິບັດິໄນດ້ວຍຕົນເອງ ເຊິ່ງຈະນຳໄປສູ່ການມີຄວາມພາກພູມໃຈໃນຕົນເອງໃນທາງບວກ. ບັນດາການປະພຶດ ຫຼື ພຶດຕິກຳທີ່ທ່ານເຫັນວ່າມີຄຸນຄ່າ ແລະ ຕ້ອງການຊຸກຍູ້ສົ່ງເສີມນັ້ນ ຈຳເປັນຕ້ອງໃຫ້ນັກຮຽນໄດ້ຮູ້ຈັກ ແລະ ທ່ານຈຳເປັນຕ້ອງສ້າງຄວາມພະຍາຍາມແບບຮ່ວມມືກັນ ເພື່ອສິດສອນ ແລະ ເສີມຂະຫຍາຍທ່າແຮງຂອງການປະພຶດເຫຼົ່ານີ້. ຍຸດທະສາດຈຳນວນໜຶ່ງ ທີ່ທ່ານສາມາດນຳໃຊ້ເພື່ອຊ່ອຍເຫຼືອນັກຮຽນໃຫ້ຮຽນຮູ້ການປະພຶດທີ່ດີລວມມີດັ່ງຕໍ່ໄປນີ້:

***ໃຫ້ຂໍ້ຄິດເຫັນ ຫຼື ເວົ້າປະໂຫຍກທີ່ເປັນທາງບວກ*** "ເບິ່ງດູຄຳຕອບຂອງເຈົ້າຖືກຕັ້ງຫຼາຍຂໍ້ຕົ໋ວນີ້. ເທື່ອໜ້າລອງຕອບໃຫ້ຖືກຫຼາຍກວ່ານີ້ອີກຍິ່ງດີ".

***ໃຫ້ຟັງຢ່າງລະອຽດຖີ່ຖ້ວນ***ແລະໃຫ້ຊ່ອຍນັກຮຽນໃຫ້ຮຽນໃຊ້ຄຳສັບທີ່ສະແດງໃຫ້ເຫັນເຖິງຄວາມຮູ້ສຶກຂອງເຂົາ, ບໍ່ແມ່ນການກະທຳແບບທຳລາຍ.

***ໃຫ້ນັກຮຽນຂອງທ່ານມີໂອກາດເລືອກ*** ແລະຊ່ອຍເຫຼືອເຂົາເຈົ້າຮຽນຮູ້ ເພື່ອປະເມີນຜົນຜົນໄດ້ຮັບທີ່ສຳຄັນຂອງການເລືອກປະຕິບັດຂອງເຂົາເຈົ້າ.

***ໃຫ້ເສີມຂະຫຍາຍການປະພຶດທີ່ເພິ່ງປາຖະໜາເມື່ອມັນປະກົດອອກມາ*** ດ້ວຍການຍ້ອງຍໍຊົມເຊີຍເລື້ອຍໆ ແລະ ຢ່າໃສ່ໃຈຄວາມຜິດເລັກໆນ້ອຍໆ.

***ເປັນແບບຢ່າງ*** ທີ່ມີກຽມການຢ່າງດີ, ພຶດຕິກຳທີ່ສາມາດຄາດຄະເນລ່ວງໜ້າໄດ້, ການສື່ສານຕິດຕໍ່ພົວ ພັນດ້ວຍຄວາມນັບຖືກັນ ແລະ ຍຸດທະສາດການແກ້ໄຂຂໍ້ຂັດແຍ່ງທີ່ມີການຮ່ວມມືກັນ.

***ນຳໃຊ້ພາສາກາຍຢ່າງເໝາະສົມ*** ງຶກຫົວ, ຍິ້ມ ແລະ ເບິ່ງຕົງໄປຫານັກຮຽນ.

***ໃຫ້ທ່ານໂຢ້ຕົວລົງ ໃຫ້ຕ່ຳ*** ໂດຍສະເພາະກັບນັກຮຽນທີ່ຍັງນ້ອຍ ເຊັ່ນ ກົ້ມລົງ, ນັ່ງຄຸເຂົ່າ ຫຼື ນັ່ງລະດັບດຽວກັບນັກຮຽນ

***ຈັດສະພາບແວດລ້ອມຄືນໃໝ່.*** ໃຫ້ຍ້າຍວັດຖຸສິ່ງຂອງທີ່ພາໃຫ້ເກີດມີການປະພຶດທີ່ບໍ່ເໝາະສົມອອກໄປ; ຕົວຢ່າງ, ຖ້າຫາກມີເຄື່ອງຫຼິ້ນເກມ ຫຼື ເຄື່ອງຫຼິ້ນທີ່ໃຊ້ສຳລັບເປັນອຸປະກອນການສິດສອນ, ເມື່ການນຳໃຊ້ ສຳເລັດແລ້ວກໍ່ໃຫ້ຍ້າຍອອກໄປ.

***ແນະນຳໃຫ້ປະພຶດໃນທາງບວກຄືນອີກ*** ເມື່ອນັກຮຽນຄົນໜຶ່ງຕີບານຢູ່ໃນຫ້ອງຮຽນ. ໃຫ້ບອກນັກຮຽນວ່າ "ນ້ອງສາມາດຕີບານຢູ່ນອກຫ້ອງຢູ່ໃນເດີ່ນຫຼິ້ນບ່ອນທີ່ມພື້ນທີ່ວ່າງກວ້າງກວ່າ.

ເມື່ອສະຫຼຸບແລ້ວ, ຈາກຫົວຂໍ້ນີ້ ພວກເຮົາໄດ້ຮຽນຮູ້ວ່າ ຫ້ອງຮຽນທີ່ມີການຄຸ້ມຄອງທີ່ມີປະສິດທິຜົນ ແມ່ນຫ້ອງຮຽນທີ່ສ້າງ ແລະ ສະໜັບສະໜູນພຶດຕິກຳທີ່ເປັນທາງບວກເຊິ່ງໃນນັ້ນມີ:

1. ທ່ານຮູ້ສິ່ງທີ່ທ່ານຕ້ອງການ ແລະສິ່ງທີ່ທ່ານບໍ່ຕ້ອງການ.
2. ທ່ານສະແດງໃຫ້ເຫັນ ແລະບອກນັກຮຽນໃຫ້ຮູ້ເຫັນສິ່ງທີ່ທ່ານຕ້ອງການ.
3. ເມື່ອເວລາທ່ານໄດ້ຮັບສິ່ງທີ່ທ່ານຕ້ອງການ, ໃຫ້ສະແດງຄວາມຮັບຮູ້ບຸນຄຸນສິ່ງດັ່ງກ່າວນັ້ນ.
4. ເມື່ອທ່ານໄດ້ຮັບສິ່ງອື່ນ(ທີ່ບໍ່ຕ້ອງການ) ໃຫ້ມີປະຕິກິລິຍາໂຕ້ຕອບຢ່າງໄວວາ, ຢ່າງເໝາະສົມ ແລະ ໃຫ້ມີລັກສະນະໃນທາງບວກ.

ເຖິງຢ່າງໃດກໍ່ດີ, ຢູ່ໃນຂະບວນການນີ້ທ່ານມີຄວາມຈຳເປັນຕ້ອງມີຄວາມແນ່ໃຈວ່າ:

1. ຄວາມຄາດຫວັງຂອງທ່ານຕ້ອງໃຫ້ຈະແຈ້ງ
2. ຂໍ້ແນະນຳຂອງທ່ານ ຕ້ອງໃຫ້ນັກຮຽນມີຄວາມສົນໃຈ.
3. ນັກຮຽນຂອງທ່ານເຫັນຈຸດມຸ່ງໝາຍ ແລະເຫັນຄຸນຄ່າສິ່ງທີ່ທ່ານກຳລັງສອນ.
4. ຂໍ້ແນະນຳນັ້ນຕ້ອງກ່ຽວໂຍງແນວຄວາມຄິດ ແລະ ທັກສະຕໍ່ກັບປະສົບການຂອງນັກຮຽນ ແລະ ມີຄວາມໝາຍສຳຄັນກັບຊີວິດປະຈຳວັນຂອງເຂົາເຈົ້າ.
5. ຍຸດທະສາດຂອງການສິດສອນຕ້ອງມີຄວາມຫຼາກຫຼາຍ. ເຖິງແມ່ນວ່າຫົວຂໍ້ຂອງບົດຮຽນຈະເປັນໜ້າສົນໃຈກໍ່ຕາມ, ນັກຮຽນສາມາດເກີດຄວາມເບື່ອໜ່າຍໄດ້ ຖ້າຫາກທ່ານນຳໃຊ້ວິທີການສິດສອນແບບເກົ່າໄປຕະຫລອດ.

ບາງແນວທາງທີ່ສຳຄັນເຊິ່ງທ່ານສາມາດເລີ່ມຕົ້ນສ້າງສະພາບແວດລ້ອມ ທີ່ນຳໄປສູ່ການພັດທະນາການປະພຶດໃນທາງບວກໃນນັກຮຽນຂອງທ່ານລວມມີດັ່ງຕໍ່ໄປນີ້:

1. ໃຫ້ຍຶດຖື ແລະ ສື່ສານຄວາມຄາດຫວັງທາງດ້ານການປະພຶດ ທີ່ສູງໄວ້ສຳລັບຂອງນັກຮຽນ ແລະ ຕົວທ່ານເອງ.
2. ໃຫ້ສ້າງກົດລະບຽບ ແລະ ຂະບວນການດຳເນີນທີ່ຈະແຈ້ງແລະໃຫ້ຄຳແນະນຳແກ່ນັກຮຽນ ວິທີທີ່ຈະປະຕິບັດຕາມແມ່ນແນວໃດ,ໃຫ້ຄຳແນະນຳ,ການປະຕິບັດຈິງ ແລະ ເຕືອນເພື່ອທົບ ທວນ ຄວາມຈຳ ສຳລັບນັກຮຽນລະດັບປະຖົມເປັນພິເສດ .
3. ໃຫ້ນັກຮຽນເຂົ້າໃຈແຈ້ງຕໍ່ຜົນທີ່ໄດ້ຮັບຈາກການປະພຶດທີ່ຖືກຕ້ອງ ແລະ ການປະພຶດແນວບໍ່ດີ.
4. ບັງຄັບໃຊ້ກົດລະບຽບຂອງຫ້ອງຮຽນໂດຍທັນທີ,ຢ່າງສະໝ່ຳສະເໝີ ແລະ ມີຄວາມຊອບທຳ ນັບແຕ່ມື້ທຳອິດຂອງມື້ເປີດໂຮງຮຽນເປັນຕົ້ນໄປ.
5. ໃຫ້ເຮັດວຽກເພື່ອປູກຈິດສຳນຶກຂອງການມີວິໄນໃນຕົວເອງເຂົ້າໄປໃນຈິດໃຈຂອງນັກຮຽນ; ອຸທິດ ເວລາເພື່ອສິດສອນທັກສະຂອງການຕິດຕາມກວດກາຕົນເອງ.
6. ໃຫ້ຮັກສາຈັງຫວະການແນະນຳແບບຄ່ອງແຄ້ວ ແລະ ເຮັດການປ່ຽນຜ່ານຢ່າງນີ້ມນວນລະຫວ່າງກິດຈະກຳຕ່າງໆ.
7. ຕິດຕາມຊ່ອຍເຫຼືອ ກຳກັບກິດຈະກຳຂອງຫ້ອງຮຽນ ແລະ ໃຫ້ການສ່ອງແສງຄືນແກ່ນັກຮຽນ ແລະ ໃຫ້ການສະ ໜັບສະໜູນ ເລື່ອງກ່ຽວກັບການປະພຶດຂອງເຂົາເຈົ້າ.
8. ສ້າງໂອກາດສຳລັບນັກຮຽນ ເພື່ອໃຫ້ເຂົາປະສົບກັບຜົນສຳເລັດໃນການຮຽນຮູ້ ແລະ ພຶດຕິກຳທາງດ້ານສັງຄົມ.
9. ໃຫ້ກຳນົດນັກຮຽນ ຜູ້ທີ່ເຫັນວ່າມີຄວາມພາກພູມໃນໃຈຕົນເອງຕ່ຳ ແລະ ໃຫ້ຊ່ອຍເຫຼືອເຂົາ ເຈົ້າ ໃຫ້ໄດ້ບັນລຸຜົນສຳເລັດດີກ່ວາເກົ່າ ແລະ ມີຄວາມເຊື່ອໝັ້ນຫຼາຍຂຶ້ນ.
10. ໃຫ້ນຳໃຊ້ການຮ່ຳຮຽນເປັນກຸ່ມຮ່ວມມືກັນ, ເທົ່າທີ່ມີຄວາມເໝາະສົມ.
11. ໃຫ້ນຳໃຊ້ອາລົມຂັນ ເມື່ອມີຄວາມເໝາະສົມ, ເພື່ອກະຕຸ້ນຄວາມສົນໃຈຂອງນັກຮຽນ ຫຼື ຫລຸດຜ່ອນຄວາມຕຶງຄຽດຢູ່ໃນຫ້ອງຮຽນ.
12. ໃຫ້ເອົາອຸປະກອນທີ່ຂວາງຫູຂວາງຕາອອກ ເມື່ອເວລາການສິດສອນພວມດຳເນີນໄປ.
13. ເຮັດໃຫ້ຫ້ອງຮຽນມີຄວາມສະດວກສະບາຍໃຈ, ມີຄວາມດຶງດູດໃຈ ແລະ ຍິນດີຕ້ອນຮັບນັກຮຽນ, ພໍ່ແມ່ຜູ້ປົກຄອງ ແລະ ຕົວທ່ານເອງ.

# ບົດທີ 4

# ການກຽມພ້ອມແກ້ບັນຫາຄວາມແຕກຕ່າງຫລາກຫລາຍຂອງເດັກໃນຫ້ອງຮຽນ

## 4.1 ການໃຫ້ຄ່ານິຍົມ ແລະ ການຊຸກຍູ້ສົ່ງເສີມດ້ວຍຫລາຍວິທີ

ນັກຮຽນໃນຫ້ອງຮຽນຈະມີຄວາມແຕກຕ່າງຫລາກຫລາຍ ເພາະວ່າເດັກທຸກຄົນມີເອກະລັກສະເພາະຕົວ. ເດັກທັງຫລາຍຕ່າງມີປະສົບການ, ທັກສະ, ຄວາມຮູ້ ແລະ ທັດສະນະຄະຕິທີ່ແຕກຕ່າງຫລາກຫລາຍ. ເດັກທັງຫມົດສາມາດປະກອບສ່ວນ ແລະ ນໍາເອົາເຄື່ອງປຸງບາງຢ່າງ(ເຄື່ອງປະສົມຕ່າງໆ) ລົງໃສຫມໍ້ແກງແຫ່ງການຮຽນຮູ້".ຄູເປັນຜູ້ທໍາໜ້າທີ່ໃຫ້ຄວາມສະດວກສະໜອງສະພາບແວດລ້ອມແລະໂອກາດທີ່ເຫມາະສົມຖືກຕ້ອງເພື່ອໃຫ້ເດັກທຸກຄົນຮຽນຮູ້ຢ່າງຕັ້ງໜ້າ.

**ກິດຈະກໍາເພື່ອປະຕິບັດ: ການໃຫ້ລາງວັນ- ການຮູ້ຈັກກັນ.**

ຄູທີ່ຢູ່ໃນບັນດາກຸ່ມໂຮງຮຽນສາມາດໃຊ້ກິດຈະກໍານີ້ ເມື່ອພວກເຂົາພົບກັນເປັນຄັ້ງທໍາອິດ. ຄູຍັງສາມາດໃຊ້ມັນ ເມື່ອພົບກັບນັກຮຽນໃນຕອນເລີ້ມຕົ້ນປີຮຽນ ຈົນກະທັ່ງການພົບປະກັບສະມາຄົມພໍ່ແມ່ນັກຮຽນຄັ້ງທໍາອິດ.

ສໍາລັບກິດຈະກໍານີ້, ຜູ້ເຂົ້າຮ່ວມເຮັດວຽກເປັນຄູ່. ພວກເຂົາຄວນຖາມຄໍາຖາມກັນດ້ວຍຄໍາຖາມປາຍເປີດເພື່ອຈະຊາບວ່າ ແຕ່ລະຄົນມີຄວາມພິເສດອັນໃດ ທີ່ຈະເປັນຜົນປະໂຫຍດແກ່ກຸ່ມ.

ປະໂຫຍກ ຂໍ້ຄວາມສຸດທ້າຍຄວນຂຽນໃສ່ "ບັດຄໍາພອນສະຫວັນ" ຕົວຢ່າງ :

"ເພື່ອນຂອງຂ້ອຍ ຊື່.......ແລະ ລາວນໍາເອົາພອນສະຫວັນດ້ານຄວາມອົດທົນມາ"

"ເພື່ອນຂອງຂ້ອຍ ຊື່......ແລະ ລາວນໍາເອົາພອນສະຫວັນດ້ານການຕະຫລົກມາ"

ຈາກນັ້ນ ຜູ້ເຂົ້າຮ່ວມແຕ່ລະຄູ່ ປ່ຽນກັນນໍາສະເໜີທັກສະຂອງຕົນທີ່ມີຕໍ່ທັງໝົດກຸ່ມ. ພວກເຂົາຄວນເວົ້າກ່ຽວກັບທັກສະຕ່າງໆ ວ່າຈະສາມາດໃຫ້ປະໂຫຍດແກ່ທຸກຄົນຄືແນວໃດ ? ຄູຫລື(ຜູ້ອໍານວຍຄວາມສະດວກ) ກໍຄວນມີກ່ອງທີ່ຕົບແຕ່ງໄວ້ ເພື່ອຈະໃສ່ບັດຄໍາພອນສະຫວັນຫລັງຈາກທີ່ແຕ່ລະຄົນໄດ້ນໍາສະເໜີໃຫ້ກຸ່ມທັງຫມົດຟັງແລ້ວ.

ກິດຈະກໍານີ້ສາມາດບອກເຖິງຄວາມຈໍາເປັນສໍາລັບຄູເພື່ອຕີລາຄາ(ໃຫ້ຄຸນຄ່າ) ເດັກທຸກຄົນໃນຫ້ອງຮຽນຂອງເຂົາເຈົ້າ ແລະ ຄຸນນະພາບຂອງແຕ່ລະຄົນ ອາດຈະບໍ່ສາມາດເຫັນໄດ້ຊັດເຈນ

ສຳລັບຜູ້ສັງເກດທຳມະດາ. ໜ້າທີ່ຮັບຜິດຊອບຂອງພວກເຮົາ ກໍຄືຄົ້ນຫາໃຫ້ພົບຄຸນນະພາບຈຸດພິເສດທີ່ເດັກແຕ່ລະຄົນມີ.

ຈາກນັ້ນພວກເຮົາຈະສາມາດຈັດຕັ້ງປະສົບການຮຽນຮູ້ ທີ່ນຳໄປສູ່ການພັດທະນາ ແລະ ນຳໃຊ້ຄຸນນະພາບເຫລົ່ານີ້ໃນຂັ້ນຕໍ່ໄປ.

**ກິດຈະກຳເພື່ອປະຕິບັດ:ເຈ້ຍເຫລືອງ ມາຮູ້ຈັກກັນ ແລະ ຮຽນຮູ້ດ້ວຍກັນ.**

ໃນກິດຈະກຳນີ້, ຜູ້ເຂົ້າຮ່ວມຈະຖືກຈັດໃຫ້ເປັນຄູ່ ແລະ ຂໍໃຫ້ຄິດກ່ຽວກັບພອນສະຫວັນ, ຄວາມສົນໃຈ ຫລື ງານອະດິເລກຂອງຕົນ. ຈາກນັ້ນ, ໃຫ້ບັນຍາຍສູ່ຄູ່ສົນທະນາຂອງຕົນໄດ້ຮູ້ບາງຢ່າງທີ່ຕົນມີຄວາມສົນໃຈ ແລະ ສອນຄູ່ຂອງຕົນບາງສິ່ງບາງຢ່າງທີ່ເຂົາບໍ່ຮູ້. ຖ້າເປັນໄປໄດ້ແຕ່ລະຜູ້ເຂົ້າຮ່ວມຄວນມີກະດາດເຫລືອງໜຶ່ງແຜ່ນເພື່ອຂຽນໃສ່. ເຂົາຄວນຟັງຄູ່ຂອງຕົນກ່ອນ ແລະ ຂຽນພອນສະຫວັນ ຫລື ທັກສະ/ຄວາມສາມາດໃສ່ດ້ານເທິງຂອງເຈ້ຍສີເຫລືອງແລ້ວຕາມດ້ວຍການຂຽນຊື່ຂອງຄູ່ສົນທະນາ ແລະ ບາງຢ່າງທີ່ເຂົາໄດ້ຮູ້ກ່ຽວກັບທັກສະຈາກຄູ່ຕົນ. ຕົວຢ່າງ:

**ທັກສະ: ການຫາປາ**

**ຄຳກອນ ໃສສະອາດ**

*ຂ້ອຍໄດ້ຮຽນຮູ້ວ່າ.......*

*ຍາມລາຕີຫາປາໄດ້ດີ*

*ຖ້ານ້ຳສະຫງົບຍິ່ງເປັນການດີ*

*ເຜົ້າລໍຖ້າໃຫ້ດວງຈັນຕື່ນຂຶ້ນມາ*

*ໃຊ້ເຫຍື່ອຕ່າງກັນສຳລັບປາຕ່າງຊະນິດ*

ຫລັງຈາກທີ່ຄູ່ສົນທະນາເວົ້າກ່ຽວກັບສິ່ງທີ່ເຂົາເຈົ້າມີຄວາມສົນໃຈແລ້ວ, ຂຶ້ນຢູ່ກັບເວລາທີ່ມີ, ຜູ້ໃຫ້ຄວາມສະດວກສາມາດຖາມຫາອາສາສະໝັກ ທີ່ຈະຂຶ້ນມາທາງໜ້າຫ້ອງ. ຈາກນັ້ນໃຫ້ຜູ້ເຂົ້າຮ່ວມຜູ້ອື່ນ ຖາມໄດ້ບໍ່ເກີນ 5 ຄຳຖາມ ເພື່ອທີ່ຈະພະຍາຍາມຄົ້ນຫາພອນສະຫວັນຂອງຄູ່ສົນທະນາລາວ. ໂດຍວິທີສັບປ່ຽນກັນໃຫ້ອາສາສະໝັກສະແດງອອກພອນສະຫວັນຂອງຄູ່ສົນທະນາ ແລະ ໃຫ້ຜູ້ອື່ນເດົາວ່າແມ່ນຫຍັງ ?

ຈາກນັ້ນ, ໃຫ້ເອົາເຈ້ຍສີເຫລືອງຂອງແຕ່ລະກຸ່ມຕິດໃສ່ກະດານ ເຊັ່ນ ກຸ່ມທັກສະໃນການເຮັດສວນຄົວ, ກຸ່ມທັກສະໃນດ້ານສິລະປະ ຫລື ກຸ່ມທັກສະໃນດ້ານກິລາ ແລະ ອື່ນໆ.

**ພວກເຮົາສາ ມາດຮຽນຮູ້ຫຍັງແດ່ຈາກກິດຈະກຳເຫລົ່ານີ້?**

- ພວກເຮົາໄດ້ຮຽນຮູ້ການທີ່ຕ້ອງຟັງເຊິ່ງກັນແລະກັນ;
- ພວກເຮົາໄດ້ຮູ້ກັນດີຂຶ້ນ;
- ພວກເຮົາໄດ້ຮຽນຮູ້ການສື່ສານແບບໃຊ້ຄຳເວົ້າ ແລະ ບໍ່ໃຊ້ຄຳເວົ້າໄດ້ດີຂື້ນ;
- ພວກເຮົາເປັນທີມງານທີ່ດີທີມໜຶ່ງທີ່ມີພອນສະຫວັນຫລາຍຢ່າງ;
- ພວກເຮົາໄດ້ຮຽນຮູ້ທີ່ຈະຖາມຄຳຖາມເປີດ
- ພວກເຮົາໄດ້ຮຽນຮູ້ຈາກກັນແລະກັນ

ຜູ້ໃຫ້ຄວາມສະດວກສາມາດກ່າວໄດ້ວ່າ ໜຶ່ງໃນບົດຮຽນທີ່ສຳຄັນທີ່ສຸດແມ່ນ **ພວກເຮົາ ສາ ມາດເຫັນວ່າແຕ່ລະຄົນມີພອນສະຫວັນ ແລະ ພອນສະຫວັນເຫລົ່ານີ້ສາມາດນຳໃຊ້ເຂົ້າໃນ ວຽກ ງານຂອງພວກເຮົາໃນຖານະທີ່ເປັນຄູ ກໍຄືເປັນຜູ້ຮຽນ.**

ຄູຕ້ອງຄຳນຶງວ່າ ເດັກແຕ່ລະຄົນນຳເອົາສິ່ງທີ່ດີໆໃດໜຶ່ງມາກັບເຂົາ ເຊິ່ງສາມາດປະກອບສ່ວນໄດ້. ເຖິງຢ່າງໃດກໍຕາມ, ຄູຕ້ອງຄົ້ນພົບໃຫ້ເຫັນສິ່ງດັ່ງກ່າວ. ເດັກສາມາດເປັນຄູຂອງກັນ ແລະ ກັນ ແລະສາມາດຮຽນຮູ້ດ້ວຍກັນ.

## 4.2 ການຮວບຮວມເອົາວິທີຄົ້ນຄິດ, ວິທີຮຽນຮູ້ແບບແຕກຕ່າງກັນເຂົ້ານຳໃຊ້ໃນຫ້ອງຮຽນ

ຢູ່ໃນເຄື່ອງມືທີ່ຜ່ານມາພວກເຮົາໄດ້ຮຽນຮູ້ວ່າ **ເດັກຮຽນຮູ້ດ້ວຍຫລາຍວິທີແຕກຕ່າງກັນ ແລະຢູ່ໃນຫລາຍລະດັບແຕກຕ່າງກັນ;** ນັ້ນກໍຄື ມັນມີຄວາມແຕກຕ່າງໆຫລາກຫລາຍໃນການຮຽນຮູ້. ດັ່ງນັ້ນ, ພວກເຮົາທີ່ເປັນຄູຈຳເປັນຕ້ອງປະດິດສ້າງເສັ້ນທາງແຫ່ງການຮຽນຮູ້ແບບຕ່າງໆ ໂດຍໃຊ້ວິທີສິດສອນທີ່ແຕກຕ່າງກັນ ເພື່ອເຮັດໃຫ້ເດັກທຸກຄົນສາມາດເຂົ້າໃຈຂໍ້ມູນຄວາມຮູ້ ທີ່ພວກເຮົາຈະສອນ ແລະ ສາມາດຮຽນຮູ້ໃນແນວທາງທີ່ມີຄວາມໝາຍ ໂດຍສະເພາະເດັກທີ່ມີພື້ນເພ(ພູມຫຼັງ) ແລະ ຄວາມສາມາດແຕກຕ່າງກັນ.

ເສັ້ນທາງຂອງກິດຈະກຳການຮຽນການສອນຕ່າງໆ ຈະເລີ້ມຕັ້ງແຕ່ການທ່ອງຈຳ ແລະ ການຫລຳຄືນຈົນກະທັ່ງການແກ້ໄຈດບັນຫາ ແລະ ການຄົ້ນຄິດຢ່າງປະດິດສ້າງ.

**ການທ່ອງຈຳ ການວິເຄາະ ການສັງເຄາະ ການແກ້ໂຈດບັນຫາ**

ຢູ່ໃນຫ້ອງຮຽນຂອງເຮົາ,ພວກເຮົາສາມາດຊອກຫາວິທີຕ່າງໆເພື່ອໃຊ້ເສັ້ນທາງນີ້ທັງໝົດ. ຕົວຢ່າງ: ເຮົາສາມາດ:

- **ໃຊ້ແທ່ງຕົວຕໍ່, ຕົວແບບ ແລະ ວັດຖຸສິ່ງຂອງເພື່ອສອນຄະນິດສາດ,** ເຊິ່ງຈະເຈາະເຂົ້າເຖິງທັກສະການເຄື່ອນໄຫວທີ່ດີຂອງເດັກ ແລະ ຄວາມເຂົ້າໃຈແບບປະຈັກຕາຂອງເຂົາ;
- **ຂໍໃຫ້ເດັກນັກຮຽນເວົ້າກ່ຽວກັບ (ຫລື ຂຽນກ່ຽວກັບ) ແນວຄວາມຄິດ ແລະ ຂະບວນການໃນຄະນິດສາດ,** ເຊິ່ງມັນຈະເຊື່ອມສຳພັນກັບການນຶກຄິດແບບໃຊ້ຖ້ອຍຄຳພາສາ ເພື່ອເຂົ້າໃຈແນວຄວາມຄິດລວມຍອດຂອງຄະນິດສາດ;
- **ບອກໃຫ້ເດັກນັກຮຽນແຕ້ມຮູບ ກ່ຽວກັບເລື່ອງລາວ/ບົດເລື່ອງທີ່ພວກເຮົາອ່ານໃຫ້ເຂົາຟັງ,** ເຊິ່ງພົວພັນກັບການນຶກຄິດອອກມາເປັນພາບ ໃນຄວາມຄິດຕາມຄຳເວົ້າ ແລະ ເຫດການໃນ ບົດເລື່ອງ ແລະ **ແນະນຳນຳພາເດັກນັກຮຽນໃນການສ້າງແຜນທີ່ບໍລິເວນໂຮງຮຽນ,** ເຊິ່ງຈະເຊື່ອມສຳພັນປະສົບການການເຄື່ອນໄຫວທາງຫາວກັບແນວຄວາມຄິດລວມຍອດທີ່ປະຈັກຕາ ແລະ ຄະນິດສາດ. ເມື່ອເດັກສຳຫລວດຊຸມຊົນທີ່ເຂົາອາໄສຢູ່, ເຂົາຈະຊອກເຫັນບັນຫາທີ່ມີໃນນັ້ນ ແລະ ໃຊ້ທັກສະຕ່າງໆ ໂດຍມີການຮ່ວມມືກັນເພື່ອສະເໜີແນະວິທີແກ້ໄຂບັນຫາດັ່ງກ່າວ. ນີ້ຄືພວກເຂົາກຳລັງຮຽນຮູ້ວິທີນຳໃຊ້ສິ່ງທີ່ເຂົາໄດ້ຮຽນຮູ້ໃນໂຮງຮຽນ. ພາກສ່ວນໜຶ່ງຂອງການໃຫ້ການສຶກສາທີ່ດີ ແມ່ນຂະບວນການນີ້ຍັງຊ່ອຍຊຸມຊົນເຂົ້າໃຈວຽກງານຂອງໂຮງຮຽນ ແລະ ຊຸມຊົນອາດຖືກກະຕຸ້ນທີ່ຈະສະໜັບສະໜູນວຽກງານຂອງຄູ.

**ກິດຈະກຳປະຕິບັດ: ການສັງເກດຄວາມແຕກຕ່າງຫລາກຫລາຍ**

1. ຂຽນຊື່ເດັກນັກຮຽນໃນຫ້ອງຮຽນຂອງທ່ານ ຜູ້ທີ່ເຫັນຈະແຈ້ງແລ້ວວ່າຮຽນແຂງ/ເກັ່ງວິຊາໃດແດ່?
2. ເຊັ່ນ ວິຊາຄະນິດສາດ, ເກັ່ງພາກຂຽນ, ມີທັກສະໃນການສົນທະນາ ແລະ ອື່ນໆ. ໃຫ້ບັນລະຍາຍຈຸດແຂງນັ້ນມີວິທີສະແດງ/ສາທິດອອກໃນຫ້ອງຮຽນແນວໃດ?.
3. ຂຽນຊື່ເດັກນັກຮຽນຜູ້ທີ່ມີພອນສະຫວັນອື່ນໆ ທີ່ອາດກ່ຽວພັນໂດຍທາງອ້ອມກັບການຮຽນຮູ້ໃນຫ້ອງຮຽນ. ມີເດັກທີ່ເປັນນັກອອກແບບທີ່ດີບໍ່? ເດັກຄົນອື່ນສະແດງອອກການປະສານງານທີ່ດີໃນເກມກິລາບໍ່? ອີກຄົນມີທັກສະດີເລີດດ້ານສັງຄົມບໍ່?

ຕົວຢ່າງ: ເດັກທີ່ເປັນດາວຊິນໂດຣມ (ສະໝອງພິການ) ປົກກະຕິແລ້ວຈະມີທັກສະທາງ

ສັງຄົມດີທີ່ສຸດ.

4. ບັດນີ້, ໃຫ້ແຕ້ມຮູບວົງກົມໃສ່ເຈ້ຍກະດາດເພື່ອນຳສະເໜີເດັກທີ່ເຫລືອ ເຊິ່ງເປັນເດັກທີ່ທີບໍ່ທັນໄດ້ເຊື່ອມໂຍງກັບທັກສະ ຫລື ພອນສະຫວັນພິເສດຂອງເຂົາ.ໃນອາທິດຕໍ່ໄປໃຫສັງເກດເດັກເຫລົ່ານີ້ຢ່າງໃກ້ຊິດ. ຖ້າຫາກທ່ານສັງເກດເຫັນເດັກຄົນໃດຄົນໜຶ່ງ ມັກກິດຈະກຳໃດໜຶ່ງໃຫ້ຈົດໄວ້. ກິດຈະກຳນີ້ຫລືວ່າເດັກທີ່ປະຕິບັດກິດຈະກຳນີ້ຈະສະທ້ອນໃຫ້ເຫັນວິທີຮຽນຮູ້ຂອງເຂົາຄືແນວໃດ? ວິທີການເຫລົ່ານີ້ ຈະສາມາດສອດແຊກເຂົ້າໄປໃນບົດສອນຂອງທ່ານໄດ້ຢ່າງໃດ?

ໃນການສັງເກດ ແລະ ການຮັບມືແກ້ໄຂບັນຫາຄວາມຫລາກຫລາຍ, ພວກເຮົາຈຳເປັນຕ້ອງກຳນົດໃຫ້ໄດ້ສິ່ງທີ່ເຮົາຈະສາມາດຈັດຫາອັນໃດມາຊ່ອຍ. ນັ້ນຄືວິທີຊ່ອຍເຫລືອທີ່ດີເພື່ອໃຫ້ເດັກຮຽນຮູ້ ໂດຍສະເພາະ ເດັກທີ່ມີບັນຫາດ້ານການຮຽນຮູ້. ພວກເຮົາບໍ່ຄວນເລັ່ງໃສ່ວ່າຕ້ອງ "ຢຸດເຊົາ" ເມື່ອໃດ ເຊັ່ນ ເບິ່ງເວລາ, ຄວນຈະສົນໃຈຜົນປະໂຫຍດຂອງການຮຽນຮູ້ ສຳລັບເດັກຂອງເຮົາ. ຕົວຢ່າງ: ພວກເຮົາສາມາດຂໍໃຫ້ເດັກອີກຜູ້ໜຶ່ງອ່ານໃຫ້ ແລະ ເປັນຜູ້ຂຽນໃຫ້ໄດ້ບໍ່? ໃນຂະນະດຽວກັນພວກເຮົາ

ສາມາດລະບຸທັກສະທີ່ມີຄຸນຄ່າຂອງເດັກທີ່ມີຄວາມຫຍຸ້ງຍາກ ແລະ ຂາຄູ່ຂອງລາວຈະສາມາດຮຽນທັກສະເຫລົ່ານີ້ໄດ້ຄືແນວໃດ? ເວົ້າອີກຢ່າງໜຶ່ງ, ພວກເຮົາຈຳເປັນຕອ້ງສ້າງຕັ້ງຄວາມສຳພັນເຊິ່ງເດັກທັງຄູ່ຈະສາມາດປະກອບສ່ວນຊ່ອຍເຫລືອກັນຮຽນຮູ້.

## 4.3 ສິ່ງທ້າທາຍຕໍ່ກັບຄວາມແຕກຕ່າງຫລາກຫລາຍ

ການມີເດັກທີ່ມີຄວາມແຕກຕ່າງກັນໂດຍທີ່ມີພື້ນເພ(ພູມຫຼັງ) ແລະ ຄວາມສາມາດແຕກຕ່າງກັນໃນຫ້ອງຮຽນຮ່ວມຖືວ່າມັນມີຄວາມທ້າທາຍ. ພວກເຮົາຈຳເປັນຕ້ອງພິຈາລະນາສິ່ງທີ່ເດັກຕ້ອງການທີ່ຈະຮຽນຮູ້ ແລະ ລາວຈະຮຽນດ້ວຍວິທີໃດຈຶ່ງຈະຮຽນໄດ້ດີທີ່ສຸດ. ພວກເຮົາຕ້ອງຄົ້ນໃຫ້ພົບວິທີເຮັດໃຫ້ເດັກທຸກຄົນຕ້ອງການຢາກຮຽນຮ່ວມກັນຢ່າງມີຄວາມສຸກ. ອຸປະສັກທີ່ທ້າທາຍ 3 ຢ່າງ ທີ່ກີດກັ້ນການຮຽນຮ່ວມກັນຂອງເດັກມີຄື: ການຂົ່ມເຫັງ, ຄວາມອະຄະຕິ ແລະ ການຈຳແນກ.

**ກ. ການຂົ່ມເຫັງ**

ການຂົ່ມເຫັງແມ່ນຮູບການໜຶ່ງຂອງຄວາມຮຸນແຮງ. ໃນປຶ້ມເຫລັ້ມ 3 ກ່ຽວກັບການສ້າງສະພາບແວດລ້ອມທີ່ຖືກສຸຂະລັກສະນະ ແລະ ມີການປົກປ້ອງ, ພວກເຮົາຈະໄດ້ຮຽນຮູ້ຮູບແບບອື່ນໆຂອງຄວາມຮຸນແຮງທີ່ອາດມີໃນໂຮງຮຽນ, ພວກເຮົາຈະສ້າງແຜນທີ່ຄວາມຮຸນແຮງຢ່າງໃດ ແລະ ຈະພັດທະນານະໂຍບາຍ ແລະ ກິດຈະກຳທີ່ມີປະສິດທິພາບຂອງໂຮງຮຽນ ເພື່ອຕ້ານຄວາມຮຸນແຮງໄດ້ດີແນວໃດ? ໃນປຶ້ມຄູ່ມືເຫລັ້ມນີ້ ພວກເຮົາຈະເບິ່ງເລື່ອງການຂົ່ມເຫັງລັງແກ ໂດຍສະເພາະເພາະວ່າການຂົ່ມຂູ່ ແລະ ຄວາມຢ້ານກົວສາມາດກີດກັນເດັກບໍ່ໃຫ້ມາຮຽນໃນຫ້ອງຮຽນຮ່ວມ ແລະ ເປັນເພື່ອນມິດໃນການຮຽນຮູ້.

ເມື່ອຄິດເຖິງການຂົ່ມເຫັງ,ປົກກະຕິແລ້ວພວກເຮົາຈະຄິດເຖິງເດັກ ຫລື ກຸ່ມເດັກກຸ່ມໜຶ່ງ(ຜູ້ຂົ່ມເຫັງ) ຂົ່ມຂູ່ເດັກຜູ້ອື່ນຜູ້ຖືກຂົ່ມເຫັງ(ເປັນເຫຍື່ອ)ເລື້ອຍໆ ຍ້ອນວ່າຜູ້ເປັນເຫຍື່ອມີຄວາມແຕກຕ່າງໝູ່ແນວໃດແນວໜຶ່ງ. ພວກເຂົາອາດຈະຮຽນເກັ່ງກວ່າ (ໄດ້ຄະແນນດີກວ່າ) ກຸ່ມຜູ້ຂົ່ມເຫັງ; ເຂົາອາດມາຈາກກຸ່ມທີ່ມີວັດທະນະທຳແຕກຕ່າງເຊັ່ນນັບຖືສາສະໜາຕ່າງໆ; ຫລື ອາດເປັນເພາະເຂົາເປັນຄົນທຸກຍາກ. ພຶດຕິກຳຂອງຜູ້ໃຫຍ່ ຫລື ຄູບໍ່ສະເພາະແຕ່ເດັກ ກໍສາມາດພິຈາລະ ນາວ່າເປັນການຂົ່ມເຫັງໄດ້. ມີ ຫລາຍຮູບແບບຂອງການຂົ່ມເຫັງ, ຕົວຢ່າງ:

- ຂົ່ມເຫັງທາງຮ່າງກາຍ ເຊັ່ນ ຖືກໝູ່, ຄູ ຫລື ຜູ້ດູແລຕີ; ຂົ່ມເຫັງທາງແນວຄິດຈິດໃຈຢູ່ບ່ອນວ່າຄວາມຄິດເຫັນຂອງເດັກຖືກປະຖິ້ມ ຫລື ບໍ່ເຫັນຄຸນຄ່າ;
- ຂົ່ມເຫັງທາງອາລົມຄວາມຮູ້ສຶກ ເນື່ອງຈາກຊ່ວງເວລາມີຄວາມພູມໃຈໃນຕົນເອງຕ່ຳ, ຮາວີລົບກວນການທຳໃຫ້ເຂີນອາຍ ຫລື ຍົກເລີກການຊົມເຊີຍໃຫ້ລາງວັນໃນໂຮງຮຽນເຊິ່ງອາດກ່ຽວພັນເຖິງການຂົ່ມຂູ່ທາງແນວຄິດປັນຍາ;
- ຂົ່ມເຫັງດ້ວຍຖ້ອຍຄຳ ເຊັ່ນ ການເອີ້ນຊື່, ການດູຖູກຢຽບຫຍາມ, ການຫລອກລໍ້ ແລະ ຄຳເວົ້າທີ່ເປັນການແບ່ງແຍກເຊື້ອຊາດ;
- ຂົ່ມເຫັງໂດຍທາງອ້ອມເຊັ່ນ ການກະຈາຍຂ່າວລື ຫລື ການຄັດອອກໃຜຜູ້ໜຶ່ງຈາກກຸ່ມສັງຄົມ.
- ຂົ່ມເຫັງທາງວັດທະນະທຳ ຫລື ສັງຄົມເຊິ່ງເກີດຈາກຄວາມມີອະຄະຕິ ຫລື ການຈຳແນກເນື່ອງຈາກມີຄວາມແຕກຕ່າງໃນຫ້ອງຮຽນ, ກຸ່ມຊົນເຜົ່າ, ຊົນຊັ້ນວັນນະ, ເພດ ແລະ ອື່ນໆ.

ການຂົ່ມເຫັງປົກກະຕິຈະມີບາງຮູບແບບຂອງພຶດຕິກຳກ້າວລ້າວ ເຊິ່ງເຮັດໃຫ້ເຈັບປວດ ແລະ ມີເຈຕະນາ. ມັນສາມາດແກ່ຍາວເປັນຫລາຍອາທິດຫລາຍເດືອນ ຫລື ຫລາຍປີ. ຖ້າປາສະ

ຈາກຜູ້ໃຫ້ຄຳແນະນຳການຊ່ວຍເຫລືອ ຈະມີຄວາມຫຍຸ້ງຍາກສະເໝີ ສຳລັບເດັກທີ່ຖືກຂົ່ມເຫັງທີ່ຈະປ້ອງກັນຕົນເອງ.

ໃນສັງຄົມທີ່ແຕກຕ່າງກັນ ໝູ່ ມັກຈະຖືກຂົ່ມເຫັງສະເໝີ. ຄວາມແຕກຕ່າງຂອງເຂົາອາດເປັນ ເພາະວ່າຕ່າງເພດ, ຕ່າງເຜົ່າ, ພິການ ຫລື ມີລັກສະນະພິເສດຕ່າງໝູ່. ເຖິງວ່າເດັກຊາຍມັກຈະກ່ຽວຂ້ອງກັບກິດຈະກຳການລົບກວນທາງຮ່າງກາຍ, ສ່ວນເດັກຍິງມັກຈະໃຊ້ຮູບແບບມີເລ້ຫລ່ຽມ ແລະ ໂດຍທາງອ້ອມຫລາຍກວ່າ ເຊັ່ນ ການຍອກລໍ້ ແລະ ອາດຂົ່ມເຫັງສຽດສີແບບເປັນກຸ່ມຫລາຍກວ່າຈະເຮັດພຽງລຳພັງ.

ເດັກທີ່ຖືກຂົ່ມເຫັງ ມັກຈະບໍ່ຍອມຮັບວ່າຖືກຂົ່ມເຫັງ ເພາະຢ້ານວ່າຈະຖືກຂົ່ມເຫັງເພີ້ມຂື້ນ. ສຳລັບເດັກທີ່ຖືກທຳຮ້າຍຈາກຜູ້ໃຫຍ່ ເຂົາອາດບໍ່ຕ້ອງການຍອມຮັບມັນ ເພາະເຂົາຢ້ານຜູ້ໃຫຍ່ ແລະ ອາດເປັນໄປໄດ້ທີ່ຈະເປັນຜູ້ໃຫຍ່ໂດຍທົ່ວໄປອີກ.

ສຳລັບຄູ ມັນກໍເປັນການຍາກທີ່ຈະຮັບມືແກ້ໄຂການຂົ່ມເຫັງ ຍ້ອນວ່າ ມັນມັກຈະເກີດຂື້ນຢູ່ນອກ ຫ້ອງຮຽນ ເຊັ່ນ ເກີດຂື້ນຕາມທາງໄປໂຮງຮຽນ ຫລື ຢູ່ບ່ອນຫລິ້ນ. ຢ່າງໃດກໍຕາມ, ຜົນຂອງການຂົ່ມຂູ່ປົກກະຕິແລ້ວ ຈະມີອິດທິພົນຕໍ່ການຮຽນດີ ຫລື ແນວໃດ ຂອງເດັກທີ່ຖືກທຳຮ້າຍໃນຫ້ອງ ຮຽນຂອງເຮົາ.

ພວກເຮົາຈຳເປັນຕ້ອງດຳເນີນການຢ່າງຈິງຈັງ ແລະ ຊອກຫາຊ່ອງທາງ ເພື່ອໃຫ້ຮູ້ຂອບເຂດຂອງການຂົ່ມເຫັງໃນຫ້ອງຮຽນ. ການສັງເກດແມ່ນທັກສະຕົ້ນຕໍ ແລະ ພວກເຮົາຈຳຕ້ອງສັງເກດເດັກໃນລະຫວ່າງທີ່ເຂົາພວມຫລິ້ນ ກໍຄືຢູ່ໃນຫ້ອງຮຽນ. ເດັກຜູ້ທີ່ມັກຢູ່ຄົນດຽວ, ຜູ້ທີ່ມີເພື່ອນໜ້ອຍຄົນ ຫລື ຜູ້ທີ່ແຕກຕ່າງໝູ່ ດ້ານໃດໜຶ່ງອາດສາມາດເປັນເປົ້າຫມາຍເພື່ອການຂົ່ມເຫັງ. ສັນຍານບອກເຖິງການຂົ່ມເຫັງປະກອບດ້ວຍ :

- ເດັກຜູ້ທີ່ເສຍຄວາມໝັ້ນໃຈຢ່າງກະທັນຫັນ ;
- ເດັກຜູ້ທີ່ຫລີກລ້ຽງການປະສົບສາຍຕາ ແລະ ກາຍເປັນຄົນງຽບ ;
- ເດັກຜູ້ທີ່ມີຜົນການຮຽນອ່ອນ ແຕ່ເມື່ອກ່ອນເປັນຄົນຮຽນດີ
- ເດັກຜູ້ທີ່ເລີ້ມມາໂຮງຮຽນບໍ່ປົກກະຕິ ຫລື ເລີ້ມເຈັບທ້ອງ ຫລື ເຈັບກະເພາະແບບອະທິບາຍບໍ່ໄດ້.

ການສົນທະນາອະພິປາຍກັບຜູ້ປົກຄອງ ຫລື ຜູ້ດູແລແມ່ນຈຳເປັນ, ແຕ່ພວກເຮົາຄວນຕື່ນຕົວຕໍ່ການປ່ຽນແປງພຶດຕິກຳໃນຕົວເດັກ. ພວກເຮົາຄວນບັນທຶກ ເພື່ອລະບຸການປ່ຽນແປງໃນແບບແຜນພຶດຕິກຳຂອງເດັກ ທີ່ອາດສະທ້ອນພາບການຂົ່ມເຫັງ. ຍັງມີຄວາມເປັນໄປໄດ້. ໃນການ

ດຳເນີນການສຳຫລວດ ເພື່ອໃຫ້ໄດ້ພາບຂອງຄວາມສຳພັນພາຍໃນຫ້ອງ ຫລື ໂຮງຮຽນ. ແບບສຳພາດ 2 ແບບຈະໄດ້ນຳສະເໜີຂ້າງລຸ່ມ. ແບບທຳອິດເປັນລາຍການກວດກາແບບໄວ ກ່ຽວກັບພຶດຕິກຳຂົ່ມເຫັງ. ແບບທີ 2 ເປັນແບບສອບຖາມ ທີ່ລະອຽດກວ່າເພື່ອຈະເກັບຄຳຕອບ ກ່ຽວກັບຄວາມສຳພັນພາຍໃນ ແລະ ຮອບໆໂຮງຮຽນ ແລະ ຫ້ອງຮຽນຂອງພວກເຮົາ. ທ່ານສາມາດຂໍໃຫ້ນັກຮຽນໃນຫ້ອງຕອບແບບສອບຖາມ ໂດຍບໍ່ຂຽນຊື່ຜູ້ຕອບ.

## 1. ປະກົດການການຂົ່ມເຫັງ

| | ບໍ່ເຄີຍມີ | ເຄີຍຄັ້ງໜຶ່ງ | ເຄີຍຫລາຍກວ່າໜຶ່ງຄັ້ງ |
|---|---|---|---|
| ຂ້ອຍເຄີຍຖືກຍູ້, ຖືກແຕະ ຫລືຖືກຕີໂດຍເຈຕະນາ | | | |
| ເດັກຜູ້ອື່ນເວົ້າເລື່ອງບໍ່ດີກ່ຽວກັບຂ້ອຍ | | | |
| ຂ້ອຍຖືກໝູ່ຍາດເອົາສິ່ງຂອງ | | | |
| ຂ້ອຍຖືກເອີ້ນຊື່ທີ່ໜ້າລັງກຽດເພາະວ່າ ຂ້ອຍມີອັນແຕກຕ່າງຈາກຜູ້ອື່ນ | | | |
| ຂ້ອຍຖືກເອີ້ນຊື່ທີ່ໜ້າລັງກຽດເພາະ ເຫດຜົນອື່ນໆ | | | |
| ຂ້ອຍຖືກຫົວຂວັນ ຫລືຖືກດູຖູກ ຢ່າງບໍ່ມີເຫດຜົນ | | | |
| ຂ້ອຍຖືກກັນບໍ່ໃຫ້ຫລິ້ນເກມນຳໝູ່ໂດຍເຈຕະນາ | | | |
| ບາງຄົນເຮັດແນວບໍ່ດີກັບຂ້ອຍດ້ວຍວິທີອື່ນໆ | | | |

## 2. ແບບສອບຖາມກ່ຽວກັບຄວາມສຳພັນ

ຂ້ອຍເປັນເດັກຊາຍ____________ ຂ້ອຍເປັນເດັກຍິງ____________

ອາຍຸ__________ ອາຍຸ__________

| ໃນຊ່ວງອາທິດນີ້ ໃນໂຮງຮຽນ<br>ມີເດັກຄົນອື່ນ: | ບໍ່ເຄີຍມີ | ເຄີຍຄັ້ງໜຶ່ງ | ເຄີຍຫລາຍ<br>ກວ່າໜຶ່ງຄັ້ງ |
|---|---|---|---|
| ເອີ້ນຊື່ຂ້ອຍ ເຊິ່ງຂ້ອຍບໍ່ມັກ | | | |
| ເວົ້າດີກັບຂ້ອຍ | | | |
| ພະຍາຍາມເຕະຂ້ອຍ | | | |
| ໃຫ້ຂອງຂວັນແກ່ຂ້ອຍ | | | |
| ເຮັດບໍ່ສຸພາບກັບຂ້ອຍ<br>ເພາະຂ້ອຍແຕກຕ່າງໝູ່ | | | |
| ເວົ້າວ່າພວກເຂົາຈະທຳຮ້າຍຂ້ອຍ | | | |
| ພະຍາຍາມໃຫ້ຂ້ອຍເອົາເງິນໃຫ້ ພວກເຂົາ | | | |
| ພະຍາຍາມເຮັດໃຫ້ຂ້ອຍຢ້ານ | | | |
| ຢຸດຂ້ອຍບໍ່ໃຫ້ຮ່ວມຫລິ້ນເກມນຳ | | | |
| ເລົ່າເລື່ອງຕະຫລົກ ແລະ<br>ກໍຫົວເຍາະເຍີ້ຍຂ້ອຍ | | | |
| ພະຍາຍາມໃຫ້ຂ້ອຍທຳຮ້າຍຜູ້ອື່ນ | | | |
| ຕົວະຂ້ອຍ ແລະ ເຮັດໃຫ້ຂ້ອຍຕົກຢູ່ໃນ<br>ຄວາມລຳບາກ (ອັນຕະລາຍ) | | | |
| ຊ່ວຍຂ້ອຍຖືສິ່ງຂອງບາງຢ່າງ | | | |
| ຊ່ວຍຂ້ອຍເຮັດບົດຝຶກຫັດ | | | |

| | | | |
|---|---|---|---|
| ເວົ້າຫຍາບຄາຍກ່ຽວກັບລັກສະນະການ<br>ຢ່າງຂອງຂ້ອຍ | | | |
| ເວົ້າຈາລາມົກເພາະຂ້ອຍມີສີຜິວຕ່າງໝູ່ | | | |
| ຫລິ້ນເກມກັບຂ້ອຍ | | | |
| ພະຍາຍາມທຸບຂອງບາງຢ່າງ ຂອງຂ້ອຍ<br>ໃຫ້ແຕກ | | | |

ຫລັງຈາກວິເຄາະຜົນຂອງແບບສອບຖາມ, ພວກເຮົາສາມາດລະບຸໄດ້ ຜູ້ທີ່ຢາກບອກວ່າ ເຂົາພວມຖືກຂົ່ມເຫັງ ແລະ ຜູ້ທີ່ມີແນວໂນ້ມວ່າເປັນຜູ້ຂົ່ມເຫັງໝູ່. ຢ່າງໃດກໍຕາມ, ຈົ່ງລະວັງ. ເດັກບາງຄົນອາດເປັນເຫຍື່ອຂອງການຂົ່ມເຫັງ, ແຕ່ອາດຈະບໍ່ເຕັມໃຈຍອມຮັບ ພ້ອມທັງໃນແບບສອບຖາມນີ້. ເນື່ອງຈາກແບບສອບຖາມບໍ່ໄດ້ລະບຸຊື່, ຢ່າງນ້ອຍມັນກໍຊ່ອຍທ່ານເຂົ້າໃຈຂອບເຂດຂອງການຂົ່ມເຫັງກັນໃນຫ້ອງຂອງທ່ານ. ຈາກຂໍ້ມູນຂ່າວສານດັ່ງກ່າວ, ທ່ານສາມາດເລີ້ມວາງແຜນປະຕິບັດໃນຕໍ່ໜ້າກັບຄູຜູ້ອື່ນໆ: ຜູ້ປົກຄອງ, ຜູ້ດູແລ ແລະ ພວກເດັກນັກຮຽນເອງ.

**ປະຕິບັດການເພື່ອຕໍ່ຕ້ານການຂົ່ມເຫັງ**

ເພື່ອຫລຸດຜ່ອນການຂົ່ມເຫັງ, ຄູຈຳເປັນຕ້ອງດຳເນີນການຫລາຍຢ່າງເຊັ່ນ:

- ການນຳພາອອກກຳລັງກາຍເພື່ອຊ່ອຍເດັກໃຫ້ຜ່ອນຄາຍ ແລະ ລົດຄວາມຕຶງຄຽດ;
- ການເພີ້ມທະວີການຮຽນຮູ້ແບບຮ່ວມມືພາຍໃນຫ້ອງຮຽນ (ເດັກຊ່ອຍເຫລືອກັນໃນການຮູ້);
- ການປັບປຸງການຮັກສາສິດຜົນປະໂຫຍດຂອງເດັກ ໂດຍໃຫ້ອຳນາດເດັກທຸກຫລາຍຂຶ້ນ ເຊັ່ນ: ໃຫ້ພວກເຂົາສ້າງກົດລະບຽບຂອງຫ້ອງຮຽນ ແລະ ມີຄວາມຮັບຜິດຊອບພາຍໃນຄະນະກຳມະການນັກຮຽນ;
- ການເພີ້ມທະວີຄວາມຮັບຜິດຊອບພາຍໃນຫ້ອງຮຽນ ໂດຍການສ້າງຕັ້ງຄະນະກຳມະການ ແລະ ເຮັດວຽກໃກ້ຊິດຫລາຍຂຶ້ນ ກັບຜູ້ປົກຄອງ ແລະ ຊຸມຊົນທ້ອງຖິ່ນ;
- ການພັດທະນາຍຸດທະສາດເດັກສູ່ເດັກ ເພື່ອແກ້ໄຂຂໍ້ຂັດແຍ້ງ.

- ການອະນຸຍາດ ໃຫ້ເດັກລະບຸມາດຕະການດ້ານວິໄນອັນໃດ ທີ່ຄວນປະຕິບັດຕໍ່ຜູ້ທີ່ຂົ່ມເຫັງຜູ້ອື່ນ.

ຄູຍັງສາມາດໃຊ້ລະຄອນ ຫລື ຕຸກກະຕາ ເພື່ອສຳຫລວດຂອບເຂດຂອງການຂົ່ມເຫັງ, ສາເຫດຂອງມັນ ແລະ ທາງແກ້ເມື່ອມັນຫາກເກີດຂຶ້ນຢູ່ໃນ ຫລື ນອກໂຮງຮຽນ.ການສົນທະນາ ອະພິປາຍ ຫລື ໂຕ້ວາທີປະເດັນບັນຫາທີ່ລະອຽດອ່ອນ ກໍສາມາດນຳໃຊ້ຄວບຄູ່ກັບນິທານ (ບົດເລົ່າເລື່ອງ) ຫລື ການ ຫລິ້ນບົດບາດສົມມຸດ ເພື່ອໃຫ້ເດັກພະຍາຍາມເວົ້າແບບຢືນຢັນວ່າ "ບໍ່" ກໍຄື ເພື່ອຊອກຫາພາສາທີ່ຖືກ ຕ້ອງ ເພື່ອທີ່ຈະໃຊ້ຕ້ານການຂົ່ມເຫັງ ແລະ ຜູ້ທຳຮ້າຍ.

**ຂ. ຄວາມອະຄະຕິ ແລະ ການຈຳແນກ**

ສ່ວນຫລາຍຮາກເຫງົ້າຂອງການຂົ່ມເຫັງລັງແກ ແມ່ນຄວາມມີອະຄະຕິ(ພຶດຕິກຳ ຫລື ຄຳຄິດເຫັນກ່ຽວກັບຜູ້ຄົນທີ່ເລວຊາມ) ແລະ ການຈຳແນກ (ການແຍກແຍະທີ່ບໍ່ດີລະຫວ່າງກຸ່ມຄົນ; "ພວກເຂົາ" ປະຈັນບານກັບ "ພວກເຮົາ"). ວິທີການໜຶ່ງທີ່ຈະເຂົ້າໃຈຄວາມອະຄະຕິ ແລະ ການຈຳແນກເກີດຂຶ້ນໃນຫ້ອງຮຽນ ແລະ ໂຮງຮຽນເຮົາຄືແນວໃດ ແມ່ນການສຳຫລວດເບິ່ງປະສົບການຂອງພວກເຮົາເອງ.

**ກິດຈະກຳເພື່ອປະຕິບັດ: ຄວາມເຂົ້າໃຈ ການຈຳແນກ**

ກິດຈະກຳນີ້ສາມາດນຳໃຊ້ກັບຄູ, ຜູ້ປົກຄອງ ຫລື ເດັກມີອາຍຸແລ້ວ. ຈຸດປະສົງແມ່ນ ເພື່ອພັດທະນາຄວາມເຂົ້າໃຈຂອງພວກເຂົາວ່າຮູບແບບຕ່າງໆ ຂອງການກົດຂີ່ຂົ່ມເຫັງໃນໂຮງຮຽນມີຜົນກະທົບຕໍ່ລາຍບຸກຄົນຢ່າງໃດ? ຍິ່ງກວ່ານັ້ນ ກິດຈະກຳນີ້ຍັງກະຕຸກຊຸກຍູ້ຄົນເຮົາໃຫ້ສະທ້ອນພາບຕົນເອງທີ່ອາດຈະໄດ້ຮັບຜົນກະທົບຄືແນວໃດ ຈາກຄວາມລຳອຽງມີອະຄະຕິ ແລະ ການຈຳແນກ.

ບົດຮຽນທີ່ສຳຄັນຫລາຍບົດສາມາດກຳເນີດເກີດຂຶ້ນ ຈາກກິດຈະກຳນີ້ດັ່ງເຊັ່ນ ຕົວຢ່າງຕໍ່ໄປນີ້:

- ແຕ່ລະຄົນສາມາດເປັນໄດ້ທັງເຫຍື່ອທີ່ຖືກຂົ່ມເຫັງ ແລະ ເປັນໄດ້ທັງຜູ້ທີ່ຈະຂົ່ມເຫັງຄົນອື່ນ.
- ແຕ່ລະລາຍບຸກຄົນຮູ້ຈັກຄວາມອະຄະຕິ ແລະ ການຈຳແນກທີ່ເກີດຂຶ້ນກັບເຂົາເຖິງວ່າຈະຍັງເປັນເດັກອາຍຸນ້ອຍ.

**ແນະນຳວິທີປະຕິບັດກິດຈະກຳ**:ເວລາທີ່ໃຊ້ສຳລັບກິດຈະກຳນີ້ຈະຂຶ້ນຢູ່ກັບຂະໜາດຂອງຫ້ອງຮຽນ ຫລືກຸ່ມຜູ້ເຂົ້າຮ່ວມ. ໃຫ້ເວລາ 10 ນາທີຕໍ່ນັກຮຽນ ຫລື ຈຳນວນນັກຮຽນໃນແຕ່ລະກຸ່ມນ້ອຍ.

ແບ່ງຜູ້ເຂົ້າຮ່ວມເປັນກຸ່ມ5-6ຄົນ. ບອກໃຫ້ພວກເຂົາແລກປ່ຽນເລື່ອງທີ່ພວກເຂົາເຄີຍໄດ້ເຫັນຄວາມອະຄະຕິ ຫລື ເຄີຍປະສົບກັບການຈຳແນກໃນໂຮງຮຽນ. ການບອກໄບ້ ແລະ ແນະນຳຈັກສອງສາມຢ່າງຈະເປັນການຊ່ວຍທີ່ດີເຊັ່ນ:

1. ປະຕິບັດການທີ່ເປັນອະຄະຕິ ຫລື ຈຳແນກ ບໍ່ຈຳເປັນຕ້ອງເປັນການຕັ້ງໃຈ.
2. ປະສົບການຂອງພວກເຂົາສາມາດກ່ຽວໂຍງນັກຮຽນ, ຄູ, ຜູ້ບໍລິຫານ ຫລື ອາດຈະກ່ຽວໂຍງພຽງບັນຍາກາດທົ່ວໄປຂອງໂຮງຮຽນ.
3. ໃຫ້ບອກວ່າພວກເຂົາອາດຄິດກ່ຽວກັບຫລັກສູດ, ແບບວິທີສິດສອນ, ອຸປະກອນການສຶກສາ, ຄວາມສຳພັນ ຫລື ດ້ານອື່ນໆ ຂອງສະພາບແວດລ້ອມໂຮງຮຽນ.
4. ໃຫ້ເຕືອນ ຜູ້ເຂົ້າຮ່ວມກິດຈະກຳວ່າເອກະລັກບຸກຄົນສາມາດເບິ່ງເຫັນໄດ້ ໃນຫລາຍມິຕິ ຫລື ຫລາຍມຸມ. ໂດຍປົກກະຕິຄົນເຮົາຈະຄິດກ່ຽວກັບເຊື້ອຊາດ ຫລື ຊົນເຜົ່າໄດ້ທັນທີໃນກິດຈະກຳນີ້. ພະຍາຍາມຊ່ອຍພວກເຂົາ ໃຫ້ເຫັນມິຕິ/ມຸມອື່ນໆ ຂອງການຈຳແນກ ຫລື ຄວາມອະຄະຕິ ເຊັ່ນ ຄວາມເຊື່ອທີ່ວ່າ ເດັກຍິງຮຽນວິທະຍາສາດບໍ່ເກັ່ງ ຫລື ເດັກພິການບໍ່ສາມາດຫລິ້ນກິລາໄດ້.
5. ທ້າຍສຸດ, ໃຫ້ແນະນຳວ່າ ປະສົບການຂອງພວກເຂົາອາດສາມາດເຄີຍເປັນທັງຜູ້ຖືກຂົ່ມເຫັງ ແລະ ເປັນຜູ້ຂົ່ມເຫັງກໍໄດ້.ມີໜ້ອຍຄົນທີ່ຈະເລືອກກໍລະນີຫລັງ, ແຕ່ຖ້າມີຜູ້ເລືອກມັນຈະເປັນນາທີທີ່ມີພະລັງສຳລັບການສະທ້ອນພາບຄືນ.

ໃຫ້ເວລາຜູ້ເຂົ້າຮ່ວມຜູ້ລະ 5 ນາທີ ເພື່ອແລກປ່ຽນເລື່ອງລາວຂອງເຂົາ ແລະ ຖ້າມີຄວາມຈຳເປັນໃຫ້ເວລາຕື່ມອີກ 5 ນາທີເພື່ອໃຫ້ເຂົາເຈົ້າຕອບຄຳຖາມ ກ່ຽວກັບປະສົບການຂອງເຂົາເຈົ້າ. ມັນເປັນສິ່ງສຳຄັນທີ່ຈະຮຽນຮູ້ປະສົບການຂອງທຸກຄົນ ແລະ ຖອດຖອນ ໃຫ້ໄດ້ວ່າເຫດການນັ້ນໆເຮັດໃຫ້ຄົນເຮົາຮູ້ສຶກແນວໃດ? ເມື່ອມັນເກີດຂຶ້ນ. ທ່ານອາດຖາມແຕ່ລະຄົນດ້ວຍວ່າປະສົບການຂອງເຂົາເຈົ້າມີຜົນກະທົບຕໍ່ທັດສະນະຄະຕິ ແລະ ພຶດຕິກຳ ຫລື ແນວຄິດຂອງເຂົາເອງຄືແນວໃດ? ກ່ຽວກັບວິທີທີ່ອາດສາມາດຫລີກລ້ຽງ ສະຖານະການນັ້ນ.

ເມື່ອແຕ່ລະຄົນມີໂອກາດໄດ້ເລົ່າເລື່ອງແລ້ວ, ທ່ານສາມາດຖາມຫລາຍໆຄຳຖາມ ເພື່ອເລີ້ມການສົນທະນາອະພິປາຍກ່ຽວກັບຄວາມອະຄະຕິ ແລະ ການຈຳແນກໃນຫ້ອງຮຽນ ແລະ ໂຮງຮຽນ.

1. ທ່ານຮູ້ສຶກແນວໃດ ທີ່ໄດ້ຮ່ວມເລົ່າເລື່ອງສ່ວນຕົວ ກ່ຽວກັບຄວາມອະຄະຕິ ແລະ ການຈຳແນກ?
2. ທ່ານໄດ້ຮຽນຮູ້ຫຍັງແດ່ ຈາກປະສົບການຂອງທ່ານເອງ ກໍຄື ຈາກບົດເລົ່າເລື່ອງຂອງຄົນອື່ນທີ່ອາດນຳທ່ານໄປສູ່ການກະທຳ ທີ່ແຕກຕ່າງໃນການສິດສອນ ຫລື ໃນຊີວິດປະຈຳວັນ

ຂອງທ່ານເອງ?

3. ມີຄວາມເຊື່ອມສຳພັນຫຍັງແດ່ ທີ່ທ່ານພົບໃນບົດເລື່ອງຕ່າງໆ? ມີອັນໃດແດ່ຕິງກັນທີ່ໜ້າສົນໃຈ?
4. ມີໃຜແດ່ທີ່ມີຄວາມລຳບາກໃນການຈົດຈຳເຫດການ ຫລື ການຊີ້ແຈງເວລາລາວຮູ້ ຈັກວ່າມີຄວາມອະຄະຕິ ຫລື ການຈຳແນກຕອນທຳອິດໃນໂຮງຮຽນ? ຖ້າເປັນແນວນັ້ນ, ແມ່ນຍ້ອນເຫດໃດ?
5. ເລື່ອງລາວຕ່າງໆ ທີ່ຜູ້ອື່ນເລົ່າໄດ້ທົບທວນຄວາມຈຳຂອງທ່ານ ເພີ້ມກ່ຽວກັບເຫດການໃນປະສົບການຂອງຕົນບໍ່?

# ບົດທີ 5

# ການແກ້ໄຂບັນຫາຄວາມຮຸນແຮງແລະ ການຫັນນະໂຍບາຍສູ່ການປະຕິບັດ

ເມື່ອເຂົ້າໂຮງຮຽນແລ້ວ, ເດັກທີ່ມີພື້ນຖານ ແລະ ຄວາມສາມາດທີ່ແຕກຕ່າງຈາກໝູ່ມັກຈະເປັນຜູ້ທີ່ຖືກຈຳແນກ ແລະ ພົບກັບຄວາມຮຸນແຮງສະເໝີ. ສ່ວນໃຫຍ່ຈະຖືກເລັງໃສ່ "ຄວາມແຕກຕ່າງ" ຂອງເຂົາຈາກຜູ້ອື່ນໆ ແລະ ຈະຫາທາງຜັກດັນໃຫ້ເຂົາອອກຫ່າງຈາກໝູ່ໃນໂຮງຮຽນ ແລະ ຢູ່ນອກໂຮງຮຽນເປັນບາງຄັ້ງ. ຮ້າຍແຮງໄປກວ່ານັ້ນສິ່ງດັ່ງກ່າວຈະພົວພັນກັບການລວນລາມທາງເພດ ແລະ ການທຳຮ້າຍຮ່າງກາຍເຊິ່ງສາມາດນຳໄປສູ່ການເສຍຊີວິດ.

ຄວາມຮຸນແຮງສາມາດປະຕິບັດໄດ້ໃນຫຼາຍຮູບແບບ ແລະ ຖືກເຂົ້າໃຈຢ່າງແຕກຕ່າງກັນໃນວັດທະນະທຳທີ່ແຕກຕ່າງກັນ. ຢູ່ໃນຊຸດເຄື່ອງມືເຫຼັ້ມນີ້ ຄວາມຮຸນແຮງໝາຍເຖິງການໃນໃດໜຶ່ງ. ມັນຈະມີຜົນໃຫ້ເກີດການບາດເຈັບ, ເສຍຊີວິດ, ທຳລາຍທາງຈິດໃຈ, ການພັດທະນາທາງຮ່າງກາຍຊຸດໂຊມ ຫຼື ສູນເສຍການພັດທະນາ.

## 1 ຮູບແບບຂອງຄວາມຮຸນແຮງທີ່ເປັນພື້ນຖານ.

### ກ. ຮູບແບບຂອງຄວາມຮຸນແຮງ

- **ຄວາມຮຸນແຮງຕໍ່ຕົນເອງ** ໝາຍເຖິງພຶດຕິກຳທີ່ມີເຈດຕະນາ ແລະ ທຳຮ້າຍຕົນເອງໂດຍກົງ. ສຳລັບເລື່ອງນີ້ການຂ້າຕົວຕາຍຈະນຳໄປສູ່ຜົນຮັບທີ່ເປັນຄວາມຕາຍ. ຮູບແບບອື່ນໆຈະປະກອບມີຄວາມພະຍາຍາມຂ້າຕົວຕາຍ ແລະ ພຶດຕິກຳຕ່າງໆ ທີ່ຕັ້ງໃຈທຳລາຍຕົວເອງ, ແຕ່ບໍ່ເຖິງຕາຍ (ເຊັ່ນ ການທຳລາຍອະໄວຍະວະຮ່າງກາຍຂອງຕົນ).

-**ຄວາມຮຸນແຮງລະຫວ່າງບຸກຄົນ** ແມ່ນພຶດຕິກຳຮຸນແຮງລະຫວ່າງບຸກຄົນ ແລະ ສາມາດແຍກປະເພດ ໄດ້ດີທີ່ສຸດໂດຍການພົວພັນລະຫວ່າງຜູ້ເປັນເຫຍື່ອ-ຜູ້ກະທຳຜິດ. ຮູບແບບຕ່າງຂອງຄວາມຮຸນແຮງລະຫວ່າງບຸກຄົນປະກອບມີການຂົ່ມເຫັງ ແລະ ການລວນລາທຳຮ້າຍ.

- **ຄວາມຮຸນແຮງທີ່ມີການຈັດຕັ້ງ** ແມ່ນພຶດຕິກຳຮຸນແຮງທີ່ສະແດງອອກໂດຍກຸ່ມສັງຄົມຫຼືການເມືອງທີ່ໄດ້ຮັບແຮງຈູງໃຈ ຈາກຈຸດມຸ້ງໝາຍສະເພາະໃດໜຶ່ງທາງການເມືອງ, ເສຖະກິດ ຫຼື ສັງຄົມ ຕົວຢ່າງ ໃນທີ່ນີ້ປະກອບມີຄວາມຂັດແຍ່ງທາງຜິວພັນ ຫຼື ສາສະໜາທີ່ເກີດຂຶ້ນລະຫວ່າງກຸ່ມ, ແກັ້ງ ຫຼື ກຸ່ມປະທ້ວງຕ່າງໆ.

## ຂ. ສາເຫດຂອງຄວາມຮຸນແຮງ.

ສາເຫດຂອງຄວາມຮຸນແຮງຈະສະຫຼັບຊັບຊ້ອນ ແລະ ແຕກຕ່າງກັນໄປ ຢູ່ຂ້າງລຸ່ມນີ້ຈະເປັນບັນດາປັດໄຈຕ່າງໆ ທີ່ຄິດວ່າເປັນຕົວຊ່ອຍໃຫ້ກໍ່ເກີດພຶດຕິກຳຮຸນແຮງ. ທ່ານສາມາດໃຊ້ປັດໄຈເຫຼົ່ານີ້ ແລະ ຂະຫຍາຍມັນກວ້າງອອກໄປໄດ້ອີກ ເພື່ອປະເມີນເບິ່ງວ່າເດັກໃນໂຮງຮຽນຂອງທ່ານ, ຄອບຄົວ ແລະ ຊຸມຊົນ ມີເງື່ອນໄຂຈູງໃຈໃຫ້ກະທຳຄວາມຮຸນແຮງໄດ້ຢ່າງໃດ ແລະ ນະໂຍບາຍໂຮງຮຽນ ລວມທັງແຜນງານ/ໂຄງການມີຄວາມຈຳເປັນ ເພື່ອຫຼຸດຜ່ອນ ຫຼື ກຳຈັດມັນ ຫຼື ບໍ່?

**ສາເຫດຕ່າງໆ ຂອງຄວາມຮຸນແຮງ: ສິ່ງເຫຼົ່ານີ້ ມີຢູ່ໃນໂຮງຮຽນຂອງພວກທ່ານ ຫຼືບໍ່?** [1]

**ຄຸນລັກສະນະລະດັບເດັກ**

- ຍັງມີຂໍ້ຂາດຕົກບົກຜ່ອງດ້ານຄວາມຮູ້, ທັດສະນະຄະຕິ, ຄວາມຄິດກ່ຽວກັບຄວາມຮຸນແຮງ ແລະ ທັກສະ ເຊັ່ນ ທັກສະການສື່ສານໄດ້ຮັບການພັດທະນາຕ່ຳ
- ເສບສິ່ງເສບຕິດ ແລະ ຂອງມຶນເມົາ (ເຫຼົ້າ/ເບຍ....)
- ເຄີຍເຫັນ ຫຼື ເຄີຍເປັນເຫຍື່ອຄວາມຮຸນແຮງລະຫວ່າງບຸກຄົນມາແລ້ວ
- ກ້າວເຂົ້າໄປເຖິງການນຳໃຊ້ປືນ ຫຼື ອາວຸດອື່ນໆ

**ປັດໄຈທີ່ຊຸກຍູ້ສົ່ງເສີມໃນລະດັບຄອບຄົວ**

- ຂາດຄວາມຮັກແພງ ແລະ ການສະໜັບສະໜູນຂອງພໍ່ແມ່ ຜູ້ປົກຄອງ
- ເຄີຍປະສົບພົບເຫັນຄວາມຮຸນແຮງໃນຄອບຄົວ
- ການລົງໂທດທາງດ້ານຮ່າງກາຍ ແລະ ການທາລຸນເດັກ
- ພໍ່ແມ່ ຜູ້ປົກຄອງ ຫຼື ອ້າຍເອື້ອຍນ້ອງມີສ່ວນຮ່ວມໃນພຶດຕິກຳທີ່ຜິດທາງອາຍາ

**ປັດໄຈດ້ານຊຸມຊົນ ແລະ ສະພາບແວດລ້ອມອື່ນໆ ທີ່ສົ່ງເສີມຊຸກຍູ້ຄວາມຮຸນແຮງ**

- ຄວາມບໍ່ເທົ່າທຽມກັນທາງເສດຖະກິດ - ສັງຄົມ, ການຫັນເປັນຕົວເມືອງ ແລະ ຄວາມແອອັດຂອງປະຊາຊົນ.
- ລະດັບການວ່າງງານສູງໃນໝູ່ຄົນໄວໜຸ່ມ
- ອິດທິພົນຂອງສື່
- ສະພາບແວດລ້ອມຂອງສັງຄົມທີ່ສະໜັບສະໜູນຄວາມຮຸນແຮງ
- ການມີພ້ອມຂອງອາວຸດຕ່າງໆ

---

[1] ປັບຈາກ: World Health Organization (1998) WHO Information Series on School Health, Document Three- Violence Preventio : An Important Element of a Health- promoting School, Geneva

## ຄ. ການສ້າງແຜນທີ່ຂອງຄວາມຮຸນແຮງ

ພວກເຮົາຫຼາຍຄົນອາດຈະຄິດບໍ່ເຖິງວ່າໂຮງຮຽນ ແລະ ຊຸມຊົນຂອງພວກເຮົາເປັນສະຖານທີ່ ທີ່ມີຄວາມຮຸນແຮງ. ຖືວ່າເປັນໂຊກຮ້າຍທີ່ຄວາມຮຸນແຮງສ່ວນຫຼາຍເກີດຂຶ້ນໂດຍເຮົາສັງເກດບໍ່ໄດ້ ຍ້ອນວ່າໂດຍປົກກະຕິແລ້ວທັງຜູ້ເປັນເຫຍື່ອ ແລະ ຜູ້ກະທຳຜິດບໍ່ຢາກໃຫ້ຄູຂອງເຂົາຮູ້. ຍິ່ງໄປກວ່ານັ້ນ, ກໍລະນີຄວາມຮຸນແຮງອາດເກີດຂຶ້ນຢູ່ນອກໂຮງຮຽນ ເຊັ່ນ: ເມື່ອເດັກຖືກທາລຸນເມື່ອເວລາໄປໂຮງຮຽນ, ຜົນກະທົບຂອງມັນຈະສະທ້ອນເຂົ້າໄປໃນໂຮງຮຽນ ແລະ ຫ້ອງຮຽນຂອງທ່ານ.

ການກຳນົດລະດັບຂອງຄວາມຮຸນແຮງໃນໂຮງຮຽນສາມາດທີ່ຈະເຮັດໄດ້ດ້ວຍຫຼາຍແນວທາງເຊັ່ນ:

ໂດຍການຂໍໃຫ້ນັກຮຽນຕອບແບບສອບຖາມ, ດຶງເຂົາເຂົ້າມາຮ່ວມກຸ່ມສົນທະນາ ຫຼື ໂດຍຜ່ານການສ້າງແຜນທີ່ຂອງຄວາມຮຸນແຮງ.

ການສ້າງແຜນທີ່ໂຮງຮຽນມີຈຸດມຸ້ງໝາຍເພື່ອກຳນົດວ່າບ່ອນໃດ ແລະ ເມື່ອໃດມີຄວາມຮຸນແຮງເກີດຂຶ້ນພາຍໃນໂຮງຮຽນ, ຄວາມຮຸນແຮງປະເພດໃດທີ່ກ່ຽວຂ້ອງ (ແບບກັບຕົນເອງ, ແບບລະຫວ່າງບຸກຄົນ ຫຼື ແບບຈັດຕັ້ງ), ແລະ ແມ່ນໃຜທີ່ເປັນເຫຍື່ອ ແລະ ເປັນຜູ້ກະທຳຜິດເປັນປະຈຳ. ຂະບວນການສ້າງແຜນທີ່ເປັນເຄື່ອງມືທີ່ມີຄຸນຄ່າ ສຳລັບ ການຕິດຕາມ ແລະ ຄວບຄຸມຄວາມຮຸນແຮງ ເພາະວ່າມັນສາມາດທີ່ຈະເຮັດໄດ້ດັ່ງນີ້:

1. ຊຸກຍູ້ນັກຮຽນ, ຄູ ແລະ ຜູ້ບໍລິຫານເພື່ອເລີ້ມການສົນທະນາ ກ່ຽວກັບຄວາມຮຸນແຮງໃນໂຮງຮຽນ ເຊິ່ງຈະນຳໄປສູ່ນະໂຍບາຍທີ່ມີປະສິດທິຜົນຫຼາຍຂຶ້ນ;
2. ຊ່ອຍໃນການປະເມີນຜົນແຜນງານ / ໂຄງການ ເຂົ້າແຊກແຊງແກ້ໄຂຄວາມຮຸນແຮງທີ່ຖືກສ້າງຂຶ້ນ ເພື່ອສະໜັບສະໜູນນະໂຍບາຍຕ້ານຄວາມຮຸນແຮງໃນໂຮງຮຽນ.
3. ເພີ້ມທະວີການເຂົ້າມີສ່ວນຮ່ວມຂອງໂຮງຮຽນ ໃນການແຊກແຊງເພື່ອແກ້ໄຂຄວາມຮຸນແຮງອື່ນໆ.

ເພື່ອສ້າງແຜນທີ່ຄວາມຮຸນແຮງໃນໂຮງຮຽນຂອງທ່ານ, ທ່ານສາມາດທີ່ຈະໃຊ້ຂະບວນການຄ້າຍຄືກັນກັບການສ້າງແຜນທີ່ໂຮງຮຽນຊຸມຊົນ ດັ່ງທີ່ໄດ້ສະເໜີມາກ່ອນແລ້ວ. ເລີ້ມຕົ້ນດ້ວຍການໃຫ້ແຜນທີ່ໂຮງຮຽນແກ່ຄູ ແລະ ນັກຮຽນ ຫຼື ພວກກ່ຽວສາມາດທີ່ຈະສ້າງແຜນທີ່ດ້ວຍຕົນເອງແລ້ວບອກໃຫ້ກຳນົດສະຖານທີ່ ທີ່ເຂົາຄິດວ່າມີຄວາມຮຸນແຮງເກີດຂຶ້ນ, ເມື່ອໃດ, ພາຍໃຕ້ເງື່ອນໄຂຫຍັງແດ່ ແລະ ແມ່ນໃຜ ໂດຍປົກກະຕິມັກຈະມີສ່ວນໄປກ່ຽວຂ້ອງ. ຈາກນັ້ນ, ທ່ານກໍສາມາດ

ວິເຄາະແຜນທີ່ເຫຼົ່ານີ້ ເພື່ອກໍານົດຖິ່ນບັນຫາບ່ອນທີ່ເກີດຄວາມຮຸນແຮງ ຫຼື ໜ້າຈະເກີດຄວາມຮຸນແຮງຂຶ້ນ.

ຄູຈໍານວນໜຶ່ງເຄີຍໄດ້ໃຊ້ແຜນທີ່ລັກສະນະດັ່ງກ່າວ ແລະ ຜົນຂອງການປະຕິບັດງານຂອງເຂົາໄດ້ສະເໜີແນະໄວ້ວ່າ ຄວາມຮຸນແຮງຈະເກີດຂຶ້ນຕາມເວລາ ແລະ ສະຖານທີ່ທີ່ຄາດເດົາໄວ້ພາຍໃນບໍລິເວນໂຮງຮຽນ[2],ບໍ່ເປັນການແປກປະຫຼາດຫຍັງເລີຍທີ່ເຫດການຄວາມຮຸນແຮງມັກເກີດຂຶ້ນໃນສະຖານທີ່ ທີ່ມີຄູຢູ່ໜ້ອຍ ຫຼື ບໍ່ມີຄູຢູ່ແຖວນັ້ນເລີຍ.

ນະໂຍບາຍ ແລະ ກິດຈະກໍາແຊກແຊງທີ່ຄູເປັນຜູ້ລິເລີ້ມ ແລະ ໄດ້ຮັບການປະຕິບັດມີແນວໂນ້ມທີ່ຈະປະສົບຜົນສໍາເລັດອັນຍິ່ງໃຫຍ່ ໃນການຫຼຸດຜ່ອນຄວາມຮຸນແຮງໃນໂຮງຮຽນ. ເຖິງຢ່າງໃດກໍຕາມ, ເດັກກໍຕ້ອງຖືກນໍາເອົາເຂົ້າມີສ່ວນຮ່ວມເໝືອນກັນ. ການສົນທະນາກັບກຸ່ມຄວນຖືກນໍາໄປສູ່ການສົນທະນາເຖິງບ່ອນໃດແດ່ທີ່ເປັນ" ຈຸດຮ້ອນແຮງ"ເຊິ່ງຕັ້ງຢູ່ໃນເຂດໂຮງຮຽນ, ເປັນຫຍັງເດັກຈໍານວນໜຶ່ງ ຈຶ່ງໄວຕໍ່ຄວາມຮຸນແຮງ ແລະ ຈະສາມາດເຮັດຫຍັງໄດ້ແດ່ ເພື່ອຫຼຸດຜ່ອນຄວາມຮຸນແຮງໃນພື້ນທີ່ດັ່ງກ່າວແລະໃນໝູ່ນັກຮຽນເຫຼົ່ານີ້.

ການເພີ້ມທະວີການມີສ່ວນຮ່ວມຂອງສະມາຊິກຊຸມຊົນ ໃນການຍຸດຕິຄວາມຮຸນແຮງໃນໂຮງຮຽນຍັງສາມາດທີ່ຈະປັບປຸງສະພາບແວດລ້ອມຂອງຊຸມຊົນນໍາອີກ. ນີ້ເປັນເລື່ອງສໍາຄັນພິເສດໃນບ່ອນທີ່ຄວາມຮຸນແຮງເກີດຂຶ້ນນອກບໍລິເວນໂຮງຮຽນ ເຊັ່ນ ເວລາເດັກໄປໂຮງຮຽນ ຫຼື ກັບເມືອເຮືອນນີ້ຍຸດທະສາດການສ້າງແຜນທີ່ເຊິ່ງສາມາດໃຊ້ ເພື່ອສະແດງພື້ນທີ່ຄວາມຮຸນແຮງໃນຊຸມຊົນລວມທັງໃນໂຮງຮຽນດ້ວຍ.

ການເຝິກຫັດເພື່ອສ້າງແຜນທີ່ໂຮງຮຽນ-ຊຸມຊົນ ທີ່ໄດ້ນໍາສະເໜີໃນເອກະສານເຫຼັ້ມກ່ອນສາມາດນໍາໃຊ້ໄດ້ໃນເອກະສານເຫຼັ້ມນີ້ ເຊິ່ງເດັກໆຍັງສາມາດສະແດງໃຫ້ເຫັນທີ່ຕ່າງໆໃນຊຸມຊົນຂອງເຂົາວ່າມີບ່ອນໃດ ມັກເກີດຄວາມຮຸນແຮງຢູ່ເລື້ອຍໆ, ກ່ຽວຂ້ອງກັບຄວາມຮຸນແຮງຊະນິດໃດ, ຜູ້ໃດມັກຖືກເປັນເຫຍື່ອ ແລະ ເປັນຜູ້ທໍາຮ້າຍຫຼາຍກວ່າໝູ່ທີ່ສຸດ, ການສ້າງແຜນທີ່ແບບນີ້ ເປັນບາດກ້າວທໍາອິດທີ່ດີເລີດໃນການເຮັດວຽກກັບສະມາຊິກຊຸມຊົນ ເພື່ອກໍານົດວ່າດ້ວຍເຫດໃດພື້ນທີ່ບາງຈຸດຈຶ່ງມີແນວໂນ້ມ ທີ່ຈະເກີດຄວາມຮຸນແຮງທີ່ສຸດ, ເພື່ອສະເໜີວິທີແກ້ໄຂ ແລະ ເພື່ອດໍາເນີນແຜນງານກິດຈະກໍາແຊກແຊງ ຂອງຊຸມຊົນ - ໂຮງຮຽນທີ່ມີປະສິດທິຜົນ.

---

[2] Monitoring School Violence : Publications and Related Research Summaries. Global Program on Youth, University of Michigan, School of Social Work. This is an excellent Web site for resources on dealing with violence in the school. It can be found at http://gpy.ssw.umich.edu.

## 2 ສັນຍານເຕືອນສຳລັບເດັກທີ່ຖືກທາລຸນ

ບາງຄັ້ງເດັກຍິງ ແລະ ເດັກຊາຍ ຈະບໍ່ບອກໃຫ້ພວກເຮົາຮູ້ວ່າເຂົາເປັນເຫຍື່ອ ຂອງຄວາມຮຸນແຮງ ຫຼື ຢູ່ໃນພາວະວິກິດ. ເຂົາຈະສະແດງອອກໃຫ້ເຮົາເຫັນຫຼາຍກວ່າ. ເຖິງວ່າການປ່ຽນ ແປງໃນພຶດຕິກຳຂອງເດັກ ສາມາດຂຶ້ນຢູ່ກັບຫຼາກຫຼາຍເຫດຜົນກໍຕາມ, ບາງຄັ້ງມັນກໍເກີດຂຶ້ນ ຈາກຄວາມກົດດັນຂອງການທາລຸນທາງຮ່າງກາຍ ຫຼື ຄວາມຮູ້ສຶກທາງຈິດໃຈ. ຄູຜູ້ທີ່ຕື່ນຕົວຕໍ່ການປ່ຽນແປງເຫຼົ່ານີ້ ມັກຈະສາມາດເຂົ້າຊ່ວຍເຫຼືອສະຖານະການທີ່ມີການທາລຸນໄດ້. ຢູ່ຂ້າງລຸ່ມນີ້ ຈະເປັນບັນຊີລາຍການຂອງຄຸນລັກສະນະພາຍນອກເຊິ່ງເດັກທີ່ຖືກທາລຸນອາດສະແດງອອກມາ[3].ເຖິງຢ່າງໃດກໍຕາມ, ໃຫ້ຄິດຄຳນຶງໄວ້ໃນໃຈວ່າຮ່ອງຮອຍ ຫຼື ເງື່ອນງຳບາງຢ່າງອາດເປັນພຶດຕິກຳປົກກະຕິຂອງເດັກຄົນໃດໜຶ່ງໃນເວລາໃດໜຶ່ງ. ດັ່ງນັ້ນ, ຈຶ່ງມີຄວາມສຳຄັນໃນການເອົາໃຈໃສ່ເບິ່ງແບບແຜນພຶດຕິກຳປົກກະຕິຂອງເດັກ ແລະ ຕ້ອງຮັບຮູ້ດີພຶດຕິກຳໃໝ່ທີ່ເກີດຂຶ້ນ, ພຶດຕິກຳຮຸນແຮງສຸດຂີດ, ຫຼື ແບບມີການປະສົມປະສານກັນຂອງຄຸນລັກສະນະຕ່າງໆ ທີ່ກຳລັງຈະສະເໜີຕໍ່ໄປຂ້າງລຸ່ມ. ຖ້າສັນຍານເຕືອນເຫຼົ່ານີ້ເຫັນໄດ້ເດັ່ນຊັດ, ເດັກຄວນຖືກນຳສົ່ງໄປຮັບການແນະແນວທັນທີ ຫຼື ມີມາດຕະການທີ່ເໝາະສົມ (ເຊັ່ນ:ການໄດ້ຮັບການບໍລິການດ້ານສະຫວັດດີການສັງຄົມ).

**ເດັກທີ່ຖືກທາລຸນດ້ານຄວາມຮູ້ສຶກທາງຈິດໃຈ, ທາງຮ່າງກາຍ ມັກຈະສະແດງອອກ ດັ່ງນີ້:**

- ຫວາດກົວທີ່ຈະພົວພັນກັບຜູ້ອື່ນ ຫຼື ເປັນຄົນໂອນອ່ອນຕາມຄຳສັ່ງຈົນເກີນໄປ
- ຖອນຕົວ, ກ້າວລ້າວ ຫຼື ຫ້າວຫັນຜິດປົກກະຕິ (ຢູ່ນິ້ງບໍ່ເປັນ) (hyperactive), ຫງຸດຫງິດ ຫຼື ເສີຍເມີຍຕະຫຼອດ, ແຍກຕົວອອກຫ່າງ
- ບໍ່ສະແດງຄວາມມັກຄວາມຊອບ ຫຼື ສະແດງຄວາມມັກຄວາມຊອບເກີນ ປົກກະຕິ (ເຮັດໃຫ້ ເຂົ້າໃຈຜິດ ເມື່ອຖືກຍຸໂຍງໃຫ້ຫຼົງໄຫຼ)

**ອາການທາງຮ່າງກາຍ**

- ຟົກຊ້ຳ, ຮອຍລວກໃໝ້, ຮອຍແຜແປ້ວ, ຮອຍຖືກຂຽນຕີ, ກະດູກຫັກ, ບາດເຈັບຕໍ່ເນື່ອງ ຫຼື ບໍ່ສາມາດອະທິບາຍໃຫ້ເຂົ້າໃຈໄດ້
- ເປັນພະຍາດຕິດຕໍ່ທາງເພດສຳພັນ

---

[3] ທີ່ມາ: National Center for Assault Prevention (NCAP). Education, Information and Resource Center, Sewell, New Jersey, 2000. http:www.ncap.org/identity. htm. NCAP also has as international division with some materials translated in Spanish, French, Vietnamese, Cantonese, Romanian, Russian, and Japanese, Learn more about this at: http://ncap.org/cap_international.htm.

- ເປັນຮອຍໄຄ່ບວມທີ່ອະໄວຍະວະເພດ ຫຼື ຮູກົ້ນ, ມີເລືອດໄຫຼ ຫຼື ຄັນ

**ຮ່ອງຮອຍເງື່ອນງໍາທາງກິດຈະກໍາ ແລະ ຄວາມເຄີຍຊິນຈົນເປັນນິໄສ**

- ຝັນຮ້າຍ
- ຢ້ານກົວທີ່ຈະກັບເມືອເຮືອນ ຫຼື ໄປບາງສະຖານທີ່
- ຢ້ານກົວທີ່ຈະຢູ່ກັບບາງຄົນ
- ແລ່ນໜີ
- ຫຼີກລ້ຽງການປະຕິບັດໜ້າທີ່ (ມີພຶດຕິກໍາຜິດໆທີ່ຄົນບໍ່ຍອມຮັບ)
- ຂີ້ຕົວະ

**ພຶດຕິກໍາບໍ່ເໝາະສົມກັບສໍາອາຍຸ**

- ດູດຫົວໂປ້ມື
- ຮູ້ດີ ຫຼື ມີກິດຈະກໍາທາງເພດສໍາພັນ ລວມທັງ ການສໍາສ່ອນທາງເພດ
- ຍ່ຽວໃສ່ບ່ອນ
- ເສບສິ່ງມຶນເມົາ ຫຼື ສິ່ງເສບຕິດອື່ນໆ
- ການທໍາຮ້າຍເດັກທີ່ອ່ອນກວ່າ
- ເອົາວຽກທີ່ຜູ້ໃຫຍ່ຮັບຜິດຊອບໄປເຮັດ

**ບັນຫາກ່ຽວຂ້ອງກັບການສຶກສາ**

- ມີຄວາມຢາກຮູ້ຢາກເຫັນ, ມີຈິນຕະນາການສູງເກີນໄປ
- ຫຼົ້ມເຫຼວທາງການສຶກສາ ຫຼື ວິຊາການ
- ນອນຫຼັບໃນຫ້ອງ
- ບໍ່ສາມາດທໍາສະມາທິໄດ້**ດີ**

**ຊີ້ບອກດ້ານຄວາມຮູ້ສຶກທາງຈິດໃຈ**

- ມີຄວາມເສົ້າໃຈ
- ຫວາດກົວ, ຢ້ານຄວາມມືດ, ຢ້ານຫ້ອງນໍ້າສາທາລະນະ ແລະ ອື່ນໆ
- ເຈັບປ່ວຍຊໍາເຮື້ອ
- ບາດເຈັບຍ້ອນທໍາລາຍຕົວເອງ
- ເຮັດໃຫ້ສັດບາດເຈັບ ຫຼື ຂ້າສັດ

- ♦ ມີຄວາມຢ້ານກົວເກີນເຫດ
- ♦ ຂາດຄວາມຄ່ອງແຄ້ວ ແລະ ຂາດຫົວຄິດປະດິດສ້າງ

## 3 ສັນຍານເຕືອນສຳລັບເດັກທີ່ມີຄວາມສ່ຽງ

ເດັກຄົນອື່ນໆອາດຕົກຢູ່ໃນພາວະວິກິດໃນຄອບຄົວ, ຊຸມຊົນ ຫຼື ໂຮງຮຽນ. ໃນຂະນະທີ່ບໍ່ຖືກທາລຸນໂດຍກົງ ພວກເຂົາອາດມີຄວາມຕ້ອງການ ການປົກປ້ອງພິເສດຈາກການພົວພັນລະຫວ່າງບຸກຄົນທີ່ມີການກົດດັນ ຫຼື ການໃຊ້ສິ່ງເສບຕິດ. ສະພາວະຮອບຕົວ ແລະ ພຶດຕິກຳທີ່ເປີດເຜີຍຂອງເຂົາສາມາດທີ່ຈະຊ່ວຍ ທ່ານກຳນົດເດັກເຫຼົ່ານີ້ໄດ້. ຍິ່ງໄປກວ່ານັ້ນ ການໃຊ້ເຄື່ອງມືອື່ນໆ ກໍອາດມີຄຸນຄ່າເໝືອນກັນ ເຊັ່ນ: ຊີວະປະຫວັດຂອງເດັກທີ່ນຳສະໜີໄວ້ກ່ອນໜ້າຈະໃຫ້ຂໍ້ມູນແກ່ທ່ານ ກ່ຽວກັບນັກຮຽນ ແລະ ສະພາບຄອບຄົວຂອງເຂົາ ລວມທັງບັນທຶກກ່ຽວກັບການສັງເກດພຶດຕິກຳຂອງນັກຮຽນ. ຢູ່ຂ້າງລຸ່ມນີ້ຈະເປັນຄຸນລັກສະນະບາງຢ່າງຂອງເດັກ ທີ່ຢູ່ໃນຄວາມສ່ຽງ ແລະ ເຮົາຈະສາມາດເຮັດສິ່ງໃດແດ່ເພື່ອຊ່ວຍເຂົາ.[4]

### ວິທີກຳນົດ/ລະບຸ ແລະ ຊ່ວຍເຫຼືອເດັກທີ່ມີຄວາມສ່ຽງ

ເດັກ ນັກຮຽນອາດຢູ່ໃນພາວະສ່ຽງ ຖ້າມີການປະສົມປະສານຂອງບັນດາປັດໄຈດັ່ງລຸ່ມນີ້ເກີດຂຶ້ນ:

- ♦ ຄອບຄົວບໍ່ປະພຶດປະຕິບັດໜ້າທີ່ປົກກະຕິ
- ♦ ພໍ່ແມ່ ຜູ້ປົກຄອງເສບສານເສບຕິດ ຫຼື ທໍລະມານຍ້ອນການປ່ວຍທາງຈິດ
- ♦ ມີພຶດຕິກຳທີ່ບໍ່ເໝາະສົມ ຫຼືກ້າວລ້າວໃນຫ້ອງຮຽນ
- ♦ ມີຄວາມຫຼົ້ມເຫຼວ ຫຼື ຂາດຄວາມຕັ້ງໃຈໄປໂຮງຮຽນ
- ♦ ມີທັກສະທາງດ້ານສັງຄົມຈຳກັດ
- ♦ ມີໝູ່ເພື່ອນທີ່ໃຊ້ສິ່ງມຶນເມົາຫຼືສິ່ງເສບຕິດຫຼືເຂົ້າຮ່ວມໃນພຶດຕິກຳທີ່ມີຄວາມສ່ຽງອື່ນໆອີກ
- ♦ ຖານະທາງເສຖະກິດ-ສັງຄົມຕ່ຳ
- ♦ ທົດລອງໃຊ້ສານເສບຕິດແຕ່ຍັງເຍົາໄວ
- ♦ ມີທັດສະນະຄະຕິທີ່ຢາກໃຊ້ຢາເສບຕິດ, ສິ່ງມຶນເມົາ ຫຼື ຢາສູບ

**ສັນຍານຫຼືອາການ ດັ່ງຕໍ່ໄປນີ້ອາດຊີ້ບອກວ່າມີການຫຍຸ້ງກ່ຽວກັບສານເສບຕິດ:**

- ♦ ມີການປ່ຽນແປງບຸຄະລິກພາບຢ່າງເຫັນໄດ້ຊັດເຈນ, ອາລົມຜັນຜວນ

[4] ທີ່ມາ : Education Queensland. Identifying At Risk Students. http://education.gld.gov.au/health_safty/promotion/drug_education/html/m_risk.html

- ມີການປ່ຽນແປງດ້ານຮ່າງກາຍ ເຊັ່ນ : ນ້ຳໜັກລົດ ຫຼື ເພີ່ມ, ການເວົ້າບໍ່ແຈ້ງ, ການຍ່າງ ໂຊເຊ, ປະຕິກິລິຍາຕອບໂຕ້ເຊື່ອຊ້າ, ຍິ່ງພະຫຍອງ, ເຫື່ອຕົກ, ເວົ້າຫຼາຍເກີນໄປ, ມີອາການ ເຄີບເຄີ້ມ (ດີໃຈເກີນເຫດ), ຄື່ນໄສ້ ແລະ ຮາກ.
- ມີການປ່ຽນແປງໄປໃນຜົນການຮຽນ
- ລະມັດລະວັງໃນການຕິດຕໍ່ພົວພັນກັບຄົນອື່ນທາງໂທລະສັບ ຫຼື ລະວັງໃນການນັດພົບ.
- ມີຄວາມຈຳເປັນທີ່ກົດດັນດ້ານການເງິນ

**ປັດໄຈບວກເຫຼົ່ານີ້ອາດຈະຊ່ອຍຫຼຸດຜ່ອນຜົນກະທົບຂອງປັດໄຈສ່ຽງ:**

- ຄວາມຜູກພັນໃກ້ຊິດທີ່ແຂງແຮງ, ການເຂົ້າກ່ຽວພັນຂອງຄອບຄົວກັບຊີວິດຂອງເດັກ
- ຜົນສຳເລັດໃນໂຮງຮຽນ
- ທັກສະດ້ານສັງຄົມດີ
- ການເຂົ້າມີສ່ວນຮ່ວມໃນກິດຈະກຳຕ່າງໆຂອງຊຸມຊົນ
- ການພົວພັນທີ່ເປັນການເບິ່ງແຍງດູແລໂດຍຢ່າງນ້ອຍຈາກຜູ້ໃຫຍ່ໜຶ່ງຄົນ ເຊັ່ນ - ຄູ

**ໂຮງຮຽນອາດສາມາດຊ່ອຍເຫຼືອໂດຍການເຮັດບາງຢ່າງ ຫຼື ເຮັດທັງໝົດທຸກຢ່າງ ດັ່ງຕໍ່ໄປນີ້:**

- ຊຸກຍູ້ການພົວພັນທີ່ໃຫ້ການສະໜັບສະໜູນ ແລະ ມີຄວາມປອດໄພ
- ຮັບປະກັນການມາເຂົ້າໂຮງຮຽນປົກກະຕິ ແລະ ໄດ້ຮຽນຢ່າງມີຄວາມໝາຍ
- ພັດທະນາທັກສະສ່ວນບຸກຄົນ ແລະ ທັກສະດ້ານສັງຄົມ
- ພັດທະນາທັກສະດ້ານວິຊາການ
- ກໍ່ສ້າງເຄືອຂ່າຍສັງຄົມທີ່ສະໜັບສະໜູນ
- ຊຸກຍູ້ການມີຄ່ານິຍົມທາງບວກ
- ສອນໃຫ້ເຂົ້າໃຈວິທີເຂົ້າເຖິງຂໍ້ມູນຄວາມຮູ້
- ສິ່ງຄວາມຮູ້ຄວາມເຂົ້າໃຈວິທີຖ່ວງເວລາເພື່ອທີ່ຈະບໍ່ເຂົ້າຫຍຸ້ງກ່ຽວກັບສານເສບຕິດ ຫຼື ພຶດຕິ ກຳສ່ຽງຕ່າງໆ
- ໃຫ້ຄວາມສະດວກເພື່ອເຂົ້າເຖິງການແນະແນວ

## 4. ແນວທາງເພື່ອປ້ອງກັນຄວາມຮຸນແຮງໃນໝູ່ເດັກ

ທ່ານສາມາດນຳໃຊ້ປະຕິບັດການຕ່າງໆດັ່ງຕໍ່ໄປນີ້ ເພື່ອຊ່ອຍການປ້ອງກັນຄວາມຮຸນແຮງ

ໃນໂຮງຮຽນຂອງທ່ານ. [5]

1. ວາງຂອບເຂດຈຳກັດທີ່ແນ່ນອນ, ໝັ້ນຄົງກ່ຽວກັບພຶດຕິກຳກ້າວລ້າວ ແລະ ໃຊ້ກຳລັງບັງຄັບຂູ່ເຂັນ.
2. ສອນເດັກເຍົາໄວໃຫ້ມີສຸຂະພາບດີ ແລະ ແບບແຜນພຶດຕິກຳທີ່ບໍ່ໃຊ້ຄວາມຮຸນແຮງ.
3. ຮຽນຮູ້ ແລະ ນຳໃຊ້ແບບແຜນການນັບຖືລະບຽບວິໄນທີ່ມີປະສິດທິຜົນ, ບໍ່ໃຊ້ຄວາມຮຸນແຮງ ແລະ ເມື່ອເດັກປະພຶດປະຕິບັດຜິດພາດກໍຕັກເຕືອນ ແກ້ໄຂຢ່າງສະເໝີສະເໝີ.
4. ທ່ານເອງ ແລະ ຜູ້ອື່ນໆ ຕ້ອງເປັນແບບຢ່າງທີ່ດີມີປະສິດທິຜົນ ໃນການແກ້ບັນຫາໂດຍບໍ່ໃຊ້ຄວາມຮຸນແຮງ.
5. ປັບປຸງການສື່ສານກັບເດັກ (ເຊັ່ນ: ໃຫ້ເວລາແກ່ເດັກເພື່ອຮັບຟັງ).
6. ແນະນຳຊ່ອຍເຫຼືອການເຂົ້າມີສ່ວນຮ່ວມກັບສິ່ງຕ່າງໆ, ໂຮງຮຽນ, ກຸ່ມເພື່ອນດ້ວຍກັນ ແລະ ການຈັດຕັ້ງຂອງຊຸມຊົນ.
7. ຕັ້ງຄວາມຄາດຫວັງທີ່ເໝາະສົມສຳລັບເດັກທຸກຄົນ
8. ຊຸກຍູ້ ແລະ ຊົມເຊີຍເດັກເພື່ອຊ່ອຍເຫຼືອກັນ ແລະ ແກ້ບັນຫາໂດຍບໍ່ໃຊ້ຄວາມຮຸນແຮງ.
9. ກຳນົດ / ລະບຸບັນຫາກ່ຽວກັບສານສ້າງຄວາມມຶນເມົາ, ສານເສບຕິດ ແລະ ສານອັນຕະລາຍ ອື່ນໆ.
10. ສອນກົນໄກການຮັບມືກັບບັນຫາທີ່ເໝາະສົມເພື່ອແກ້ພາວະວິກິດຕ່າງໆ
11. ຂໍຄວາມຊ່ອຍເຫຼືອຈາກຜູ້ຊ່ຽວຊານມືອາຊີບ (ກ່ອນທີ່ຈະສາຍເກີນໄປ)
12. ຊີ້ນຳນຳພາຄວາມພະຍາຍາມຂອງຊຸມຊົນ ເພື່ອດຳເນີນການວິເຄາະຄວາມຮຸນແຮງໃນໂຮງຮຽນ ແລະ ຊຸມຊົນ(ເຊັ່ນ: ດຳເນີນການ ໂດຍຜ່ານການເຝິກເຮັດແຜນທີ່) ແລະ ເພື່ອພັດທະນາ, ປະສານງານ ແລະ ປະຕິບັດການໃຫ້ບໍລິການທີ່ສະໜັບສະໜູນໂຮງຮຽນ - ຊຸມຊົນຢ່າງມີປະ ສິດທິຜົນ.
13. ໃຫ້ໂອກາດເດັກໄດ້ເຝິກປະຕິບັດທັກສະຊີວິດ,ໂດຍສະເພາະ ວິທີແກ້ໄຂບັນຫາໂດຍບໍ່ໃຊ້ຄວາມຮຸນແຮງ.

[5] ປັບມາຈາກ: World Health Organization (1998) WHO Information Series on School Health, Document Three-Violence Prevention: An important Element of a Health-Promoting School. Geneva.

# ບົດທີ 6

# ການດຳເນີນການແກ້ໄຂນັກຮຽນຝ່າຝືນລະບຽບວິໄນ

## 1. ການປັບປຸງຄວາມມີປະສິດທິຜົນຂອງເຕັກນິກການປະຕິບັດລະບຽບວິໄນ ແບບສ້າງສັນ

ຖ້າຫາກນັກຮຽນປະພຶດບໍ່ເໝາະສົມ, ເຕັກນິກໃນທາງບວກເພື່ອຫລຸດຜ່ອນ ຫຼື ລົບລ້າງ ພຶດຕິກຳດັ່ງກ່າວນັ້ນແມ່ນມີຄວາມຈຳເປັນ. ຄືດັ່ງພວກເຮົາໄດ້ຮຽນຮູ້ມາແລ້ວ, ການປະພຶດທີ່ບໍ່ເໝາະສົມ ເປັນການປະພຶດທີ່ບໍ່ເພິ່ງປາຖະໜາ ເຊິ່ງເຮັດໃຫ້ເດັກນັກຮຽນ ຫຼື ຜູ້ອື່ນໆຕົກຢູ່ໃນອັນຕະລາຍ, ບໍ່ເປັນໄປຕາມຄວາມຄາດຫວັງຂອງພວກເຮົາ ຫຼື ກົດລະບຽບຂອງຫ້ອງຮຽນ ແລະ ລົບກວນການປະພຶດທາງສັງຄົມທີ່ດີ ແລະ ການປະຕິບັດວິໄນໃນຕົນເອງ.ຢູ່ໃນພາກນີ້, ພວກເຮົາຈະເວົ້າກ່ຽວກັບເຕັກນິກສະເພາະທີ່ສາມາດນຳໃຊ້ເພື່ອຫຼຸດຜ່ອນການປະພຶດທີ່ບໍ່ເໝາະສົມ ແລະ ການປ້ອງກັນການປະພຶດນັ້ນ. ເຕັກນິກອັນໃດກໍຕາມທີ່ຖືກຄັດເລືອກເອົາມາໃຊ້ນັ້ນ, ຄວາມມີປະສິດທິຜົນຂອງມັນສາມາດທີ່ຈະເພີ້ມຂຶ້ນເລື້ອຍໆ

- ❖ ເມື່ອທ່ານ ແລະ ນັກຮຽນເຂົ້າໃຈແຈ້ງວ່າອັນໃດເປັນພຶດຕິກຳທີ່ມີບັນຫາ ແລະ ຜົນຕາມມາທີ່ ຄາດໄວ້ຂອງມັນແມ່ນຫຍັງ ເມື່ອມີພຶດຕິກຳແບບນີ້ເກີດຂຶ້ນ.
- ❖ ເມື່ອທ່ານຕອບໂຕ້ດ້ວຍການຊີ້ໃຫ້ເຫັນຜົນທີ່ໄດ້ຮັບ ໃນເບື້ອງຕົ້ນຢ່າງແຂງແຮງຈິງຈັງ ໃນທັນທີທັນໃດ ໃນເວລາການປະພຶດແບບບໍ່ເພິ່ງປາຖະໜາ ເກີດຂຶ້ນໃນຄັ້ງທຳອິດ (ເຊັ່ນ: ຖ້າຫາກກົດລະບຽບຖືກຝ່າຝືນທຳລາຍ, ໃຫ້ໃຊ້ຂໍ້ບັງຄັບແຕ່ດຽວນີ້ໂລດ, ບໍ່ໃຫ້ລໍຖ້າ).
- ❖ ເມື່ອທ່ານຊີ້ໃຫ້ຜົນທີ່ຕາມມາ ແບບເໝາະສົມຢ່າງສະເໝີຕົ້ນສະເໝີປາຍທຸກໆຄັ້ງ ຕໍ່ການປະພຶດທີ່ເປັນບັນຫາເປົ້າໝາຍເກີດຂຶ້ນ.
- ❖ ເມື່ອທ່ານໃຫ້ຄຳແນະນຳ ແລະ ການກວດແກ້ແບບໃຈເຢັນ ແລະ ດ້ວຍຄວາມເຫັນອົກເຫັນ ໃຈ;
- ❖ ເມື່ອທ່ານໃຫ້ເຫດຜົນຂອງຜົນໄດ້ຮັບທີ່ຕາມມາ ສຳລັບການປະພຶດສະເພາະໃດໜຶ່ງ ມັນຈະຊ່ວຍນັກຮຽນໃຫ້ຮຽນເອົາການປະພຶດທີ່ເໝາະສົມ ແລະ ປັບປຸງຄວາມເຊື່ອຟັງ ຫຼື ການຮູ້ຄວາມຂອງເຂົາເຈົ້າຕາມການຂໍຮ້ອງຈາກຜູ້ໃຫຍ່.

## 2. ຂໍ້ແນະນຳພິເສດກ່ຽວກັບການປະຕິບັດລະບຽບວິໄນແບບສ້າງສັນ

ຕາມຄວາມເປັນຈິງແລ້ວ, ຄວາມຈຳເປັນສຳລັບການໃສ່ວິໄນ ແມ່ນບໍ່ມີຄວາມຈຳເປັນທີ່ຈະຕ້ອງຍົກຂຶ້ນມາເວົ້າ. ສ່ວນໃຫຍ່ຂອງການປະຕິບັດວິໄນທີ່ດີ ແມ່ນການຫຼີກລ້ຽງສະພາບການທີ່ມີບັນຫາ ຫຼື ຈັດການກັບສະພາບການນັ້ນກ່ອນ ມັນຈະອອກນອກກອບການຄວບຄຸມ. ພວກເຮົາຈະເຮັດແນວໃດ? ຢູ່ໃນນີ້ມີຂໍ້ແນະນຳພິເສດທີ່ມີຄຸນຄ່າຢູ່10ຢ່າງ. ຂໍ້ແນະນຳຈຳນວນໜຶ່ງເປັນຂໍ້

ແນະນຳໃໝ່. ສ່ວນອີກຈຳນວນໜຶ່ງໄດ້ກ່າວແນະນຳກ່ອນນີ້. ໃຫ້ພວກເຮົາມາເບິ່ງຂໍ້ແນະນຳເຫຼົ່ານີ້ລະອຽດຕື່ມອີກ,.

***1) ໃຫ້ແນ່ໃຈໃນຕົວທ່ານເອງ;ຢ່າເຮັດການເອີ້ນຜິດ (ຕີຄວາມໝາຍຂອງພຶດຕິກຳທີ່ນັກຮຽນສະແດງອອກຜິດ).*** ຄືດັ່ງໄດ້ສົນທະນາຢູ່ຂ້າງເທິງນັ້ນ, ການປະພຶດ ຫຼືພຶດຕິກຳທີ່ບໍ່ເໝາະສົມອັນແທ້ຈິງເກີດຂຶ້ນ ເມື່ອເວລານັກຮຽນເລືອກປະພຶດຢ່າງບໍ່ເໝາະສົມ. ກ່ອນທ່ານຈະກະທຳສິ່ງໃດໜຶ່ງ ເພື່ອຕອບໂຕ້ໃຫ້ຖາມ ຕົວທ່ານເອງດ້ວຍຄຳຖາມຕໍ່ໄປນີ້ກ່ອນ:

ກ. ນັກຮຽນໄດ້ເຮັດສິ່ງໃດໜຶ່ງຜິດແທ້ບໍ່? ມັນມີບັນຫາແທ້ບໍ່ໃນທີ່ນີ້ ຫຼື ພຽງຍ້ອນວ່າ ທ່ານມີຄວາມອິດເມື່ອຍ ແລະ ບໍ່ມີຄວາມອົດທົນ?

- ຖ້າມັນບໍ່ມີບັນຫາທີ່ແທ້ຈິງ, ໃຫ້ລະຖິ້ມຄວາມຄຽດຄວາມເມື່ອຍຍາກ ນັ້ນໄປຈາກນັກຮຽນ ແລະ ຫ້ອງຮຽນສາ.
- ຖ້າຫາກມີບັນຫາ, ໃຫ້ໄປທີ່ຄຳຖາມຕໍ່ໄປ.

ຂ. ໃຫ້ຄິດຈັກໜ້ອຍໜຶ່ງກ່ອນ. ນັກຮຽນຂອງທ່ານສາມາດເຮັດສິ່ງທີ່ທ່ານຄາດຫວັງໄວ້ແທ້ບໍ່ໃນທີ່ນີ້?

- ຖ້າຫາກທ່ານບໍ່ມີຄວາມເປັນທຳ, ໃຫ້ປະເມີນຄວາມຄາດຫວັງຂອງທ່ານຄືນໃໝ່.
- ຖ້າຫາກຄວາມຄາດຫວັງຂອງທ່ານມີຄວາມເປັນທຳ, ໃຫ້ໄປຫາຄຳຖາມຕໍ່ໄປ.

ຄ. ໃນເວລານັ້ນ ນັກຮຽນຂອງທ່ານໄດ້ຮູ້ບໍ່ວ່າເຂົາເຈົ້າເຮັດອັນໃດອັນໜຶ່ງຜິດ?

- ຖ້ານັກຮຽນຂອງທ່ານບໍ່ຮູ້ຈັກວ່າຕົນເອງໄດ້ເຮັດອັນໃດອັນໜຶ່ງຜິດ, ກໍຊ່ອຍໃຫ້ລາວເຂົ້າໃຈສິ່ງທີ່ທ່ານຄາດຫວັງຢາກໃຫ້ລາວເຮັດ, ໃຫ້ເຫດຜົນວ່າຍ້ອນຫຍັງ ແລະ ບອກວິທີປະຕິບັດວ່າເຮັດແນວໃດຈຶ່ງຖືກຕ້ອງ. ທ່ານຈຶ່ງຊ່ອຍເຫຼືອລາວ.
- ຖ້າຫາກນັກຮຽນຂອງທ່ານ ຮູ້ວ່າສິ່ງທີ່ເຂົາກະທຳນັ້ນຜິດ, ແລະ ເຂົາເຈົ້າເຈດຕະນາເມີນເສີຍຕໍ່ຄວາມຄາດຫວັງທີ່ມີເຫດຜົນນັ້ນ, ໝາຍວ່ານັກຮຽນຂອງທ່ານປະພຶດຜິດ.

ຖ້າຫາກການປະພຶດມີລັກສະນະເປັນອຸປະຕິເຫດ, ຈະບໍ່ຖືວ່າເປັນການປະພຶດທີ່ບໍ່ເໝາະສົມ ຖ້າຫາກການປະພຶດບໍ່ແມ່ນແບບອຸປະຕິເຫດ, ໃຫ້ຂໍຮ້ອງນັກຮຽນບອກເຫດຜົນວ່າເປັນຫຍັງເຂົາຈຶ່ງເຮັດສິ່ງນັ້ນໃຫ້ທ່ານຟັງ. ທ່ານຕ້ອງຮັບເຂົາຟັງຢ່າງລະອຽດຖີ່ຖ້ວນ ແລ້ວໃຫ້ປະເມີນເບິ່ງກ່ອນທີ່ທ່ານຈະຕອບໂຕ້.

***2) ຊີ້ໃຫ້ເຫັນການກະທຳທີ່ເປັນທາງບວກ.*** ເວລາໃດກໍຕາມເມື່ອນັກຮຽນເຮັດສິ່ງໃດໜຶ່ງ ທີ່ເປັນປະໂຫຍດ, ມີຄວາມເອົາໃຈໃສ່, ມີການຮ່ວມມື ຫຼື ສະແດງອອກເຖິງການປັບປຸງ ຫຼື ກ້າວໜ້າຂຶ້ນ ທ່ານຈຶ່ງເຮັດໃຫ້ເຂົາວ່າ ທ່ານໄດ້ເອົາໃຈໃສ່ສັງເກດ ແລະ ຍ້ອງຍໍຊົມເຊີຍດ້ວຍຄຳເວົ້າດີໆ, ຕົວຢ່າງ "ສົມສັກ ຄູຖືກໃຈຫຼາຍກັບວິທີແກ້ໂຈດບັນຫາວຽກບ້ານຂອງນ້ອງ ".

ເຖິງແມ່ນວ່າມັນຈະເປັນເຫດການທຳມະດາໆກໍຕາມ, ຢ່າຊອກຫາແຕ່ຄວາມຜິດພາດ, ຈົ່ງຊອກໃຫ້ເຫັນວ່າອັນໃດຖືກ/ໃຊ້ໄດ້ ແລະ ອັນໃດບໍ່ຖືກ/ໃຊ້ການບໍ່ໄດ້. ດັ່ງຕົວຢ່າງ "ນາດ, ເປັນສິ່ງປະເສີດແລ້ວ ທີ່ນ້ອງເຄີຍຕໍ່ສູ້ ຊ່ວຍເຫຼືອໝູ່ເພື່ອນ. ການເປັນໝູ່ເພື່ອນທີ່ຈິງຮັກພັກດີເປັນສິ່ງທີ່ສຳຄັນ. ເຖິງຢ່າງໃດກໍດີ, ຄູຈະບໍ່ອະນຸຍາດໃຫ້ນ້ອງຕີຄົນອື່ນ. ນ້ອງສາມາດໃຊ້ວິທີການອື່ນຈັດການແກ້ໄຂສະຖານະການໄດ້ບໍ່?"

***3.) ປະຕິສຳພັນກັບນັກຮຽນດ້ວຍຄວາມເຄົາລົບນັບຖື.*** ໃຫ້ປະຕິບັດຕົນຕໍ່ນັກຮຽນ ຄືກັນກັບ ທ່ານຢາກໃຫ້ນັກຮຽນປະຕິບັດຕົນຕໍ່ກັບທ່ານ. ຊ່ວຍເຂົາເຈົ້າໃຫ້ປະຕິບັດດີຂຶ້ນ. ໃຫ້ເປັນຜູ້ແນະນຳຊີ້ທິດທາງບໍ່ແມ່ນເປັນນາຍ. ໃຫ້ເປັນຄູສອນປະເພດທີ່ທ່ານເຄີຍຈົດຈຳດ້ວຍຄວາມຮັກຄວາມຊອບໃນວັນເວລາທີ່ທ່ານເຄີຍເປັນນັກຮຽນ.

***4.) ໃຫ້ສື່ສານ/ບອກຄວາມຄາດຫວັງຂອງທ່ານ*** ຕໍ່ນັກຮຽນຂອງທ່ານໄດ້ຮັບຊາບຢ່າງຈະແຈ້ງ ແລະດ້ວຍຄວາມນັບຖື.ໃຫ້ບອກເຕືອນນັກຮຽນໃຫ້ຮູ້ໄວ້ສະເໝີກ່ຽວກັບຄວາມຄາດຫວັງຂອງທ່ານ, ກ່ອນສະຖານະ ການ ແລະໃນເວລາກຳລັງດຳເນີນໃນສະຖານະການ. ຕົວຢ່າງ ໃນຕອນເລີ່ມຕົ້ນສົກຮຽນໃຫ້ບອກນັກຮຽນຂອງທ່ານວ່າ: "ເມື່ອໝົດຊົ່ວໂມງສອນໃນມື້ນີ້ ຫຼື ໃນທຸກໆມື້, ຄູຕ້ອງການໃຫ້ພວກນ້ອງນັ່ງ ຢູ່ກັບບ່ອນ ຈົນກວ່າອ້າຍເອີ້ນຊື່ພວກນ້ອງ. ການເຮັດວິທີນີ້ ທຸກຄົນຈະສາມາດອອກຫ້ອງໄປດ້ວຍຄວາມປອດໄພ ໂດຍບໍ່ມີການຕຳກັນ ແລະ ຈະເຮັດໃຫ້ຄູສາມາດຮຽນຮູ້ຊື່ ແລະຈື່ໜ້າຂອງພວກນ້ອງໄດ້ໄວຂຶ້ນ "ໃຫ້ທ່ານບອກເຕືອນນັກຮຽນຂອງທ່ານທຸກໆມື້ ຈົນກວ່າການອອກຫ້ອງໄປຢ່າງເປັນລະບຽບ ກາຍເປັນພາກສ່ວນໜຶ່ງໄປແບບທຳມະຊາດຂອງກິດຈະວັດປະຈຳວັນຂອງຫ້ອງຮຽນຂອງທ່ານ.

***5.) ໃຫ້ນຳໃຊ້ອາລົມຂັນ ຫຼື ການຜ່ອນຄາຍອາລົມ*** ບໍ່ແມ່ນການປະພຶດທີ່ບໍ່ເໝາະສົມທຸກໆຢ່າງທີ່ນັກຮຽນເຮັດນັ້ນ ຈຳເປັນຕ້ອງໃສ່ວິໄນ. ເດັກກໍຄືຜູ້ໃຫຍ່ກໍມີຄວາມອິດເມື່ອຍ, ໝົດກຳລັງ, ລຳຄານ ຫຼືເບື່ອໜ່າຍ. ການໃສ່ວິໄນອາດຈະບໍ່ແກ້ໄຂອັນໃດໄດ້ໃນສະຖານະການແບບນີ້. ໃຫ້ພະຍາຍາມນຳໃຊ້ອາລົມຂັນໃນຊົ່ວໂມງສອນຂອງທ່ານ ເພື່ອເຮັດໃຫ້ທຸກຄົນມີຄວາມສົນໃຈບໍ່ໃຫ້ເບື່ອໜ່າຍ, ຕົວຢ່າງ ໃນເວລາສອນວິຊາວິທະຍາສາດບອກໃຫ້ນັກຮຽນຂອງທ່ານແກ້ບັນຫາປິດສະໜາ ເພື່ອນຳເຂົ້າສູ່ບົດຮຽນ. ບັນຫາປິດສະໜາອາດສາມາດເປັນ "ແມ່ນຫຍັງທີ່ເລີ່ມຕົ້ນຊີວິດດ້ວຍສີ່, ດຳລົງຊີວິດດ້ວຍສອງ ແລະ ຢູ່ທ້າຍຊີວິດດ້ວຍສາມ?" ຄຳຕອບກໍຄືຄົນ. ເດັກຄານດ້ວຍສີ່ (ສອງຂາສອງແຂນ) ແລ້ວຮຽນຍ່າງດ້ວຍສອງຂາ ແລະ ເມື່ອເວລາເຖົ້າແກ່ມີຄົນຈຳນວນໜຶ່ງໃຊ້ໄມ້ຄ້ອນເທົ້າຍ່າງດ້ວຍ, ເຂົາເຈົ້າມີສາມຂາ! ປິດສະໜານີ້ອາດຈະເປັນວິທີທີ່ໜ້າສົນໃຈ ເພື່ອນຳເຂົ້າສູ່ຫົວຂໍ້ບົດຮຽນ ກ່ຽວກັບຮ່າງກາຍຂອງຄົນພັດທະນາການຢ່າງໃດ ຫຼື ນຳເຂົ້າສູ່ການສົນທະນາກ່ຽວກັບໄວອາຍຸ. ສຳລັບນັກຮຽນໂຮງຮຽນອະນຸບານ, ໃຫ້ນຳໃຊ້ການຜ່ອນຄາຍອາລົມເຊັ່ນ: "ເຊີນ

ພວກຫຼານເບິ່ງແມງກະເບື້ອ!" ສາມາດເຮັດປົກໜີຈາກການສະອື້ນຄວນຄາງ, ແກ່ວງແຂນຂາ ແລະຄວາມໂທໂສ ແລະ ສາມາດນຳໄປສູ່ກິດຈະກຳການພັດທະນາອັນດີ, ເຊັ່ນ ການບອກ ໃຫ້ເດັກແຕ້ມຮູບແມງກະເບື້ອ. ໃຫ້ນ້ອງໆນຳໃຊ້ຈິນຕະນາການຂອງຕົນ!.

*6.) ໃຫ້ນຳໃຊ້ການຮ່ວມມືແບບຕັ້ງໜ້າ.* ໃຫ້ຄຳແນະນຳທີ່ທ່ານຮູ້ວ່ານັກຮຽນຈະສະໜຸກສະໜານ ໃນການເຮັດຕາມ ກ່ອນທ່ານຈະໃຫ້ຄຳແນະນຳທີ່ເຂົາອາດຈະລັ່ງເລໃນການເຮັດ. ກ່ອນອື່ນເຮັດ ໃຫ້ເຂົາມີອາລົມການຮ່ວມມືເສຍກ່ອນ. ຕົວຢ່າງ, ເວົ້າວ່າ "ໃຫ້ທຸກຄົນ ຂຽນສະຫຼະ X ຕົວໃຫຍ່ໆ ຢູ່ໃນອາກາດ" ເຮີຍ, ມາລີ ອັນນັ້ນດີຫຼາຍ "ທຸກຄົນຍົກນິ້ວຊີ້ຂຶ້ນ. ຕອນນີ້ໃຫ້ຈີ້ນິ້ວມືໃສ່ປຶ້ມ ບ່ອນທີ່ພວກນ້ອງຄິດວ່າເປັນໜ້າ 108". ແລ້ວໃຫ້ທ່ານບອກເຂົາເຈົ້າເປີດປຶ້ມໜ້າ 108 ແລ້ວ ໃຫ້ ຂຽນຄຳຕອບຂອງຄຳຖາມທັກຂໍ້ທີ່ຢູ່ໃນໜ້ານັ້ນ.

*7.) ໃຫ້ທາງເລືອກ ຫຼື ໂອກາດເລືອກທີ່ມີຂອບເຂດ ແລະ ຊຸກຍູ້ສົ່ງເສີມການຕັດສິນໃຈເປັນ ໝູ່ຄະນະ.*ນັກຮຽນສ່ວນຫຼາຍບໍ່ມັກໃຫ້ມີຄົນບອກເຮັດສິ່ງໃດໜຶ່ງ ຕະຫຼອດເວລາ; ການໃຫ້ໂອກາດ ເລືອກຈະຊ່ອຍໃຫ້ ເຂົາມີຄວາມຮູ້ສຶກເຖິງການຄວບຄຸມລະດັບໃດໜຶ່ງ ເຖິງແມ່ນວ່າມັນຈະບໍ່ຫຼາຍ ເກີນໄປກໍຕາມ. ເມື່ອເວລາການສອບເສັງມາຮອດ ທ່ານສາມາດເວົ້າວ່າ "ມື້ວັນອັງຄານພວກເຮົາ ຈະມີການສອບເສັງທັດອ່ານ, ຜູ້ໃດຕ້ອງການສອບເສັງພາກຂຽນ ແລະ ຜູ້ໃດຕ້ອງການສອບເສັງ ປາກເປົ່າ? ພວກນ້ອງສາມາດເລືອກເອົາອັນໃດກໍ່ໄດ້ ຕາມພວກນ້ອງຕ້ອງການ" .ອັນນີ້ຈເປັນການ ໃຫ້ຄວາມຮູ້ສຶກຂອງການຄວບຄຸມສະຖານະການແກ່ນັກຮຽນຂອງທ່ານ. ຖ້າທ່ານຕ້ອງການຢາກ ເຮັດການກວດກາພຽງປະເພດດຽວ, ກໍບອກໃຫ້ເຂົາເຈົ້າສົນທະນາເຖິງຂໍ້ດີ(ໄດ້ປຽບ) ແລະ ຂໍ້ ອ່ອນ(ເສຍປຽບ) ຂອງການກວດກາທັງສອງແບບນັ້ນ ແລ້ວລົງຄະແນນສຽງວ່າ ອັນໃດທີ່ເຂົາ ເຈົ້າມັກຫຼາຍກວ່າ. ສຽງສ່ວນຫຼາຍຖືເປັນເປັນຝ່າຍຊະນະ. ຖ້າຫາກມີນັກຮຽນຈຳນວນໜຶ່ງເສຍໃຈ ຍ້ອນມີສຽງສະໜັບສະໜູນໃນຫ້ອງໜ້ອຍກວ່າ ເຊັ່ນ ເຂົາເຈົ້າຕ້ອງການ ເຮັດກວດກາແບບຂຽນ, ແຕ່ໃນຫ້ອງສ່ວນຫຼາຍເລືອກເອົາການກວດກາແບບປາກເປົ່າໃນວັນສອບເສັງ, ກໍຈົ່ງໃຫ້ຄຳຖາມ ເພີ້ມເຕີມທີ່ເປັນແບບຂຽນກໍໄດ້.

*8.) ປ່ອຍໃຫ້ຜົນຂອງພຶດຕິກຳເກີດຂຶ້ນຕາມທຳມະຊາດ, ແຕ່ໃຫ້ເປັນຜົນທີ່ມີຄວາມປອດໄພ.* ຖ້າ ຫາກ ນັກຮຽນຄົນໜຶ່ງມາຮອດຫ້ອງຮຽນຊ້າເລື້ອຍໆ, ຢ່າໄດ້ມີຄວາມເສຍໃຈ. ມັນແມ່ນຄວາມຮັບ ຜິດຊອບຂອງນັກຮຽນທີ່ຈະມາໂຮງຮຽນໃຫ້ທັນເວລາ. ໃຫ້ບອກລາວວ່າຖ້າຍັງສືບຕໍ່ມາໂຮງຮຽນຢູ່ ທ່ານຈະສົ່ງຈົດໝາຍໄປໃຫ້ຜູ້ປົກຄອງ. ຖ້າເຂົາຍັງສືບຕໍ່ມາຊ້າອີກ ໃຫ້ສົ່ງຈົດໝາຍໄປຍັງ ເຮືອນ ຫາພໍ່ແມ່ ແລ້ວປ່ອຍໃຫ້ລາວປະເຊີນກັບຜົນທີ່ຈະຕາມມາ. ລາວຈະໄດ້ຮຽນຮູ້ເຖິງຄວາມຮັບຜິດ ຊອບສຳລັບການປະພຶດ ແລະ ຜົນທີ່ຕາມມາຕາມພາຍຫຼັງ.

*9.) ຢ່າເອົາການບໍ່ເຊື່ອຟັງຄູແບບທົ່ວໆໄປຂອງນັກຮຽນມາເປັນເລື່ອງສ່ວນຕົວ.* ເດັກຕ້ອງການຢາກສະແດງເຖິງຄວາມບໍ່ເຊື່ອຟັງ ແລະ ຕ້ອງການຢາກທົດສອບຂອບເຂດຈຳກັດ ເຊິ່ງເປັນພາກສ່ວນໜຶ່ງຂອງການພັດທະນາຂອງເຂົາເຈົ້າ. ຢ່າໄດ້ມີຄວາມຮູ້ສຶກວ່ານີ້ ມັນເປັນການລົບຫຼູ່ອຳນາດຂອງທ່ານ.ໃຫ້ໂຕ້ຕອບໃນແບບມິດງຽບ ໂດຍໃຫ້ນຳໃຊ້ການໃສ່ວິໄນທີ່ສົ່ງເສີມການຄວບຄຸມຕົນເອງ. ທ່ານຈື່ຈຳກໍລະນີ ທ້າວ ເຣມອນ ຢູ່ໃນຕອນເລີ່ມຕົ້ນຂອງພາກນີ້ຢູ່ບໍ່? ໃນຕອນທຳອິດຄູສອນຂອງລາວເອົາການປະພຶດຂອງ ທ້າວ ເຣມອນ ມາເປັນເລື່ອງສ່ວນຕົວ ແລະ ໄດ້ເຮັດໃຫ້ນາງຄູທົ່ວເສຍທີ່ສຸດ. ແຕ່ເມື່ອເວລາ ສາວຄູຢຸດ ເຊົາເອົາເລື່ອງຂອງເຣມອນ ມາເປັນເລື່ອງສ່ວນຕົວ ແລະໄດ້ເຂົ້າໃຈວ່າເວລາໃດ ແລະ ຍ້ອນຫຍັງທ້າວ ເຣມອນ ຈຶ່ງປະພຶດບໍ່ເໝາະສົມ, ສາວຄູຈຶ່ງສາມາດສ້າງຍຸດທະສາດທີ່ມີປະສິດທິຜົນ ເພື່ອຈັດການກັບ ທ້າວ ເຣມອນ ແລະ ສຸດທ້າຍກໍ່ໄດ້ຮັບຜົນໃນທາງບວກ.

*10.) ໃຫ້ຮູ້ຄວາມພະຍາຍາມ, ແຕ່ບໍ່ແມ່ນຈະຮູ້ຄວາມຖືກຕ້ອງ.* ຖ້າຫາກນັກຮຽນເຮັດດີທີ່ສຸດກັບທ່ານ, ທ່ານຄວນດີໃຈ. ຄວາມພະຍາຍາມ ຫຼືການທົດລອງເປັນບາດກ້າວທຳອິດຂອງການຮຽນຮູ້. ຖ້າຫາກນັກຮຽນບໍ່ຕ້ອງການທີ່ຈະພະຍາຍາມເຮັດວຽກທີ່ຍາກ, ໃຫ້ເວົ້າກ່ຽວກັບເວລາທີ່ຄວາມພະຍາຍາມຂອງເຂົາໄດ້ນຳເອົາຄວາມສຳເລັດມາໃຫ້ເຂົາເຈົ້າ. ໃຫ້ຊຸກຍູ້ສົ່ງເສີມໃຫ້ເຫັນເຖິງຄວາມພະຍາຍາມອີກ. ຢ່າລືມບອກນັກຮຽນວ່າ ເມື່ອລາວພະຍາຍາມເຮັດວຽກຍາກເທົ່າທີ່ທົນໄດ້, ທ່ານຈະມີຄວາມຍິນດີເພິ່ງພໍໃຈ. ຈົ່ງໃຫ້ນັກຮຽນຮູ້ສຶກວ່າ ທ່ານມີຄວາມສັດທາໃນຄວາມອາດສາມາດຂອງເຂົາເຈົ້າ.

## 3. ຂໍ້ແນະນຳພິເສດກ່ຽວກັບການສິດສອນໃນຫ້ອງຮຽນແບບສ້າງສັນ

ການປະຕິບັດວິໄນ ໃນທາງບວກຈຳເປັນຕ້ອງໄດ້ຮັບການສະໜັບສະໜູນຈາກການສິດສອນແບບທາງບວກ. ມີວິທີການທີ່ເປັນທາງບວກອີກຫຼາຍໆຢ່າງ ທີ່ທ່ານສາມາດປ້ອງກັນການປະພຶດທີ່ບໍ່ເໝາະສົມ ເມື່ອເວລາທ່ານສິດສອນ ຫຼື ຢ່າງໜ້ອຍກໍ່ເພື່ອຈັດການກັບການປະພຶດນັ້ນຢ່າງມີປະສິດທິຜົນ ແລະ ບໍ່ທຳລາຍບັນຍາກາດຂອງຫ້ອງຮຽນຂອງທ່ານ. ໃນຂ້າງລຸ່ມນີ້ມີຂໍ້ແນະນຳ 6 ຢ່າງ. ນອກເໜືອຈາກນີ້ທ່ານສາມາດຄົ້ນຄິດອັນໃດອີກໄດ້ບໍ່?

*1.) ໃຫ້ມີຈຸດສຸມ ແລະເວົ້າຈາຢ່າງນິ້ມນວນ.* ໃຫ້ມີຄວາມແນ່ໃຈວ່າທ່ານໄດ້ເອົາໃຈໃສ່ຕໍ່ທຸກໆຄົນຢູ່ໃນຫ້ອງຮຽນ ກ່ອນທ່ານຈະເລີ່ມຕົ້ນສອນບົດຮຽນຂອງທ່ານ. ໃຫ້ລໍຖ້າເພື່ອຈະເລີ່ມຕົ້ນສອນຈົນກວ່າທຸກຄົນໄດ້ມິດງຽບລົງ. ຄູສອນຜູ້ທີ່ມີປະສົບການຮູ້ຈັກວ່າ ຄວາມມິດງຽບໃນຕອນສອນບົດຮຽນແມ່ນພາກສ່ວນທີ່ມີປະສິດທິຜົນທີ່ສຸດ. ເຂົາເຈົ້າເນັ້ນໃສ່ການລໍຖ້າ ໂດຍຂະຫຍາຍມັນອອກໄປແຕ່ 3 ຫາ 5 ວິນາທີ ພາຍຫຼັງທີ່ຫ້ອງຮຽນໄດ້ມິດງຽບໄປແລ້ວ. ນັກຮຽນຈະສຳນຶກທັນໃດວ່າຫາກຄູສອນລໍຖ້າຄວາມຕັ້ງໃຈຂອງເຂົານານສ່ຳໃດ ເຂົາກໍຈະມີເວລາຫວ່າງໜ້ອຍ ໃນຕອນ

ທ້າຍຂອງຊົ່ວໂມງສອນ. ຫຼັງຈາກຊ່ວງລໍຖ້າແລ້ວ ໃຫ້ເລີ່ມຕົ້ນສອນບົດຮຽນໂດຍນຳໃຊ້ສຽງຄ່ອຍກວ່າສຽງທຳມະດາ. ຄູສອນຜູ້ທີ່ເວົ້າຈານີ້ມນວນຈະມີຫ້ອງຮຽນທີ່ສະຫງົບ ແລະ ມິດງຽບກວ່າຫ້ອງອື່ນທີ່ຄູໃຊ້ສຽງດັງແຮງ. ນັກຮຽນຂອງຄູຜູ້ນັ້ນຈະນັ່ງນິ້ງເພື່ອຈະໄດ້ຍິນສຽງຄູເວົ້າ.

*2.) ໃຫ້ຄຳແນະນຳໂດຍກົງ.* ຄວາມບໍ່ແນ່ນອນຈະເພີ່ມລະດັບຂອງຄວາມຕື່ນເຕັ້ນຢູ່ໃນຫ້ອງຮຽນ. ຄວນເລີ່ມຕົ້ນການສອນໃນແຕ່ລະຫ້ອງ ດ້ວຍການບອກນັກຮຽນຂອງທ່ານໂດຍກົງເລີຍວ່າ ຈະມີຫຍັງເກີດຂຶ້ນ.ໃຫ້ສະເໜີໂດຍສັງເຂບວ່າອັນໃດທີ່ທ່ານ ແລະ ນັກຮຽນຂອງທ່ານຈະເຮັດໃນຊ່ວງເວລານັ້ນ. ທ່ານສາມາດຕັ້ງກອບເວລາສຳລັບກິດຈະກຳບາງຢ່າງ. ທ່ານສາມາດປະສົມປະສານການໃຫ້ຄຳແນະນຳໂດຍກົງກັບ ການເນັ້ນເພື່ອລວມເອົາເວລາໃນຕອນທ້າຍຂອງຊ່ວງເວລາດັ່ງກ່າວ ສຳລັບນັກຮຽນ ເພື່ອທີ່ຈະເຮັດກິດຈະກຳຕາມທີ່ເຂົາເຈົ້າເລືອກເອົາ. ທ່ານອາດຈະສິ້ນສຸດການພັນລະນາກິດຈະກຳຂອງຫ້ອງຮຽນດ້ວຍການເວົ້າວ່າ "ຄູຄິດວ່າ ພວກເຮົາຈະມີເວລາຈຳນວນໜຶ່ງໃນຕອນທ້າຍຂອງກິດຈະກຳເພື່ອໃຫ້ພວກນ້ອງໄດ້ລົມກັບໝູ່ເພື່ອນ, ໄປຫ້ອງສະໝຸດ ຫຼື ເຮັດວຽກໃຫ້ທັນກັບຫ້ອງອື່ນໆ".

*3.) ການຊຸກຍູ້ຕິດຕາມ ແລະ ຊ່ອຍເຫຼືອ.* ໃຫ້ຍ່າງວົນວຽນໄປມາ; ໃຫ້ລຸກຂຶ້ນແລ້ວຍ່າງອ້ອມຮອບໄປຕາມຫ້ອງຮຽນ, ໂດຍສະເພາະໃນເວລານັກຮຽນກຳລັງເຮັດບົດເຝິກຫັດພາກຂຽນ ຫຼື ເຮັດວຽກເປັນກຸ່ມ. ໃຫ້ກວດເບິ່ງຄວາມຄືບໜ້າຂອງການເຮັດວຽກຂອງເຂົາ. ຢ່າຂັດຈັງຫວະ ຫຼື ພະຍາຍາມປະກາດແບບທົ່ວໄປ ເວັ້ນເສຍແຕ່ວ່າ ທ່ານສັງເກດເຫັນວ່ານັກຮຽນຫຼາຍໆຄົນພົບບັນຫາຫຍຸ້ງຍາກແບບດຽວກັນ. ໃຫ້ໃຊ້ສຽງທີ່ຄ່ອຍໆ ແລະ ນັກຮຽນຈະຮູ້ສຶກຊາບຊຶ້ງຕໍ່ການເອົາໃຈໃສ່ແບບສ່ວນຕົວ ແລະ ໃນທາງທີ່ດີຂອງທ່ານ.

*4.) ການໃຊ້ສັນຍານແບບບໍ່ເວົ້າຈາ.* ຢູ່ໃນບາງຫ້ອງຮຽນ ຄູສອນມີກະດິງນ້ອຍຢູ່ເທິງໜ້າໂຕະຂອງເພິ່ນ. ເມື່ອຄູສັ່ນກະດິງເຖິງວ່າຈະສັ່ນຄ່ອຍໆ ແຕ່ກໍຈະເຮັດໃຫ້ທຸກໆຄົນຕັ້ງໃຈ. ຄູສອນບາງຄົນໄດ້ສະແດງໃຫ້ເຫັນເຖິງວິທີການທີ່ສະຫຼາດຫຼາຍຢ່າງ ໃນຫຼາຍປີຜ່ານມາໃນການນຳໃຊ້ປະໂຫຍດຈາກສັນຍານແບບບໍ່ຕ້ອງເວົ້າຢູ່ໃນຫ້ອງຮຽນ.ຄູບາງຄົນຈະໃຊ້ວິທີເປີດ-ປິດສະວິດໄຟແບບໄວໆ, ບາງຄົນເອົາກະດິ່ງໄວ້ຢູ່ໃນຖົງໂສ້ງ, ບາງຄົນເຄາະກະດານດ້ວຍສໍຂາວ ຫຼື ສໍດຳ. ສັນຍານແບບບໍ່ປາກເວົ້າ ຍັງສາມາດສະແດງອອກທາງໃບໜ້າ, ທ່າທາງຂອງຮ່າງກາຍ ແລະ ສັນຍານມື. ຄວນເອົາໃຈໃສ່ຄັດເລືອກປະເພດຂອງສັນຍານ-ທ່າທາງທີ່ທ່ານໃຊ້ຢູ່ໃນຫ້ອງຮຽນ. ຄວນໃຊ້ເວລາ ເພື່ອອະທິບາຍສິ່ງທີ່ທ່ານຕ້ອງການ ໃຫ້ນັກຮຽນເຮັດໃນເວລາທ່ານໃຊ້ສັນຍານ-ທ່າທາງ.

*5.) ການແລກປ່ຽນ.* ບໍ່ມີພຽງແຕ່ທ່ານເທົ່ານັ້ນ ທີ່ຕ້ອງການຢາກຮູ້ກ່ຽວກັບນັກຮຽນຂອງທ່ານເອງ ພວກເຂົາກໍຕ້ອງການຢາກຮູ້ກ່ຽວກັບຕົວທ່ານ ແລະ ຄວາມສົນໃຈຂອງທ່ານເຊັ່ນດຽວກັນ. ໃຫ້ບັນ

ຈຸເອົາບັນດາສິ່ງຂອງສ່ວນຕົວເຂົ້າໃນຫ້ອງຮຽນຂອງທ່ານ. ຮູບຄອບຄົວ ຫຼື ສິ່ງຕ່າງໆຂອງງານອະດິເລກ ຫຼື ຂອງສະສົມຕ່າງໆທີ່ຢູ່ເທິງໂຕະຂອງທ່ານນັ້ນຈະເປັນຕົ້ນເຫດ ໃຫ້ມີການສົນທະນາສ່ວນຕົວກັບນັກຮຽນ. ເມື່ອເຂົາເຈົ້າຮູ້ຈັກທ່ານດີຂຶ້ນ ທ່ານກໍຈະເຫັນເລີຍວ່າ ບັນຫາຂອງການໃສ່ວິໄນຈະໜ້ອຍລົງ.

*6.) ການແຊກແຊງຄວາມເອົາໃຈໃສ່ຕໍ່າ.* ຄູສອນທີ່ມີປະສິດທິພາບຈະດູແລເອົາໃຈໃສ່ເລື່ອງທີ່ວ່ານັກຮຽນຈະບໍ່ຖືກຍ້ອງຍໍ ສໍາລັບການປະພຶດທີ່ບໍ່ເໝາະສົມ ເພື່ອໃຫ້ກາຍເປັນຈຸດສົນໃຈ. ຄູສອນດັ່ງກ່າວຈະຕິດຕາມກຳກັບກິດຈະກຳຢູ່ໃນຫ້ອງ ໂດຍການເຄື່ອນໄຫວໄປມາຮອບຫ້ອງຮຽນ ແລະຄາດຄະເນໄດ້ບັນຫາຕ່າງໆ ກ່ອນມັນຈະເກີດຂຶ້ນ. ວິທີການປະຕິບັດຕໍ່ນັກຮຽນຜູ້ປະພຶດບໍ່ເໝາະສົມນັ້ນ ແມ່ນເຮັດແບບງຽບໆບໍ່ໃຫ້ເປັນທີ່ສັງເກດເຫັນ. ນັກຮຽນຜູ້ອື່ນໆໃນຫ້ອງຮຽນຈະບໍ່ໄດ້ຖືກລົບກວນ. ຕົວຢ່າງ ຂະນະທີ່ພວມສອນບົດຮຽນໃນຫ້ອງ, ຄູສອນຈະໃຊ້ປະໂຫຍດຈາກວິທີການເອີ້ນຊື່ນັກຮຽນ. ຖ້າຫາກເຫັນນັກຮຽນເວົ້າລົມ ຫຼື ບໍ່ຕັ້ງໃຈມີສ່ວນຮ່ວມ, ຄູສອນກໍພຽງແຕ່ເວົ້າຊື່ນັກຮຽນຜູ້ທີ່ພວມລົມກັນຢູ່ແບບທຳມະຊາດໄປເລີຍ ເຊັ່ນ "ເຈົ້າເຫັນບໍ່, ທ້າວໄຈ, ພວກເຮົາເອົາອັນໜຶ່ງມາໃສ່ໃນຖົງທີສິບ "ໃນເມື່ອ ທ້າວໄຈ ໄດ້ຍິນຊື່ຕົນເອງ ກໍຈະເຮັດໃຫ້ລາວກັບຄືນມາສູ່ກິດຈະກຳ ແລະ ນັກຮຽນຜູ້ອື່ນໆຈະບໍ່ສັງເກດເຫັນພິລຸດຫຍັງໝົດ.

## 4. ການນຳໃຊ້ຜົນຮັບທີ່ຕາມມາທີ່ເໝາະສົມ, ທັງທີ່ເປັນທາງບວກ ແລະ ທາງລົບ

ດ້ານທີ່ສຳຄັນຂອງການຮຽນຮູ້ ແມ່ນການໄດ້ປະສົບການຈາກຜົນໄດ້ຮັບທີ່ຕາມມາຂອງການກະທຳຂອງພວກເຮົາ. ຖ້າຜົນໄດ້ຮັບທີ່ຕາມມານັ້ນດີ ພວກເຮົາກໍສາມາດປະພຶດຄືນໄດ້ອີກ. ແຕ່ຖ້າຫາກວ່າຜົນໄດ້ຮັບທີ່ຕາມມານັ້ນບໍ່ດີ ພວກເຮົາກໍບໍ່ຄວນປະພຶດແບບນັ້ນອີກ.

***ຜົນຮັບທີ່ຕາມມາດ້ານບວກ.*** ຢູ່ໃນບັນດາຫ້ອງຮຽນ, ຜົນຮັບທີ່ຕາມມາດ້ານບວກໂດຍທົ່ວໄປທີ່ສຸດ ຈະລວມສູນຢູ່ທີ່ຄວາມພໍໃຈຂອງນັກຮຽນ ແລະ ການສ້າງຄວາມເຊື່ອໝັ້ນ ແລະຄວາມພາກພູມໃຈໃນຕົນເອງຂອງນັກຮຽນ. ນັກຮຽນຈຳເປັນຕ້ອງຮູ້ ແລະ ຖືກຊົມເຊີຍ ສຳລັບການປະພຶດຕາມກົດລະບຽບ ກໍຄືເພື່ອຜົນສຳເລັດ ແລະ ຄວາມສຳເລັດຜົນໃນການຮ່ຳຮຽນ. ມີຫຼາຍວິທີການງ່າຍໆເພື່ອຍ້ອງຍໍນັກຮຽນ ເຊັ່ນ ລູບບ່າ ແລະ ເວົ້າວ່າ "ຄູພູມໃຈໃນຕົວນ້ອງ", ການເລືອກຫົວໜ້າຫ້ອງປະຈຳວັນ, ການເລືອກໃຫ້ ເປັນ "ຜູ້ຊ່ອຍຄູ" ສຳລັບແຕ່ລະມື້, ຜູ້ຄັດເລືອກກິດຈະກຳກຸ່ມ ຫຼື ໂຄງການ, ການຍ້ອງຍໍຊົມເຊີຍນັກຮຽນຕໍ່ໜ້າຄູສອນຜູ້ອື່ນໆ ຫຼື ຕໍ່ໜ້າອຳນວຍການໂຮງຮຽນ, ຫຼື ຂໍໃຫ້ນັກຮຽນຊ່ອຍເຫຼືອຜູ້ອື່ນໆ. ທ່ານສາມາດຄົ້ນຄິດວິທີອື່ນໆ ອີກທີ່ອາດສາມາດເຮັດຢູ່ໃນຫ້ອງຮຽນໄດ້ອີກບໍ່?

***ຜົນຮັບທີ່ຕາມມາດ້ານລົບ.*** ໃຫ້ຕິດຕາມກວດກາຕົວທ່ານເອງ ກໍຄືຕິດຕາມກວດການັກຮຽນຂອງທ່ານ. ການນໍາໃຊ້ຜົນຮັບທີ່ຕາມມາດ້ານລົບເລື້ອຍໆ ຈະສະທ້ອນໃຫ້ເຫັນການຄຸ້ມຄອງຫ້ອງຮຽນທີ່ບໍ່ດີ ແລະ ໂດຍທົ່ວໄປແລ້ວຄວນຫລີກເວັ້ນ. ໃຫ້ຕິດຕາມນັກຮຽນຂອງທ່ານດ້ວຍຄວາມລະມັດລະວັງ ແລະ ເຮັດເປັນປະຈໍາ ເພື່ອໃຫ້ທ່ານສາມາດປ້ອງກັນການປະພຶດທີ່ບໍ່ເໝາະສົມກ່ອນທີ່ມັນຈະກາຍເປັນບັນຫາໃຫຍ່ ແລະ ອາດຈະກ່ຽວເອົານັກຮຽນຫຼາຍໆຄົນເຂົ້າມາ. ເພື່ອຍຸດຕິການປະພຶດທີ່ບໍ່ເໝາະສົມ ແບບບໍ່ໃຫ້ລົບກວນການ ເພື່ອວ່າທ່ານຈະບໍ່ລົບກວນການສອນຂອງທ່ານ ຫຼື ຮ້ອງຂໍຄວາມເອົາໃຈໃສ່ເກີນຂອບເຂດຂອງນັກຮຽນນັ້ນ, ໃຫ້ທ່ານພະຍາຍາມ (ກ) ເຂົ້າໄປໃກ້ນັກຮຽນຜູ້ກະທໍາຜິດ, ເຮັດການສໍາຜັດສາຍຕາ ແລະ ໃຫ້ສັນຍານແບບບໍ່ປາກເວົ້າ ເພື່ອຍຸດຕິການປະພຶດທີ່ບໍ່ເໝາະສົມ, (ຂ) ເອີ້ນຊື່ນັກຮຽນ ຫຼື ໃຫ້ຄໍາແນະນໍາສັ້ນໆ ເພື່ອຍຸດຕິການປະພຶດທີ່ບໍ່ເໝາະສົມ, (ຄ) ແນະນໍາການປະພຶດທີ່ເໝາະສົມໃຫ້ນັກຮຽນຄືນອີກ ໂດຍຢໍ້າໃຫ້ເຫັນສິ່ງທີ່ນັກຮຽນຄວນເຮັດ (ຢ່າໃຊ້ຄໍາສັ່ງ "ຢ່າ") , ແລະ ໃຫ້ເລົ່າຄືນກົດລະບຽບທີ່ເຂົາເຈົ້າຄວນປະຕິບັດຕາມ.

ເຖິງວ່າພວກເຮົາຈະໃຊ້ຄວາມພະຍາຍາມຢ່າງສຸດຂີດແລ້ວກໍຕາມ, ແຕ່ບາງຄັ້ງມັນກໍຈໍາເປັນຕ້ອງປະຕິບັດວິໄນນັກຮຽນ. ຕ້ອງແນ່ໃຈວ່າການກະທໍາຂອງຄູນັ້ນ ແມ່ນເລັງໃສ່ສະກັດກັ້ນພຶດຕິກໍາທີ່ບໍ່ຖືກຕ້ອງຂອງນັກຮຽນ ບໍ່ແມ່ນເລັງໃສ່ຕົວນັກຮຽນ, ມັນແມ່ນຜົນຮັບເນື່ອງຈາກການກະທໍາຜິດທີ່ມີເຫດຜົນ, ແລະ ຄູບໍ່ຄວນປະຕິບັດດ້ວຍຄວາມເຮັ່ງຮີບ ຫຼື ດ້ວຍຄວາມຢາກຮ້າຍ. ໂດຍຂຶ້ນກັບທໍາມະຊາດຂອງການປະພຶດທີ່ບໍ່ເໝາະສົມນັ້ນ, ບາງວິທີການຂອງການປະຕິບັດວິໄນແບບເບົາໆ ອາດສາມາດປະຕິບັດດ້ວຍວິທີດັ່ງທີ່ຂຽນຢູ່ຂ້າງລຸ່ມນີ້. ແຕ່ຕ້ອງຮັບປະກັນວ່າທ່ານບໍ່ໄດ້ເລືອກການລົງໂທດແບບເຮັດໃຫ້ອັບອາຍຂາຍໜ້າຕໍ່ສາທາລະນະຊົນ!

- ບໍ່ໃຫ້ພັກຜ່ອນຍາມເລີກຫຼິ້ນ ຫຼື ບໍ່ໃຫ້ຫຼິ້ນກັບໃຜເລີຍ.
- ຖ່ວງເວລາໄວ້ ຫຼັງຈາກເລີກໂຮງຮຽນ ເພື່ອສົນທະນາການປະພຶດຜິດ, ເປັນຫຍັງມັນຈຶ່ງເກີດຂຶ້ນ ແລະ ຄວນຈະເຮັດແນວໃດ ເພື່ອແກ້ໄຂໃຫ້ຖືກຕ້ອງ.
- ໃຫ້ປັດເປົ່າຄວາມຫຍຸ້ງເຫຍີ່ງອອກໄປ.
- ນັກຮຽນສະແດງຄວາມຂໍໂທດນໍານັກຮຽນຜູ້ທີ່ຖືກໝູ່ກະທໍາຜິດຕໍ່.
- ປ່ຽນບ່ອນນັ່ງປະຈໍາ.
- ຂໍໃຫ້ນັກຮຽນເລົ່າກົດລະບຽບຄືນ ແລະປະຕິບັດຕາມກົດລະບຽບ.
- ແຈ້ງການໄປຫາຜູ້ປົກຄອງ ຫຼື ໄປຢ້ຽມຢາມເຮືອນຂອງນັກຮຽນ.
- ເອົາໄປຫາຫົວໜ້າໂຮງຮຽນ, ໂດຍສະເພາະ ເມື່ອມີການປະພຶດທີ່ມີລັກສະນະຮ້າຍແຮງ, ລັກສະນະທໍາລາຍເຊັ່ນຕີກັນ, ລົບກວນຊົ່ວໂມງສອນຢ່າງຕໍ່ເນື່ອງ, ຂີ້ລັກ, ອັນຕະພານ, ຄອບຄອງຢາເສບຕິດ ຫຼື ຄອບຄອງສານທີ່ຕ້ອງຫ້າມ ແລະ ຄອບຄອງອາວຸດສົງຄາມ.

## 5. ຄວາມຮອບຄອບໃນການໃຊ້ການຢັບຢັ້ງນັກຮຽນ " TIME OUT "

ມີວິທີການປະຕິບັດວິໄນອັນໜຶ່ງທີ່ນິຍົມປະຕິບັດ ແລະ ໄດ້ມີການໂຕ້ຖຽງກັນເຊິ່ງເປັນທີ່ຮູ້ກັນດີ ກໍຄືວິທີການ "Time out" ໃນໄລຍະ Time out ນີ້, ນັກຮຽນຕ້ອງນັ່ງຢູ່ໃນບ່ອນໃດບ່ອນໜຶ່ງ ແລະ ບໍ່ໃຫ້ຫລິ້ນ ແລະ ບໍ່ອະນຸຍາດໃຫ້ເວົ້າລົມກັບຜູ້ອື່ນໆ. ມີແຕ່ໃຫ້ເບິ່ງໂມງຈົນກວ່າເຂັມວິນາທີຂອງແຕ່ລະນາທີໄດ້ຜ່ານໄປ.

Time out ບໍ່ຄວນເປັນທາງເລືອກອັນທີ່ໜຶ່ງ ແຕ່ວ່າເປັນເຕັກນິກສຸດທ້າຍ ເມື່ອເວລາບໍ່ມີວິທີອື່ນອີກແລ້ວ ທີ່ຈະປະຕິບັດກັບນັກຮຽນຜູ້ທີ່ສ້າງຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ຫຼື ຕົກຢູ່ໃນອັນຕະລາຍຂອງການສ້າງຄວາມເສຍຫາຍໃຫ້ແກ່ເຂົາເອງ. ບໍ່ຄວນນຳໃຊ້ເລື້ອຍ ແລະ ກໍເຮັດໃນເວລາສັ້ນໆ. ວິທີການ Time out ອາດໃຫ້ໂອກາດແກ່ນັກຮຽນມິດງຽບລົງ ແລະ ກັບມາຄວບຄຸມຕົນເອງໄດ້ພາຍຫລັງສ້າງສະຖານະການທີ່ເສຍຫາຍ. ການໃຊ້ວິທີ Time out ເລື້ອຍໆແມ່ນບໍ່ເໝາະສົມ, Time out ບໍ່ພຽງແຕ່ບໍ່ມີປະສິດທິຜົນເທົ່ານັ້ນ ແຕ່ຈະສ້າງຄວາມເສຍຫາຍໃຫ້ແກ່ນັກຮຽນ ເຊັ່ນ ເພີ່ມຄວາມໂກດເຄືອງ ແລະ ມີຄວາມຮຸນແຮງຫຼາຍກວ່າຈະຄວບຄຸມຄວາມຮຸນແຮງນຳໃຊ້ Time out ໃນຮູບແບບຂອງການລົງໂທດທາງດ້ານຮ່າງກາຍ ເພື່ອເຮັດໃຫ້ມີການເຈັບປວດທາງດ້ານອາລົມຈິດ. ຈະໃຊ້ເວລາດົນປານໃດ ສຳລັບເຮັດ Time out, ອັນນີ້ຍັງເປັນຈຸດຖົກຖຽງກັນຢູ່. ມີຊ່ຽວຊານຈຳນວນໜຶ່ງເວົ້າວ່າບໍ່ເກີນສອງ ຫຼື ສາມນາທີ, ໃນຂະນະຜູ້ທີ່ອື່ນໆມີຄຳເຫັນວ່າເອົາຕາມອາຍຸຂອງນັກຮຽນ ໂດຍເອົາໜຶ່ງນາທີສຳລັບປີໜຶ່ງ, ຈົນຮອດສິບສອງປີ. ໄດ້ຕົກລົງນຳໃຊ້ໜຶ່ງນາທີຕໍ່ອາຍຸປີໜຶ່ງ ໂດຍການພິສູດ ແລະ ເບິ່ງຂໍ້ຜິດພາດ. ປາກົດວ່າພຽງພໍເພື່ອໄດ້ຮັບຜົນສຳເລັດຂອງການປະພຶດແນວດີ ໂດຍປາສະຈາກຄວາມຮູ້ສຶກແຄ້ນເຄືອງ. ກ່ອນທ່ານຈະໃຫ້ Time out ແກ່ນັກຮຽນ, ໃຫ້ມີຄວາມແນ່ໃຈໃນສິ່ງຕໍ່ໄປນີ້.

- ❖ ໃຫ້ຫລີກລ່ຽງການນຳໃຊ້ timeout ກັບນັກຮຽນທີ່ຍັງນ້ອຍທຸກຄົນຊຶ່ງເປັນຜູ້ທີ່ບໍ່ຄວນແຍກເຂົາເຈົ້າອອກໃຫ້ຢູ່ໂດດດ່ຽວ ຫຼື ປ່ອຍໃຫ້ເຂົາເຈົ້າໄປ ໂດຍບໍ່ມີການກະຕຸກຊຸກຍູ້ໃດໆ.
- ❖ ຜົນໄດ້ຮັບທີ່ຕາມມາຄວນເປັນໄປຕາມການປະພຶດຂອງນັກຮຽນຢ່າງທັນທີທັນໃດ. ເມື່ອເວລານັກຮຽນເຫັນຜົນທີ່ຕາມມາທັນທີທັນໃດ ຍ້ອນການເຮັດໃຫ້ຜູ້ອື່ນເສຍຫາຍ, ເຂົາເຈົ້າເຂົ້າໃຈຢ່າງຈະແຈ້ງກວ່າເກົ່າ ວ່າເປັນຫຍັງທ່ານຈຶ່ງປະຕິບັດວິໄນເຂົາເຈົ້າ. ເວລາໃດກໍໄດ້ທີ່ເປັນໄປໄດ້, ທ່ານຄວນໃຫ້ທາງເລືອກອັນດີແກ່ນັກຮຽນ ເພື່ອໃຫ້ເຂົາເຈົ້າປະຕິບັດ (ບອກນັກຮຽນໃຫ້ຈັດການກັບຄວາມຫຍຸ້ງເຫຍີງທີ່ເຂົາເຈົ້າໄດ້ສ້າງມັນຂຶ້ນມາ, ເປັນສິ່ງທີ່ສ້າງສັນກວ່າວິທີທີ່ຍ້າຍເຂົາອອກ ໄປຈາກສະຖານທີ່ໄປຕະຫລອດ).
- ❖ Timeout ບໍ່ຄວນເຮັດໃຫ້ນັກຮຽນມີຄວາມຮູ້ສຶກຖືກຂູ່ເຂັນ ຫຼື ມີຄວາມຢ້ານກົວ. ບໍ່ຄວນໃຊ້ຕັ່ງອີ້ ຫຼື ບ່ອນພິເສດສຳລັບເຮັດ Time out ຍ້ອນວ່າສິ່ງນີ້ ຈະບັງຄັບແນວຄິດທີ່ວ່າ Time out ແມ່ນການລົງໂທດ ແລະ ອາດເປັນສາເຫດໃຫ້ມີພາລະຫ່ວງໄຍເກີນຄວນ. ທ່ານບໍ່ຄວນເຮັດໃຫ້ນັກຮຽນມີຄວາມຮູ້ສຶກຖືກເຢາະເຢີ້ຍ ຫຼື ຖືກໂດດດ່ຽວຈັກເທື່ອໃນໄລຍະ ເວລາເຮັດ Time out.

- ບໍ່ຄວນປະໃຫ້ນັກຮຽນຢູ່ພຽງຜູ້ດຽວ ເວັ້ນເສຍແຕ່ວ່າເຂົາເຈົ້າມີຄວາມຕ້ອງການຢາກຢູ່ຜູ້ດຽວ. ນັກຮຽນໂດຍສະເພາະແມ່ນນັກຮຽນຜູ້ທີ່ຍັງນ້ອຍ ທີ່ມີຄວາມຕ້ອງການການຊ່ອຍເຫຼືອຈາກຜູ້ໃຫຍ່ ເພື່ອຊ່ອຍໃຫ້ເຂົາເຈົ້າມີຄວາມຮູ້ສຶກທີ່ດີ. ຖ້າຫາກທ່ານສະແດງໃຫ້ນັກຮຽນຂອງທ່ານເຫັນວ່າຄວາມຮູ້ສຶກ ຂອງເຂົາເຈົ້າໄດ້ຮັບຄວາມເອົາໃຈໃສ່, ເຂົາເຈົ້າກໍຈະນັບຖືຄວາມຮູ້ສຶກຂອງຜູ້ອື່ນຫຼາຍຂຶ້ນ.
- Timeout ບໍ່ຄວນແກ່ຍາວເວລາຈົນກວ່າເວລານັກຮຽນມິດງຽບລົງ. ພາຍຫຼັງນັກຮຽນມິດງຽບລົງແລ້ວໃຫ້ອະທິບາຍຢ່າງຈະແຈ້ງວ່າການປະພຶດອັນໃດທີ່ເໝາະສົມ ແລະ ບໍ່ເໝາະສົມ. ຈະຕ້ອງໃຫ້ມີຄວາມກະຈ່າງແຈ້ງຕໍ່ນັກຮຽນວ່າ ເປັນຫຍັງທ່ານຈຶ່ງໄດ້ໃສ່ວິໄນເຂົາເຈົ້າ, ຖ້າບໍ່ດັ່ງນັ້ນ, ນັກຮຽນມັກຈະເຮັດການປະພຶດທີ່ບໍ່ເພິ່ງປາຖະນາຄືນອີກ.
- ໃຫ້ຫຼີກເວັ້ນການຂູ່ເຂັນ. ຢ່າໄດ້ເວົ້າຈັກເທື່ອ “ຖ້າເຈົ້າເຮັດຄືນອີກ, ເຈົ້າຈະໄດ້ຮັບ Time out”. ອັນນີ້ມັນຈະສ້າງຄວາມສັບສົນໃຫ້ແກ່ນັກຮຽນ ແລະ ຈະເປັນຮູບແບບການລົງໂທດໃນທາງລົບ ແລະ ບໍ່ຄ່ອຍມີປະສິດທິຜົນ.
- ໃຫ້ປັບປຸງວິທີການໃສ່ວິໄນຕໍ່ນັກຮຽນເປັນລາຍບຸກຄົນ. ເດັກພັດທະນາຄວາມອາດສາມາດຂອງເຂົາເຈົ້າ ເພື່ອຄວບຄຸມເຂົາເຈົ້າໃນອັດຕາສ່ວນແຕກຕ່າງກັນ. ໃຫ້ເອົາໃຈໃສ່ຄວາມຕ້ອງການສະເພາະໃດໜຶ່ງຂອງນັກຮຽນ. ບໍ່ມີເຕັກນິກອັນໜຶ່ງອັນດຽວຈະໃຊ້ໄດ້ກັບເດັກທຸກຄົນໃນທຸກໆເວລາ.Timeoutບໍ່ແມ່ນນໍາໃຊ້ເພື່ອເຮັດການລົງໂທດ. Time out ແມ່ນໂອກາດສໍາລັບນັກຮຽນ ເພື່ອແກ້ໄຂແນວຄິດຈິດໃຈຂອງເຂົາ ແລະ ເຂົ້າຮ່ວມຢູ່ໃນກຸ່ມ ຫຼື ກິດຈະກໍາຄືນອີກໃນວິທີທີ່ໄດ້ຜົນຜະລິດດີຂຶ້ນ. ໄດ້ສິດສອນນັກຮຽນໃຫ້ຮູ້ແກ້ບັນຫາຂອງເຂົາເອງແນວໃດ ດ້ວຍຄວາມເອົາໃຈໃສ່ ແລະ ການຊ່ອຍເຫຼືອ ແລະ Time out ອາດຈະບໍ່ຈໍາເປັນອີກຕໍ່ໄປ.

## 6. ການແກ້ໄຂຂໍ້ຂັດແຍ່ງ

ເຖິງວ່າທ່ານກໍຄືນັກຮຽນ ແລະ ຜູ້ປົກຄອງໄດ້ໃຊ້ຄວາມພະຍາຍາມແລ້ວກໍຕາມ, ການລົບກວນການທໍາລາຍກໍ່ກວນຫຼາຍຢ່າງຢູ່ໃນສະພາບແວດລ້ອມຫ້ອງຮຽນ ແລະ ໂຮງຮຽນກໍຍັງຈະເກີດຂຶ້ນຈາກຄວາມຂັດແຍ່ງຂອງນັກຮຽນ. ປະເດັນນີ້ຖືວ່າເປັນເຫດຜົນທົ່ວໄປທີ່ຕ້ອງໄດ້ຈັດກອງປະຊຸມຜູ້ປົກຄອງ-ຄູສອນ (ເຖິງແມ່ນວ່າມັນຈະເປັນພາຫານະພຽງອັນດຽວ). ຂໍ້ຂັດແຍ່ງນີ້ ອາດຈະເປັນຮູບແບບຂອງການດູໝິ່ນປະໝາດ, ຫລອກລໍ້, ຕີກັນ, ບັນຫາແກ້ແຄ້ນຄືນ, ຂໍ້ຂັດແຍ່ງກ່ຽວກັບການຍາດບ່ອນຫຼິ້ນ, ການຢາກເຂົ້າເຖິງ ຫຼື ຢາກຄອບຄອງວັດຖຸ-ອຸປະກອນ ລວມທັງເລື່ອງວິຊາການ-ການຮໍ່າຮຽນ. ຄວາມຂັດແຍ່ງເຫຼົ່ານີ້ ເກີດມີຂຶ້ນຈາກການອັນຕະພານ, ຂໍ້ຂັດແຍ່ງເຫຼົ່ານີ້ຈະເກີດຂຶ້ນ ໂດຍສະເພາະຈາກການຂົ່ມເຫັງລັງແກ ແລະ ຂະຫຍາຍອອກຢ່າງວ່ອງໄວ ຖ້າຫາກບໍ່ໄດ້ຮັບການເຈລະຈາ ຫຼື ບໍ່ມີການໄກ່ເກ່ຍ.

ແນວທາງທີ່ດີເພື່ອຫຼຸດຜ່ອນການລົບກວນທຳລາຍ ແລະ ການປະພຶດທີ່ບໍ່ເໝາະສົມໃຫ້ໜ້ອຍລົງ ແມ່ນການສອນນັກຮຽນໃຫ້ຮູ້ວ່າຈະແກ້ໄຂຂໍ້ຂັດແຍ່ງຂອງເຂົາເຈົ້າເອງແນວໃດ. ພ້ອມກັນນີ້ກໍແກ້ໄຂບັນຫາການຄຸ້ມຄອງຫ້ອງຮຽນ, ວິທີການນີ້ ຈະສອນທັກສະທີ່ເປັນປະໂຫຍດໃຫ້ແກ່ນັກຮຽນເຊິ່ງຈະເອົາໄປໃຊ້ຢູ່ນອກຫ້ອງຮຽນ.

**ການວິໄຈກ່ຽວກັບ ການແກ້ໄຂຄວາມຂັດແຍ່ງໃນໝູ່ນັກຮຽນໄດ້ຊີ້ໃຫ້ເຫັນຈຸດສຳຄັນ ດັ່ງຕໍ່ໄປນີ້.**

(ກ) ຄວາມຂັດແຍ່ງໃນໝູ່ນັກຮຽນເກີດຂຶ້ນເລື້ອຍໆຢູ່ໃນໂຮງຮຽນ(ເຖິງວ່າຄວາມຂັດແຍ່ງຈະມີຜົນໃຫ້ ເກີດການບາດເຈັບໜັກໜ້ອຍຄັ້ງກໍຕາມ).

(ຂ) ນັກຮຽນທີ່ບໍ່ໄດ້ຮັບການເຝິກອົບຮົມ ໂດຍປົກກະຕິຈະຍຸດທະສາດຄວາມຂັດແຍ່ງ ເພື່ອເຮັດໃຫ້ມີການທຳລາຍລົບກວນ, ແລະ ນັກຮຽນເຫຼົ່ານີ້ຈະບໍ່ສົນໃຈເລື່ອງຄວາມສຳພັນກັບຜູ້ອື່ນໆທີ່ດຳເນີນໄປຢູ່ນັ້ນ.

(ຄ) ແຜນງານການແກ້ໄຂຄວາມຂັດແຍ່ງ ແລະ ການໄກ່ເກ່ຍຂອງໝູ່ເພື່ອນດ້ວຍກັນ ເຫັນວ່າມີປະສິດທິຜົນຢູ່ໃນການສິດສອນນັກຮຽນ ໃຫ້ມີທັກສະການເຈລະຈາແບບບູລະນາການ ແລະ ທັກ ສະການໄກ່ເກ່ຍ.

(ງ) ຫຼັງຈາກການເຝິກອົບຮົມ, ນັກຮຽນມີທ່າອ່ຽງນຳໃຊ້ທັກສະນະການເຈລະຈາຄວາມຂັດແຍ່ງເຫຼົ່ານີ້ ເຊິ່ງພາໃຫ້ມີຜົນໄດ້ຮັບທີ່ສ້າງສັນ.

(ຈ) ຜົນສຳເລັດຂອງນັກຮຽນໃນການແກ້ໄຂຂໍ້ຂັດແຍ່ງ ຈະມີທ່າອ່ຽງຫຼຸດຜ່ອນຈຳນວນຂໍ້ຂັດແຍ່ງລະຫວ່າງນັກຮຽນ-ນັກຮຽນເຊິ່ງເຮັດໃຫ້ຄູສອນ ແລະ ຜູ້ບໍລິຫານໂຮງຮຽນຫຼຸດຜ່ອນຄວາມຈຳເປັນໃນການໃຊ້ລະບຽບວິໄນອັນເຄັ່ງຄັດ.

**ຂະບວນການພື້ນຖານ ເພື່ອສິດສອນນັກຮຽນຂອງທ່ານໃຫ້ເປັນຜູ້ມີຄວາມປະນີປະນອມມີຢູ່ 3 ບາດກ້າວຄື :**

1. ສອນທັກສະນະດ້ານການເຈລະຈາໃຫ້ນັກຮຽນ ທີ່ເຮັດໃຫ້ເຂົາເຈົ້າສາມາດ:

(ກ). ກຳນົດຂໍ້ຂັດແຍ່ງຂອງເຂົາເຈົ້າໄດ້ (ພວກເຮົາຖົກຖຽງກັນກ່ຽວກັບອັນໃດ? ປະເດັນນີ້ໄດ້ເກີດຂຶ້ນແນວໃດ ແລະ ຍ້ອນຫຍັງ ?).

(ຂ). ແລກປ່ຽນທັດສະນະ ແລະຂໍ້ສະເໜີ ( “ຂ້ອຍຄິດວ່າມັນຄວນເປັນແນວນີ້ຍ້ອນວ່າ...” ).

(ຄ). ເບິ່ງສະຖານະການຈາກແນວຄວາມຄິດທັງສອງຝ່າຍສອງມຸມ(ໂດຍຜ່ານການສະແດງບົດບາດ ສົມມຸດ).

(ງ). ຕົກລົງເອົາທາງເລືອກທີ່ນັກຮຽນທັງສອງຮັບ (ວິທີແກ້ໄຂແບບທຸກຝ່າຍຊະນະ “ຊະນະ-ຊະນະ”ເຊັ່ນພວກເຮົາຈະພະຍາຍາມເຮັດຕາມວິທີຂອງເຈົ້າໃນມື້ນີ້ ແລະ ມື້ອື່ນເຮັດຕາມວິທີຂອງຂ້ອຍ ເພື່ອເບິ່ງວ່າອັນໃດຈະດີທີ່ສຸດ ),

(ຈ). ບັນລຸການຕົກລົງທີ່ມີຄວາມລະອຽດອ່ອນນຳກັນ.

2. ສອນນັກຮຽນໃຫ້ຮູ້ວິທີໄກ່ເກ່ຍແກ້ໄຂຂໍ້ຂັດແຍ່ງ ຂອງເພື່ອນຮ່ວມຫ້ອງຮຽນແບບສ້າງສັນນັ້ນຄືແນວໃດ. ການໄກ່ເກ່ຍເປັນຂະບວນການຂອງການນຳໃຊ້ການບໍລິການ ຫຼື ຄວາມສາມາດຂອງຄົນອື່ນ ເພື່ອຊ່ອຍລະງັບການໂຕ້ຖຽງກັນ. ເພື່ອຈະສອນເລື່ອງການໄກເກ່ຍນັ້ນ ໃຫ້ເລືອກເອົາປະເດັນທີ່ອາດຈະເກີດຂຶ້ນ ຫຼື ໄດ້ເກີດຂຶ້ນແລ້ວລະຫວ່າງນັກຮຽນຂອງທ່ານສອງຄົນ. ໃຫ້ນັກຮຽນທັງສອງນັ້ນສະແດງບົດບາດສົມມຸດປະເດັນນັ້ນ ແລະ ບອກໃຫ້ນັກຮຽນຜູ້ທີ່ສາມຊ່ອຍເຫຼືອເພື່ອນຂອງເຂົາ ເພື່ອກ້າວເຖິງຂໍ້ຕົກລົງກັນ ໂດຍນຳໃຊ້ຄວາມຮູ້ກ່ຽວກັບເພື່ອນຂອງລາວ, ກ່ຽວກັບປະເດັນບັນຫາ ແລະ ສິ່ງທີ່ລາວຄິດວ່າອັນໃດຈະເປັນການປະນີປະ ນອມທີ່ດີ.

4. ເມື່ອນັກຮຽນທຸກຄົນໄດ້ຮຽນຮູ້ທັກສະຂອງການເຈລະຈາ ແລະ ການໄກ່ເກ່ຍແລ້ວ. ໃນແຕ່ລະມື້ໃຫ້ແຕ່ງຕັ້ງນັກຮຽນສອງຄົນ (ດີແທ້ໃຫ້ເປັນນັກຮຽນຍິງໜຶ່ງຄົນ ແລະ ນັກຮຽນຊາຍໜຶ່ງຄົນ) ໃຫ້ເປັນຜູ້ໄກ່ເກ່ຍທາງການ.ພາລະໜ້າທີ່ນີ້ໃຫ້ໝູນວຽນໄປຈົນຄົບໝົດທຸກຄົນໃນຫ້ອງແລະໃຫ້ນັກໄກ່ເກ່ຍເຫຼົ່ານີ້ໄກ່ເກ່ຍຂໍ້ຂັດແຍ່ງໃດໜຶ່ງທີ່ບໍ່ສາມາດແກ້ໄຂໄດ້ຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງ.

ບົດບາດຂອງຄູແມ່ນຕ້ອງສະໜັບສະໜູນຊ່ອຍເຫຼືອ ຂະບວນການເຫຼົ່ານີ້ດ້ວຍການສິດສອນ,ເປັນຕົວແບບ ແລະ ໃຫ້ຄຳເປີກສາແນະນຳ. ຄູຄວນສ້າງແຜນງານໂຄງການ ເພື່ອແກ້ໄຂຫຼຸດຜ່ອນຂໍ້ຂັດແຍ່ງ.

## 7. ເຕັກນິກໃນການປະຕິບັດລະບຽບວິໄວ/ສຶກສາອົບຮົມແບບສ້າງສັນຕາມໄວອາຍຸ

ຄວາມເຂົ້າໃຈກ່ຽວກັບນັກຮຽນມີພັດທະນາໄປຄືແນວໃດ ຈະຊ່ອຍໃຫ້ທ່ານຮູ້ຈັກສິ່ງທີ່ຈະຄາດຫວັງ. ເດັກມີການປ່ຽນແປງ ແລະ ພັດທະນາໄປຢ່າງສະໝ່ຳສະເໝີເມື່ອເຂົາເຕີບໂຕຂຶ້ນ. ບັນດານັກວິໄຈໄດ້ຄົ້ນພົບວ່າເດັກໄວໜຸ່ມຈະຜ່ານຂັ້ນຕອນສະເພາະຂອງການພັດທະນາໄປຕາມວິທີທາງຂອງເຂົາ. ແນວຄວາມຄິດທີ່ຢູ່ເບື້ອງຫລັງຂອງ"ອາຍຸ ແລະ ຂັ້ນຕອນ" ເຫຼົ່ານີ້ແມ່ນຢູ່ບ່ອນວ່າພຶດຕິກຳອັນແນ່ນອນໃດໜຶ່ງຖືເປັນສິ່ງທຳມະດາ ຫຼື ເໝະສົມກັບໄວອາຍຸນັ້ນ ແລະ ບໍ່ແມ່ນໃນຊ່ວງອາຍຸອື່ນ. ຕາຕະລາງໃນຕໍ່ໄປນີ້ໄດ້ພັນລະນາເຖິງການພັດທະນາຂອງເດັກ ໃນແຕ່ລະສ່ຳອາຍຸທີ່ແນ່ນອນ ແລະ ວິທີສິດສອນ ແລະ ວິທີປະຕິບັດວິໄນອັນໃດ ທີ່ສາມາດນຳໃຊ້ກັບເດັກໃນແຕ່ລະໄວອາຍຸດັ່ງກ່າວ:

## ໄວອາຍຸ ແລະ ວິທີການທີ່ເປັນຂັ້ນຕອນເພື່ອປະຕິບັດວິໄນ/ສຶກສາອົບຮົມແບບສ້າງສັນ.

| ອາຍຸ | ການພັດທະນາ | ຂໍ້ແນະນຳພິເສດກ່ຽວກັບການສິດສອນ/ການປະຕິບັດວິໄນ/ການສຶກສາອົບຮົມ |
|---|---|---|
| 5 ປີ | ມີທ່າອ່ຽງຈະຢູ່ສະຫງົບ, ມິດງຽບ, ມີການຊັ່ງຊາທີ່ດີ. ຕາມທຳມະດາ, ເຂົາເຈົ້າຈະພະຍາ | ເຮັດໃຫ້ເຂົາເຈົ້າຮູ້ຈັກວ່າ ອັນໃດທີ່ມີເຫດຜົນ ແລະ ບໍ່ມີເຫດຜົນເພື່ອຄາດຫວັງ. ມີຫຼາຍສິ່ງຫຼາຍຢ່າງ |

| ອາຍຸ | ການພັດທະນາ | ຂໍ້ແນະນຳພິເສດກ່ຽວກັບການສິດສອນ/ ການປະຕິບັດວິໄນ/ການສຶກສາອົບຮົມ |
|---|---|---|
| | ຍາມເຮັດສິ່ງທີ່ ເຂົາຮູ້ວ່າເຂົາສາມາດເຮັດໄດ້, ດັ່ງນັ້ນຈຶ່ງມີຄວາມ ສະບາຍໃຈໃນການຈັດເຂົ້າລະບຽບ. ຄວາມເປັນມິດ, ຄວາມຮັກແພງ, ຄວາມຮູ້ບຸນຄຸນ, ຕ້ອງການເຮັດໃຫ້ພໍໃຈ ແລະເຮັດສິ່ງທີ່ຖືກຕ້ອງ, ຕ້ອງການ ແລະ ມຸ່ງໝາຍຢາກເປັນຄົນດີ, ຍັງບໍ່ທັນສາມາດຮັບເອົາການກະທຳຜິດ, ເຂົາພະຍາຍາມຫຼາຍເທົ່າທີ່ຈະຫຼາຍໄດ້, ບໍ່ໄດ້ບອກຄວາມຈິງສະເໝີໄປ. | ທີ່ຄູເຫັນວ່າບໍ່ດີນັ້ນ ແມ່ນສິ່ງທີ່ຍັງບໍ່ສຸກງອມ. ການປ້ອງກັນຈະດີກວ່າການຮັບຜົນໃນທາງລົບ. ເຖິງຢ່າງໃດກໍດີຖ້າ ທ່ານເຮັດຄືແນວນັ້ນ, ກໍໃຫ້ເຮັດແບບງຽບໆ. ນັກຮຽນມີຄວາມມຸ່ງໝາຍຈະເປັນຄົນດີ ແລະ ເຮັດສິ່ງທີ່ ຖືກຕ້ອງ, ນັ້ນເປັນຈຸດແຂງ. ດ້ວຍຄວາມໂຊກດີ, ອາດມີຄວາມຈຳເປັນໜ້ອຍລົງ ທີ່ຈະມີຜົນໄດ້ຮັບໃນ ທາງລົບ. |
| 6 ປີ | ມີອາລົມຈິດຮຸນແຮງ, ຮັກໃນໜຶ່ງນາທີຕໍ່ໄປກຽດຊັງ. ມີຄວາມສັບສົນຫຼາຍ ແລະ ສ້າງຄວາມລຳບາກລະຫວ່າງຕົນເອງ ແລະ ຜູ້ອື່ນ. ອາດຮຽກຮ້ອງຄວາມຕ້ອງການ, ດື້ດຶງຖຽງຄວາມຫຼືຕີ. ໃນເວລາມີອາລົມດີ ຈະມີຄວາມຊື່ນບານມີຄວາມຫ້າວຫັນ ແລະ ກະຕືລືລົ້ນ. ຕ້ອງການການຍ້ອງຍໍ, ແຕ່ວ່າປະພຶດແນວຖືກຕຳນິເລື້ອຍໆ. ອັນນີ້ ພຽງແຕ່ເຮັດໃຫ້ການປະພຶດຂີ້ລ້າຍກວ່າເກົ່າເທົ່ານັ້ນ. ຍັງບໍ່ທັນສາມາດບອກໄດ້ເຖິງຄວາມແຕກຕ່າງ ລະຫວ່າງຂອງຂ້ອຍແລະຂອງເຈົ້າ | ໃຫ້ມີຄວາມອົດທົນ. ບໍ່ສົນໃຈຕໍ່ການປະຕິເສດຂອງເດັກ ຫຼື ບໍ່ສະແດງຄວາມຮູ້ສຶກເຫັນໃຈອອກມາ ເມື່ອເວລານັກຮຽນຕອບ ”ຂ້ອຍຈະ ບໍ່ເຮັດ” ຫຼື “ຂ້ອຍບໍ່ສາ ມາດ“ ການຊົມເຊີຍມັນອາດບໍ່ງ່າຍເພື່ອຊອກສິ່ງໃດສິ່ງໜຶ່ງ ເພື່ອຊົມເຊີຍ. ແຕ່ວ່າພະຍາຍາມໃຫ້ຫຼີກເວັ້ນການຕໍ່ຕ້ານ ຫຼື ປະເຊີນໜ້າ, ໃຫ້ຫຼີກເວັ້ນປະເດັນທີ່ລະອຽດອ່ອນ ຖ້າຫາກເປັນໄປໄດ້, ໃຫ້ກາລະໂອກາດພິເສດ ຖ້າຫາກວ່າຈະນຳພາໄປສູ່ການປະພຶດອັນດີ ຫຼື ປະສົບການ ຂອງການຮໍ່າຮຽນ. |
| 7 ປີ | ມີຄວາມສະຫງົບຫຼາຍກວ່າມີອາລົມຈິດ ໃນທາງລົບ, ອາດເປັນຄົນເອົາຈິງເອົາຈັງ ເອົາໃຈຕົນເອງ, ອາລົມປ່ຽນແປງເລື້ອຍ, ກວນໃຈ ຫຼື ໜ້າສົງໄສ. ມີຄວາມ ອ່ອນໄຫວງ່າຍຕໍ່ອາລົມຈິດຂອງຜູ້ອື່ນ. ອາດເຮັດໃຫ້ຜູ້ ອື່ນບໍ່ມັກ ແລະ ເຂົາເຈົ້າກໍຕຳນິ ຫຼື ເຮັດໃຫ້ມີການທົວ. | ບັນຫາຂອງການເຊື່ອຟັງຄວາມອາດເກີດມີ ຍ້ອນວ່ານັກຮຽນເປັນຄົນວອກແວກ. ເພື່ອຢາກໃຫ້ນັກຮຽນເຮັດກິດຈະກຳທີ່ງ່າຍໆ, ໃຫ້ບອກເຂົາເຈົ້າລ່ວງໜ້າ ເພື່ອເຮັດໃຫ້ແນ່ໃຈວ່າ ເຂົາໄດ້ຍິນຄຳແນະນຳ ຫລື ບໍ່. ໃຫ້ເຕືອນນັກຮຽນກ່ອນທີ່ເຂົາຈະລືມ ເພື່ອໄປເຮັດອັນອື່ນ. ໃຫ້ການຍ້ອງຍໍຊົມເຊີຍໜ້ອຍໜຶ່ງ ສຳລັບຄວາມປະສົບຜົນສຳເລັດຂອງເຂົາ. |
| 8 ປີ | ຂະຫຍັນຂັນແຂງ, ວ່ອງໄວ, ຊອກຮູ້ຊອກເຫັນ, ບໍ່ອົດທົນ ແລະມັກຮຽກຮ້ອງ, ອາລົມບໍ່ປ່ຽນແປງຄືເດັກອາຍຸ 7 ຂວບ. ແຕ່ວ່າຍັງເປັນຄົນອ່ອນໄຫວ. ຕ້ອງການເວລາ, ຄວາມ | ໃຫ້ຂໍ້ແນະນຳແກ່ນັກຮຽນ ໃນວິທີທີ່ຮັບເອົາໄດ້. ການໃຫ້ເວລາ, ຄວາມເອົາໃຈໃສ່ ແລະ ຄວາມເຫັນດີເປັນສິ່ງກະຕຸ້ນທີ່ດີ. ໃຫ້ນຳໃຊ້ກິດຈະກຳການແກ້ໄຂບັນຫາເປັນພາຫານະ ເພື່ອພັດທະນາ |

| ອາຍຸ | ການພັດທະນາ | ຂໍ້ແນະນຳພິເສດກ່ຽວກັບການສິດສອນ/ການປະຕິບັດວິໄນ/ການສຶກສາອົບຮົມ |
|---|---|---|
| | ເອົາໃຈໃສ່ ແລະ ຄວາມເຫັນດີ, ເລີ່ມຕົ້ນຄົ້ນຄິດສິ່ງທີ່ເປັນນາມມະທຳ, ມີຄວາມສົນໃຈ ແລະ ເປັນຫວ່ງກ່ຽວກັບຄວາມເປັນເຈົ້າຂອງ. | ການຄົ້ນຄິດສິ່ງທີ່ເປັນນາມມະທຳ. ໃຫ້ຍ້ອງຍໍຊົມເຊີຍໜ້ອຍໜຶ່ງ ສຳລັບ ຄວາມປະສົບຜົນສຳເລັດ. |
| 9 ປີ | ຈະມີອາລົມສະຫງົບກ່ອນເດັກອາຍຸ 8 ປີ. ຈະເຫັນວ່າມີຄວາມເປັນເອກະລາດ, ມີຄວາມຮັບຜິດຊອບ, ສາມາດອາໄສໄດ້ ແລະ ມີຄວາມຮ່ວມມື. ບາງຄັ້ງມີອາລົມປ່ຽນແປງງ່າຍ ແຕ່ກໍເຫດຜົນພື້ນຖານຮັບການຕຳນິຢ່າງຍຸຕິທຳ ຖ້າຫາກວ່າ ເວົ້າຢ່າງລະອຽດຖີ່ຖ້ວນ, ມີຄວາມສົນໃຈຕໍ່ຄວາມ ຍຸດຕິທຳຄຳເວົ້າຂອງໝູ່ເພື່ອນອາດຈະສຳຄັນ ກວ່າຄຳເວົ້າຂອງຜູ້ໃຫຍ່. ເອົາຕົນເອງເຂົ້າມາຮ່ວມຫລາຍທີ່ສຸດ ແລະ ອາດຈະບໍ່ໄດ້ຍິນເມື່ອເວລາເຮົາເວົ້ານຳ ອາດມີປາກົດການໃຈລອຍ ແລະ ວາງເສີຍ, ອາດສະແດງໃຫ້ເຫັນຄວາມເປັນຫ່ວງຕໍ່ຜູ້ ອື່ນໆ. | ສົ່ງເສີມການມີຄວາມຮັບຜິດຊອບໂດຍຜ່ານການມອບໝາຍວຽກໃຫ້ເຮັດ (ຂໍຮ້ອງໃຫ້ເຮັດ). ນຳໃຊ້ການຮຳຮຽນແບບຮ່ວມມືກັນ, ແຕ່ວ່າເຮັດການຕິດຕາມກຳກັບກິດຈະກຳ ທີ່ມີລັກສະນະມະນຸດສຳພັນ, ນຳໃຊ້ການແນະນຳການຮຳຮຽນ ໂດຍຜ່ານໂຄງການຫຼາຍກວ່າ ເຮັດແບບບັນລະຍາຍໄປຕະຫຼອດໄວອາຍຸ 10 ຂວບ |
| 10 ປີ | ມຸ່ງໝັ້ນແບບມີອາລົມ, ງ່າຍດາຍ, ເຂົ້າໃຈງ່າຍ, ມີການ ຊົ່ງຊາທີ່ດີ, ແຕ່ຍັງຄົງຄືເດັກຢູ່, ຄວາມຫ່ວງໄຍໜ້ອຍ ແລະ ຄວາມຕ້ອງການນ້ອຍກວ່າເດັກອາຍຸ 9 ປີ. ສ່ວນຫລາຍຈະເປັນຄົນນິໄສດີ ແລະ ພໍໃຈໃນຊີວິດຂອງຕົນ. ແຕ່ວ່າອາດຈະສະແດງ ໃຫ້ເຫັນຄວາມຂີ້ໂກງ, ມີອາລົມຮຸນແຮງ ບໍ່ເປັນໄວອາຍຸທີ່ເຮັດໃຫ້ກັງວົນ. ຍັງຄົງມີຄວາມຢ້ານກົວຢູ່ແດ່. ມີຄວາມມ່ວນຊື່ນກັບອາລົມຂັນຂອງຕົນເອງ ຊຶ່ງອາດບໍ່ເປັນເລື່ອງສະໜຸກສະໜານ ສຳລັບຜູ້ອື່ນ, ເປັນໄວອາຍຸທີ່ລ່າເລີງ | ເອົາຄວາມອາດສາມາດຂອງນັກຮຽນ ເຂົ້າມາຮ່ວມ ເພື່ອໃຫ້ຈຳແນກໄດ້ລະຫວ່າງອັນດີ ແລະ ອັນບໍ່ດີ ລະຫວ່າງອັນຖືກ ແລະ ອັນຜິດລະຫວ່າງຄວາມຈິງ ແລະ ບໍ່ຈິງ, ເຕັກນິກທີ່ດີທີ່ສຸດທີ່ຈະຕ້ອງຮູ້ ແມ່ນການຄາດຫວັງຢ່າງມີເຫດຜົນ. ເອົານັກຮຽນເຂົ້າມາຮ່ວມ ເພື່ອສ້າງຕັ້ງຄະນະຫ້ອງ, ລວມທັງຄະນະຮັບຜິດຊອບ ເລື່ອງລະບຽບວິໄນ. ໃຫ້ນຳໃຊ້ອາລົມຂັນຢູ່ໃນການສິດສອນ. |
| 11 ຫາ 13 ປີ | ເປັນໄວລຸ້ນໄລຍະເລີ່ມຕົ້ນ, ໄລຍະເວລາມີການປ່ຽນແປງໄວ, ມີການພັດທະນາຄວາມເປັນເອກະລັກຂອງຕົນເອງ ແລະ ມີຄວາມເປັນເອກະລາດຫຼາຍຂຶ້ນ. ຕ້ອງການຄວາມເປັນສ່ວນຕົວເພີ່ມຂຶ້ນ ແລະ ອາດມີຄວາມອ່ອນໄຫວຕໍ່ການຍອກລໍ້, ອາລົມອ່ອນໄຫວ. | ເຮັດໃຫ້ນັກຮຽນຮູ້ຈັກວ່າ ທ່ານມີຄວາມກັງວົນນຳເຂົາເຈົ້າ.ໃຫ້ຈັດຕັ້ງກິດຈະກຳການ "ແລກປ່ຽນຄວາມຄິດເຫັນ "(ເຊັ່ນ ຂຽນບົດຄວາມ) ທີ່ກ່ຽວກັບປະສົບການ ແລະ ຄວາມຮູ້ສຶກຂອງນັກຮຽນ. ເປັນຕົວຢ່າງ ໃນການເຄົາລົບນັບຖືກັນ. ຈຳກັດການຕຳນິແລະຈູ້ຈີ້ລຳໄລ. ຢ່າປ່ອຍໃຫ້ມີການ |

| ອາຍຸ | ການພັດທະນາ | ຂໍ້ແນະນຳພິເສດກ່ຽວກັບການສິດສອນ/ ການປະຕິບັດວິໄນ/ການສຶກສາອົບຮົມ |
|---|---|---|
| | ເຫັນ ຄວາມ ສຳຄັນຂອງໝູ່ເພື່ອນຫຼາຍຂຶ້ນ. | ຢອກລໍ້ ຫຼືດູໝິ່ນປະໝາດ. |
| 14 - 16 ປີ | ເປັນໄວລຸ່ນໄລຍະກາງ, ຄວາມເປັນເອກະລາດເພີ່ມຂຶ້ນ, ມີການພັດທະນາທາງດ້ານເພດ ແລະ ຄິດເອົາແຕ່ຕົນເອງ. ມີໝູ່ຄູ່ຫຼາຍ ແລະ ຮູ້ຈັກນຶກຄິດ. ການຄົ້ນຄິດຈະມີລັກສະນະເດັກຫຼຸດໜ້ອຍລົງ. ເຂົາເຈົ້າຮູ້ຈັກພິຈາລະນາຄວາມເປັນຈິງ ແລະ ສາມາດເຮັດການຕັດ ສິນໃຈອັນດີ. | ຊຸກຍູ້ສົ່ງເສີມໃຫ້ມີການພົວພັນອັນດີ ໂດຍຜ່ານການແລກປ່ຽນຄວາມເຫັນ. ໃຫ້ຄວາມຄິດເຫັນໃນສິ່ງເປັນທັດສະນະຄິດປະດິດສ້າງ ເພື່ອປະຕິບັດກັບໝູ່ເພື່ອນ ຊຶ່ງເປັນພາກສ່ວນໜຶ່ງຂອງການຮໍ່າຮຽນ. ມີຂໍ້ຈຳກັດຢ່າງມີເຫດຜົນ ແລະ ມີຄວາມສະໝໍ່າສະເໝີຕົ້ນສະເໝີປາຍ ແລະ ຍຸຕິທຳໃນການປະຕິບັດກົດລະບຽບ. ໃຫ້ແນ່ໃຈວ່າ ເຂົາເຈົ້າຮູ້ຈັກກົດລະບຽບ ແລະ ເຈລະຈາໃຫ້ໄດ້ຮັບຜົນ ຢ່າງມີຄວາມໝາຍສຳຄັນ. ຍ້ອງຍໍຊົມເຊີຍ ແລະ ຍອມຮັບໃນການປະພຶດທີ່ດີ ແລະມີຜົນສຳເລັດ. ໃຫ້ແລກປ່ຽນຄວາມເຊື່ອຂອງທ່ານເອງ, ຄວາມເປັນຫ່ວງ ແລະ ຄຸນຄ່າກ່ຽວກັບໂລກນີ້. ຊຸກຍູ້ນັກຮຽນຂອງທ່ານນັບຖືເພື່ອນຜູ້ໃຫຍ່ ເມື່ອເວລາເຂົາເຈົ້າຕ້ອງການຄຳປຶກສາ. ສືບຕໍ່ໃຫ້ ຄຳຍ້ອງຍໍ ຊົມເຊີຍ. |
| 17 ຫາ 21 ປີ | ເປັນໄວລຸ້ນຕອນທ້າຍ. ມີຄວາມເປັນເອກະລາດຫຼາຍຂຶ້ນ ແລະ ມີຄວາມໄວ້ໃຈຕົວເອງຫຼາຍຂຶ້ນ, ຖືກອິດທິພົນ ຈາກໝູ່ເພື່ອນດຽວກັນໜ້ອຍລົງ, ພັດທະນາຄວາມສາມາດການຄົ້ນຄິດແບບຜູ້ໃຫຍ່. ໂດຍທົ່ວໄປແລ້ວສາມາດຈັດການ ກັບສິ່ງຕ່າງໆໄດ້ດີກວ່າໃນຕອນຕົ້ນ ແລະ ຕອນກາງຂອງໄວລຸ່ນ. ສ້າງການພົວພັນ ໃນໄລຍະຍາວກວ່າ, ອາດມີແນວຄວາມຄິດເຫັນ ກ່ຽວກັບທຸກສິ່ງທຸກຢ່າງມີຄວາມຮູ້ສຶກລະອາຍຕົນເອງ ກ່ຽວກັບການປະພຶດທີ່ບໍ່ດີຂອງຕົນ. | ສືບຕໍ່ປະຕິບັດຄືກັນກັບເດັກໃນໄວອາຍຸ 14 -16 ປີ ທີ່ໄດ້ເວົ້າມາຂ້າງເທິງ. ໃຫ້ຖາມນັກຮຽນຂອງທ່ານ ເປັນປະຈຳວ່າເຂົາເຈົ້າຄິດ ແລະເຊື່ອອັນໃດ. ໃຫ້ນັບຖືຄວາມເປັນເອກຂອງເຂົາ ແລະ ຊຸກຍູ້ໃຫ້ເຂົາເຈົ້ານັບຖືຜູ້ອື່ນໆ. ຊຸກຍູ້ໃຫ້ເຮັດການຕັດສິນໃຈແບບເປັນເອກະລາດ. ສືບຕໍ່ໃຫ້ຄຳຍ້ອງຍໍຊົມເຊີຍ.. |

## 8. ການຊ່ອຍເຫຼືອເດັກທີ່ມີຄວາມຕ້ອງການພິເສດ

## ການຕອບສະໜອງສຳລັບນັກຮຽນຜູ້ທີ່ມີມີບັນຫາທາງດ້ານອາລົມຈິດແລະພຶດຕິກຳ.

ເຕັກນິກດັ່ງຕໍ່ໄປນີ້ມີປະສິດທິຜົນໄດ້ ໂດຍສະເພາະກັບນັກຮຽນຜູ້ທີ່ມີບັນຫາດ້ານອາລົມຈິດ ແລະ ພຶດຕິກຳ.

1. **ການວາງເສີຍແບບມີແຜນການ** (ບໍ່ເອົາຫົວຊາ). ພຶດຕິກຳທີ່ມີຈຸດໝາຍຢາກໄດ້ຄວາມສົນໃຈ, ແຕ່ບໍ່ມີການຂະຫຍາຍກວ້າງອອກ ຫຼື ບໍ່ກະທົບກະເທືອນຕໍ່ຄວາມປອດໄພ ຫຼື ການທຳໜ້າທີ່ຢູ່ໃນຫ້ອງຮຽນ ແມ່ນການຍຸດຕິການກະທຳທີ່ໄດ້ຜົນດີທີ່ສຸດ ໂດຍຜ່ານການບໍ່ເອົາຫົວຊາແບບມີແຜນການ. ບໍ່ຄວນໃຊ້ເຕັກນິກນີ້ຈັກເທື່ອກັບການປະພຶດທີ່ຮຸນແຮງ. ຢູ່ໃນຫ້ອງຮຽນອາດຈຳເປັນສິດສອນໃຫ້ເຮັດຄືແນວນີ້ ເຊັ່ນດຽວກັນ, ເນື່ອງຈາກວ່າຄວາມສົນໃຈຂອງໝູ່ເພື່ອນຍິ່ງມີອຳນາດກວ່າຄວາມສົນໃຈຂອງຜູ້ໃຫຍ່ສຳລັບນັກຮຽນຈຳນວນໜຶ່ງ.

2.**ການແຊກແຊງແບບໃຊ້ສັນຍານ.** ຖ້າຫາກນັກຮຽນມີດຽງບຕໍ່ກັບການຕອບຮັບຂອງການພົວພັນອັນດີກັບຄູສອນ ແລະ ປາສະຈາກແຮງກະຕຸ້ນທາງດ້ານອາລົມຈິດ ທີ່ບໍ່ສາມາດຄວບຄຸມໄດ້, ການໃຊ້ສັນຍານໂດຍບໍ່ປາກເວົ້າອາດມີຄວາມຈຳເປັນ ເພື່ອຊ່ອຍນັກຮຽນຜູ້ນັ້ນ ໃຫ້ກັບມາມີຄວາມຈິດຈໍ່ຄືນອີກ. ໃຫ້ເບິ່ງ ພາກການໃຊ້ທ່າທາງແບບບໍ່ປາກເວົ້າທີ່ໄດ້ສະເໜີຢູ່ໃນຂ້າງເທິງ.

3. **ການເຂົ້າໄປໃກ້ຊິດ ແລະ ການຄວບຄຸມແບບສຳພັດ.** ຍ່າງໄປໃກ້ນັກຮຽນເອົາມືວາງໃສ່ບ່າໄຫຼ່ອາດເຮັດໃຫ້ມີປະສິດທິຜົນ ໃນການສະແດງໃຫ້ເຫັນເຖິງຄວາມຊ່ອຍເຫຼືອ ໃນວິທີການທີ່ບໍ່ເປັນການຂົ່ມຂູ່. ເມື່ອເວລານຳໃຊ້ເຕັກນິກນີ້ ຈະລະເວັ້ນຈາກການໃຊ້ພຶດຕິກຳອັນບໍ່ເໝາະສົມ. ໃຫ້ຄວາມຄິດຄວາມເຫັນແນວທາງບວກ ກ່ຽວກັບສິ່ງໃດສິ່ງໜຶ່ງທີ່ນັກຮຽນ ເຊິ່ງສະແດງໃຫ້ເຫັນວ່າມີການປະຕິບັດຕາມ ຫຼື ຟັງຄວາມ.

4.**ການເພີ້ມທະວີຄວາມສົນໃຈ**: ປ່ຽນແປງຈັງຫວະ ຫຼື ກິດຈະກຳການໃຫ້ຄຳເຫັນກ່ຽວກັບວຽກການຮຽນຂອງນັກຮຽນ ຫຼື ໄຕ່ຖາມກ່ຽວກັບຄວາມສົນໃຈທີ່ກ່ຽວຂ້ອງກັບວຽກການຮຽນທີ່ເອົາໃຫ້ ຖ້າຫາກວ່ານັກຮຽນສະແດງໃຫ້ເຫັນສັນຍານຂອງການບໍ່ໄດ້ພັກ.

5. **ການສະແດງຄວາມຮັກແພງສິງສານອັນແຮງກ້າ.** ສະແດງຄວາມຮັກແຮງອັນແທ້ຈິງ, ຫຼືຄວາມຂອບໃຈ ຕໍ່ນັກຮຽນທີ່ຊ່ອຍເຫຼືອນັກຮຽນໃນການເອົາການຄວບຄຸມຕົນເອງກັບຄືນມາ.

6. **ການບັນເທົາຄວາມຕຶງຄຽດໂດຍສ້າງອາລົມຂັນ:** ຄືດັ່ງໄດ້ເວົ້າຢູ່ໃນຂ້າງເທິງແລ້ວອາລົມຂັນສາມາດ ຍຸດຕິການປະພຶດທີ່ບໍ່ເພິ່ງປາຖະໜາໄດ້ຖ້າຫາກວ່າໃຊ້ໃຫ້ຖືກກາລະ ແລະ ໃນທາງບວກ. ການເຢາະເຢີ້ຍແດກດັນ, ຄຳເຢາະເຢີ້ຍ ແລະ ຄວາມກ້າວລ້າວບໍ່ມີຄວາມເໝາະສົມທີ່ຈະໃຊ້ເປັນອາລົມຂັນ.

**7. ການຊ່ອຍເຫຼືອແກ້ໄຂອຸປະສັກ.** ກ່ອນນັກຮຽນຈະເລີ່ມຕົ້ນປະພຶດບໍ່ດີ ໃຫ້ຊ່ອຍເຮັດວຽກມອບໝາຍພາກຍາກໆ. ເຮັດໃຫ້ເຂົາແນ່ໃຈວ່າ ທ່ານມີຄວາມພໍໃຈເພື່ອຊ່ອຍເຫຼືອເຂົາ ແລະ ທ່ານສາມາດແກ້ໄຂບັນຫາຮ່ວມກັບເຂົາເຈົ້າ.

**8. ການຈັດກຸ່ມຄືນໃໝ່.** ປ່ຽນແປງການຈັດບ່ອນນັ່ງ ຫຼື ປ່ຽນແປງການມອບວຽກໃຫ້ນັກຮຽນ ເພື່ອຫຼີກເວັ້ນບັນຫາສະເພາະໃດໜຶ່ງ. ໃຫ້ເຮັດແນວນີ້ໃນວິທີທີ່ບໍ່ແມ່ນການລົງໂທດ. ຖ້າເປັນໄປໄດ້, ບໍ່ໃຫ້ນັກຮຽນສາມາດຈັບຈຸດໄດ້. ໃຫ້ເບິ່ງພາກກ່ຽວກັບ “ເຮັດໃຫ້ສະພາບແວດລ້ອມ ຂອງການຮໍ່າຮຽນມີຄວາມສະດວກສະບາຍ” ທີ່ໄດ້ເວົ້າໃນຕອນຕົ້ນຂອງເອກະສານນີ້ ເພື່ອມີແນວຄວາມຄິດເພີ່ມຕື່ມອີກ.

**9.ການປັບໂຄງສ້າງ**ໃໝ່. ຖ້າຫາກກິດຈະກໍາໃດບໍ່ໄດ້ຮັບຜົນ, ໃຫ້ປ່ຽນແປງມັນໄວເທົ່າທີ່ຈະເປັນໄປໄດ້. ມີຄວາມສໍາຄັນຫຼາຍຖ້າຫາກມີແຜນສໍາຮອງໄວ້. ບາງຄັ້ງເປັນການດີທີ່ສຸດ ທີ່ປ່ຽນຈາກວິທີການທີ່ມີການພົວພັນຊຶ່ງກັນ ແລະ ກັນມາເປັນວິທີການທີ່ບໍ່ມີປະຕິສໍາພັນຊຶ່ງກັນ ແລະ ກັນ. ສາມາດເຮັດສິ່ງນີ້ດ້ວຍຄວາມນິ້ມນວນ ແລະ ບໍ່ມີກາລົງໂທດເມື່ອເວລາກຸ່ມ ນັກຮຽນມີຄວາມກະຕືລືລົ້ນເກີນຂອບເຂດ. ໃນເວລາອື່ນໆ ໃຫ້ທາງເລືອກແກ່ນັກຮຽນອາດຈະມີປະສິດທິຜົນຫຼາຍຂຶ້ນ. ນັກຮຽນສາມາດເລືອກເພື່ອສັງລວມ ເອົາຂໍ້ມູນຂ່າວສານຈາກປາກເປົ່າ ໂດຍຜ່ານການສົນທະນາ ຫຼື ກ່າຍເອົາຈາກການສາຍແຜ່ນໃສ.

**10. ການດຶງດູດ/ສ້າງຄວາມສົນໃຈໂດຍກົງ.** ຖ້າຫາກນັກຮຽນ ຫຼື ກຸ່ມນັກຮຽນມີການພົວພັນດີກັບຄູສອນ, ບາງຄັ້ງກໍຈະມີປະສິດທິຜົນ ທີ່ພຽງແຕ່ບອກໃຫ້ນັກຮຽນຢຸດຕິພຶດຕິກໍາ ຍ້ອນວ່າມີບັນຫາເກີດຂຶ້ນ. ບໍ່ມີການໃຫ້ຜົນຕອບແທນຫຼືຂອງຂວັນໃດໆ, ອັນນີ້ເປັນພຽງການຂໍຮ້ອງຈາກຜູ້ໜຶ່ງມາຍັງຜູ້ອື່ນເທົ່ານັ້ນ.

**11. ການປ້ອງກັນ.** ໃຫ້ຍ້າຍນັກຮຽນຈາກສະພາບການລົບກວນກ່ອນການປະພຶດທີ່ບໍ່ເໝາະສົມຈະເກີດຂຶ້ນ, ເຊັ່ນ ບອກໃຫ້ເຂົາເຈົ້າຊ່ອຍທ່ານໃນການແຈກຢາຍເຈ້ຍ ຫຼື ບັນທຶກການມາໂຮງຮຽນຂອງນັກຮຽນ. ໃຫ້ລະມັດລະວັງຢ່າໄດ້ຍ້ອງຍໍຊົມເຊີຍນັກຮຽນ ຜູ້ທີ່ຍຸຍົງໃຫ້ເກີດບັນຫາໂດຍບໍ່ໄດ້ຕັ້ງໃຈ.

**12. ການສະໜັບສະໜູນຈາກກິດຈະວັດປະຈໍາວັນ**, ຄືດັ່ງພວກເຮົາໄດ້ຮຽນຮູ້ແຕ່ຕອນຕົ້ນ, ຕາຕະລາງເຮັດວຽກ ແລະ ກິດຈະວັດປະຈໍາວັນ ແມ່ນມີຄວາມສໍາຄັນສໍາລັບການຄຸ້ມຄອງການປະພຶດການຮູ້ຈັກສິ່ງທີ່ຈະເຮັດ ແລະ ເວລາໃດ ທີ່ຈະເຮັດແມ່ນເຮັດໃຫ້ມີການຈັດສັນການເຄື່ອນໄຫວ, ມີຄວາມປອດໄພ ແລະ ມີການຄາດຄະເນການດໍາລົງຊີວິດຂອງ ນັກຮຽນຜູ້ທີ່ອາດບໍ່ມີປະສົບການເຊັ່ນໃຫ້ການຊ່ອຍເຫຼືອ ການດໍາລົງຊີວິດຂອງເຂົາເຈົ້າຢູ່ໃນຂົງເຂດອື່ນໆ.

## ກ. ວິທີງ່າຍໆເພື່ອຊ່ອຍເຫຼືອເດັກທີ່ມີຄວາມຕ້ອງການພິເສດ

**ຂໍ້ແນະນໍາພິເສດສໍາລັບຄູສອນ: ເພື່ອປັບປຸງຄວາມສົນໃຈ.**

- ❖ ໃຫ້ນັກຮຽນນັ່ງໃກ້ທາງໜ້າ.
- ❖ ໃຫ້ນັກຮຽນນັ່ງໃກ້ຜູ້ທີ່ເປັນແບບຢ່າງທີ່ດີ "ຜູ້ທີ່ຊ່ອຍເຫຼືອການຮຽນຂອງໝູ່ເພື່ອນ"
- ❖ ໃຫ້ແບ່ງວຽກທີ່ມອບໝາຍໃຫ້ນັ້ນເປັນຊິ້ນ ສ່ວນຫຼາຍອັນແລ້ວ ເອົາໃຫ້ນັກຮຽນເທື່ອລະອັນ (ຕົວຢ່າງ: ແທນທີ່ຈະເອົາເລກໂຈດທັງໝົດໜ້າປຶ້ມໃຫ້ນັກຮຽນ ຊຶ່ງຈະເຮັດໃຫ້ນັກຮຽນມີຄວາມທໍ້ຖອຍ, ໃຫ້ແບ່ງວຽກຢູ່ໃນໜ້າເຈ້ຍອອກເປັນສອງສ່ວນ, ເອົາເຄິ່ງໜຶ່ງໃຫ້ນັກຮຽນແກ້ກ່ອນ ເມື່ອເຮັດແລ້ວສົ່ງໃຫ້ຄູສອນ, ຈາກນັ້ນຈຶ່ງເອົາອີກເຄິ່ງໜຶ່ງໃຫ້ເຮັດຕໍ່ໄປ)
- ❖ ນໍາໃຊ້ທ່າທາງເພື່ອເອົາຄວາມສົນໃຈຂອງນັກຮຽນກັບຄືນມາ(ຕົວຢ່າງ: ຍົກເຈ້ຍສີສະທ້ອນແສງຂຶ້ນ, ເຄາະໂຕະ, ຈັບບ່າ )
- ❖ ໃຊ້ຕາຈ້ອງມອງເບິ່ງນັກຮຽນກ່ອນຈະໃຫ້ຄໍາແນະນໍາ.
- ❖ ໃຫ້ຄໍາແນະນໍາສັ້ນໆ ໂດຍກົງດ້ວຍທ່າທາງແບບປະຈັກຕາ ແລະ ປາກເປົ່າທັງສອງຢ່າງຖ້າຫາກເປັນໄປໄດ້.

**ເພື່ອຫຼຸດຜ່ອນຄວາມກະຕຸ້ນໃຈ.**

- ❖ ເສີຍເມີຍຕໍ່ການປະພຶດເລັກໆນ້ອຍໆທີ່ບໍ່ເໝາະສົມ.
- ❖ ໃຫ້ການສະໜັບສະໜູນແນວຄິດ ຫຼືຜົນທີ່ເກີດຂຶ້ນໃນທັນທີທັນໃດ
- ❖ ກວດກາການປ່ຽນແປງລະຫວ່າງຫ້ອງຕໍ່ຫ້ອງ ຫຼືກິດຈະກໍາ.
- ❖ ຮັບຮອງເອົາການປະພຶດທີ່ດີໃນເວລາທີ່ເປັນໄປໄດ້.
- ❖ ສ້າງຂໍ້ສັນຍາສໍາລັບການປະພຶດທີ່ມີຄວາມຈໍາເປັນເພື່ອເຮັດການຕິດຕາມ.
- ❖ ຊ່ອຍນັກຮຽນໃຫ້ຮຽນຮູ້ເຕັກນິກການຕິດຕາມຕົວເອງ

**ເພື່ອຈັດການກັບຄວາມກະຕືລືລົ້ນເກີນຂອບເຂດ**

- ❖ ປ່ອຍໃຫ້ນັກຮຽນຢືນໃນເວລານັ້ນ.
- ❖ ປ່ອຍໃຫ້ນັກຮຽນເຮັດທຸລະຕ່າງໆຕາມໃຈ.

**ເພື່ອປັບປຸງຜົນສໍາເລັດທາງດ້ານວິຊາການ**

- ❖ ໃຫ້ເວລາເພີ່ມເຕີມເພື່ອເຮັດວຽກໃຫ້ແລ້ວ.
- ❖ ໃຫ້ຫຍໍ້ວຽກງານທີ່ມອບໝາຍໃຫ້ສັ້ນເຂົ້າ.
- ❖ ໃຫ້ນໍາໃຊ້ວິທີການສິດສອນແບບຮັບຮູ້ຈາກຫຼາຍທາງ (ແບບປະຈັກຕາ, ປາກເປົ່າ ແລະຈັບບາຍ ໄດ້ )
- ❖ ເຕືອນນັກຮຽນໃຫ້ກວດເບິ່ງວຽກຄືນ ເພື່ອເບິ່ງວ່າເຮັດສໍາເລັດແທ້ບໍ່.
- ❖ ຊ່ອຍນັກຮຽນໃນການຮຽນເຕັກນິກການກວດກາຕົວເອງ.
- ❖ ໃຫ້ນໍາໃຊ້ເຈ້ຍມອບໝາຍວຽກປະຈໍາວັນ.

**ເພື່ອປັບປຸງທັກສະກ່ຽວກັບວຽກງານຈັດຕັ້ງ.**

- ❖ ເອົາຜູ້ປົກຄອງເຂົ້າມາຊ່ອຍ.
- ❖ ນຳໃຊ້ເຈ້ຍມອບໝາຍວຽກປະຈຳວັນ
- ❖ ນຳໃຊ້ປຶ້ມບັນທຶກສຳລັບບັນທຶກວຽກທຸກຢ່າງ
- ❖ ໃຫ້ກວດເບິ່ງປຶ້ມບັນທຶກເລື້ອຍໆ ແລະ ຊຸກຍູ້ສົ່ງເສີມໃຫ້ເຮັດການບັນທຶກທີ່ດີ.

## ຂ. ການຄຸ້ມຄອງຫ້ອງຮຽນ ແລະ ດັດແກ້ການສິດສອນ

ເຕັກນິກອື່ນໆທີ່ເປັນປະໂຫຍດປະກອບມີ ດັ່ງຕໍ່ໄປນີ້:

- ❖ ຫລຸດຜ່ອນ ຫຼືໃຫ້ເລືອກວຽກທີ່ມອບໝາຍໃຫ້.
- ❖ ຕໍ່ເວລາເພື່ອໃຫ້ນັກຮຽນເຮັດວຽກສຳເລັດ
- ❖ ນຳໃຊ້ອຸປະກອນພິເສດທີ່ຊຸກຍູ້ສົ່ງເສີມຄວາມອາດສາມາດ ເຊັ່ນ ເຈ້ຍເສັ້ນກາຣາຟ, ປາກກາແຕ້ມຮູບ, ເຈ້ຍມີແຖວພິເສດ ແລະອື່ນໆ.
- ❖ ການນຳໃຊ້ອຸປະກອນປະຈັກຕາ
- ❖ ອ່ານບົດແບບປາກເປົ່າ.
- ❖ ນຳໃຊ້ບົດກວດກາແບບຫຼາຍຄຳຕອບຫຼືໝາຍຖືກ / ຜິດ ແທນການຂຽນບົດຄວາມ.
- ❖ ບອກໃຫ້ນັກຮຽນລາຍງານແບບປາກເປົ່າ( ກົງກັນຂ້າມກັບການລາຍງານດ້ວຍ ການຂຽນ)
- ❖ ຮັບເອົາໂຄງການພິເສດແທນບົດລາຍງານ.
- ❖ ເອົາມາຕຣິສການຄູນ ແລະມາຕຣິສອື່ນໆໃຫ້ນັກຮຽນ.
- ❖ ເອົາບັນຊີຄຳສັບທີ່ເຮັດຜິດທົ່ວໆໄປໃຫ້ນັກຮຽນເບິ່ງ.
- ❖ ສ້າງຂໍ້ສັນຍາກ່ຽວກັບການປະຕິບັດວຽກງານລະຫວ່າງຄູສອນ, ນັກຮຽນ ແລະ ຜູ້ປົກຄອງ.
- ❖ ໃຫ້ລາງວັນສຳລັບການມີສ່ວນຮ່ວມໃນຫ້ອງຮຽນ.
- ❖ ໃຫ້ຄຳແນະນຳເປັນບາດກ້າວ, ສັ້ນ ແລະງ່າຍດາຍ.
- ❖ ເອີ້ນຊື່ນັກຮຽນ ເພື່ອເຕືອນເຂົາເຈົ້າເພື່ອຈະຕອບຄຳຖາມຕໍ່ໄປ.
- ❖ ນຳໃຊ້ລະຫັດສີເພື່ອຊ່ອຍນັກຮຽນໃຫ້ຮູ້ຈຸດສຳຄັນຂອງຂໍ້ມູນຂ່າວສານ.
- ❖ ໃຫ້ນຳໃຊ້ສິ່ງກ່າວມາທັງໝົດຂ້າງເທິງນີ້ເລື້ອຍໆແລະໃຫ້ຊຸກຍູ້ສົ່ງເສີມແນວທາງບວກ. ຜົນປະໂຫຍດຂອງມັນຈະສືບຕໍ່ມີຕະຫລອດໄປໃນຊີວິດນີ້.